ບົດຮຽນແລະປະສົບການ ຈາກວິທະຍາໄລຄູ

ຄູ່ມື
ສອນພາສາລາວ ແບບມ່ວນໆ

ສຳລັບຄູຊັ້ນປະຖົມສຶກສາ



ຄູ່ມື

ສອນພາສາລາວ ແບບມ່ວນໆ

ສຳລັບຄູຊັ້ນປະຖົມສຶກສາ

ບົດຮຽນແລະປະສົບການ ຈາກວິທະຍາໄລຄູ

ຄົ້ນຄວ້າຮຽບຮຽງໂດຍ: ດວງເດືອນ ບຸນຍາວົງ

ດາຣາວັນ ພອນແກ້ວ

ສົມຫວັງ ຄອນສະຫວັນ

ຈັນແກ້ວ ດາລາສຸກ

ສົມດີ ຕົມມາລາ

ຄຳຫຼ້າ ມະນີວົງ

ມອນຄຳ ໄພຍະວົງ

ບົວວັນ ວິໄລຈິດ

ມະນີວອນ ເທບບົວລີ

ພູຄຳ ມັດທິວົງ

ພັນສະຫວ່າງ ທອງພາສະຫວັນ

ຄຳສະຫວັນ ຈັນສີຍະວົງ

ຊື່ປຶ້ມ: ຄູ່ມື ສອນພາສາລາວແບບມ່ວນໆ

ສຳລັບຄູຊັ້ນປະຖົມສຶກສາ

ຄົ້ນຄວ້າຮຽບຮຽງໂດຍ: ດວງເດືອນ ບຸນຍາວົງ
ດາຣາວັນ ພອນແກ້ວ
ສົມຫວັງ ຄອນສະຫວັນ
ຈັນແກ້ວ ດາລາສຸກ
ສົມດີ ຕົມມາລາ
ຄຳຫຼ້າ ມະນີວົງ
ມອນຄຳ ໄພຍະວົງ
ບົວວັນ ວິໄລຈິດ
ມະນີອອນ ເທບບົວລີ
ພູຄຳ ມັດທິວົງ
ພັນສະຫວ່າງ ທອງພາສະຫວັນ
ຄຳສະຫວັນ ຈັນສີຍະວົງ

ບັນນາທິການ: ດາຣາ ກັນລະຍາ, ສຸກພັນສາ ພູຜາສຸກ
ອອກແບບຈັດໜ້າ: ມະໂນລັກ ຄຳອ່ອນ
ພາບປະກອບ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)
ຈັດພິມໂດຍ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)
ຮ່ວມກັບ: ກົມສ້າງຄູ, ກະຊວງສຶກສາທິການ
ຕາມຂໍ້ຕົກລົງຂອງລັດຖະມຸນຕີວ່າການ ກະຊວງສຶກສາທິການ
ເລກທີ 2854/ສສ.ສຄ ລົງວັນທີ 31/10/2008
ອຸປະຖຳໂດຍ: Japan International Cooperation Foundation
ພິມຄັ້ງທີ1: ກຸມພາ 2011
ພິມທີ: ໂຮງພິມລາວຢູນິພຣິນ
ຈຳນວນ: 7,000 ຫົວ

ສາລະບັນ

ໜ້າ

ຄຳນຳ ຂອງ ຫົວໜ້າກົມສ້າງຄູ.....4

ບົດນຳ.....6

ພາກທີ I ທິດສະດີວ່າດ້ວຍການຮຽນພາສາ

ບົດທີ 01 ພາສາ.....10

ບົດທີ 02 ຄວາມຮຸ່ງເຮືອງຂອງພາສາລາວ 14

ບົດທີ 03 ການອ່ານ ແລະການຮຽນພາສາ 18

ບົດທີ 04 ຫຼັກການ ສອນອ່ານ ໃນຊັ້ນປະຖົມ 25

ບົດທີ 05 ປຶ້ມອ່ານສຳລັບເດັກ ແລະກິດຈະກຳສົ່ງເສີມການອ່ານ.....30

ພາກທີ II ການສອນອ່ານຜ່ານກິດຈະກຳ

ບົດທີ 06 ຮູ້ຈັກກັບປຶ້ມຫົວໜຶ່ງ 38

ບົດທີ 07 ອ່ານມ່ວນໆ 42

ບົດທີ 08 ພາອ່ານການ 47

ບົດທີ 09 ອ່ານເພື່ອຈັບໃຈຄວາມ 52

ບົດທີ 10 ເກີດຫຍັງຂຶ້ນ.....57

ບົດທີ 11 ຄວາມປະທັບໃຈ.....61

ບົດທີ 12 ອ່ານກອນມ່ວນໆ 66

ບົດທີ 13 ເລົ່າເລື່ອງຫຍໍ້.....73

ບົດທີ 14 ຄຳຖາມຕໍ່ເນື່ອງ 77

ບົດທີ 15 ການນຳພາອ່ານປຶ້ມວິທະຍາສາດ 81

ບົດທີ 16 ການສອນອ່ານແບບບູລະນາການ 1. ຄົ້ນຫາຄຳ/ສຳນວນຍາກ.....86

ບົດທີ 17 ການສອນອ່ານແບບບູລະນາການ 2. ອະທິບາຍຄຳ/ສຳນວນ ແລະ
ສ້າງປະໂຫຍກໃໝ່ 91

ບົດທີ 18 ການສອນອ່ານແບບບູລະນາການ 3. ຮັກສາສິ່ງແວດລ້ອມ 95

ບົດທີ 19 ການສອນອ່ານແບບບູລະນາການ 4. ເສດຖະກິດນ້ອຍໆ 100

ບົດທີ 20 ການສອນອ່ານແບບບູລະນາການ 5. ນ້ອຍໃນຊີວິດຄົນລາວ 105

ຄຳນຳ

ຂ້າພະເຈົ້າ ຮູ້ສຶກປິ້ມປິຕິຍິນດີທີ່ສຸດ ທີ່ໄດ້ເຫັນປຶ້ມ **" ຄູ່ມື ສອນພາສາລາວ ແບບ ມ່ວນໆ"** ສຳລັບຊັ້ນປະຖົມສຶກສາ ເຊິ່ງເປັນບົດຮຽນ ແລະ ປະສົບການ ຈາກວິທະຍາໄລຄູ. ຂ້າພະເຈົ້າ ຂໍຕີລາຄາສູງຕໍ່ການພັດທະນາປຶ້ມຫົວນີ້ວ່າ ເປັນຄູ່ມືການສອນທີ່ມີຄຸນຄ່າອີກ ຫົວໜຶ່ງທີ່ປະກອບສ່ວນເຂົ້າ ໃນຄັງສີ່ການຮຽນການສອນ ຂອງການສ້າງຄູເວົ້າສະເພາະ.

ດັ່ງທ່ານທັງຫຼາຍ ໄດ້ຮັບຊາບນຳກັນແລ້ວວ່າ ການຮຽນຮູ້ພາສາໜຶ່ງໆ ບໍ່ແມ່ນເລື່ອງ ທີ່ງ່າຍດາຍເສຍແລ້ວ, ແຕ່ຖ້າຢາກນຳໃຊ້ພາສານັ້ນໆຢ່າງຊຳນິຊຳນານ ຍິ່ງເປັນເລື່ອງທີ່ ຫຍຸ້ງຍາກ. ພາສາ ແລະການນຳໃຊ້ພາສາໃຫ້ເກີດຜົນນັ້ນ ພັດເປັນສິ່ງທີ່ຈຳເປັນທີ່ສຸດໃນ ຊີວິດປະຈຳວັນຂອງມະນຸດ, ພາສາເປັນພາຫະນະສື່ສານລະຫວ່າງຄົນ ທັງເປັນພາຫະນະ ໃນການຮຽນຮູ້, ຂະແໜງການສ້າງຄູ ເຊິ່ງເປັນໝາກຫົວໃຈຂອງການສຶກສາ ຍິ່ງມີຄວາມຈຳ ເປັນ ຈະຕ້ອງສ້າງຜູ້ທີ່ຈະເປັນຄູສອນໜັງສືໃຫ້ຜູ້ທີ່ບໍ່ທັນຮູ້, ສະນັ້ນ ຜູ້ຈະເປັນຄູສອນ ຈະຕ້ອງ ມີວິທີການສິດສອນທີ່ດີ. ເມື່ອເວົ້າເຖິງວິທີການສິດສອນກໍມີຫຼາຍວິທີ ແລະ ລ້ວນແຕ່ເປັນ ວິທີທີ່ດີ ທັງປະໂຫຍດ, ແຕ່ຂ້າພະເຈົ້າຄິດວ່າ ວິທີການສິດສອນທີ່ດີ ຕ້ອງສອດຄ່ອງກັບ ຄວາມຕ້ອງ ການຂອງຜູ້ຮຽນ ຫຼື ສະຖານະການຂອງຫ້ອງຮຽນ.

ການຮຽບຮຽງປຶ້ມຄູ່ມືຫົວນີ້ຂຶ້ນ ກໍຄ້ອມພໍດີກັບ ໄລຍະແຫ່ງການປະຕິຮູບລະບົບ ການສຶກສາແຫ່ງຊາດ ເຊິ່ງໃນນັ້ນ ການປະຕິຮູບວິທີການສອນ ແລະ ວິທີການຮຽນຮູ້ກໍແມ່ນ ເນື້ອໃນໃຈກາງ ຂອງການປະຕິຮູບດັ່ງກ່າວ. ການທີ່ມີວິທີການສິດສອນຫຼາກຫຼາຍ ແລະ

ເປັນປະໂຫຍດນັ້ນ ເປັນຄວາມຕ້ອງການອັນຈຳເປັນ ແກ່ການສ້າງຄູຮຸ່ນໃໝ່ ເພື່ອໃຫ້ເຂົາເຈົ້າມີຄວາມຮູ້ ແລະ ມີທັກສະໃນການສິດສອນທີ່ດີ, ຖ້າມີຄູສອນທີ່ດີ ພວກເຮົາກໍຈະມີ ນັກຮຽນທີ່ດີ ມີຄົນຮຸ່ນໃໝ່ທີ່ດີ ຕາມວິໄສທັດທີ່ວ່າ: " ສ້າງຄູ ເພື່ອສ້າງຄົນ ສ້າງຄົນເພື່ອສ້າງຊາດ" ນັ້ນເອງ.

ວິທີການສອນ "ພາສາລາວ ແບບມ່ວນໆ" ກໍເປັນວິທີການສອນທີ່ດີອີກວິທີໜຶ່ງ ເພາະວ່າວິທີການສິດສອນ ສາມາດປັບປຸງປ່ຽນແປງໄປຕາມບັນຍາກາດ, ຄວາມສາມາດ ແລະ ຄວາມຕ້ອງການຮຽນຮູ້ຂອງນັກຮຽນ ທັງນີ້ທັງນັ້ນ ມັນກໍສອດຄ່ອງກັບທ່າອ່ຽງພັດທະນາການຮຽນຮູ້ຜ່ານການຫຼິ້ນ ຫຼື ເອີ້ນວ່າ " ຫຼິ້ນເພື່ອຮຽນ ຮຽນເພື່ອຫຼິ້ນ" ຄວາມຈິງ ມັນກໍແມ່ນວິທີການສອນໂດຍຜ່ານການປະຕິບັດກິດຈະກຳນັ້ນເອງ. ການສິດສອນແບບເອົານັກຮຽນເປັນໃຈກາງ ຫຼື ການຮຽນຮູ້ທີ່ດີ, ມັນຈະເຮັດໃຫ້ທັງຜູ້ສອນ ແລະ ຜູ້ຮຽນ ມີຄວາມມ່ວນຊື່ນ, ມີຄວາມສະໜຸກ, ບໍ່ອິດເມື່ອຍ, ຮັບເອົາຄວາມຮູ້ໄດ້ງ່າຍ, ຈື່ຈຳໄດ້ດົນ ແລະ ນຳໄປປະຕິບັດຢ່າງເປັນປະໂຫຍດ.

ຂ້າພະເຈົ້າ ຂໍຍ້ອງຍໍສໍລະເສີນ ນັກວິຊາການຜູ້ມີຄວາມຮູ້ ແລະ ມີປະສົບການທັງຫຼາຍ ທີ່ໄດ້ອຸດສາພະຍາຍາມຄົ້ນຄວ້າ ແລະ ຮຽບຮຽງປຶ້ມຄູ່ມືຫ໋ວນີ້ ທັງໄດ້ນຳເອົາວິທີການສອນນີ້ໄປທົດລອງນຳໃຊ້ ຈົນປະສົບຜົນສຳເລັດດ້ວຍດີ. ຂໍສະແດງຄວາມຂອບໃຈ ຕໍ່ ສະມາຄົມຮ່ວມນຳໃຈກັບເດັກນ້ອຍລາວ (ALC) ທີ່ໄດ້ການອຸປະຖຳແກ່ການຄົ້ນຄວ້າ ຮຽບຮຽງ ແລະ ພິມແຈກຢາຍປຶ້ມທີ່ມີຄຸນຄ່າຫ໋ວນີ້ດ້ວຍ.

ຂໍໃຫ້ຄູສອນຊັ້ນປະຖົມສຶກສາ ຈົ່ງນຳເອົາປຶ້ມຄູ່ມືຫ໋ວນີ້ ໄປໃຊ້ປະກອບການສອນພາສາລາວໃຫ້ເກີດປະໂຫຍດຢ່າງແທ້ຈິງ.

ນະຄອນຫຼວງວຽງຈັນ ມີນາ 2011

ດຣ. ມີທອງ ສຸວັນວິໄຊ

ຫົວໜ້າກົມສ້າງຄູ, ກະຊວງສຶກສາທິການ

ບົດນຳ

ພາສາແມ່ ເປັນພາສາທີ່ເດັກຮຽນຮູ້ ແລະສາມາດພັດທະນາໄດ້ດ້ວຍຕົນເອງ ເພາະມີສິ່ງແວດລ້ອມ ເອື້ອອຳນວຍ. ການຮຽນການສອນພາສາລາວໃນຊັ້ນປະຖົມຈຶ່ງຕ້ອງມີວິທີສອນໃຫ້ເດັກມີສ່ວນຮ່ວມ ເພື່ອການຊຶມຊັບທີ່ສົມບູນ ແລະຮັບຮູ້ໂດຍທຳມະຊາດ ຜ່ານການເຮັດກິດຈະກຳຮ່ວມກັບໝູ່ ແລະການເຝິກຝົນສ່ວນຕົວ.

ປຶ້ມ "**ຄູ່ມືການສອນອ່ານມ່ວນໆ**" ຫົວນີ້ ຂຽນຂຶ້ນສຳລັບຄູສອນຊັ້ນປະຖົມ, ອາຈານສອນພາສາວັນນະຄະດີລາວ ແລະ ນັກສຶກສາສະຖາບັນສ້າງຄູທຸກລະບົບ ທີ່ຈະໄປເປັນຄູສອນໃນຊັ້ນປະຖົມ ກັບມັດທະຍົມ ຫຼື ແມ່ນແຕ່ພໍ່ແມ່ ເພາະໄດ້ສະເໜີແນະວິທີການສອນແບບມ່ວນໆ ທັງຕົວຢ່າງການນຳໃຊ້ປຶ້ມນິທານ ມາອ່ານເສີມໃນການສອນ ເພື່ອພັດທະນາຄວາມສາມາດດ້ານຕ່າງໆຂອງເດັກ ໂດຍສະເພາະ ການອ່ານ ການປາກເວົ້າ ແລະ ການຂຽນ. ຄູສອນສາມາດນຳໃຊ້ເປັນຄູ່ມືປັບປຸງການສອນແລະ ສ້າງແຜນການສອນບົດຮຽນພາສາລາວຂອງຕົນ ໃຫ້ໄດ້ມາດຕະຖານ ສອນງ່າຍ ນັກຮຽນມ່ວນ ແລະ ມີປະສິດທິຜົນ.

ການສອນແບບເອົາເດັກເປັນໃຈກາງ ຮຽກຮ້ອງໃຫ້ຄູກະກຽມ ແລະ ມີແຜນການສອນຢ່າງຄັກແນ່, ປຶ້ມຫົວນີ້ບໍ່ແມ່ນຕຳລາສຳລັບຫຼັກສູດຊັ້ນໃດນຶ່ງສະເພາະ ເປັນແຕ່ຕົວຢ່າງບາງບົດຮຽນ ໃຫ້ພວກເຮົາທົດລອງປະຕິບັດ ເພື່ອໝຸນໃຊ້ກັບບົດຮຽນອື່ນໆ.

ປຶ້ມຫົວນີ້ເວົ້າເຖິງຫຍັງແດ່ ?

ໃຈຄວາມໃນປຶ້ມນີ້ ມີສອງພາກ :

ພາກທີ I ເວົ້າເຖິງທິດສະດີໂດຍລວມ ຂອງການອ່ານ ແລະ ການສອນອ່ານ ອາຈານຄູສອນ ແລະ ນັກຮຽນຄູທຸກຄົນ ຈະເຂົ້າໃຈວ່າ ພາລະກິດການສອນພາສາ (ລາວ) ບໍ່ວ່າຊັ້ນໃດ ລ້ວນແຕ່ສຳຄັນ ແລະ ທີ່ເປັນພື້ນຖານກວ່າໝູ່ ແມ່ນຢູ່ໃນຊັ້ນປະຖົມສຶກສາ. ການເຮັດໃຫ້ເດັກມ່ວນນຳການອ່ານ ຕິດນິໄສມັກອ່ານ ແລະກາຍເປັນຜູ້ມັກອ່ານ ອ່ານໄດ້ໄວ ເຂົ້າໃຈຖືກຕ້ອງ ຈັບໃຈຄວາມໄດ້ດີ ແລະໃນທີ່ສຸດ ສາມາດຂຽນເປັນຖ້ອຍເປັນຄວາມຈະແຈ້ງ... ທັງໝົດເຫຼົ່ານີ້ ຈະສົ່ງຜົນສະທ້ອນທາງບວກ ບໍ່ພຽງແຕ່ຕໍ່ການຮຽນຂອງເຂົາໃນປັດຈຸບັນ ແຕ່ມັນຈະກາຍເປັນຄວາມຊຶມເຄີຍອັນດີ ຕິດໂຕເຂົາໄປຕະຫຼອດ ອັນຈະຊ່ອຍເຂົາສາມາດພັດທະນາສະມັດຖະພາບຂອງຕົນເອງ ຈາກການອ່ານໄດ້.

ການອ່ານມີຄວາມສຳຄັນຢ່າງໃດ ມັນເລີ່ມຂຶ້ນຢ່າງໃດ ຕອນໃດ, ພວກເຮົາໄດ້ຫຍັງຈາກການອ່ານ ແລະເປັນຫຍັງເຮົາຈຶ່ງຕ້ອງອ່ານ... ? ມີຄຳຕອບຫຼາກຫຼາຍ ຈາກຫຼາຍ

ທິດສະດີ ແລະນັກການສຶກສາ ຮວມທັງທັດສະນະ ແລະປະສົບການ ຈາກບຸກຄົນສຳຄັນຂອງໂລກ ມາສະເໜີໃຫ້ຮູ້ນຳ. ພວກເຮົາຈະເຊື່ອໝັ້ນຂຶ້ນຕື່ມ ໃນປະສິດທິຜົນຂອງການອ່ານ ແລະໃນພາລະກິດອັນມີກຽດສະງ່າ ໃນຖານະຄູສອນພາສາລາວ ຂອງຕົນ.

ພາກທີ II ເວົ້າເຖິງເຕັກນິກການສອນແບບມ່ວນໆ ແລະ ຄຳແນະນຳງ່າຍໆ ກ່ຽວກັບຫລັກການສອນອ່ານໃນຊັ້ນປະຖົມ ທີ່ສັງລວມຈາກປະສົບການຍາວນານຂອງນັກການສຶກສາລາວ. ວິທີເລືອກປຶ້ມອ່ານໃຫ້ເດັກ ຮວມທັງຂໍ້ຈຳກັດ ແລະ ຄວາມຫຍຸ້ງຍາກໃນບ້ານເຮົາ ເຊິ່ງຄູສອນພາສາລາວສ່ວນຫຼາຍຄຶດບໍ່ເຖິງວ່າ ຕົນເອງກໍສາມາດມີສ່ວນຮ່ວມໃນການແກ້ໄຂໄດ້.

ສຸດທ້າຍ ມີບົດສອນຕົວຢ່າງ ທີ່ຖອດຖອນຈາກປະສົບການຕົວຈິງ ຂອງຄະນະວິທະຍາກອນ ໃນເລື່ອງການສອນແບບບູລະນາການ ເຊິ່ງຄະນະຈັດທຳຄຶດວ່າຈະເປັນປະໂຫຍດພໍສົມຄວນ ສຳລັບຊັ້ນປະຖົມສຶກສາ ແລະ ປັບປຸງໄດ້ສຳລັບວິຊາພາສາລາວ ສັງຄົມສຶກສາທົ່ວໄປ ໃນຊັ້ນມັດທະຍົມ.

ໃນນາມຄະນະຈັດທຳ ພວກເຮົາຫວັງວ່າ ປຶ້ມນ້ອຍເຫຼັ້ມນີ້ ຈະຊ່ວຍຜ່ອນເບົາພາລະແບກຫາບອັນໜັກໜ່ວງຂອງຄູ ທີ່ຕ້ອງສອນປະຈຳວັນ ເຊິ່ງຫຼາຍໆຄັ້ງ ອາດມີຄວາມໜັກໃຈບໍ່ມ່ວນ ບໍ່ຟົດຟື້ນໃນການສອນ ໃຫ້ປ່ຽນມາເປັນຄວາມມ່ວນ ລຶມເວລາສອນ ແລະລຶມຄວາມເມື່ອຍໄປ.

ຖ້າພວກເຮົາກ້າຫານ ນຳເອົາບົດຮຽນໃນນີ້ໄປທົດລອງສອນແລ້ວ ອາດຈະອຸທານອອກມາເອງວ່າ

"ໂອະ ສອນພາສາລາວໃຫ້ເດັກນ້ອຍນີ້ ເກີນວ່າມ່ວນ" ກໍເປັນໄດ້.

ຂໍອວຍພອນໃຫ້ທຸກຄົນ ມີຄວາມກ້າຫານ ແລ້ວຢ່າລຶມສິ່ງບົດຮຽນມາແລກປ່ຽນກັນ

ສະມາຄົມ ຮ່ວມນ້ຳໃຈກັບເດັກນ້ອຍລາວ

ກຸມພາ 2011

ພາກທີ I

ທິດສະດີ ວ່າດ້ວຍ ການຮຽນພາສາ

24 / VII

ຫ້າມຈຳໜ່າຍ

ບົດທີ ໜຶ່ງ

ພາສາ

ໃຈຄວາມຫຼັກ: ເວົ້າເຖິງຄວາມເປັນມາຂອງພາສາ ຕົວໜັງສື ແລະ ລະບຽບຫຼັກການໃນການໃຊ້ພາສາ (ໄວຍາກອນ).

ກ່ອນຈະເວົ້າເຖິງການອ່ານ ຫຼື ອ່ານໜັງສືນັ້ນ ຈຳເປັນຕ້ອງທວນຄືນໜ້ອຍນຶ່ງວ່າ **ສິ່ງທີ່ເຮົາໃຊ້ປາກເວົ້າອ່ານຂຽນກັນທຸກວັນນີ້ທີ່ເອີ້ນວ່າພາສານັ້ນ ມີຄວາມເປັນມາແນວໃດ ແລະສຳຄັນຢ່າງໃດ ຕໍ່ພັດທະນາການຂອງມະນຸດຊາດ.**

1. ພາສາແມ່ນຫຍັງ:

• ພາສາ ຄຳນີ້ມີເຄົ້າມາຈາກປາລີ ແລະສັນສະກິດວ່າ ພາສ(ອ່ານວ່າ ພາສະ)ແປວ່າ ຄຳເວົ້າ, ສະຫວ່າງ, ແຈ້ງ. ໃນນີ້ຄວາມໝາຍຂອງພາສາ ຈຶ່ງແມ່ນສິ່ງທີ່ເຮັດໃຫ້ຄົນເຮົາເຂົ້າໃຈກັນ ຄືໃຫ້ເຂົ້າໃຈກັນຈະແຈ້ງຂຶ້ນ ເຊິ່ງກໍຄືຄຳປາກເວົ້ານັ້ນເອງ. ການຮູ້ຈັກປາກເວົ້າ ສະແດງຄວາມຮູ້ສຶກ ອາລົມ ຄວາມຄຶດ ອອກມາ ເອີ້ນວ່າ ຮູ້ພາສາ. ດັ່ງເວົ້າວ່າ ຄົນຜູ້ນັ້ນ ຮູ້ພາສາຕ່າງປະເທດ ກໍໝາຍຄວາມວ່າ ເພິ່ນສາມາດປາກເວົ້າ ຟັງຜູ້ອື່ນເວົ້າ ແລະສະແດງ ຄວາມຄຶດດ້ວຍພາສານັ້ນໆ ຢ່າງມີຄວາມເຂົ້າໃຈພາສານັ້ນໆພໍສົມຄວນ.

• ພາສາຈຶ່ງເປັນພາຫະນະ ທີ່ຜູ້ຄົນໃນໂລກໃຊ້ ເພື່ອສະແດງຄວາມເຂົ້າໃຈ ແລກປ່ຽນ ຄວາມນຶກ ຄຶດອາລົມຈິດຂອງຜູ້ຄົນ ໃນສັງຄົມ ຂອງປະເທດນຶ່ງ. ໂດຍທົ່ວໄປ ຄົນເຮົາສື່ສານ ຕິດຕໍ່ກັນ ດ້ວຍການປາກເວົ້າ ການຟັງຫລາຍກວ່າການອ່ານ ຫຼື ຂຽນ ແຕ່ກະໂຕການອ່ານ ຫຼືຂຽນນັ້ນຊ້ຳຜັດຊຸກຍູ້ໃຫ້ການປາກເວົ້າແລະຟັງ ດີຂຶ້ນ.

• ໃນຊີວິດ ປະຈຳວັນ ສາມເລື່ອງນີ້ ລ້ວນແຕ່ພົວພັນກັນຄື:

ພາສາ(ປາກ-ເວົ້າ-ຂຽນ-ອ່ານ) ⟶ ຄວາມນຶກຄຶດ ⟶ ຄວາມຮູ້ສຶກ

ນັກການສຶກສາຜູ້ນຶ່ງໃຫ້ທັດສະນະວ່າ: "ການພັດທະນາທາງພາສາ ແມ່ນຄວາມສຳເລັດອັນຍິ່ງໃຫຍ່ຂອງມະນຸດຊາດ ການຮຽນໃຊ້ພາສາຢ່າງມີປະສິດທິຜົນຈຶ່ງແມ່ນວຽກງານທີ່ລະອຽດອ່ອນ ສັບສົນ ອັນນຶ່ງຂອງແຕ່ລະບຸກຄົນ ເພາະວ່າ ພາສາກວມລວມເອົາທຸກການເຄື່ອນໄຫວໃນຊີວິດ. ການສອນພາສາ ບໍ່ວ່າພາສາໃດ ຄວນມີເປົ້າໝາຍ(purposes) ຊ່ວຍໃຫ້ຜູ້ຮຽນ ຄົ້ນຄິດໄດ້ຢ່າງຈະແຈ້ງ ກວ່າເກົ່າ ສາມາດສື່ສານກັບຄົນອື່ນ ແລະມີສະເໜຫຼາຍຂຶ້ນ (Teaching Language and Literature, ໂດຍ Loban Ryan Squire, Harcourt, Pirace and World Inc.)

ແຕ່ການຮຽນຮູ້ພາສາ ແລະໃຊ້ພາສານັ້ນ ຕ້ອງຜ່ານຫຼາຍລະດັບ

4	ສ້າງຄ່ານິຍົມຂອງຮູບແບບການດຳເນີນຊີວິດ (Valuation) ຮູ້ເລືອກເຟັ້ນ ສັນຫາພາສາມາໃຊ້ ໄດ້ຢ່າງເໝາະສົມ (ນັກແຕ່ງເພງ, ນັກປະພັນ, ນັກວິຊາການ, ນັກການເມືອງ...).
3	ສາມາດນຳໃຊ້ຄຳສັບ ສຳນວນເພື່ອສື່ສານ (Communication) ທັ້ງປາກເວົ້າ ແລະ ຂຽນ, ສາມາດຈຳແນກຄວາມໝາຍ, ແນວຄິດໄດ້ຢ່າງຖືກຕ້ອງ
2	ຮັບຮູ້-ຊື່ນຊົມ (Appreciation) ເກີດຂຶ້ນ ເມື່ອໄດ້ສຳຜັດກັບບົດວັນນະຄະດີ, ບົດປະພັນ, ການກອນ, ລະຄອນ, ບົດຄວາມ, ກ້າວເຖິງຂັ້ນຮູ້ຕິຊົມ, ວິພາກວິຈານ.
1	ຟັງແລະອ່ານດ້ວຍຄວາມເຂົ້າໃຈ (understanding) ຄື ສາມາດ ເຂົ້າໃຈ ແລະຮູ້ຈຳແນກໄດ້ ຄຳຖາມ, ຄຳຕອບ...ແລະ ສາມາດເຂົ້າໃຈຄຳສັບ ໂດຍພື້ນຖານ (listening with discrimination and reading with comprehension).


2. ຕົວອັກສອນ ແລະ ໄວຍາກອນລາວ

ພາສາຂອງມະນຸດ ຖືກຳເນີດພ້ອມໆກັບມະນຸດຊາດນັ້ນໆ ແລະປ່ຽນແປງປັບປຸງໄປພ້ອມກັບການຂະຫຍາຍຕົວຂອງສັງຄົມ ແຕ່ຕົວໜັງສື ທີ່ໃຊ້ຂຽນແທນການເວົ້າ ເກີດນຳຫລັງ ແລະວິວັດໄປຕາມຄວາມຈະເລີນຂອງທ້ອງຖິ່ນ ທີ່ມີປະຫວັດການເກີດຂອງອັກສອນແຕກຕ່າງກັນ.

ໃນທົ່ວໂລກ ມີພາສາໃຊ້ປາກເວົ້າສື່ສານກັນປະມານ: 10,000 ພາສາແຕກຕ່າງກັນ, ແຕ່ສ່ວນໃຫຍ່ ຍັງບໍ່ມີຕົວອັກສອນຂຽນ. ຕົວອັກສອນເກົ່າແກ່ຖືກປະດິດຂຶ້ນລະຫວ່າງ 4000-5000 ປີມາແລ້ວ. ຕາມການຄົ້ນຄວ້າຂອງນັກວິທະຍາສາດ ເພີ່ນພົບວ່າ ຊົນເຜົ່າໃນ

ບໍລິເວນທະວີບອາຊີກາງ-ເອຊີບ ເປັນກຸ່ມທຳອິດ ທີ່ປະດິດຕົວອັກສອນຂຶ້ນໃຊ້ ເພື່ອບັນທຶກ ຄວາມຮູ້ ແລະຖ່າຍທອດວິຊາການຕ່າງໆ ໃຫ້ແກ່ຄົນຮຸ່ນຕໍ່ໆມາ.

ປະຊາກອນໂລກ ໃນປັດຈຸບັນ ມີປະມານ 6,000 ລ້ານກວ່າຄົນ, ອ່ານອອກຂຽນໄດ້ ແຕ່ 85 %ຄື: ປະມານ 5.100 ລ້ານຄົນ.




(ອັກສອນ ເອຊີບ)

ອັກສອນລາວ ມີປະຫວັດວ່າ ຖືກຳເນີດເກີດຂຶ້ນມາໄດ້ລະຫວ່າງ 1000-2000 ປີ ແລະໄດ້ວິວັດ ປ່ຽນແປງຮູບຊົງມາເປັນໄລຍະໆ, ປັດຈຸບັນ ພົບສິລາເລກເກົ່າແກ່ທີ່ສຸດ (ອັກສອນລາວ) ອາຍຸ 800ປາຍປີ ຢູ່ຫຼວງພະບາງ.

ຕາມປົກກະຕິຜູ້ຄົນ(ທຳມະດາ) ຈະສື່ສານກັນດ້ວຍພາສາປາກເວົ້າ ຂຽນ ແລະ ອ່ານ ຜ່ານລະບົບອັກສອນ ເຊິ່ງແຕ່ລະຊາດໄດ້ປະດິດຕົວອັກສອນຂອງຕົນຂຶ້ນເພື່ອໃຊ້ຂຽນ ຖ່າຍທອດ ແລະອ່ານໃຫ້ເຂົ້າໃຈກັນ. ແຕ່ລະພາສາກໍມີຫຼັກການສະເພາະຂອງຕົນ ແລະຫຼັກ ການນີ້ເອງທີ່ເອີ້ນວ່າໄວຍາກອນ ເຊິ່ງໝາຍເຖິງຂໍ້ກຳນົດກົດເກນຕ່າງໆ ເພື່ອໃຫ້ຄົນໃນຊາດ ນຶ່ງໆທີ່ໃຊ້ພາສາດຽວກັນ ຂຽນໃຫ້ເປັນລະບຽບດຽວກັນ ຮວມທັງມີວິທີການປະພັນວັນນະ ຄະດີ ການແຕ່ງກາບກອນ ແລະຫລັກການສ້າງຄຳຂຶ້ນໃໝ່ ຕາມແບບຂອງຕົນ.


ໄວຍາກອນລາວ ຫລື ຫຼັກຂອງການໃຊ້ພາສາລາວ ເກີດຂຶ້ນຕາມຄວາມຕ້ອງການ ຂອງສັງຄົມ ມາຮອດປັດຈຸບັນ ນັກປາດອາຈານທາງພາສາ ກຳນົດແບ່ງຫຼັກພາສາລາວ



(ອັກສອນລາວ ແຕ່ລະສະໄໝ)

ອອກເປັນສີ່ພາກ ຄື: ອັກຂະຫລະວິທີ (ຫລັກການໃຊ້ຕົວໜັງສື ສະກົດຄຳ), ວະຈີວິພາກ (ການແບ່ງໜ້າທີ່ຂອງຄຳ), ວາກາຍະສຳພັນ (ຄວາມສຳພັນລະຫວ່າງຄຳສັບຕ່າງໆ) ແລະ ສັນທະກະວິ (ການແຕ່ງຄຳ ກາບ, ກອນ, ໂຄງ, ສັນ...)

ສະຫຼຸບ: ພາສາເກີດມາພ້ອມໆກັບຄົນ ແຕ່ຫຼັກການໃຊ້ຕ່າງໆ ເກີດນຳຫຼັງ ໂດຍນັກ ປາດອາຈານຈັດແຕ່ງຂຶ້ນ ເມື່ອສັງຄົມຂະຫຍາຍໂຕ ຈຳຕ້ອງມີລະບຽບຫຼັກການ ເຊິ່ງສາມາດ ປ່ຽນແປງປັບປຸງໄປຕາມຄວາມເໝາະສົມ. ທຸກພາສາທີ່ມີລະບົບອັກສອນໃນໂລກ ມີໄວຍະ ກອນ ແລະ ວັດຈະນານຸກົມໃຊ້.



ບົດທີ ສອງ

ຄວາມຮຸ່ງເຮືອງຂອງພາສາລາວ


ໃຈຄວາມຫຼັກ: ເວົ້າເຖິງຍຸກຮຸ່ງເຮືອງຂອງພາສາລາວ ສະແດງຢູ່ບ່ອນຜົນງານທາງພາສາວັນນະຄະດີ ແລະປະຫວັດການອ່ານຂອງຄົນລາວແຕ່ບູຮານນະການ.


1. ຍຸກຮຸ່ງເຮືອງ ຂອງພາສາລາວ


ນັກຄົ້ນຄວ້າ ຫລາຍທ່ານລົງຄວາມເຫັນວ່າ ຍຸກຄຳຂອງພາສາວັນນະຄະດີລາວ ຕົກຢູ່ໃນລະຫວ່າງ ຕົ້ນຄິດຕະສະຕະວັດທີ 16 ຫາປາຍຄິດຕະສະຕະວັດທີ 17 (ພະເຈົ້າວິຊຸນນະຣາດແຫ່ງຊ້ຽງທອງ ຄ.ສ.1500 ເຖິງສະໄໝພະເຈົ້າສຸຣິຍະວົງສາແຫ່ງກຸງສີສັດຕະນາຄະນະຫຸດວ້ຽງຈັນ ຄ.ສ.1695).

ໂຄງການ ຂຶ້ນບັນຊີແລະປົກປັກຮັກສາໜັງສືໃບລານລາວ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳແຫ່ງ ສ.ປ.ປ.ລາວ ດຳເນີນການຢູ່ໃນລະຫວ່າງປີ 1988 - 2002









ສືບທອດວຽກງານ ຈາກພຸດທະບັນດິດສະພາຈັນທະບຸລີ ເມື່ອຕົ້ນຊຸມປີ ຄ.ສ.1930 ໂດຍ ມີເຈົ້າເພັດຊະຣາດຣັດຕະນະວົງສາ(ຄ.ສ.1890-1959)ເປັນນາຍົກ, ໄດ້ເກັບກຳທ້ອນໂຮມ ຂຶ້ນບັນຊີ ໜັງສືໃບລານລາວໄວ້ ເປັນຫຼັກຖານທີ່ສຳຄັນ ຢັ້ງຢືນເຖິງຄວາມຈະເລີນຮຸ່ງເຮືອງ ລະດັບນຶ່ງຂອງການອັກສອນສາດ ກໍຄື ພາສາວັນນະຄະດີລາວ. ທ່ານມະຫາສິລາ ວີຣະວົງສ໌ (ຄ.ສ.1904-1987) ນັກປາດທາງອັກສອນສາດລາວ ໄດ້ຂຽນອະທິບາຍໄວ້ໃນປຶ້ມ "ປະໂຫຍດຂອງວັນນະຄະດີ" (1996), ວັນນະຄະດີເພື່ອການສຶກສາ (1962) ແລະ ຕຳລາອື່ນໆ ຂອງເພິ່ນ ທີ່ພໍສະຫລຸບໄດ້ດັ່ງນີ້:

1. ແບບແຕ່ງກາບ ກອນ ໂຄງ ສານ ຂອງລາວ ມີລະບຽບຫລັກການດີ ແລະມີຫລາຍກວ່າ 15 ແບບ (ແບບແຕ່ງກອນໄຫວຽງຈັນ ພິມປີ 1942, 1996)
2. ມີຕຳນານປະຫວັດສາດມາກມາຍເຊັ່ນ ຕຳນານຂຸນບູຣົມ, ຕຳນານພະແກ້ວ ພະບາງ ອຸຣັງຄະທາດ. ນິທານຄຳສອນເຊັ່ນ ນາງຕັນໄຕ ທ້າວສຽວສະຫວາດ, ນິທານ ທິດສະຊາດຊາດົກ, 50 ຊາດ, 500 ຊາດ ແລະຄຳພີພະໄຕປິດົກ, ຕຳລາຢາ ຕຳລາໂຫຣາສາດ ການຊ່າງຕ່າງໆ. ພິເສດສຸດ ແມ່ນຄຳພີກົດໝາຍບູຮານ ທີ່ເອີ້ນວ່າ ທັມມະສາດບູຮານ. ສະບັບທຳອິດຊຳຣະໄວ້ແຕ່ປີ 1957 ແລະໃນຊຸມປີ 1990 ກໍມີການລິດຈະນາອອກມາຕື່ມຮອດ 5-6 ຄຳພີ ເຊັ່ນ ສ້ອຍສາຍຄຳ, ມຸກຂະປາຖະ, ມູນລະຕັນໄຕ...
3. ມີວັນນະຄະດີຄຳກອນ ຄຳກາບ ຄຳຮ້ອຍແກ້ວ ທີ່ຍິ່ງໃຫຍ່ ທັງດ້ານໂຄງສ້າງແລະ ສັນທະລັກ ເຊັ່ນ ພື້ນທ້າວຮຸ່ງ ທີ່ຂຽນເປັນຄຳກອນ ຍາວປະມານ 20,000 ວັກ ກອນ,ຄຳກອນສັງສິນໄຊຍາວເກືອບ10,000ວັກກອນ,ກອນເຫດຮ່າຍເວດສັນຕຣະ ຊາດົກ ຍາວ 1000 ຄາຖາ ແລະອື່ນໆ.

2. ປະຫວັດການອ່ານຂອງຄົນລາວ

ອັກສອນລາວ ທີ່ນຳໃຊ້ມາຮອດປັດຈຸບັນມີປະຫວັດວ່າຖືກຳເນີດມາແລ້ວຫຼາຍພັນປີ ແລະການຂຽນການອ່ານໜັງສືລາວ ກໍຜ່ານໄລຍະຮຸ່ງເຮືອງເຫລືອງເຫຼື້ອມມາແລ້ວ ເຫັນໄດ້ຈາກຈຳນວນໜັງສືຜູກໃບລານຢູ່ໃນວັດທົ່ວປະເທດ ທີ່ມີ 400,000 ກວ່າຜູກ, (ແຫລ່ງຂໍ້ມູນ: ມໍລະດົກວັນນະຄະດີລາວ ໂຄງການປົກປັກຮັກສາໃບລານລາວ) ແລະ ວັດທະນະທຳ



ການອ່ານຂອງພະສົງ ຜູ້ເຄີຍບວດຮຽນມາແລ້ວ. ປະເພນີສະຫຼອງໜັງສືໃບລານ ໃນບ້ານ ໃນເມືອງ ທົ່ວປະເທດລາວຊີ້ບອກວ່າ ຄົນລາວຍຸກກ່ອນ ບໍ່ພຽງແຕ່ຮັບຮູ້ຄຸນຄ່າຂອງໜັງສື ແຕ່ຍັງຍົກຍ້ອງນັບຖື ຜູ້ອ່ານໜັງສືເກັ່ງວ່າ ເປັນນັກປາດອາຈານ ຜູ້ໃດອ່ານລຽນອ່ານມ່ວນ ຍັງໄດ້ເປັນໝໍພອນປະຈຳບ້ານ ເປັນຜູ້ປາກເຂັດປາກຍຳໄປອີກ. ສຳລັບນັກບວດ ກໍແມ່ນການອ່ານໜັງສືເທດ ອ່ານດ້ວຍຖ້ອຍທຳນອງທີ່ອ່ອນຊ້ອນ ຊວນຕິດຕາມ ເປັນການອ່ານເພື່ອຄົນອື່ນ ທີ່ຈະໄດ້ທັງຄວາມຮູ້ ຄວາມມ່ວນຊື່ນນຳ. ພະສົງທີ່ເປັນນັກເທດ ຫລືຄາລະວາດ ນັກອ່ານໜັງສືຜູກໃບລານຮູ້ດີວ່າ ຄວນເອົາໜັງສືເລື່ອງໃດໄປເທດໄປອ່ານຢູ່ໃສ ໃນວາລະໂອກາດໃດ (ງານກຳ, ບຸນກອງບວດ, ກອງທານ...)

ການອ່ານໜັງສືໃບລານໃຫ້ຄົນທັງຫຼາຍຟັງ ແມ່ນກິດຈະກຳສຳຄັນ ມັນທັງສຶກສາ ອົບຮົມສິລະທຳ ແນະນຳວິຊາຊີບ (ການຊ່າງ ໂຫຣາສາດ ຕຳລາຢາພື້ນເມືອງ...) ແລະໃຫ້ຄວາມເພີດເພີນໄປພ້ອມ.

ສະຫຼຸບແລ້ວ ຄົນລາວໃນສະໄໝກ່ອນ ມີວັດທະນະທຳການອ່ານ ຮູ້ຄຸນຄ່າແລະໃຫ້ຄວາມສຳຄັນແກ່ການອ່ານ, ນັບຖືຍົກຍ້ອງຜູ້ອ່ານໜັງສືໄດ້. ການອ່ານໃນເມື່ອກ່ອນມີທັງລັກສະນະສ້າງສັນ ເພື່ອສັງຄົມ ແລະເຝິກຝົນຕົນເອງ. ສ່ວນແມ່ຍິງກໍຮັບເອົາວັດທະນະທຳການຟັງ ສືບຕໍ່ມາ ຄືຟັງ ພະສິງ ເທດນິທານຄຳກອນຄຳສອນຕ່າງໆ, ຟັງຜີ ຫຼືພໍ່ທີ່ເຄີຍບອດຮຽນມາແລ້ວ.

ແຕ່ການອ່ານແບບນີ້ໄດ້ຂາດຫາຍໄປ ເມື່ອສະພາບເຫດການບ້ານເມືອງປ່ຽນແປງ ລຸນຫຼັງສະໄໝປົກຄອງຂອງພະເຈົ້າສຸຣິຍະວົງສາ (ຄ.ສ.1638-1695) ອານາຈັກລາວລ້ານຊ້າງໄດ້ເຊື່ອມໂຊມ ແຕກແຍກກັນເປັນຫຼາຍລັດນ້ອຍໆ ແລະຕົກຕ່ຳຊ້ຳຕື່ມ ເມື່ອຕົກເປັນເມືອງສ່ວຍຂອງສະຫຍາມ ແຕ່ປີ ຄ.ສ. 1713-1893 ແລ້ວຕົກເປັນຫົວເມືອງຂຶ້ນ ໃນອານານິຄົມຂອງຝຣັ່ງ ຮອດ ຄ.ສ 1954 ຕໍ່ດ້ວຍສົງຄາມຕໍ່ຕ້ານ ອາເມລິກາ ທີ່ແກ່ຍາວມາຮອດປີ 1975. ອິດທິພົນຂອງວັດທະນະທຳ ແລະ ພາສາຕ່າງປະເທດ ໄດ້ເຂົ້າມາປ່ຽນແທນການສຶກສາໃນວັດ ກາຍມາເປັນການສຶກສາຕາມລະບົບໃໝ່ໃນໂຮງຮຽນ ວິທະຍາໄລ ຫຼື ສະຖາບັນ. ແຕ່ພັດທະນາການດ້ານການພິມຕຳລາຮຽນ ປຶ້ມອ່ານຕ່າງໆ ຊ້ຳຜັດບໍ່ທັນເຂົ້າມາທົດແທນ ໜັງສືຜູກໃບລານ ບໍ່ວ່າດ້ານເນື້ອໃນ ຫຼືຄຸນນະພາບ ດັ່ງນັ້ນ ຄ່ານິຍົມໃນການອ່ານໜັງສື ໃນທ່ວສັງຄົມ ຈຶ່ງຕົກຕ່ຳ ແລະຖືກເບິ່ງຂ້າມກວ່າ 100 ປີ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ໃນປີ 1975 ການນຳໃຊ້ພາສາລາວ ຈຶ່ງຄ່ອຍໄດ້ຮັບການຟື້ນຟູ ການພິມປຶ້ມຕຳລາ ປຶ້ມອ່ານຕ່າງໆ ເພື່ອຮັບໃຊ້ການສຶກສາໄດ້ຮັບການເອົາໃຈໃສ່ຈາກພາກລັດ ແຕ່ຍ້ອນສະພາບທີ່ກ່າວມາແລ້ວ ສັງຄົມລາວ ຍັງຈຳເປັນຕ້ອງໄດ້ຮັບການກະຕຸກຊຸກຍູ້ ແລະສົ່ງເສີມ ໃຫ້ວັດທະນະທຳການອ່ານ ຄືນມາມີຊີວິດຊີວາອີກຄັ້ງໜຶ່ງ.

ບົດທີ ສາມ

ການອ່ານ ແລະການຮຽນພາສາ

ໃຈຄວາມຫຼັກ: ເວົ້າເຖິງຄວາມໝາຍ ແລະຄວາມສຳຄັນຂອງການອ່ານ, ຄວາມສຳຄັນຂອງການຮຽນພາສາ, ວິທີການຮຽນພາສາ ການໃຊ້ວັດຈະນານຸກົມ ແລະ ການສອນອ່ານ.

1. ການອ່ານແມ່ນຫຍັງ?

ນາໆທັດສະນະຕໍ່ການອ່ານ:

ນັກທິດສະດີຫຼາຍທ່ານ ເວົ້າເຖິງຄວາມສຳຄັນຂອງການອ່ານໄວ້ຕ່າງໆກັນ ດັ່ງນີ້:

• ພຣະອາຈານ ພຸດທະທາສ ພິກຂຸ, ພຸດທະສາສະນາຈານຜູ່ຍິ່ງໃຫຍ່ແຫ່ງສະຕະວັດທີຊາວ ເວົ້າເຖິງການອ່ານວ່າ: "ສິ່ງນຶ່ງ ທີ່ເຮັດໃຫ້ມະນຸດເຮົາ ແຕກຕ່າງກັບສັດເດຼລະສານ ກໍແມ່ນການອ່ານ ເພາະການອ່ານເຮັດໃຫ້ຄົນມີຄວາມຄຶດຕິດຕໍ່ນໍ່ເນື່ອງ ມີເຫດມີຜົນ..."

ຈາກທັດສະນະອັນນີ້ ພາໃຫ້ຄຳນຶງຕໍ່ອີກວ່າ ຈະອ່ານຫຍັງດີ, ບົດຂຽນແນວໃດຈຶ່ງພັດທະນາຄວາມຄຶດ ຊ່ວຍໃຫ້ຄຶດໄດ້ຢ່າງຖືກຕ້ອງ, ດ້ວຍວ່າການຄຶດຢ່າງຖືກຕ້ອງນັ້ນ ແມ່ນເສັ້ນທາງໜຶ່ງທີ່ຈະຊຸກຍູ້ໃຫ້ເຮົາດຳເນີນຊີວິດໄດ້ຢ່າງດີງາມ (ໜຶ່ງໃນແປດອົງຂອງມັກຄະ "ສັມມາສັງກັບປະ" = ຄວາມຄິດ ຄວາມຮິ່ນຕອງທີ່ຖືກຕ້ອງ).

• ພຣະອາຈານ ອ.ປະຍຸຕໂຕ (ພຸທທະທັມ, ໜ້າ: 749) ກ່າວໄວ້ວ່າ "ການຈະເກີດມີຄວາມຄຶດທີ່ ຖືກຕ້ອງດີງາມ ປະພຶດສະແດງອອກມາໄດ້ຕາມຄວາມຄຶດນັ້ນ ສ່ວນນຶ່ງໄດ້ມາຈາກການອ່ານ ການຮູ້ເລືອກອ່ານ ແລະອ່ານດ້ວຍຄວາມພິຈາລະນາ ອ່ານແນວມີສາລະປະໂຫຍດ ຈຶ່ງສຳຄັນ ສຳລັບພວກເຮົາ ທີ່ເປັນນັກການສຶກສາ ທີ່ຈະຊ່ວຍໃຫ້ການປະກອບອາຊີບຂອງເຮົາດີຂຶ້ນ".

• Alberto Manguel (ອານແບກໂຕ ມັງແກນ)ນັກຂຽນຊາວບຣາຊິນ ເຈົ້າຂອງປຶ້ມຊື່ A History of Reading ທີ່ພິມແລະແປເປັນຫຼາຍໆພາສາໃນໂລກເມື່ອຊຸມປີ 1990,

(ພາສາໄທ ISBN 974-322-955-8, ສຳນັກພິມມະຕິຊົນ,)ໃຫ້ຄວາມສຳຄັນແກ່ການອ່ານ ໂດຍກ່າວວ່າ "...ການອ່ານເປັນການປະພຶດ ການເຮັດເພື່ອຈະເຂົ້າໃຈໄດ້ໃນທັນທີ ວ່າເຮົາຄືຫຍັງແລະຢູ່ໃສ, ເຮົາອ່ານເພື່ອເຂົ້າໃຈ ຫຼືເພື່ອຈະເລີ່ມເຂົ້າໃຈ... ການອ່ານກໍ ເຊັ່ນດຽວກັບການຫັນໃຈ ເປັນໜ້າທີ່ ທີ່ຈຳເປັນຂອງພວກເຮົາ..."

• ທ່ານມະຫາຕະມະຄານທີ ບຸກຄົນນຶ່ງທີ່ປ່ຽນແປງໂລກໄດ້ຢ່າງສັນຕິ ດ້ວຍການ ສຶກສາຮຽນຮູ້ຈາກການອ່ານ, ຜູ່ທີ່ນຳພາຊາວອິນເດຍຕໍ່ສູ້ໄດ້ເອກະລາດຈາກອັງກິດໃນປີ 1948. ໃນໄວໜຸ່ມ ທ່ານ ຄານທີ ຮຽນຢູ່ປະເທດອັງກິດ ແລະ ພະຍາຍາມບຸກບືນ ເອົາແບບຢ່າງຄົນອັງກິດ ເພື່ອຈະໄດ້ຊື່ວ່າ ເປັນຄົນຈະເລີນ ມີການສຶກສາ. ແຕ່ເມື່ອໄດ້ ອ່ານສຶກສາຫລັກທັມຄຳສອນທາງສາສະໜາພຸດ ສາສະໜາຄຣິດ ແລະ ອິດສະລາມ... ປັດຊະຍາໃໝ່ຂອງນັກຄິດຫລາຍຄົນຂອງໂລກ ທ່ານຄານທີເວົ້າເຖິງ ການອ່ານ ຢູ່ໃນປຶ້ມ "ຊີວະປະຫວັດຂອງຂ້າພະເຈົ້າ" ວ່າ ເພິ່ນເອງມີເວລາອ່ານໜ້ອຍ ຈຶ່ງຈຳເປັນ ຕ້ອງເລືອກ ແນວອ່ານ ແຕ່ອ່ານທຸກຢ່າງທີ່ເລືອກມານັ້ນຢ່າງພິຈາລະນາ. ໃນປຶ້ມ ມະຫາຕະມະຄານທີ "ຊີວິດ ແລະຄຳຄົມ" ຈັດພິມໂດຍ ALC ປີ 2006 ມີລາຍລະອຽດກ່ຽວກັບຊື່ປຶ້ມທີ່ທ່ານ ອ່ານ ! ການປ່ຽນແປງຂັ້ນຕົ້ນ ແມ່ນຢຸດກິນຊີ້ນງົວ ຂະນະໄປຢູ່ປະເທດອັງກິດ ເມື່ອໄດ້ອ່ານ ປຶ້ມ "ເຮົາມາກິນ ມັງສະວິລັດກັນເທາະ" ແລະຕໍ່ໆມາ ກໍປ່ຽນແປງພຶດຕິກຳຫລາຍອັນ ທີ່ນຳ ພາທ່ານມຸ່ງໜ້າສູ່ເສັ້ນທາງແຫ່ງ ອະຫິງສາ.



2. ຄວາມສຳຄັນຂອງການຮຽນພາສາ

ຫິວຂໍ້ກະຫູ້: ປາກເປັນເອກ ເລກເປັນໂທ: ມີຄວາມໝາຍວ່າແນວໃດ?

ແຕ່ດົນນານມາແລ້ວ ເພິ່ນຖືວ່າ ການຮູ້ພາສາ ມີຄວາມສຳຄັນພື້ນຖານກ່ວາການຮູ້ວິຊາການອື່ນໆ, ດັ່ງຄຳສຸພາສິດລາວທີ່ຍົກມາຂ້າງເທິງນັ້ນ.

ຄຳວ່າ **"ປາກ"** ໝາຍເຖິງການປາກເວົ້າ ຄວາມສາມາດໃນການໃຊ້ພາສາຂອງຄົນຜູ້ນັ້ນ, ສ່ວນ **"ເລກ"** ໝາຍເຖິງຄວາມຮູ້ດ້ານວິທະຍາສາດ ການຊ່າງອື່ນໆ. ກ່ອນຈະຮູ້ເລື່ອງອື່ນໆທີ່ເປັນວິທະຍາສາດການຊ່າງ ຕ້ອງຮູ້ພາສາກ່ອນ. ເດັກນ້ອຍທີ່ເກີດມາ ຮ່າງກາຍເຕີບໃຫຍ່ຕາມກົດເກນທຳມະຊາດ ຮູ້ດູດນົມ ຖ່າຍເທ ຍ່ຽວ ຮ້ອງໄຫ້ ຫັນໃຈ ນອນ ເຈັບປ່ວຍໂດຍບໍ່ຕ້ອງໄດ້ຮຽນແຕ່ການປາກເວົ້າເຂົາຕ້ອງໄດ້ຮຽນຖ້າບໍ່ຮຽນກໍເວົ້າບໍ່ໄດ້ແລະ ເຂົາຕ້ອງຮຽນຈາກສັງຄົມອ້ອມຮອບໂຕເຂົາ. ຮຽນພາສາ ຈຶ່ງເປັນການຮຽນວິຊາສັງຄົມທີ່ ຈະຊ່ວຍໃຫ້ມະນຸດເຂົ້າໃຈກັນຫຼາຍຂຶ້ນ.

• ນັກມະນຸດວິທະຍາທີ່ຕ້ອງການສຶກສາສັງຄົມ ວັດທະນະທຳຂອງຄົນ ຊາດໃດຊາດນຶ່ງ ຫຼືເຜົ່າພັນເມືອງໃດນຶ່ງ ຈຳຕ້ອງໄດ້ຮຽນຮູ້ພາສາຂອງຊາດນັ້ນໆ ຫຼື ຂອງຊົນເຜົ່ານັ້ນໆ ກ່ອນເພື່ອຈະເຂົ້າເຖິງ ຊີວິດຈິດໃຈວັດທະນະທຳຂອງເຂົາໄດ້ເຊັ່ນ ນາງເຮເລນາ ນໍຣເບີກ ຮອຊ(Helena Norberg-Hodge, ຜູ້ຂຽນປຶ້ມ ອະນາຄົດອັນເກົ່າແກ່ The Ancient Futures ແລະປຶ້ມອື່ນໆອີກຫຼາຍຫົວ) ນັກມະນຸດວິທະຍາຜູ້ມີຊື່ສຽງຊາວສະວິເດັນ ທີ່ເຂົ້າໄປສຶກສາສັງຄົມຂອງ ຊາວພື້ນເມືອງທີ່ ລັດລາດັກ (Ladakh ລັດນ້ອຍໆພາກເໜືອຂອງອິນເດຍ) ຕ້ອງຮຽນພາສາທ້ອງຖິ່ນຢູ່ສິບກ່ວາປີ ຈຶ່ງເຂົ້າເຖິງວິຖີຊີວິດວັດທະນະທຳຂອງຄົນພື້ນເມືອງ.

• ອີກຕົວຢ່າງນຶ່ງ ສົມມຸດວ່າເອົາເດັກນ້ອຍໆທີ່ພວມຈະຮຽນປາກ (1ປີຂຶ້ນໄປ) ໃຫ້ຄົນປາກກືກໜູໜອກລ້ຽງ ເດັກກໍຈະປາກບໍ່ເປັນ ເຂົາຈະບໍ່ຮູ້ອອກສຽງ ເຖິງວ່າອະໄວຍະວະສຽງບໍ່ພິການມາແຕ່ເກີດ ຫຼື ຖ້າເອົາເດັກນ້ອຍລາວໃຫ້ຄົນຝຣັ່ງລ້ຽງ ເດັກນ້ອຍກໍຈະປາກເວົ້າ ເຂົ້າໃຈພາສາຝຣັ່ງ ກິລິຍາທ່າທີ ເປັນຝຣັ່ງ ຈະບໍ່ຮູ້ພາສາລາວ ແລະບໍ່ອາດປະພຶດປະຕິບັດ ແບບຄົນລາວເລີຍ.

ສະຫຼຸບແລ້ວ ການຮຽນພາສາ ແມ່ນຄວາມຈຳເປັນຂອງຄົນ ທີ່ຕ້ອງຮ່ຳຮຽນຈາກສັງຄົມຈາກຜູ້ອື່ນໆ. ພາສາເປັນສິ່ງນຶ່ງທີ່ຕ້ອງຮ່ຳຮຽນໄປຕະຫລອດ ແລະ ປັບປຸງຢ່າງເນື່ອງນິດ ເພາະການຮູ້ພາສາທີ່ດີ (ຮູ້ໃຊ້) ນອກຈາກຮັບໃຊ້ຊີວິດປະຈຳວັນແລ້ວ ຍັງໝາຍເຖິງ ການເຂົ້າໃຈ ການຮູ້ທັນຄວາມປ່ຽນແປງໃນສັງຄົມນຳອີກ. ການຮູ້ໜັງສື (ພາສາ) ໃນຄວາມໝາຍທົ່ວໄປ ແມ່ນຄວາມສາມາດອ່ານອອກຂຽນໄດ້ ຟັງເຂົ້າໃຈຄວາມໝາຍຂອງສິ່ງທີ່ອ່ານ ແລະສາມາດຂຽນໃຫ້ຄົນອື່ນເຂົ້າໃຈນຳໂດຍພື້ນຖານ ຕະຫຼອດທັງຄວາມໝາຍທີ່ເຊື່ອງຊ້ອນ ຄວາມງາມ ຄວາມມ່ວນ ຂອງສຳນວນອະລິ ຮູ້ໃຊ້ຄຳສັບໃໝ່ໆທີ່ໄດ້ຈາກການອ່ານ. ໃນການເລີ່ມຕົ້ນຮຽນພາສາໃດນຶ່ງ ສຳລັບເດັກນ້ອຍ ກໍຄືຜູ້ໃຫຍ່ ສຳຄັນສຸດແມ່ນ

ຄວາມສາມາດໃນການຟັງ ແລະອ່ານ ແລະຄວາມເຂົ້າໃຈໃນສິ່ງທີ່ຟັງ ແລະອ່ານ. ຈາກການອ່ານຈຶ່ງພັດທະນາເຖິງການຂຽນ ຈາກຄວາມເຂົ້າໃຈໂດຍພື້ນຖານ ພັດທະນາຂຶ້ນເປັນການໃຊ້ພາສາເພື່ອສື່ສານໃນທຸກຂົງເຂດການດຳລົງຊີວິດ (ອ່ານແລະຂຽນວິຊາການ, ແຕ່ງກະວີ ນິພົນເປັນອາຊີບໄດ້ ດັ່ງນັກຂຽນ, ນັກແຕ່ງເພງ, ນັກແຕ່ງກອນລຳ...).

3. ວິທີການຮຽນພາສາ:

ປັດຈຸບັນ ການຮຽນພາສາ ເພື່ອປາກເວົ້າ ແລະຂຽນນັ້ນ ສາມາດອາໄສເຕັກໂນໂລຊີເຂົ້າຊ່ອຍຫລາຍ ເຊັ່ນໃຊ້ເຄື່ອງລະບົບ ໂອດິໂອ ວິຊູຍແອນ (audio visual) ທັງຟັງ, ເບິ່ງພາບ ແລະເວົ້ານຳ ໃນຫ້ອງສະຫມຸດທີ່ທັນສະໄໝ ກໍມີເຄື່ອງຮຽນພາສາແນວນີ້ໄວ້ບໍລິການ.

ເວົ້າສະເພາະຢູ່ລາວ ພວກເຮົາບໍ່ທັນມີລະບົບທັນສະໄໝແນວນັ້ນ ພໍມີແດ່ກໍແຕ່ປຶ້ມອ່ານ, ວາລະສານ ແລະ ໜັງສືພິມ ເຊິ່ງກໍເປັນປະໂຫຍດຕໍ່ການຮຽນພາສາຫລາຍ. (ແຕ່ສຳລັບຮຽນພາສາອັງກິດ ຫຼືພາສາຕ່າງປະເທດອື່ນອາດມີ)

ໂດຍທົ່ວໄປ ຫ້ອງສະໝຸດມັກມີໜັງສືພິມລາຍວັນ ວາລະສານ ແລະປຶ້ມວັນນະຄະດີ ວິຊາການ. ການອ່ານໜັງສືພິມລາຍວັນຈະຊ່ອຍໃຫ້ເຮົາໄດ້ຄຳສັບໃໝ່ ຮູ້ທັນເຫດການທັງພາຍໃນ ແລະຕ່າງປະເທດ. ແຕ່ການໃຊ້ພາສາຄຳສັບອາດບໍ່ທັນແນ່ນອນ, ບົດຂຽນວິເຄາະ ວິຈານ ບໍ່ຍາວ ຫລືເລິກເຊິ່ງ ເພາະຈຳກັດໜ້າເຈ້ຍ, ນັກຂ່າວນັກຂຽນເຮັດວຽກເສັງກັບເວລາ ຈຶ່ງອາດມີຈຸດບົກພ່ອງແດ່. ສ່ວນວາລະສານ (ລາຍອາທິດຫຼືເດືອນ...) ມີບົດຂຽນຍາວຂຶ້ນ ແລະຫົວຂໍ້ສະເພາະເຈາະຈົງ ທີ່ເຮົາສາມາດນຳໃຊ້ເສີມ. ນອກນີ້ ຫ້ອງສະໝຸດຍັງມີວາລະສານ ແລະ ປຶ້ມວັນນະຄະດີ ວິຊາການຕ່າງໆທີ່ຈຳເປັນສຳລັບຄູສອນ. ເກືອບທຸກປະເທດໃນໂລກ ທີ່ມີລະບົບພາສາຂຽນ ແລະ ຫລັກການຂຽນໄດ້ແຕ່ງວັດຈະນານຸກົມອອກໃຊ້ ເພື່ອໃຫ້ການຂຽນການແຕ່ງໜັງສື ມີຄວາມເປັນເອກະພາບກັນ.

4. ການໃຊ້ວັດຈະນານຸກົມ:

ວັດຈະນານຸກົມ: ແມ່ນປຶ້ມທີ່ຫ້ອນໂຮມເອົາຄຳສັບທີ່ໃຊ້ໃນພາສາໃດໜຶ່ງ ມາຈັດລຽງຕາມຫຼັກພາສານັ້ນໆ ແລ້ວໃຫ້ຄຳແປ ຄຳອະທິບາຍເພື່ອໃຫ້ຄົນອ່ານສຶກສາຫາຄວາມໝາຍໃຫ້ເຂົ້າໃຈຄ້າຍຄຽງກັນ ແລະ ເປັນອັນດຽວກັນ.ທຸກພາສາໃນໂລກມີຄຳເວົ້າທີ່ຊ້ຳກັນ ແຕ່ຕ່າງຄວາມໝາຍ (Homonymes) ຫລືຫຼາຍໆຄຳ ແຕ່ມີຄວາມໝາຍດຽວກັນ (Synonymes) ຍ້ອນມີການແລກປ່ຽນທາງວັດທະນະທຳ ມີການຮັບ ການຢືມ ການແປງ ການແຜງ.

ເມື່ອພິຈາລະນາເບິ່ງທີ່ຕັ້ງພູມສັນຖານດິນແດນລາວແລ້ວ ກໍຈະເຫັນວ່າ ປະເທດນີ້ ເປັນທາງຄົບພົບພໍ້ກັນຂອງຫລາຍອະລິຍະທຳ ອິນເດຍ, ຈີນ, ຫວຽດນາມ ໄທສະຫຍາມ ກຳປູເຈຍ, ມຽນມ້າ (ມອນ) ສິ່ງເຫຼົ່ານີ້ ສະທ້ອນອອກໃນພາສາປາກເວົ້າຢ່າງຈະແຈ້ງ.



ໜ້າປົກ ແລະເນື້ອໃນອັດຈະນານຸກົມປະກອບພາບ (ຈັດພິມໂດຍALC ປີ 2005)

ໂດຍສະເພາະ ຄຳສັບຄຳເວົ້າ ກ່ຽວກັບສາສະໜາ ການເມືອງ ເສດຖະກິດ ວິທະຍາສາດ ແລ້ວນັກປາດອາຈານບູຮານ ໄດ້ປັບແປງຄຳມາຈາກເຄົ້າປາລີ ແລະສັນນະສະກິດຫລາຍສົມຄວນ. ປັດຈຸບັນປະມານວ່າ ມີຫລາຍກ່ວາເຄິ່ງນຶ່ງ ຂອງຄຳສັບທີ່ໃຊ້ໃນເລື່ອງເສດຖະກິດ ວິທະຍາສາດ ການເມືອງ ແມ່ນແປງປັບມາຈາກພາສາປາລີ ເຊັ່ນ :

ໂລກາພິວັດ: ໂລກະ+ ອະພິວັດ
ວັດທະນາຖາວອນ: ວັດທນ໌ + ຖາວຣ
ສາທາລະນະລັດ: ສາທາຣນ + ຣຖ
ລັດຖະບານ: ຣຖ+ ບາລ
ເອກະພາບ: ເອກ + ພາວະ
ເອກລາດ: ເອກ+ ຣາຊ
ສັນຕິພາບ: ສັນຕິ+ ພາວະ ແລະ ອື່ນໆ

๑. ຕົວຢ່າງ ຄຳດຽວ ແຕ່ຫຼາຍຄວາມໝາຍ

ຂັນ: ອາການຮ້ອງຂອງສັດປີກເຊັ່ນ ໄກ່ຂັນ ນົກຂັນ. ພາຊະນະທີ່ເຮັດດ້ວຍເງິນຫລື ວັດຖຸມີຄ່າ ອື່ນໆ ຫລື ຢາງ ເພື່ອ ຕັກນ້ຳ ໃສ່ດອກໄມ້ ທູບທຽນ. ຍັງແປວ່າ ແໜ້ນ ແກ່ນ ມັດ, ອາສາສະໝັກໃຈເຮັດ, ຫຼື ສິ່ງປະກອບໃນຕົວຕົນເອີ້ນວ່າ ຂັນທ້າ (ຄື ດິນ ນ້ຳ ລົມ ໄຟ ແລະຈິດວິນຍານ)

๘. ຕົວຢ່າງ ຫລາຍຄຳ ແຕ່ຄວາມໝາຍດຽວ ນ້ຳ, ຊົນລະທີ, ປະຊາ, ອາໂປ, ກະແສ, ວາລີ.

ຫຼາຍໆພາສາໃນໂລກ ມີວັດຈະນານຸກົມ/ສັບທານຸກົມ ຫລາຍລະດັບ ນັບແຕ່ງ່າຍຫາຍາກ ແລະ ຕາມວິຊາການກໍມີ. ປຶ້ມທີ່ເວົ້າເຖິງຫຼາຍຂະແໜງຄົບຖ້ວນ ເອີ້ນວ່າສາຣານຸກົມ. (ວັດຈະນານຸກົມ/ພິດຈະນານຸກົມ/ສັບທານຸກົມ/ ປະມວນຄຳສັບ ກໍ່ວ່າ).

ພາສາ ຫຼື ຄຳປາກຄຳເວົ້າ/ຂຽນ ເປັນສິ່ງປະດິດສ້າງຂອງມະນຸດ. ເມື່ອສັງຄົມມະນຸດ ປ່ຽນແປງໄປ ພາສາ/ຄຳເວົ້າກໍປ່ຽນໄປນຳ. ເຊັ່ນກ່ອນໜ້ານີ້ 40 ປີ, ຄົນລາວບໍ່ຮູ້ຈັກຄຳ/ ບໍ່ທັນໃຊ້ຄຳ "ພັດທະນາ" ທີ່ແປ ມາຈາກຄຳວ່າ development ເທື່ອ, ບໍ່ຮູ້ຄຳວ່າ "ບ້ານພັກ" ທີ່ແປມາຈາກ Guest House, ໂທລະພາບ/ໂທລະທັດ ທີ່ແປມາຈາກ television ແລະອື່ນໆ...

5. ການສອນອ່ານ

ພໍ່ແມ່ ແລະ ຄູປະຖົມທີ່ຈະຈູງເດັກນ້ອຍເຂົ້າສູ່ປະຕູການອ່ານ ມີຄວາມສຳຄັນຫຼາຍ. ຄວາມສຳເລັດໃນອະນາຄົດຂອງພວກເຂົາ ຫ້າສິບເປີເຊັນ ຂຶ້ນນຳຄວາມສຳເລັດຂອງ ການຕິດນິໄສມັກອ່ານໃນໄວປະຖົມ. ໝາຍຄວາມວ່າ ຖ້າເດັກນ້ອຍ ບໍ່ມັກອ່ານ ບໍ່ສົນໃຈ ໃນການອ່ານມາແຕ່ຕົ້ນ ໂອກາດທີ່ເຂົາຈະກາຍເປັນ ຜູ້ສາມາດພັດທະນາຕົນເອງເສງຖົ້ມ ໄປ ຫຼື ຫລຸດລົງເຄິ່ງນຶ່ງແລ້ວ ນັ້ນແປວ່າ ພໍ່ແມ່ ຄູສອນ ສັງຄົມແລະໂຕເດັກເອງຈະຕ້ອງ ໄດ້ອອກເຫື່ອເທແຮງ ລົງທຶນສຸມໃສ່ເພື່ອສ້າງຄວາມສາມາດສ່ວນນີ້ຄືນມາ (ເຊັ່ນ ຈ້າງຮຽນ ຕື່ມ ໃຊ້ເວລາຮຽນໆໆໆ ຍາວຂຶ້ນ...)

ດັ່ງນັ້ນການສ້າງນິໄສມັກອ່ານໃຫ້ເດັກໃນຂັ້ນປະຖົມ ຈຶ່ງແມ່ນການປູພື້ນຖານໃຫ້ແກ່ ການພັດທະນາຕົນເອງ ດ້ວຍຕົ້ນທຶນທີ່ແສນຖືກ. ຕົ້ນທຶນທີ່ແສນຖືກ ທີ່ວ່ານີ້ມີຫຍັງແດ່ ?

ຕົ້ນທຶນທີ່ວ່ານີ້ ແມ່ນວິທີການສອນອ່ານແບບມ່ວນໆ ທີ່ຄູສອນພວກເຮົາຈະນຳໃຊ້ ເຂົ້າໃນການສອນພາສາລາວໃນຊັ້ນປະຖົມ ໂດຍສະເພາະການສອນອ່ານ. ຈະເຮັດແນວໃດ ໃຫ້ເດັກມ່ວນຕື່ນເຕັ້ນນຳປຶ້ມແຕ່ລະຫົວ ຄອງຄອຍການເລົ່ານິທານຂອງຄູ ແລະ ແລ່ນເຂົ້າ ຫ້ອງອ່ານ(ຖ້າມີ) ທຸກຄັ້ງທີ່ມີ ເວລາຫວ່າງ.



ແນ່ນອນວ່າການອ່ານປຶ້ມ ອ່ານໜັງສື/ຮູ້ໜັງສື ບໍ່ແມ່ນຄວາມເປັນຄວາມຕາຍຂອງ ຊີວິດ ແຕ່ການຮູ້ອ່ານ/ຮູ້ໜັງສືກໍສາມາດຊ່ວຍໃຫ້ການດຳເນີນຊີວິດຂອງຄົນເຮົາດີຂຶ້ນ, ສາ ມາດຫຼີກເວັ້ນຈາກ ການຖືກຕົວະຍົວະຫລອກລວງເອົາປຽບ ໄດ້ຫລາຍຂຶ້ນ.

ການອ່ານບໍ່ແມ່ນເລື່ອງງ່າຍ ແລະການສ້າງນິໄສໃຫ້ຄົນຕິດການອ່ານກໍບໍ່ງ່າຍຄືການ ຕິດສິ່ງເສບຕິດ ສິ່ງມ່ວນຊື່ນຢ່າງອື່ນໆ ເພາະການອ່ານຕ້ອງອາໄສພະລັງພາຍໃນພໍສົມ ຄວນ. ເຊັ່ນ ນັກວິທະຍາສາດຊາວເອຊີບຊື່ ອັລ-ເຮຫາມ (ເສຍຊີວິດໃນຄ.ສ.1038) ອະທິ ບາຍເລື່ອງການອ່ານວ່າ: "ການອ່ານເລີ່ມມາຈາກການເຫັນ ຕາມຂະບວນການທີ່ພາບຂອງ ວັດຖຸ ເຂົ້າສູ່ສາຍຕາແລະຖືກຈັບຄ້ຳໄວ້ ຜ່ານອຳນາດແຫ່ງຈັກຂຸປະສາດ ແຕ່ການຮັບຮູ້ນີ້ ກັບກາຍມາເປັນການອ່ານໄດ້ຢ່າງໃດ. ແມ່ນກຳມະວິທີໃດ ທີ່ເຮັດໃຫ້ເກີດຄວາມເຂົ້າໃຈ ໃນຕົວອັກສອນໄດ້? ການອ່ານບໍ່ພຽງແຕ່ກ່ຽວຂ້ອງ ກັບການເຫັນແລະການຮັບຮູ້ເທົ່ານັ້ນ ແຕ່ຍັງມີການວິນິດໄສ (ພິຈາລະນາ), ການຕັດສິນ, ຄວາມຊົງຈຳ, ຄວາມຈື່ຈຳໄດ້, ຄວາມຮູ້, ປະສົບການ ແລະ ການເຝິກຝົນ. ການອ່ານຈຳເປັນຕ້ອງໃຊ້ອົງປະກອບເຫລົ່ານີ້"

ສະຫຼຸບ: ການອ່ານ ຈຳຕ້ອງເຝິກຝົນ ແອບຮຽນ ເພື່ອສ້າງອົງປະກອບທັງຫຼາຍທີ່ ກ່າວມາ ຂ້າງເທິງນັ້ນ.

ບົດທີ ສີ່

ຫຼັກການ ສອນອ່ານ ໃນຊັ້ນປະຖົມ

1. ພາສາເວົ້າ: ຄວາມກ້າວໜ້າເບື້ອງຕົ້ນໃນການອ່ານຂຶ້ນກັບການພັດທະນາພາສາເວົ້າ.

ເດັກນ້ອຍສ່ວນໃຫຍ່ ພັດທະນາຄວາມສາມາດດ້ານການປາກເວົ້າ ແລະດ້ານການໃຊ້ພາສາ ຢ່າງເປັນທຳມະຊາດ ແລະ ຢ່າງງ່າຍດາຍ. ແຕ່ວ່າ ການຮຽນອ່ານແມ່ນຂະບວນການທີ່ແຕກຕ່າງກັນ. ເພາະວ່າຕ້ອງໄດ້ຮຽນລະບົບສັນຍາລັກ(ການຂຽນ)ທີ່ແທນໃຫ້ຄຳເວົ້າ. ເດັກນ້ອຍ ຈຳເປັນຕ້ອງຮຽນຮູ້ ການເຊື່ອມໂຍງ ຮູບແບບການຂຽນ ໃສ່ກັບຄຳເວົ້າ. ຕັ້ງແຕ່ເລີ່ມຕົ້ນ ເຂົາເຈົ້າເຂົ້າໃຈແລ້ວວ່າ ບົດທີ່ເຂົາເຈົ້າເຫັນ ແມ່ນແທນໃຫ້ພາສາເວົ້າ ທີ່ເຂົາເຈົ້າຮູ້ຈັກແລ້ວ ເຖິງແມ່ນວ່າຈະອ່ານບໍ່ໄດ້ກໍຕາມ. ຫລັງຈາກນັ້ນ ເຂົາເຈົ້າຕ້ອງ ຮຽນຮູ້ຄວາມໝາຍຂອງຄຳສັບ, ໄວຍະກອນ ແລະ ລະບົບສຽງ ຂອງພາສາເວົ້າ ເພື່ອຈະເຂົ້າໃຈບົດທີ່ແທນໃຫ້ພາສາເວົ້າ ຂອງເຂົາເຈົ້າ ໄດ້ຢ່າງສົມບູນ. ການວິໄຈໄດ້ສະແດງໃຫ້ເຫັນວ່າ ມີຄວາມສຳພັນຢ່າງສະໜິດແໜ້ນ ລະຫວ່າງ ປະມວນຄຳສັບປາກເປົ່າ ແລະຄວາມສາມາດອ່ານໃນເບື້ອງຕົ້ນ.

2. ຄວາມຮູ້ເດີມ: ຜູ້ອ່ານ ນຳໃຊ້ຄວາມຮູ້ເດີມທີ່ມີມາແຕ່ກ່ອນເພື່ອເຂົ້າໃຈບົດ.

ການມີຄວາມຮູ້ກ່ຽວກັບຫົວເລື່ອງມາກ່ອນ ຈະຊ່ວຍໃຫ້ເດັກນ້ອຍມີຄວາມເຂົ້າໃຈດີເມື່ອເຂົາເຈົ້າໄດ້ອ່ານກ່ຽວກັບຫົວເລື່ອງນັ້ນ. ຄວາມຮູ້ເດີມມີຫລາຍຊະນິດ, ມີທັງຄວາມຮູ້ກ່ຽວກັບໂລກ, ຄວາມຮູ້ດ້ານວັດທະນະທຳ, ຄວາມຮູ້ກ່ຽວກັບວິຊາການ ແລະ ຄວາມຮູ້ດ້ານພາສາ. ຄວາມສົນໃຈຂອງຜູ້ອ່ານໃນວິຊາໃດໜຶ່ງ ກໍມີອິດທິພົນຕໍ່ລະດັບຄວາມຮູ້ເດີມຄືກັນ. ຄວາມຮູ້ຂອງ ຜູ້ອ່ານກ່ຽວກັບໂລກ ຂຶ້ນກັບປະສົບການ ໃນຊີວິດຂອງເຂົາເຈົ້າ. ເຊິ່ງ

ຄວາມຮູ້ນັ້ນແຕກຕ່າງກັນໄປ ຕາມຄວາມແຕກຕ່າງຂອງປະເທດ, ພາກພື້ນ ແລະ ວັດທະນະທຳ. ການມອບວຽກໃຫ້ອ່ານ ຫລືການສອນການອ່ານ ຄວນໃຫ້ແທດເໝາະກັບປະເພດ ຄວາມຮູ້ເດີມ ທີ່ຜູ້ອ່ານມີ.

3. ຄວາມເຂົ້າໃຈ: ຄວາມເຂົ້າໃຈແມ່ນຂະບວນການສ້າງຄວາມໝາຍຢ່າງຕັ້ງໜ້າ.

ຄວາມເຂົ້າໃຈແມ່ນຂະບວນການ ຂອງການຮູ້ຄວາມໝາຍຂອງບົດ. ມັນກ່ຽວພັນ ກັບ ການນຳໃຊ້ຄວາມຮູ້ທີ່ຜ່ານມາ, ການຮູ້ຈັກຄຳສັບ, ການຄົ້ນຄິດ ແລະ ໃຫ້ເຫດຜົນ. ດັ່ງນັ້ນ, ຄວາມເຂົ້າໃຈ ບໍ່ແມ່ນຂະບວນການທີ່ຢຸດນິ້ງ, ແຕ່ເປັນຂະບວນການ ທີ່ມີການເຄື່ອນໄຫວ, ມັນເປັນຂະບວນການທີ່ຕອບໂຕ້ກັນ ລະຫວ່າງ ຜູ້ອ່ານ ແລະ ບົດ. ຜູ້ອ່ານ ຕ້ອງຊາບຊຶມເຂົ້າໃນບົດຢ່າງຕັ້ງໜ້າ ເພື່ອເຂົ້າໃຈຄວາມໝາຍ. ຜູ້ອ່ານເກ່ັງ ຈະຕ້ອງຮູ້ຈັກ ວ່າ ເຂົາເຈົ້າເຂົ້າໃຈບົດດີສ່ຳໃດ ເມື່ອເວລາອ່ານ. ຜູ້ອ່ານເກ່ັງ ຍັງຈະຕ້ອງປະຕິບັດຕາມ ຂັ້ນຕອນ ຢ່າງຄ່ອງແຄ້ວ ເພື່ອຜ່ານຜ່າຂໍ້ຫຍຸ້ງຍາກໃນຄວາມເຂົ້າໃຈ. ມີຍຸດທະວິທີຕ່າງໆທີ່ ສາມາດນຳມາສອນໃຫ້ນັກຮຽນ ເພື່ອປັບປຸງຄວາມເຂົ້າໃຈຂອງເຂົາເຈົ້າໄດ້ ເຊ່ັນຄູຕັ້ງຄຳ ຖາມໃຫ້ນັກຮຽນຕອບ, ໃຫ້ນັກຮຽນເດົາຄວາມໝາຍ ໂດຍອີງໃສ່ຄວາມຮູ້ເດີມທີ່ມີ.


4. ຄວາມມີສະຕິຕໍ່ກັບການຈຳແນກສຽງ: ຄວາມມີສະຕິຕໍ່ກັບການຈຳແນກສຽງ ແມ່ນມີຄວາມສຳພັນ ຢ່າງສະໜິດແໜ້ນ ກັບຄວາມສາມາດໃນການອ່ານ.

ຄວາມມີສະຕິຕໍ່ກັບການຈຳແນກສຽງ ໝາຍເຖິງຄວາມສາມາດ ທີ່ຈະໄດ້ຍິນສຽງ ຂອງພາສາ ກ່ຽວຄວາມໝາຍ. ການສຶກສາກ່ຽວກັບພາສາ ສະແດງໃຫ້ເຫັນວ່າຄວາມມີ ສະຕິຕໍ່ກັບການຈຳແນກສຽງ ແມ່ນສຳພັນ ຢ່າງສະໜິດແໜ້ນ ກັບຄວາມສາມາດໃນການ ອ່ານ. ຄູບໍ່ຄວນສອນການອອກສຽງ ຫຼືຟັງສຽງ ໂດຍແຍກຈາກກິດຈະກຳການອ່ານ ຢ່າງ ຂາດຕົວ. ຄູສາມາດພັດທະນາ ຄວາມຊຳນານໃນການຟັງສຽງຂອງນັກຮຽນ ດ້ວຍການ ໃຊ້ກິດຈະກຳທີ່ ຫລາກຫລາຍ. ຄຳຄ່ອງ, ເກມ, ແລະ ໂຄງການກອນ ສາມາດນຳ ໄປໃຊ້ເພື່ອໃຫ້ ເດັກນ້ອຍສົນໃຈ ຮຽນຮູ້ແຕ່ລະສຽງທີ່ແຕກຕ່າງກັນຂອງພາສາ.

5. ຄວາມຄ່ອງແຄ້ວລ່ຽນໄຫລ: ຜູ້ອ່ານທີ່ມີຄວາມຄ່ອງແຄ້ວລ່ຽນໄຫລຈະອ່ານດ້ວຍ ຄວາມຖືກຕ້ອງ, ຢ່າງສະບາຍ ແລະເຂົ້າໃຈ.

ຄວາມຄ່ອງແຄ້ວແມ່ນສຳຄັນ ເພາະວ່າມັນຕິດພັນສະໜິດແໜ້ນກັບຄວາມເຂົ້າໃຈ. ສາມາດອ່ານຢ່າງ ຄ່ອງແຄ້ວ ໝາຍຄວາມວ່າ ມີຄວາມສາມາດທີ່ຈະອ່ານບົດ ຢ່າງຖືກຕ້ອງ, ວ່ອງໄວ ແລະ ໄດ້ອາລົມ. ຜູ້ອ່ານທີ່ຄ່ອງແຄ້ວສາມາດເຮັດໄດ້ ເພາະວ່າເຂົາເຈົ້າບໍ່ມີບັນຫາ ກັບການ ທວນຄວາມຈຳກ່ຽວກັບຄຳສັບ. ດັ່ງນັ້ນ, ເຂົາເຈົ້າຈຶ່ງສາມາດສຸມໃສ່ ຄວາມໝາຍ ຂອງບົດໄດ້. ການວິໄຈບໍ່ດົນມານີ້ ເຫັນວ່າຄວາມຄ່ອງແຄ້ວ ຍັງຂຶ້ນກັບຄວາມສາມາດ

ທີ່ຈະຈັດກຸ່ມຄຳສັບຢ່າງເໝາະສົມ ເມື່ອເວລາອ່ານອີກ ໝາຍຄວາມວ່າ ຜູ້ອ່ານທີ່ມີຄວາມຄ່ອງແຄ້ວ ຈື່ຄຳສັບໄດ້ຢ່າງວ່ອງໄວ, ພ້ອມທັງຮູ້ຈັກບ່ອນທີ່ຈະເນັ້ນ ຫລື ຢຸດເມື່ອເວລາອ່ານ. ການຈື່ຄຳສັບໄດ້ ແມ່ນມີຄວາມຈຳເປັນ ແຕ່ວ່າພຽງເທົ່ານັ້ນ ຍັງບໍ່ພຽງພໍສຳລັບການອ່ານທີ່ຄ່ອງແຄ້ວ. ຜູ້ອ່ານຈະຕ້ອງເຂົ້າໃຈຄວາມໝາຍຂອງຄຳສັບໃນບົດ. ຜູ້ອ່ານທີ່ມີຄວາມຄ່ອງແຄ້ວ ສາມາດເຮັດໄດ້ທັງສອງໜ້າທີ່ ໃນເວລາດຽວກັນ. ເຂົາເຈົ້າສາມາດເຮັດໄດ້ຍ້ອນມີຄວາມສາມາດ ໃນການຈື່ຄຳສັບໄດ້ ແລະ ມີທັກສະທາງດ້ານ ພາສາເວົ້າ.



6. ການຮູ້ຄຳສັບ: ຄຳສັບມີຄວາມສຳຄັນສຳລັບຄວາມເຂົ້າໃຈໃນການອ່ານ.

ຜົນຂອງການວິໄຈຫລາຍບົດ ສະແດງໃຫ້ເຫັນວ່າ ຜູ້ອ່ານທີ່ເກັ່ງ ມີຄວາມຮູ້ດີກ່ຽວກັບຄຳສັບຕ່າງໆ. ເພື່ອໃຫ້ເຂົ້າໃຈບົດ, ຜູ້ອ່ານຈຳເປັນຕ້ອງຮູ້ຄວາມໝາຍຂອງຄຳສັບແຕ່ລະຄຳ. ພວກເຂົາເຈົ້າສ້າງຄວາມເຂົ້າໃຈກ່ຽວກັບບົດ ໂດຍການເຮັດໃຫ້ຄຳສັບມີຄວາມໝາຍຕິດພັນກັບເລື່ອງລາວ. ຄຳສັບທີ່ເຫັນ ເປັນຕົວພິມ ຈະຕ້ອງກົງກັບ ຄຳສັບປາກເວົ້າຂອງຜູ້ອ່ານ ເຂົາເຈົ້າຈຶ່ງຈະສາມາດເຂົ້າໃຈໄດ້. ສິ່ງດັ່ງກ່າວ ມີຄວາມສຳຄັນ ເທົ່າທຽມກັນ ທັງສຳລັບເດັກນ້ອຍ, ຜູ້ທີ່ກຳລັງພັດທະນາຄວາມສາມາດໃນການເວົ້າ, ແລະທັງສຳລັບ ຜູ້ທີ່ຮຽນພາສາຕ່າງຊາດ. ໃນການພັດທະນາການອ່ານຕໍ່ໄປພາຍໜ້າ, ເວລານັກຮຽນ ອ່ານເພື່ອຮຽນ, ເຂົາເຈົ້າຈຳເປັນຕ້ອງຮຽນ ຄຳສັບໃໝ່ ເພື່ອເພີ່ມຄວາມຮູ້ໃໝ່ ໃນວິຊາທີ່ຮຽນ.

7. ການກະຕຸ້ນ ແລະ ເປົ້າໝາຍ: ການອ່ານມີຫຼາຍເປົ້າໝາຍແຕກຕ່າງກັນ.

ຜູ້ອ່ານ ອ່ານປຶດໃດໜຶ່ງ ແມ່ນເພື່ອເຂົ້າໃຈຄວາມໝາຍຂອງມັນ, ພ້ອມທັງເອົາຄວາມເຂົ້າໃຈໄປນຳໃຊ້. ຄົນຜູ້ໜຶ່ງອ່ານປຶດໃດໜຶ່ງ ແມ່ນເພື່ອຮຽນຮູ້, ເພື່ອຊອກຫາຂໍ້ມູນຂ່າວສານ, ເພື່ອຄວາມບັນເທີງ, ເພື່ອຄຳນຶງ ສະທ້ອນຄືນ ຫລື ເປັນການປະຕິບັດທາງສາດສະໜາ. ເປົ້າໝາຍຂອງການອ່ານ ຕິດພັນຢ່າງສະໜິດແໜ້ນ ກັບການກະຕຸ້ນໃຫ້ຄົນຢາກອ່ານ. ມັນຍັງກ່ຽວຂ້ອງກັບ ວິທີອ່ານປຶ້ມ. ພວກເຮົາອ່ານ ພິດຈະນານຸກົມ ຕ່າງຈາກອ່ານນິຍາຍ. ໃນຫ້ອງຮຽນ, ຄູຈຳເປັນຕ້ອງຮູ້ຈັກ ຄວາມຕ້ອງການຂອງນັກຮຽນ, ລວມທັງກະຕຸ້ນໃຫ້ເຂົາເຈົ້າອ່ານ ແລະ ຕ້ອງຮູ້ວ່າ ເປົ້າໝາຍການອ່ານ ໃນຊີວິດຂອງເຂົາເຈົ້າ ແມ່ນແນວໃດ.

8. ລວມການອ່ານ ແລະການຂຽນເຂົ້າກັນ: ເຊື່ອມຕໍ່ການອ່ານເຂົ້າກັບການ ຂຽນ ໃຫ້ໜັກແໜ້ນ.

ການອ່ານ ແລະ ການຂຽນມີການພົວພັນຢ່າງສະໜິດແໜ້ນ. ການພັດທະນາທັກສະການອ່ານໂດຍຜ່ານການຂຽນ ເປັນວິທີການທີ່ມີປະສິດທິຜົນ. ສຳລັບເດັກນ້ອຍໆ, ການຮຽນຂຽນ ແລະ ສະກົດຄຳ ຊ່ວຍພັດທະນາ ຄວາມຊຳນິເຄີຍກັບຫລັກການຂຽນ. ການຂຽນ ຍັງຊ່ວຍສ້າງການເຊື່ອມຕໍ່ ລະຫວ່າງພາສາເວົ້າ ແລະ ພາສາຂຽນ. ການວິໄຈ ເຫັນວ່າມັນ ເປັນປະໂຫຍດທີ່ຈະນຳພາເດັກນ້ອຍ ຜ່ານຂະບວນການຈິດຕ່າຍ ສິ່ງທີ່ເຂົາເຈົ້າເວົ້າ, ເລົ່າ ຫຼື ໄດ້ປະສົບພົບພໍ້ຜ່ານມາ. ປະສົບການເຊື່ອມຕໍ່ການຂຽນ ຜ່ານການເວົ້າ ເຮັດໃຫ້ຄວາມສາມາດທາງພາສາ ໜັກແໜ້ນຂຶ້ນ.

9. ປຶດ: ຈົ່ງເລືອກປຶດ ໃນລະດັບຄວາມຍາກ ແລະຄວາມສົນໃຈ ທີ່ເໝາະສົມ.

ປຶດ ທີ່ມີລະດັບການອ່ານທີ່ເໝາະສົມ ສຳລັບຜູ້ອ່ານ ໝາຍເຖິງວ່າ ມັນບໍ່ງ່າຍເກີນໄປ ຫລື ບໍ່ຍາກເກີນໄປ. ການເລືອກປຶດ ທີ່ເໝາະສົມ ແລະໜ້າສົນໃຈ ຈະຊ່ວຍຊຸກຍູ້ໃຫ້ເດັກນ້ອຍພໍໃຈສິ່ງທີ່ເຂົາເຈົ້າອ່ານ. ເພື່ອຕີລາຄາ ລະດັບຄວາມຍາກຂອງປຶດ ຈະຕ້ອງເບິ່ງຄຳສັບ, ຄວາມຊັບຊ້ອນຂອງໄວຍາກອນ ແລະ ຄວາມຍາວຂອງປະໂຫຍກ. ເນື້ອເລື່ອງຂອງປຶ້ມກໍ່ເປັນປັດໄຈສຳຄັນຄືກັນ. ຕົວຢ່າງ, ຜູ້ອ່ານທີ່ມີຄວາມຮູ້ເດີມ ກ່ຽວກັບວິຊານັ້ນແທ້ ຈະສາມາດ ນຳໃຊ້ຄວາມຮູ້ຂອງເຂົາເຈົ້າ ເພື່ອອ່ານປຶດທີ່ຍາກກວ່າ. ປັດໄຈທາງດ້ານວັດທະນະທຳ ກໍ່ມີຄວາມສຳຄັນ. ປຶ້ມເດັກນ້ອຍ ບາງເທລັ້ມອາດອ້າງອີງເຖິງສະຖານະການ, ວັດຖຸ ແລະ ປະສົບການ ທີ່ເດັກບໍ່ຄຸ້ນເຄີຍມາກ່ອນ. ການໃຊ້ປຶດທີ່ຕິດແທດກັບຊີວິດຈິງ ມີຄວາມສຳຄັນທັງສຳລັບຜູ້ໃຫຍ່ ແລະ ເດັກນ້ອຍ, ທັງສຳລັບຜູ້ຮຽນປາກພາສາຕົນເອງ ແລະ ພາສາຕ່າງຊາດ. ໝາຍຄວາມວ່າ ແມ່ນປຶດເລື່ອງທີ່ຂຽນຂຶ້ນ ໂດຍຄຳນຶງເຖິງຜູ້ອ່ານ, ບໍ່ແມ່ນປຶດທີ່ສ້າງຂຶ້ນ ເພື່ອສອນຄຳສັບໂດຍສະເພາະຊຶ່ງ. ການນຳໃຊ້ປຶດ ທີ່ຫລາກຫລາຍ ກໍມີຄວາມສຳຄັນເຊັ່ນກັນ. ຄວນໃຫ້ມີທັງປຶດເລື່ອງທີ່ໃຫ້ຂໍ້ມູນ ແລະ ປຶດເລື່ອງປະພັນ. ອີກ

ດ້ານໜຶ່ງ ນັກຮຽນຈະຮູ້ສຶກສະບາຍໃຈເວລາອ່ານ ເລື່ອງທີ່ເຂົາເຈົ້າເຄີຍຮູ້ມາແດ່ແລ້ວ ເຮັດ ໃຫ້ສາມາດ ຂະຫຍາຍຄວາມຮູ້ເດີມທີ່ມີ ກ່ຽວກັບຫົວຂໍ້ນັ້ນ.

10. ການປະເມີນຜົນ: ນຳໃຊ້ການປະເມີນຜົນ ເພື່ອຖອດຖອນບົດຮຽນ ແລະວັດແທກ ຄວາມຄືບໜ້າ.

ມີສອງຮູບແບບໃນການປະເມີນການອ່ານ. **ໜຶ່ງ** ແມ່ນຊອກຮູ້ວ່າ ເດັກນ້ອຍອ່ານດີ ປານໃດ ເພື່ອຊ່ວຍປັບປຸງເຂົາເຈົ້າ ໃນຈຸດທີ່ອ່ອນ. ການປະເມີນແບບນີ້ ແມ່ນເພື່ອສົ່ງຂ່າວ ແລະ ຊ່ວຍຜູ້ຮຽນ ແລະ ເພື່ອວັດແທກວ່າ ມີຄວາມຄືບໜ້າໄປຫລາຍສ່ຳໃດ. ໃນການອ່ານ ຂັ້ນເລີ້ມຕົ້ນ, ປົກກະຕິແລ້ວ ຈະປະເມີນດ້ວຍການຟັງນັກຮຽນອ່ານອອກສຽງ. ດ້ວຍວິທີ ນີ້ ຄູຈະປະເມີນ ຄວາມຊົງຈຳຄຳສັບ ແລະ ຄວາມຄ່ອງແຄ້ວ. ເພື່ອໃຫ້ການສອນການ ອ່ານ ມີປະສິດທິຜົນ, ຕໍ່ຈາກຂັ້ນນີ້, ຈຳເປັນຕ້ອງມີຮູບແບບໃນການປະເມີນທີ **ສອງ** ໂດຍ ເລັ່ງໃສ່ ຄວາມເຂົ້າໃຈບົດເປັນຕົ້ນຕໍ. ປົກກະຕິແລ້ວ ຈະປະເມີນຄວາມເຂົ້າໃຈບົດ ໂດຍ ການຕັ້ງຄຳຖາມ. ຄຳຖາມຄວນຈະເລັ່ງໃສ່ ແນວຄວາມຄິດ ແລະ ທັດສະນະເປັນຫລັກ, ບໍ່ລົງເຖິງລາຍລະອຽດເລັກໆນ້ອຍໆ. ຄຳຖາມແບບນີ້ ເອີ້ນວ່າຄຳຖາມຂັ້ນສູງ. ວິທີການປະ ເມີນ ອາດແຕກຕ່າງກັນໄປ ຕາມປະເພດການຕອບຂອງນັກຮຽນ. ອາດແມ່ນຄຳຕອບແບບ ປາກເປົ່າ ຫລື ແບບຂຽນກໍ່ໄດ້. ການຕອບແບບຂຽນອາດເປັນແບບສັ້ນ ຫລື ແບບຂຽນຂະ ຫຍາຍຄວາມກໍ່ໄດ້.

References: Bernharhardt, 1991; Bernhardt, 2000; Hulstijn, 1991;
Kamil, Mosenthal & pearson, 2000;
Snow Burns & Griffin, 1998.

24/VII
ห้ามจำหน่าย

ບົດທີ ຫ້າ

ປຶ້ມອ່ານສຳລັບເດັກ ແລະ ກິດຈະກຳສົ່ງເສີມການອ່ານ

1. ກໍລະນີສຶກສາ:

ນັກຂຽນຍິງຄົນນຶ່ງຊື່ວ່າ ໂຣຊີ ເຄີຍເປັນອາສາສະໝັກອ່ານປຶ້ມໃຫ້ເດັກນ້ອຍ ທີ່ມີຄວາມຫຍຸ້ງຍາກໃນການອ່ານ ເລົ່າເຖິງປະສົບການຂອງນາງໃນຂະນະນັ້ນວ່າ ຢູ່ໂຮງຮຽນປະຖົມເຂດຊາຍແດນລະຫວ່າງສະຫະລັດອາເມລິກາ ກັບປະເທດເມັກຊິກ ນັກຮຽນສ່ວນໃຫຍ່ ເປັນລູກຊົນຊັ້ນກຳມະກອນແລະຊາວສວນ ເຊິ່ງສ່ວນຫຼາຍບໍ່ໄດ້ເອົາໃຈໃສ່ການຮຽນຂອງພວກລູກໆເທົ່າໃດ ເດັກນ້ອຍລາງຄົນຈຶ່ງໄປໂຮງຮຽນແຕ່ພໍແລ້ວມື້ແລ້ວເວັ້ນໄປ. ໃນຊັ້ນ ປ.1 ມີນັກຮຽນຄົນນຶ່ງ ຊື່ ຮອນນີ ອາຍຸ ແປດປີແລ້ວ ຊ້ຳຫ້ອງ ປ. 1 ມາແລ້ວ. ໃນພາກຮຽນທີ 2 ຂອງປີນັ້ນ ກໍຍັງບໍ່ສາມາດອ່ານຕົວອັກສອນແລະຄຳສັບງ່າຍໆ ທີ່ໝູ່ໝົດຫ້ອງອ່ານກັນໄດ້ໝົດແລ້ວ.

ກອງປະຊຸມຄູປະຈຳປີຈຶ່ງເປັນເອກະພາບກັນວ່າຖ້າຮອນນີບໍ່ສາມາດຕິດຕາມໝູ່ໄດ້ ກໍຕ້ອງໃຫ້ອອກໂຮງຮຽນໄປ. ນາງໂຣຊີ ຄູສອນສຳຮອງຢູ່ໃນໂຮງຮຽນ ຮູ້ເລື່ອງ ກໍຄິດສົງສານເດັກນ້ອຍຄົນນີ້ ທັງຕັ້ງຄຳຖາມກັບໂຕເອງບໍ່ເລີກບໍ່ແລ້ວວ່າ ລາວຈະສາມາດ ຊ່ອຍຫຍັງຮອນນີ ໄດ້ບໍ່? ຖ້າເຂົາເຕີບໃຫຍ່ຂຶ້ນມາໂດຍບໍ່ໄດ້ຮັບການສຶກສາພໍເອົາໂຕລອດ ແລ້ວອະນາຄົດຂອງເຂົາຈະເປັນຢ່າງໃດ. ທິນທາງຊີວິດທີ່ລໍຄອຍຢູ່ ຄືວ່າ ມືດມົນສົມຄວນ. ແນ່ນອນຄົງໜີບໍ່ພົ້ນທີ່ຈະກາຍເປັນເດັກນ້ອຍເກເລ ຕິດຢາເສບຕິດ ການພະນັນ ຫຼື ອະບາຍະມຸກອື່ນໆຢ່າງຫຼີກບໍ່ໄດ້.

ນາງໂຣຊີ ຕັດສິນໃຈເປັນແມ່ອາສາ ສອນອ່ານພິເສດໃຫ້ແກ່ຮອນນີ ຫລັງເລີກໂຮງຮຽນ. ນາງຈຶ່ງຮູ້ວ່າ ຮອນນີ ມີບັນຫາດ້ານຈິດໃຈ ຍ້ອນສະພາບຄອບຄົວ. ພໍ່ເປັນກຳມະກອນໂຮງງານ ຕິດເຫຼົ້າ ມັກຮ້າຍດ່າ ທຸບຕີລູກເມຍ ສ່ວນແມ່ກໍສາລະວິນຢູ່ນຳລູກນ້ອຍຜູ້ຖັດໆລົງມາ ຮອນນີ ຈຶ່ງໂດດດ່ຽວຫ່ວມເຫງົາ ບໍ່ຮູ້ວ່າຕົນຄວນຈະເຮັດອັນໃດໃນເວລາໃດ.

ນາງໂຣຊີ ເລີ່ມຕົ້ນດ້ວຍການເອົາປຶ້ມນິທານງ່າຍໆ ເນື້ອເລື່ອງຜະຈົນໄພຂອງເດັກຊາຍໄວ ໃກ້ຄຽງ ເພື່ອສ້າງຄວາມສົນໃຈ ໃຫ້ ຣອນນີ ມ່ວນນຳເລື່ອງ ຢາກອ່ານຕົວໜັງສື. ພາຍໃນ ເດືອນດຽວ ເຂົາກໍສາມາດອອກສຽງສະຫຼະ ພະຍັນຊະນະໄດ້ຖືກຕ້ອງ ເຖິງວ່າຍັງຮຽນບໍ່ທັນ ໝູ່ ແຕ່ຣອນນີກໍສະແດງອອກວ່າມີຄວາມກ້າວໜ້າ.

ໃນມື້ອັດພາກຮຽນທີສອງ ມີການແຈກຢາຍຣາງວັນປະເພດຕ່າງໆ ໃຫ້ນັກຮຽນຜູ້ ດີເດັ່ນແຕ່ລະດ້ານ. ແນ່ນອນວ່າ ບໍ່ມີຊື່ຣອນນີ ຢູ່ໃນບັນຊີ ແຕ່ນາງໂຣຊີ ຈົກເງິນຕົນເອງ ຊື້ປຶ້ມນິທານປົກແຂງງາມໆຫົວນຶ່ງ ທີ່ເປັນວັນນະຄະດີຊັ້ນຍອດສຳລັບເດັກຢູ່ອາເມລິກາ ແລ້ວປະກາດມອບຣາງວັນພິເສດ ສຳລັບຜູ້ບຸກບືນແລະມີຄວາມກ້າວໜ້າ ຊື່ວ່າ ຣອນນີ.

ນັບແຕ່ມື້ນັ້ນມາ ນາງໂຣຊີ ພົບວ່າ ຣອນນີບໍ່ວາງມືຈາກປຶ້ມຫົວນັ້ນເລີຍ. ຂະນະທີ່ໝູ່ ແລ່ນຫຼິ້ນໄລ່ກັນ ຣອນນີ ນັ່ງອ່ານປຶ້ມຫົວນັ້ນຢູ່ກ້ອງຮົ່ມໄມ້ ເຮັດປາກເໜັ້ງຍຸກຍິກ ອອກສຽງ ພຸມໆຢູ່ຜູ້ດຽວ. ອ່ານຈົນຈົ່ໄດ້ກັບປາກ ຊີ້ຕົວໜັງສື-ຄຳສັບ ຖືກຕ້ອງທຸກຄຳ. ນາງໂຣຊີພົບວ່າ ອາການເຫງົາຊຶມ ປາກເວົ້າຊ້າ ຂີ້ອາຍຂອງເຂົາ ຄ່ອຍໆ ໝົດໄປ ເຂົາກ້າຮອດເຂົ້າມາຫາ ແມ່ອາສາ ຖາມຫາປຶ້ມຫົວໃໝ່ ເຮັດໃຫ້ນາງໂຣຊີ ພາກພູມໃຈຫຼາຍ ພາເຂົາໄປຫ້ອງສະໝຸດ ເລືອກປຶ້ມອ່ານຊ່ອຍ.

ພາຍຫຼັງມາ ເມື່ອໂຣຊີໄດ້ເປັນນັກຂຽນ ນາງຈຶ່ງລະມັດລະວັງໃນການຂຽນທີ່ສຸດ ນາງເຫັນວ່າ ບົດເລື່ອງສຳລັບເດັກ ມີອິດທິພົນຕໍ່ອາລົມແລະຈິດໃຈຂອງເດັກນ້ອຍຫຼາຍ. ມັນສາມາດນຳພາເຂົາ ໄປພົບເສັ້ນທາງທີ່ສວຍງາມ ຊ່ອຍດຶງເຂົາອອກຈາກຄວາມງຽບ ເຫງົາໜີ່ນເສົ້າໄດ້.

ດັ່ງນັ້ນ ຜູ່ໃຫຍ່ ຄູສອນ ຜູ່ປົກຄອງ ຕ້ອງເຂົ້າໃຈ ແລະຊ່ອຍຊີ້ປ່ອງທາງນັ້ນຕື່ມ. ນາງໂຣຊີບອກວ່າ ສຳລັບນາງແລ້ວ ເຊື່ອວ່າ ອະນາຄົດຂອງເດັກນ້ອຍສ່ວນນຶ່ງ ຂຶ້ນນຳສິ່ງ ທີ່ເຂົາໄດ້ອ່ານ ໄດ້ສຳຜັດ ເມື່ອຍາມເຍົາໄວນີ້ເອງ.

ການຂຽນເລື່ອງສຳລັບເດັກ ຈຶ່ງເປັນສິ່ງທ້າທາຍສີມືນັກຂຽນມາຕະຫຼອດ. ນາງໂຣຊີ ໄດ້ສົ່ງສານຮຽກຮ້ອງມາຍັງນັກຂຽນມືອາຊີບ ແລະຜູ່ຢາກຂຽນເລື່ອງສຳລັບເດັກທັ້ງຫຼາຍ ວ່າ ໃຫ້ໃຊ້ຄວາມພະຍາຍາມສຸດຂີດ ເພື່ອສ້າງວັນນະຄະດີສຳລັບເດັກນ້ອຍ ເພາະມັນມີ ຄວາມສຳຄັນຕໍ່ການເຕີບໃຫຍ່ຂະຫຍາຍໂຕຂອງເຂົາ.



2. ປຶ້ມອ່ານສຳລັບເດັກ ແລະ ກິດຈະກຳສົ່ງເສີມການອ່ານ

ຈຸດສຳຄັນທີ່ຄວນເອົາໃຈໃສ່ ແມ່ນເນື້ອເລື່ອງ ແລະໂຄງສ້າງຂອງເລື່ອງ ໃຫ້ມີຄວາມສອດຄ່ອງກັບ ຈິດຕະສາດ ແລະທຳມະຊາດຂອງເດັກ ພ້ອມດຽວກັນກໍຄວນນັບຖື ສົ່ງເສີມ ຮີດຄອງປະເພນີອັນດີງາມຂອງຊາດ ແລະທ້ອງຖິ່ນຂອງຕົນ ທັງປະກອບໄປດ້ວຍສິນລະທຳ ເໝາະສົມກັບເດັກ.

ເລື່ອງສຳລັບເດັກ ຕ້ອງບໍ່ຍາວ ບໍ່ສັບສົນ ແລະບໍ່ມີໂຕລະຄອນຫຼາຍ. ໂຕເອກຕ້ອງໂດດເດັ່ນ ໃຫ້ເດັກຕິດຕາມບົດບາດຂອງຕົວເອກ ໄດ້ຕະຫຼອດເລື່ອງ. ເຖິງມີປຶ້ມນິທານພິມອອກມາຫຼາຍ ແຕ່ຄູ ຜູ່ອຳນວຍການໂຮງຮຽນ ຫຼື ຜູ່ຮັບຜິດຊອບຫ້ອງສະໝຸດ-ຫ້ອງອ່ານ ຈະຕ້ອງຮູ້ຈັກຈັດ ແບ່ງແຍກ ປຶ້ມທີ່ເໝາະສົມກັບເດັກ ດ້ວຍການອ່ານ ແລະວິເຄາະເບິ່ງເນື້ອເລື່ອງຂອງມັນ ວ່າມີຈຸດປະສົງແນວໃດ ເບິ່ງຮູບພາບປະກອບ ວ່າເໝາະສົມຫຼືບໍ່. ຈາກນັ້ນກໍຕ້ອງເບິ່ງວ່າການໃຊ້ພາສາ ບໍ່ຍາກເກີນໄປບໍ ສ້າງສັນແນວໃດ ພາສາຄຳເວົ້າ ເໝາະສົມ ບໍ່. ແຕ່ໂດຍທົ່ວໄປ ຖ້າເນື້ອເລື່ອງດີ ຮູບພາບງາມ ເຖິງຈະມີຄຳສັບຍາກແດ່ ກໍບໍ່ຄວນຖືເປັນບັນຫາໃຫຍ່. ຄູ ຫຼື ພໍ່ແມ່ ສາມາດຊ່ອຍເດັກນ້ອຍໄດ້ ດ້ວຍການພາອ່ານ, ອະທິບາຍຄຳສັບ. ສຳລັບເດັກບາງຄົນ ການອ່ານປຶ້ມຍາກໆ ກໍເປັນການທ້າທາຍຄວາມສາມາດຂອງເຂົາດີຄືກັນ.

ກ. ສຳລັບເດັກ ຊັ້ນປະຖົມ 1 - 2:

ຄວນນຳໃຊ້ປຶ້ມມີຮູບປະກອບ ຕົວໜັງສືໃຫຍ່ ໜ້ານຶ່ງໆ ບໍ່ກາຍສີ່ແຖວ, ໃນຕົ້ນປີ ເດັກນ້ອຍປໍ 1 ຍັງອ່ານບໍ່ທັນເກັ່ງ ຂຽນກໍຊ້າ ກິດຈະກຳທຳອິດຄວນເປັນການຟັງ ແລະອ່ານນຳຫຼັງພ້ອມກັນ. ຄູເອງຕ້ອງເຝິກ ອ່ານບົດ/ກອນໃຫ້ມີຈັງຫວະຈະແຈ້ງເພື່ອຈູງໃຈນັກຮຽນໃຫ້ຢາກຟັງ ແລ້ວຢາກອ່ານເອງໃນຂັ້ນຕໍ່ໄປ.

- ເລີ່ມຕົ້ນດ້ວຍປຶ້ມ/ເລື່ອງ ທີ່ໃຊ້ຄຳເວົ້າແລະປະໂຫຍກ(ສັ້ນໆ)ເໝາະສົມກັບເລື່ອງ, ບໍ່ໝາຍວ່າຕ້ອງເປັນຄຳສຸພາບແບບວິຊາການຕະຫຼອດໄປ ເຊັ່ນ ໃຊ້ຄຳປັດສະວະ ແທນ ຍ່ຽວ. ຖ້າຕົວລະຄອນ ເປັນເດັກນ້ອຍອາຍຸຫົກ-ເຈັດປີ ປັດສະວະກໍເປັນຄຳຍາກເກີນໄປສຳລັບເຂົາ, ແຕ່ຖ້າມີໂຕລະຄອນເປັນຄູ ຫຼື ໝໍ (ຜູ້ໃຫຍ່ກຳລັງປິ່ນປົວຄົນເຈັບ, ສອນເລື່ອງສຸຂະສຶກສາ) ແລະໃຊ້ຄຳນີ້ ຄູກໍຕ້ອງ ອະທິບາຍຍົກຕົວຢ່າງ ຈົນເດັກຮັບຮູ້ ແລະເຂົ້າໃຈວ່າປັດສະວະ ແມ່ນຍ່ຽວ ໃຊ້ແທນກັນໄດ້. ເດັກ ປ.1 ອາດຂຽນບໍ່ທັນໄດ້ ພຽງແຕ່ພາອອກສຽງໃຫ້ຖືກຕ້ອງ ກໍໄດ້ແລ້ວ.

ປຶ້ມບາງເລື່ອງ ທີ່ແນະນຳ ສຳລັບຊັ້ນປະຖົມ 1-2

(1) ໂຕຫຍັງແດ່ ເຫລັ້ມ1-2

(2) ດາວຍິບຍັບ(ໂຕຫຍັງແດ່ ເຫລັ້ມ3)

(3) ຊອກຫາຫາງແມ່



(4) ນອນດອມ

(5) ຫາງນີ້ຂອງໃຜ

ຕົວຢ່າງ ກິດຈະກຳ ຈາກປຶ້ມ ໂຕໜັງແດ່ 1: ຊ່ວຍໃຫ້ເດັກຈື່ຈຳ ຕົວອັກສອນລາວ ແລະ ຮູ້ຊື່ຂອງສັດ ຂຶ້ນຕົ້ນດ້ວຍໂຕອັກສອນຕ່າງໆ ເຊັ່ນ ກ ກຸ້ງ, ຂ ແຂ້, ຄ ຄວາຍ ...

ກິດຈະກຳ 1: ພາອ່ານ

ຄູອ່ານກາບສັ້ນໆກ.ກຸ້ງ(2 ແຖວ)ໃຫ້ເດັກນ້ອຍຟັງ ເດັກນ້ອຍເວົ້ານຳຫຼັງສອງສາມຄັ້ງ ເທົ່ານັ້ນ ເດັກສາມາດຈື່ຈຳໄດ້ທັນທີ.

ໃນກໍລະນີທີ່ເດັກເລີ່ມ ອ່ານເອງໄດ້ ກໍແຈກຢາຍປຶ້ມໃຫ້ອ່ານ ຫຼັງຈາກແລ້ວກິດຈະກຳ.

ກິດຈະກຳ 2: ຮຽນຮູ້ສີໃນຮູບ

ຄູຖາມນັກຮຽນວ່າ ກຸ້ງໂຕນີ້ ມີສີຫຍັງແດ່ (ພານັກຮຽນໄລ່ຊື່ສີອອກມາ)

ກິດຈະກຳ 3: ຮຽນຮູ້ອົງປະກອບຂອງສັດ

ຖາມນັກຮຽນວ່າ ໂຕກຸ້ງມີຫຍັງແດ່?

ຄຳຕອບ: ກຸ້ງມີ ຂາ, ໜວດ, ຕາ, ຫາງ,...

ສ້າງປະໂຫຍກສັ້ນໆ: ໜວດກຸ້ງສີແດງ, ຕາກຸ້ງສີດຳ ...

ກິດຈະກຳ 4: ເຊີ້ງກາບ ປະກອບທ່າທາງ:

ກຸ້ງດີດດ່ອງ ລອຍລ່ອງໄປມາ
ຄ້າຍຄືປາ ອາໄສຢູ່ນ້ຳ

ຄູເຮັດທ່າດີດຂາ, ລອຍນ້ຳ ໃຫ້ເບິ່ງ ແລ້ວ ຄູແບ່ງນັກຮຽນ ພວກນຶ່ງເຊີ້ງ ພວກນຶ່ງ ສະແດງທ່າທາງ ຕົບມືໃສ່ຈັງຫວະ. ຄວນຫຼິ້ນຫຼາຍຮອບ ຕ່ໍເນື່ອງກັນ ຈົນເດັກຈີ່ກາບສອງ ແຖວນີ້ໄດ້. ໂດຍຄູໃຫ້ຈັງຫວະ ທຳອິດຊ້າ ຕ່ໍມາໄວຂຶ້ນໆ

ຂ. ສຳລັບ ປ. 3-4

ໃນຊັ້ນນີ້ ເດັກບາງຄົນສາມາດອ່ານປຶ້ມເລື່ອງໄດ້ເອງ, ກິດຈະກຳລາງອັນ ຄວນເນັ້ນໃສ່ການອ່ານຂອງເດັກລາຍບຸກຄົນແລະເປັນໝູ່ໄດ້.

ປຶ້ມທີ່ເໝາະສົມ: ມີໂຕລະຄອນເອກເປັນ ສັດ ຫລື ຄົນ ທີ່ມີອາຍຸໃກ້ຄຽງກັບເດັກເອງ, ມີພ່ໍແມ່, ພ່ໍເຖ້ົາ ແມ່ເຖ້ົາ (ຄົນໃນຄອບຄົວ) ປະໂຫຍກຍາວຂຶ້ນ ຮູບພາບຈະແຈ້ງ, ເນ້ືອໃນ ຄວນສ່ົງເສີມຄວາມຊ່ືສັດ, ກ້າຫານ, ອົດທົນ, ເມດຕາ, ຮູ້ແບ່ງປັນ, ບ່ໍຕ້ືອະ, ບ່ໍລັກ, ບ່ໍຮຸນ ແຮງຕົບຕ້ີ, ...ເຊ່ັນເລື່ອງທ້າວກ່ຳພ້າຕ່າງໆ (ເມດຕາ ອົດທົນ...)

ຕົວຢ່າງລາຍຊ່ືປຶ້ມ:

(1) ກ່ຳພາເຫງົ້ນລຳ(ຄວາມເມດຕາຕ່ໍສັດ)
(2) ທ້າວຊ້ົນາ ກັບນາງເຢ້ີ(ຄວາມຮັກພ່ໍ, ຄວາມຊ່ືສັດ...)
(3) ທ້າວຕູນ້ໍເຢ ງ (ຄວາມກ້າຫານ)
(4) ນວນດອມ (ຄວາມກ້າຫານ)
(5) ໄກ່ນ້ອຍຕົກຂຸມ (ຄວາມສາມັກຄ)ີ
(6) ຂ້ອຍຈະໄປໃສນ້ໍ (ຄວາມຫ່ວງໃຍສ່ິງແວດລ້ອມ)
(7) ໝູນ້ອຍອາດຫານ (ຄວາມເສ ງສະຫຼະເພ່ືອສ່ວນຮວມ)

ຕົວຢ່າງກິດຈະກຳ: ກິດຈະກຳ 1: ອ່ານມ່ວນໆ

ອ່ານເປັນຈັງຫວະ ເຮັດສ ງຕາມໂຕລະຄອນ ອ່ານຕອບກັນ ອ່ານແບບມີອາລົມ ສ ງຮ້າຍ, ສ ງອ່ອນຫວານ, ສ ງເສ້ົາ, ສ ງມ່ວນດີໃຈ (ລາຍລະອ ຽດໃນບົດທ ີ 7)

ກິດຈະກຳ 2: ບົດບາດສົມມຸດ

ຄູນຳພາເດັກສະແດງບົດບາດສົມມຸດ ເຊ່ັນ: ຍ່າງແບບເປັດ, ຍ່າງແບບໄກ່, ທ່າຄົນ ກ້າຫານ, ທ່າຄົນຂ້ ີຢ້ານ, ທ່າກິດຊ ງ, ຂ້ ີອ ່ງ...

ກິດຈະກຳອື່ນໆ:

ອ່ານເພື່ອຈັບໃຈຄວາມ, ເລົ່າເລື່ອງຫຍໍ້ໄດ້, ຕອບຄຳຖາມໃສ່ແບບຟອມ, ສ້າງປະໂຫຍກຄ້າຍຄຽງດ້ວຍ ຄຳສັບໃນບົດເລື່ອງ, ອະທິບາຍສັບ (ສຸກງອມ=ສຸກຫຼາຍ; ຮ້ອງໂດ່ງ= ຮ້ອງໃສ່ແຕ່ໄກ;...)

ຄ. ສຳລັບ ປ. 4-5 :

ມາຮອດຂັ້ນນີ້ ເດັກນ້ອຍອ່ານເອງເກັ່ງແລ້ວ ຄູຕ້ອງພະຍາຍາມສົ່ງເສີມ ໃຫ້ເດັກອ່ານເອງຫຼາຍໆ ໂດຍຫາປຶ້ມນ່ອນໆມາເລົ່າສູ່ຟັງ ແນະນຳປຶ້ມອອກໃໝ່ ທັງຊຸກຍູ້ພໍ່ແມ່ ໃຫ້ສະໜັບສະໜຸນການອ່ານຂອງເດັກຢູ່ເຮືອນ. ຄູຕ້ອງພາເຮັດກິດຈະກຳສະແດງຄວາມສາມາດໃນການອ່ານຂອງເດັກ ຄວນເປັນປຶ້ມໂຮມເລື່ອງສັ້ນ ຫຼືບົດເລື່ອງຍາວຂະໜາດສັ້ນ (ປຶ້ມປະມານ 100 ໜ້າ) ຮູບປະກອບໜ້ອຍ ແຕ່ເລື່ອງຕ້ອງມີໂຕລະຄອນເອກຈະແຈ້ງ, ລັກສະນະໂດດເດັ່ນ (ກ້າຫານ, ມັກສະອາດ, ເປັນລະບຽບ, ເມດຕາ, ເສຍສະຫຼະ...) ເພື່ອເປັນແບບຢ່າງຈູງໃຈເດັກໃຫ້ຢາກເຮັດນຳ ຫຼືເລື່ອງທີ່ເວົ້າເຖິງສິ່ງແວດລ້ອມ (ຄວາມສະອາດ ສຸຂະອະນາໄມ, ການດື່ມກິນ, ການນຸ່ງຖື) ວັດທະນະທຳ, ມາລະຍາດ ແລະອື່ນໆ.

ປຶ້ມບາງເລື່ອງ ທີ່ແນະນຳ: ສິນໄຊ, ທ້າວກ່ຳເປ່, ກະຕ່າຍຈາກດວງເດືອນ, ນິທານກ່ຳພ້າ ຕ່າງໆ, ເລື່ອງ ນ່ອນໆຂອງສັດ, ການທອຍນາງຫາງປາ, ໂກດີ, ໝີກເຖົ່າ, ໂລກຂອງເຮົາ, ໝູ່, ບໍ່ຄົບຫ້າ, ໂຮມນິທານຍີ່ປຸ່ນສຸດນ່ອນ ...

ສະຫຼຸບ:

ປຶ້ມສຳລັບເດັກເປັນສິ່ງສຳຄັນ ດັ່ງທີ່ກ່າວມາແລ້ວ ແຕ່ສິ່ງທີ່ສຳຄັນກວ່າ ຄືການໃຫ້ໂອກາດເດັກໄດ້ສຳຜັດກັບປຶ້ມ ແລະຜູ່ໃຫຍ່ຕ້ອງສະແດງໃຫ້ເຂົາເຫັນວ່າ ການອ່ານເປັນເລື່ອງນ່ອນ, ໜ້າສົນໃຈ, ໄດ້ສາລະ ແລະຈຳເປັນສຳລັບທຸກຄົນ ຕັ້ງແຕ່ປະຖົມມະໄວ ຮອດໄວຊະລາ ເພາະການອ່ານ ແມ່ນການຮຽນຮູ້ຕະຫຼອດຊີວິດ.

ພາກທີ II

ການສອນອ່ານຜ່ານກິດຈະກຳ

ບົດທີ ຫົກ

ຮູ້ຈັກກັບປຶ້ມຫົວໜຶ່ງ

1. ຈຸດປະສົງ

ເຄີຍຕັ້ງຄຳຖາມບໍ່ວ່າ ເປັນຫຍັງເຮົາຄືອ່ານປຶ້ມໄດ້ໜ້ອຍໜຶ່ງ ກໍເບື່ອ ເມື່ອຍ ຢາກນອນ ເຈັບຫົວ ກ້າວໄປຮອດ ບໍ່ຢາກອ່ານ. ເປັນຫຍັງເຮົາຄີ້ຢ້ານ ເວລາເຫັນປຶ້ມຫົວໃຫຍ່ ແຕ່ກໍຍັງເຫັນບາງຄົນ ທີ່ນັ່ງອ່ານນອນອ່ານ ປຶ້ມຫົວໜາໆ ປານວ່າມີຫຍັງມ່ວນເອົາແທ້.

ອັນນີ້ເປັນເລື່ອງຂອງການເຝິກອບ ການກະຕຸ້ນ ແລະ ເໜືອສິ່ງອື່ນໃດ ວິທີການທີ່ຈະທຳຄວາມຮູ້ຈັກ ແລະ ເຮັດໃຫ້ເດັກນ້ອຍປະທັບໃຈກັບປຶ້ມ ຕັ້ງແຕ່ຄັ້ງທຳອິດທີ່ໄດ້ສຳຜັດ.

ກິດຈະກຳນີ້ຈະເປັນເຄື່ອງມືໜຶ່ງຂອງຄູ ເພື່ອສ້າງຄວາມປະທັບໃຈແກ່ເດັກ ຊ່ອຍໃຫ້ຄູ ແລະເດັກມີແນວທາງ ເພື່ອທຳຄວາມຮູ້ຈັກ ແລະ ສ້າງຄວາມປະທັບໃຈ ກັບປຶ້ມ ຕັ້ງແຕ່ຄັ້ງທຳອິດ.

2. ອຸປະກອນ


- ປຶ້ມອ່ານ ໂດຍບໍ່ຈຳເປັນວ່າຕ້ອງເປັນເລື່ອງດຽວກັນ ແຕ່ຢາກຂໍໃຫ້ເປັນປຶ້ມຫົວອ່າວໃຫຍ່ແດ່ ມີໜ້າສາລະບັນ ແລະໜ້າທີ່ລະບຸຂໍ້ມູນທີ່ໜ້າສົນໃຈ ເຊັ່ນ ຈຳນວນຄັ້ງທີ່ພິມ, ຮາງວັນທີ່ປຶ້ມໄດ້ຮັບ,ຄຳຍ້ອງຍໍ,ປະຫວັດທີ່ໜ້າສົນໃຈຂອງຜູ້ຂຽນ ແລະອື່ນໆ. ຖ້າປຶ້ມເລື່ອງໃດມີຫຼາຍຫົວ ກໍໃຊ້ທຸກຫົວເລີຍ.
- ຄຳແນະນຳ (ຍຸດທະວິທີໃນການອ່ານ) ຂຽນໃສ່ເຈ້ຍແຜ່ນໃຫຍ່ ແລະ ປະດັບປະດາງາມໆ.


3. ກິດຈະກຳ

ຂັ້ນຕອນ:

1. ດຶງຄວາມສົນໃຈຂອງນັກຮຽນ

2. ຢາຍປຶ້ມໃຫ້ນັກຮຽນ
3. ໃຫ້ນັກຮຽນອ່ານ 5 ນາທີ
4. ແບ່ງກຸ່ມ
5. ຕັ້ງຄຳຖາມ
6. ແນະນຳຍຸດທະວິທີໃນການອ່ານ
7. ໃຫ້ນັກຮຽນຢືມປຶ້ມເມືອເຮືອນ






ລາຍລະອຽດແຕ່ລະຂັ້ນຕອນ:

1. ດຶງຄວາມສົນໃຈຂອງນັກຮຽນ (5 ນາທີ): ໃນຕົວຈິງ ກິດຈະກຳນີ້ຄວນເລີ່ມຕັ້ງແຕ່ຕອນບ່ທັນເຂົ້າຫ້ອງ ຄູສາມາດໃຫ້ເດັກນ້ອຍທີ່ອ່າວດີ ຫຼື ຮຽນອ່າວອ່ອນມາຂົນປຶ້ມຈາກຕູ້ປຶ້ມ ຫຼື ຫ້ອງອ່ານ ໄປຫ້ອງຮຽນ. ທັນທີທີ່ເຂົ້າໄປໃນຫ້ອງ (ຫຼັງຈາກນັກຮຽນເຄົາຣົບຄູ) ເດັກນ້ອຍທຸກຄົນຈະຍໍຄໍເບິ່ງທັນທີ ວ່າຄູຍົກຫຍັງມາ, ໃຫ້ສວຍໂອກາດນີ້ຍົກປຶ້ມຫົວໜາທີ່ສຸດຂຶ້ນມາ ແລ້ວບອກນັກຮຽນວ່າ "ມື້ນີ້ເຮົາມາອ່ານປຶ້ມທັງໝົດນີ້ນຳກັນ" ເດັກຈະອຸທານແບບຢ້ານແດ່ສູ້ແດ່ຂຶ້ນມາທັນທີ ແບບ "ປ໊າ" "ປີ່" "ໂອ້ຍໆໆໆ" ... ແຕ່ເຂົາກໍຍັງຍໍຄໍເບິ່ງປຶ້ມເຫຼົ່ານັ້ນຢູ່. ຕອນນີ້ໃຫ້ຄູບອກວ່າ "ບ່ຕ້ອງຕົກໃຈ ມັນມີວິທີ ຊິພາອ່ານເດ໊".
2. ຢາຍປຶ້ມໃຫ້ນັກຮຽນ (5 ນາທີ) : ຢາກແນະນຳໃຫ້ຢາຍປຶ້ມແບບສຸ່ມ ຄືໃນແຕ່ລະແຖວ ແຕ່ລະໂຕະ ພະຍາຍາມຢ່າໃຫ້ເດັກໄດ້ປຶ້ມຫົວດຽວກັນ.
3. ບອກນັກຮຽນວ່າ "ໃຫ້ເວລາ 5 ນາທີ ໃຫ້ຮີບອ່ານ ແລ້ວຈະຖາມຄຳຖາມ" ແລ້ວໃຫ້ເຂົາເລີ່ມອ່ານເລີຍ. ໃນເວລາເຮັດຕົວຈິງ ເດັກຈະແຊວໆຂຶ້ນບາດໜຶ່ງ ໃຫ້ຄູເຮັດທ່າຂຶງຂັງໄວ້, ມີຈັບໂມງ ໃຫ້ຮູ້ວ່າຄູຈັບເວລາຢູ່ ເດັກຈະມິດແລະຕັ້ງໃຈຟັງເອງ (5 ນາທີ).
4. ອ່ານແລ້ວໃຫ້ແບ່ງກຸ່ມ (5 ນາທີ): ເອົາຜູ່ທີ່ອ່ານປຶ້ມເລື່ອງດຽວກັນມາເປັນກຸ່ມດຽວກັນ ກໍລະນີທີ່ປຶ້ມເລື່ອງໃດມີຫົວດຽວ ກໍໃຫ້ເດັກນັກຮຽນເຫຼົ່ານັ້ນມາເຂົ້າເປັນກຸ່ມດຽວ ຈຳນວນຄົນໃນແຕ່ລະກຸ່ມບ່ທ່ໍກັນ ກໍບ່ເປັນຫຍັງ ?
5. ຖາມນັກຮຽນແຕ່ລະກຸ່ມ (15 ນາທີ) : ດ້ວຍຄຳຖາມດັ່ງນີ້:
"ມື້ກ່ືອ່ານປຶ້ມຫຍັງແດ່ ?"
"ຜູ່ໃດເປັນຄົນຂຽນເລື່ອງ?"
"ໄດ້ອ່ານຮອດໃສ?"
"ມັນມີຫຼາຍບົດແມ່ນບ່?"
"ໃຜອ່ານບົດໃດແດ່?"
"ເຫັນບົດນັ້ນບົດນີ້ບ່?"
"ຢາກອ່ານບົດນັ້ນບົດນີ້ບ່?"





"ປຶ້ມທີ່ອ່ານໄດ້ຮາງວັນໄດ່ຫັ້ນ ຮູ້ບ່ວ່າຮາງວັນຫຍັງ ?" ແລະ ອາດຕໍ່ດ້ວຍການຫຼິ້ນໜ້ອຍໜຶ່ງ ເຊັ່ນ ການຊອກຮູບໃດຮູບໜຶ່ງວ່າຢູ່ໜ້າໃດ ?

6. ແນະນຳຍຸດທະວິທີໃນການອ່ານ(10ນາທີ): ເອົາແຜ່ນຍຸດທະວິທີໃນການອ່ານທີ່ກຽມໄວ້ ຕິດໃສ່ກະດານໃຫ້ນັກຮຽນອ່ານເນື້ອໃນຂອງຂັ້ນຕອນທີໜຶ່ງ "ກ່ອນອ່ານປຶ້ມ" ນຳກັນ ແລ້ວບອກນັກຮຽນວ່າ "ທີ່ເຮົາເຮັດໄປມື້ກີ້ນີ້ ຍັງແມ່ນຂັ້ນຕອນທີໜຶ່ງຢູ່". ຈາກນັ້ນຄູທົບທວນຄືນໄວໆ ຊີ້ບອກນັກຮຽນວ່າ ມີຫຍັງຢູ່ໜ້າປົກ, ຫຼັງປົກ, ອ່ານຂໍ້ຄວາມທີ່ໜ້າສົນໃຈ (ຄຳຍ້ອງຍໍ, ຮາງວັນ, ປະຫວັດທີ່ໜ້າສົນໃຈຂອງຜູ້ຂຽນ...) ທີ່ຂຽນໄວ້ຢູ່ຫຼັງປົກ ຂອງປຶ້ມຫົວໃດຫົວໜຶ່ງໃຫ້ນັກຮຽນຟັງ, ແນະນຳໃຫ້ເດັກຮູ້ຈັກກັບໜ້າສາລະບັນແລ້ວບອກນັກຮຽນວ່າ "ການອ່ານປຶ້ມ ເຮົາບໍ່ຈຳເປັນຕ້ອງອ່ານທຸກເລື່ອງບາດດຽວ ຫຼືເລີ່ມອ່ານແຕ່ບົດທີໜຶ່ງຕະຫຼອດ ເຮົາອ່ານເບິ່ງຫົວຂໍ້ຢູ່ໜ້າສາລະບັນນີ້ ວ່າມີເລື່ອງຫຍັງແດ່ ຢູ່ໜ້າໃດ ແລ້ວເລືອກອ່ານເລື່ອງທີ່ເຮົາສົນໃຈກ່ອນ" ສຳລັບຂັ້ນຕອນທີສອງແລະສາມ ໃຫ້ຄູອ່ານໄປແລະເຮັດຕົວຢ່າງບາງບ່ອນທີ່ສຳຄັນ ເຊັ່ນ:
"ອ່ານໄປນຳ ຢຸດຄິດໄປນຳ" ກໍໃຫ້ຄູອ່ານໜ້ອຍໜຶ່ງແລ້ວ(ທຳທ່າ)ນອນ ແລ້ວລຸກຂຶ້ນມາອ່ານຕໍ່,
"ອ່ານຄືນບ່ອນທີ່ມັກ" ກໍໃຫ້ອ່ານຄືນປະໂຫຍກທີ່ຄູມັກຊ້ຳໄປມາຈັກສາມຮອບ, ຫຼື
"ອ່ານແລ້ວສົນທະນາກັບໝູ່" ກໍໃຫ້ຄູຍ່າງໄປຫານັກຮຽນຜູ້ໜຶ່ງ ລົມກັບເຂົາວ່າ "ອ່ານເລື່ອງນີ້ຄືກັນບໍ ? ຄູມັກໆຕອນນີ້ໄດ ເຈົ້າມັກຕອນໃດ" ດັ່ງນີ້ເປັນຕົ້ນ.
7. ໃຫ້ນັກຮຽນຢືມປຶ້ມເມື່ອອ່ານເຮືອນ (5 ນາທີ) ຄູຈົດບັດຢືມໃຫ້ນັກຮຽນຕາມລະບຽບການຢືມປຶ້ມຂອງໂຮງຮຽນ.

4. ຄຳແນະນຳຕໍ່ຄູ

- ເວລາທີ່ລະບຸໄວ້ໃນແຕ່ລະຂັ້ນຕອນຂອງກິດຈະກຳ ສາມາດຫົດຢືດໄດ້ ຕາມຄວາມເໝາະສົມ ຂອງແຕ່ລະຫ້ອງ.
- ການນຳສະເໜີ ຍຸດທະວິທີໃນການອ່ານ ໃນຂັ້ນຕອນທີສອງແລະສາມ ໃຫ້ເຮັດອ່າວໄວແດ່ ເພື່ອຮັກສາເວລາ ໃຫ້ລົງລາຍລະອຽດໃນຂັ້ນຕອນທີໜຶ່ງ ຫຼາຍກວ່າ.
- ສິ່ງຈຳເປັນທີ່ສຸດ ຄື ຄູຕ້ອງຮູ້ຈັກກັບປຶ້ມທຸກຫົວເປັນຢ່າງດີ ຈຶ່ງສາມາດຫາຈຸດມາເວົ້າ ເຊັ່ນ ຮາງວັນທີ່ປຶ້ມໄດ້ຮັບ, ປະຫວັດທີ່ໜ້າສົນໃຈຂອງນັກຂຽນ, ຄຳຍ້ອງຍໍ, ຂໍ້ຄວາມທີ່ມ່ວນ, ຫົວຂໍ້ບົດທີ່ໜ້າສົນໃຈດັ່ງຄຳຖາມທີ 6 ແລະ 7 ຂອງຂັ້ນຕອນທີ 5 ວິທີການທີ່ງ່າຍທີ່ສຸດເພື່ອຄູຈະກຳເນື້ອໃນເຫຼົ່ານັ້ນໄດ້ ແມ່ນ "ຄູຕ້ອງອ່ານປຶ້ມທຸກຫົວ ໃນຕູ້ປຶ້ມ ຫຼື ຫ້ອງອ່ານຂອງຕົນ" ຖ້າໄດ້ອ່ານມາຕັ້ງແຕ່ສະໄໝຍັງເປັນນັກສຶກສາຢູ່ແຮ່ງດີ ເພາະໃນຫ້ອງສະໝຸດວິທະຍາໄລຄູແຕ່ລະແຫ່ງ ມີປຶ້ມທຸກຫົວ ທີ່ມີຢູ່ໃນຕູ້ປຶ້ມ ຫຼືຫ້ອງອ່ານ ໃນໂຮງຮຽນສາມັນທຸກແຫ່ງແລ້ວ.

5. ຍຸດທະວິທີໃນການອ່ານ

ຂັ້ນຕອນທີໜຶ່ງ: ກ່ອນອ່ານປຶ້ມ

- ອ່ານຊື່ເລື່ອງ, ເບິ່ງຮູບໜ້າປົກ, ຫຼັງປົກ
- ອ່ານຊື່ຜູ່ຂຽນ, ຜູ່ແຕ້ມ, ຜູ່ແປ
- ອ່ານຄຳນິຍົມ, ຄຳຍ້ອງຍໍ, ຄຳອະທິບາຍ ທີ່ຂຽນໄວ້ຢູ່ໜ້າ ຫຼື ຫຼັງປົກປຶ້ມ
- ຊອກຫາຫົວຂໍ້ທີ່ສົນໃຈ ໃນໜ້າສາລະບັນ
- ອ່ານຄຳນຳ, ຫົວບົດ, ຫົວຂໍ້ ແລະຂໍ້ຄວາມ ທີ່ພິມເປັນໂຕເຂັ້ມ ແລະ ໂຕງ່ຽງ
- ລອງຄາດເດົາເບິ່ງວ່າ ເລື່ອງໃນປຶ້ມຫົວນີ້ ຈະເປັນໄປແນວໃດ ? ແລ້ວເລີ່ມອ່ານໄດ້ເລີຍ.

ຂັ້ນຕອນທີສອງ: ຂະນະພວມອ່ານ

- ອ່ານໄປນຳ ຢຸດຄິດໄປນຳ ເຮົາໄດ້ຮູ້ຫຍັງແດ່? ເຮົາໄດ້ອ່ານຫຍັງແດ່ ?
- ອ່ານຄືນບ່ອນທີ່ບໍ່ເຂົ້າໃຈ
- ຈົດຄຳສັບ ຫຼື ປະໂຫຍກ ທີ່ບໍ່ເຂົ້າໃຈ ເພື່ອໄປຖາມຄູ ຫຼື ພໍ່ແມ່
- ຈົດກ່າຍປະໂຫຍກທີ່ມັກເອົາໄວ້
- ອ່ານໄປແລ້ວ ລອງຢຸດ ແລ້ວຄາດເດົາເລື່ອງໄປກ່ອນ ແລ້ວຈຶ່ງກວດກາຄືນວ່າ ເຮົາເດົາຖືກບໍ່

ຂັ້ນຕອນທີສາມ: ຫຼັງອ່ານປຶ້ມ

- ທົບທວນຄືນ ວ່າເຮົາໄດ້ຮຽນຮູ້ຫຍັງ ຈາກການອ່ານປຶ້ມຫົວນັ້ນ
- ອ່ານຄືນບ່ອນທີ່ມັກຫຼາຍ ແລະຈົດກ່າຍເອົາໄວ້
- ສົນທະນາກັບໝູ່ທີ່ໄດ້ອ່ານປຶ້ມເລື່ອງດຽວກັນ ໃຜມັກບ່ອນໃດ ຄິດແນວໃດກັບປຶ້ມຫົວນັ້ນ
- ລອງຄິດຕໍ່ໄປວ່າ ເລື່ອງລາວຈະເປັນແນວໃດ ຖ້າເລື່ອງໃນປຶ້ມຍັງບໍ່ສຸດ.

6. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

- ນັກຮຽນມີປະຕິກິລິຍາຕອບສະໜອງກັບຄູ ເຊັ່ນ ສຽງອຸທານ “ປ໊ຳ” “ປີ” “ໂປ່” “ໂອ້ຍໆໆໆ” ... ຫົວ, ຍິ້ມ... ນັ້ນສະແດງວ່າ ເຂົາມ່ວນ ແລະສົນໃຈໃນໂຕກິດຈະກຳ.
- ນັກຮຽນທຸກຄົນ ຢືມປຶ້ມທີ່ເອົາໄປເຮັດກິດຈະກຳ ໃນຊົ່ວໂມງນັ້ນ ແລະສົນໃຈປຶ້ມຂອງໝູ່ຜູ່ອື່ນ ໂດຍຖາມຢືມຕໍ່ ຫຼື ຂໍຈອງນຳຄູ ຢາກຢືມປຶ້ມຫົວອື່ນໆ ຕໍ່ໄປ.

ບົດທີ ເຈັດ

ອ່ານມ່ວນໆ

ບົດເລື່ອງທີ່ໃຊ້ໃນການອ່ານແລະເຮັດກິດຈະກຳ:

ໄກ່ນ້ອຍຕົກຂຸມ

ເລື່ອງໂດຍ: ໂອທອງ ຄຳອິນຊູ

ຮູບໂດຍ: ວົງສະຫວັນ ດຳລົງສຸກ

ພິມຄັ້ງທີ 1 ປີ 2006 ໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

1. ຈຸດປະສົງ

ອ່ານມ່ວນໆ ບໍ່ພຽງແຕ່ເປັນການໃຊ້ສຽງ ແລະອາລົມ ແຕ່ການອອກສຽງຄຳສັບຕ້ອງຈະແຈ້ງ. ເດັກຈະມີສະມາທິຢູ່ກັບຕົວໜັງສືທຸກຄຳທີ່ອ່ານ ແລ້ວຈະຈື່ຈຳການສະກົດຄຳໄດ້ດີນຳອີກ. ອ່ານມ່ວນໆ ສາມາດພັດທະນາເປັນການອ່ານໃຫ້ຄົນຟັງ ທາງວິທະຍຸ ຫຼື ໃນກຸ່ມຫຼາຍຄົນ ບໍ່ຕ່າງຫຍັງກັບການເລົ່ານິທານ ຫຼືອ່ານບົດລະຄອນ. ຈາກການອ່ານມ່ວນໆ ກໍກ້າວໄປສູ່ການອ່ານບົດກະວີນິພົນທີ່ສຳຄັນໄດ້.


2. ອຸປະກອນ

- ປຶ້ມເລື່ອງໄກ່ນ້ອຍຕົກຂຸມ 31 ຫົວ (ນັກຮຽນ 30 ຄົນ)
- ກຽມຄຳຖາມກ່ຽວກັບລັກສະນະຂອງຕົວລະຄອນໄວ້ປະມານ 6-10 ຄຳຖາມ

3. ກິດຈະກຳ

ຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ
2. ຄູຢາຍປຶ້ມໃຫ້ນັກຮຽນຄົນລະຫົວ
3. ຄູອ່ານໃຫ້ນັກຮຽນຟັງ
4. ນັກຮຽນອ່ານ





5. ສົນທະນາ
6. ຄູຊີ້ທາງ (ອະທິບາຍເພີ່ມເຕີມ)
7. ນັກຮຽນອ່ານຄືນອີກເທື່ອໜຶ່ງ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ (2 ນາທີ); ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນຮູບໜ້າປົກ ໃຫ້ນັກຮຽນອ່ານຊື່ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ, ຜູ່ແຕ້ມ ແລະ ເລົ່າເລື່ອງໂດຍຫຍໍ້ເພື່ອດຶງຄວາມສົນໃຈຂອງນັກຮຽນ ໃຫ້ມາຢູ່ທີ່ປຶ້ມຫົວນັ້ນ ຂໍ້ສຳຄັນຄື ໃຫ້ເລົ່າຮອດຕອນທີ່ມ່ວນ, ໜ້າຕື່ນເຕັ້ນ ແລ້ວເຊົາ ຢ່າເລົ່າຈົນສຸດເລື່ອງ ເຊັ່ນຄູອາດເລົ່າວ່າ ມີໄກ່ນ້ອຍໂຕໜຶ່ງມັກໄປເລາະທ້າຕີກັບໝູ່ ແຕ່ກໍບໍ່ມີໃຜຕີກັບລາວເພາະທຸກຄົນຕ້ອງໄປຮຽນ ແລ້ວມື້ໜຶ່ງຕອນທີ່ລາວພວມຍ່າງວ່າຊິໄປຖາມຕີໝູ່ ລາວຜັດສະດຸດ ເກືອບຢຽບຫົວກົໂກະ ລາວຕົກໃຈໂດດຂຶ້ນເລີຍໄປຕົກລົງຂຸມເລິກ ຈົນລາວຂຶ້ນບໍ່ໄດ້. ເລົ່າມາຊ່ຳນີ້ ແລ້ວຖາມນັກຮຽນວ່າ ຢາກຮູ້ບໍ່ ເລື່ອງຕໍ່ໄປຈະເປັນແນວໃດ (ໃຫ້ນັກຮຽນຕອບ) ຊັ້ນເຮົາມາອ່ານນຳກັນເນາະ.
2. ຄູຢາຍປຶ້ມໃຫ້ນັກຮຽນຄົນລະຫົວ (1 ນາທີ)
3. ຄູອ່ານ (12 ນາທີ): ອ່ານມ່ວນໆ ໃຫ້ນັກຮຽນຟັງ ຈົນສຸດເລື່ອງ ນັກຮຽນຕິດຕາມບົດໃນປຶ້ມ. ເວລາອ່ານ ສຽງຂອງຄູຕ້ອງຈະແຈ້ງ ເວລາອ່ານບົດສົນທະນາສຽງຂອງສັດແຕ່ລະຕົວ ມີສຽງສູງຕ່ຳແຕກຕ່າງກັນ ຕາມອາລົມ ແລະ ນິໄສຂອງແຕ່ລະໂຕ. ອ່ານສຸດແລ້ວ ຖາມນັກຮຽນວ່າ ມ່ວນບໍ່ ຖ້າມ່ວນ ຂໍສຽງຕົບມືແດ່ ນີ້ເປັນການສອນມາລະຍາດຂອງຜູ່ຊົມທີ່ດີໃຫ້ນັກຮຽນ.


4. ນັກຮຽນອ່ານ (13 ນາທີ): ກ່ອນອ່ານ ຄວນກະຕຸ້ນນັກຮຽນດ້ວຍຄຳເວົ້າເຊັ່ນວ່າ ພວກນ້ອງກໍອ່ານມ່ວນໆໄດ້ ບາງເທື່ອມ່ວນກວ່າຄູອີກ ລອງເບິ່ງເນາະ... ແລ້ວ ເລີ່ມຊີ້ໃຫ້ນັກຮຽນຜູ່ໜຶ່ງອ່ານໂດຍຜູ່ອື່ນຕັ້ງໃຈຟັງ ອ່ານໄດ້ສາມ-ສີ່ປະໂຫຍກໃຫ້ຢຸດ ແລ້ວຊີ້ໃຫ້ຜູ່ໃໝ່ອ່ານ ແຕ່ບ່ໃຫ້ລຽນຕາມບ່ອນນັ່ງເພາະນັກຮຽນຈະຮູ້ວ່າອີກດົນຈຶ່ງ ຮອດຜຽນໂຕ ເຂົາຈະບ່ຕັ້ງໃຈ ຕ້ອງຊີ້ໂຕແບບໂດດໄປໂດດມາ ບ່ໃຫ້ເຂົາເດົາອອກ ວ່າຈະຖືກຜຽນໂຕຍາມໃດ. ເມື່ອສັງເກດເຫັນວ່າຜູ່ໃດອ່ານບ່ເກ່ງ ໃຫ້ສະຫຼັບກັບ ຜູ່ອ່ານເກ່ງ ບາງຄັ້ງຮອດບ່ອນອ່ານຍາກ ຄູອາດອ່ານອີກແດ່ເພື່ອສອນສຽງອ່ານຕື່ມ ໃຫ້ນັກຮຽນທີ່ອ່ານຕໍ່ໄປ ມີໂອກາດປັບປຸງການອ່ານຂອງຕົນໃຫ້ດີຂຶ້ນ. ເຮັດແນວນີ້ ວຽນໄປຈົນສຸດເລື່ອງ ແລ້ວຄູຕົບມືຊົມເຊີຍພ້ອມບອກວ່ານັກຮຽນອ່ານໄດ້ມ່ວນຫຼາຍ.
5. ສົນທະນາເພື່ອຊອກຮູ້ຕົວລະຄອນ (7 ນາທີ): ຄູນຳພາການສົນທະນາກ່ຽວກັບຕົວລະ ຄອນ, ໃນເລື່ອງນີ້ມີໃຜແດ່, ລັກສະນະ, ທ່າທາງ, ນິໄສ ຂອງສັດແຕ່ລະໂຕເປັນແນວ ໃດ (ນຳໃຊ້ຄຳຖາມຕົວຢ່າງຢູ່ທ້າຍບົດ). ການສົນທະນາສາມາດເຮັດໄດ້ຫຼາຍວິທີ ເຊັ່ນວ່າ:

- ຖ້າເປັນ ປ.3 ກໍສົນທະນາຮວມໝົດຫ້ອງ ໃຫ້ນັກຮຽນຊີ້ມືຕອບ
- ຖ້າເປັນ ປ.4 ຫຼື ປ.5 ອາດໃຫ້ຄົ້ນຄວ້າເປັນກຸ່ມ.

6. ຄູຊີ້ທາງ (2 ນາທີ): ໃຫ້ນັກຮຽນເຫັນວ່າ ການອ່ານມ່ວນໆແມ່ນອ່ານໃຫ້ເປັນທຳມະ ຊາດ ຄືຄົນລົມກັນ ມີສຽງຮ້ອຍ, ແຮງ, ອ່ອນໂຍນ, ເບົາ, ອື່ນອ່ຽ, ດູຕົນ ແລະອື່ນໆ ຕາມອາລົມຕົວລະຄອນແຕ່ລະຕົວ (ຄູອ່ານເປັນຕົວຢ່າງບາງຕອນ) ໃຫ້ນັກຮຽນ ຜູ່ກ້າສະແດງອອກ ອ່ານຈັກສອງສາມປະໂຫຍກເພື່ອຢັ້ງຢືນຄວາມເຂົ້າໃຈ.
7. ອ່ານຄືນໝົດເລື່ອງ (13 ນາທີ) ດ້ວຍວິທີສະຫຼັບໄປມາຄືເກົ່າ. ຕອນນີ້ເປັນການປະ ເມີນຜົນທັງໝົດ ຈະສັງເກດເຫັນຄວາມປ່ຽນແປງຂອງນັກຮຽນຢ່າງຈະແຈ້ງ,ສຸດແລ້ວ ຕົບມືໃຫ້ນັກຮຽນດັງໆ.


4. ຄຳແນະນຳຕໍ່ຄູ

- ການສະເໜີປຶ້ມເລື່ອງ ໄກ່ນ້ອຍຕົກຂຸມ ຄວນດຶງຈຸດພິເສດຂອງເລື່ອງອອກມາ



ໃຫ້ເຫັນວ່າມີຕົວລະຄອນທີ່ແປກ, ຊື່ແປກໆ ແລະມີບົດສົນທະນາທີ່ຕິດພັນກັບຊີວິດນັກຮຽນເອງ, ປຶ້ມນີ້ໄດ້ "ຮາງວັນປຶ້ມສຳລັບເດັກດີເດັ່ນ" ຂອງຜະແນກສຶກສາມະຄອນຫຼວງ ເມື່ອປີ 2007 ເດັກທຸກຄົນຄວນໄດ້ອ່ານ.

- ເວລາຄູອ່ານໃຫ້ນັກຮຽນຟັງ ຕ້ອງສະແດງນ້ຳສຽງ ແລະອາລົມຂອງຕົວລະຄອນໃຫ້ຈະແຈ້ງ ເຊັ່ນ: ລາຍອ່ອນອ້ອຍ ສຽງຂີ້ຄຸຍ-ຂີ້ອວດ, ແປ້ງແປະເຮັດສຽງຕ່ຳໆ ຄືເປັດຮ້ອງ ຊ້າໆ, ຈ້ຳຫຼອດ ອາດຈະວ່ອງໄວ ສຽງຈັ້ນ, ຂາວປອດ ນິກນາງແກ ກໍວ່ອງໄວ



ທ້າວທັນ ສົມໂຕ. ຄູຕ້ອງສຶກສາໂຕສັດແຕ່ລະໂຕ ສາມແຕ່ລະສາມ ຕອນໃດຄວນເວົ້າອ່ອນ, ນ່ວນ, ແຂ້ງ, ຮ້າຍ, ເລັ່ງ, ດູຕົນ... ຕ່າງກັນໄປ.

- ຄູຕ້ອງເຝິກແອບອ່ານໃຫ້ດີກ່ອນໄປສອນ. ເມື່ອອ່ານໃຫ້ນັກຮຽນຟັງໃຫ້ເຂົາເຈົ້ານ່ວນ ແລະຕິດອົກຕິດໃຈ ຢາກອ່ານໃຫ້ໄດ້ຄືຄູ.
- ການອ່ານຂອງນັກຮຽນແຕ່ລະຄົນ ບໍ່ຄວນໃຫ້ອ່ານຍາວຫຼາຍ ອາດຈະສອງຫາສາມສີ່ປະໂຫຍກກໍພໍ ຈຸດປະສົງແມ່ນໃຫ້ເຂົາໄດ້ຟັງໝູ່ແລະຄູ ແລ້ວມີໂອກາດແກ້ຕົວ ອ່ານໃຫ້ດີຂຶ້ນກວ່າເກົ່າ. ໃນຫ້ອງທີ່ມີນັກຮຽນໜ້ອຍ ຖ້າເດັກໄດ້ອ່ານຮອດ 4 ເທື່ອ (ບໍ່ຄວນໃຫ້ອ່ານຊ້ຳບ່ອນເກົ່າ) ເດັກຈະພັດທະນາການອ່ານ ໄດ້ທັນຕາເຫັນ.
- ໃນເວລາສົນທະນາ ຈຸດປະສົງຫຼັກ ແມ່ນເພື່ອຊອກຮູ້ນິໄສ ຂອງຕົວລະຄອນ ແຕ່ລະຕົວທີ່ມີບົດເວົ້າ ສະນັ້ນ ຄູຄວນເຮັດເປັນຕົວຢ່າງໃຫ້ເບິ່ງ ເຊັ່ນວ່າສຽງລາຍອ່ອນອ້ອຍຕອນຂໍຄວາມຊ່ວຍເຫຼືອ "ຊ່ວຍແດ່ ຊ່ວຍແດ່" ກໍຕ້ອງເຮັດສຽງເປັນໜ້າອີດູຕົນ.

- ຖ້າຢາກອອກສຽງໃຫ້ໄດ້ຕາມນິໄສ ແລະ ອາລົມຂອງຕົວລະຄອນ ຕ້ອງອອກທ່າທາງນຳ ຕອນນີ້ພຽງຄູເຮັດທ່າທາງໄປພ້ອມຂະນະທີ່ອ່ານນັກຮຽນກໍສາມາດເຮັດນຳໄດ້ທັນທີ. ວິທີນີ້ຈະກາຍເປັນພື້ນຖານຂອງການສະແດງລະຄອນໄປພ້ອມ.
- ແນ່ນອນ ເດັກແຕ່ລະຄົນ ເວລາໄດ້ອ່ານບົດຂອງສັດໂຕດຽວກັນ ແຕ່ສຽງອອກມາຈະບໍ່ຄືກັນ ຂຶ້ນກັບການຕີຄວາມໝາຍ ແລະລັກສະນະສ່ວນຕົວຂອງເດັກ. ຂໍໃຫ້ອ່ານເປັນປະໂຫຍກ, ລ່ຽນໄຫຼ ແລະພໍມີນ້ຳສຽງ ມີອາລົມແດ່ ກໍຄວນແກ່ການຊົມເຊີຍແລ້ວ. ອ່ານໄປຫຼາຍເທື່ອ ເດັກຈະມີການພັດທະນາດີຂຶ້ນຈົນກາຍເປັນການສະແດງລະຄອນໄດ້.
- ເມື່ອນັກຮຽນເຂົ້າໃຈເຕັກນິກການອ່ານໃຫ້ມ່ວນໆແລ້ວ ຄ່ອຍເຝິກແອບກັບເລື່ອງອື່ນໆ ທີ່ມີບົດສົນທະນາຫຼາຍຂຶ້ນ ແລ້ວນັກຮຽນກໍຈະອ່ານມ່ວນ ໃນທຸກເລື່ອງ.

5. ຕົວຢ່າງຄຳຖາມ

1. ໃຜເປັນຜູ້ມັກເກາະຜິດໝູ່? ມັນເວົ້າວ່າແນວໃດ?
2. ຈ້ຳຫຼອດຕອບວ່າແນວໃດ?
3. ລາຍອ່ອມອ້ອຍເວົ້າຫຍັງກັບຈ້ຳຫຼອດ ກ່ອນຍ່າງໄປຫາຕີຜູ້ໃໝ່?
4. ແປ້ງແປະພວມຊິໄປໃສ ເມື່ອລາຍອ່ອມອ້ອຍຊວນຕີ? ແປ້ງແປະຕອບວ່າແນວໃດ?
5. ລາຍອ່ອມອ້ອຍເວົ້າຫຍັງ ເມື່ອພໍ້ສັດໂຕໃດໂຕໜຶ່ງ?
6. ຂາວປອດຄາຫຍັງ ຈຶ່ງບໍ່ຕີກັບລາຍອ່ອມອ້ອຍ?
7. ຕອນລາຍອ່ອມອ້ອຍຕົກຂຸມ ມັນຮ້ອງວ່າແນວໃດ?
8. ແປ້ງແປະ, ຂາວປອດ ແລະ ຈ້ຳຫຼອດ ລົມຫຍັງກັນແດ່ ເພື່ອຊ່ອຍລາຍອ່ອມອ້ອຍ?
9. ເຮັດແນວໃດຂຸມຈຶ່ງຕື້ນຂຶ້ນ?
10. ລາຍອ່ອມອ້ອຍເວົ້າຫຍັງ ກ່ອນຂຶ້ນຫວິດຂຸມ?

6. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

ນັກຮຽນອ່ານບົດເລື່ອງໄດ້ ທັງລ່ຽນໄຫຼ ທັງມ່ວນ ອ່ານອອກສຽງ ສະແດງອາລົມໄປນຳເນື້ອໃນຂອງເລື່ອງ ກ້າວໄປຮອດບ່ອນສະແດງອາລົມ ທ່າທີ ແລະການສົນທະນາຂອງຕົວລະຄອນ.

ບົດທີ ແປດ

ພາອ່ານກາບ

ບົດເລື່ອງທີ່ໃຊ້ ໃນການອ່ານແລະເຮັດກິດຈະກຳ:

ກາບກອນສອນຄຳ

ເລື່ອງໂດຍ ມະຫາ ສິລາ ວິຣະວົງ

ຮູບໂດຍ ວົງສະຫວັນ ດຳລົງສຸກ

ພິມຄັ້ງທີ 1 ປີ 2007

ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

1. ຈຸດປະສົງ

ການນຳພາເລົ່າການ ແມ່ນກິດຈະກຳທີ່ສາມາດເຮັດໄດ້ ກັບເດັກຕັ້ງແຕ່ໄວອະນຸບານ ຫຼື ແມ່ນແຕ່ກັບເດັກຊົນເຜົ່າທີ່ບໍ່ເວົ້າພາສາລາວເປັນພາສາແມ່ ການເລົ່າການກອນຈະຊ່ອຍພັດທະນາການອອກສຽງພາສາລາວໄດ້ໄວ ຍິ່ງໃນຮູບແບບທີ່ເຮົາກຳລັງຈະເຮັດກັນ ເຊິ່ງຈະເປັນການເລົ່າການແບບມູນເຊື້ອ ທີ່ເອີ້ນວ່າ "ການເຊີ້ງ" ຍິ່ງສາມາດພັດທະນາການປາກເວົ້າພາສາລາວຂອງເດັກ ໄດ້ຢ່າງ ອັດສະຈັນ.

ຈຸດປະສົງສຳຄັນຂອງກິດຈະກຳ ຄືການສ້າງຄວາມມ່ວນຊື່ນໃຫ້ກັບນັກຮຽນ ເຮັດໃຫ້ນັກຮຽນເຫັນວ່າ ປຶ້ມສາມາດສ້າງຄວາມມ່ວນຊື່ນໄດ້ຊ່ຳໃດ ຂະນະດຽວກັນ ກໍເຝິກແອບເດັກໃຫ້ອອກສຽງພາສາລາວ ຢ່າງຈະແຈ້ງ ໂດຍມີຄູຜູ່ນຳພາເປັນຕົ້ນແບບ ເຮັດໃຫ້ເດັກໂດຍສະເພາະຊົນເຜົ່າ ຮຽນຮູ້ວ່າ ການເວົ້າພາສາລາວນັ້ນງ່າຍ ແລະມ່ວນ ເຂົາເຈົ້າຈຶ່ງຈະຢາກ ແລະມັກຮຽນພາສາລາວໃນຂັ້ນຕ່ໍໄປ.

2. ອຸປະກອນ



- ປຶ້ມເລື່ອງກາບກອນສອນຄຳ ຈະມີຫົວດຽວ ຫຼື ຫຼາຍຫົວກໍໄດ້ ເຮົາຈະນຳໃຊ້ບົດກາບ ເຊິ່ງຢູ່ໃນປຶ້ມນີ້ ຕັ້ງແຕ່ໜ້າ 60 ຫາ 70
- ກອງ ຫຼືເຄື່ອງດົນຕີຊະນິດໃດກໍໄດ້ ຖ້າມີ.

3. ກິດຈະກຳ

ເຖິງຈະມີເວລາພຽງ 10 ນາທີ ກໍສາມາດເຮັດກິດຈະກຳນີ້ໄດ້ ເພາະເຮົາພຽງແຕ່ເຮັດໃຫ້ເປັນຄືກັບໜາກຫຼົ້ນອັນໃດອັນໜຶ່ງ ກໍພໍ ແຕ່ຫາກໃນເມື່ອເຮົາບັນຈຸເຂົ້າເປັນກິດຈະກຳໜຶ່ງໃນໂມງຮຽນ ເຮົາກໍຕ້ອງໃຊ້ເວລາ50ນາທີທີ່ມີໃຫ້ກຸ້ມ ໂດຍສາມາດແບ່ງເປັນຂັ້ນຕອນດັ່ງນີ້:

ຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ
2. ຄູອ່ານກາບທີໜຶ່ງໃຫ້ນັກຮຽນຟັງ
3. ຄູອ່ານກາບທີໜຶ່ງຊ້ຳໆ ແລ້ວໃຫ້ນັກຮຽນເວົ້ານຳຫຼັງ
4. ຄູພານັກຮຽນອ່ານໄວຂຶ້ນ
5. ຄູນຳພານັກຮຽນໂຫ່ ແລ້ວເຊີ້ງກາບ
6. ເມື່ອໝົດກາບທີໜຶ່ງ ແລ້ວກໍໂຫ່ຮ້ອ ແລ້ວກໍຕໍ່ໄປຫາກາບໃໝ່
7. ຄູໃຫ້ນັກຮຽນ 1-2 ຄົນ ອາສາສະໝັກຂຶ້ນມາພາໝູ່ເຊີ້ງ
8. ໃຫ້ນັກຮຽນພ້ອມກັນເຊີ້ງ
9. ໃຫ້ທຸກຄົນພ້ອມກັນເຊີ້ງໃຫ້ມ່ວນຊື່ນທີ່ສຸດ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ; ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນຮູບໜ້າປົກ ໃຫ້ນັກຮຽນອ່ານຊື່ ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ, ຜູ່ແຕ້ມແລ້ວດຶງຄວາມສົນໃຈຂອງນັກຮຽນ ໂດຍສາມາດບອກວ່າ ມີເກມຫຼິ້ນ\ໝາກຫຼິ້ນມ່ວນໆ ຢູ່ໃນປຶ້ມຫົວນີ້ ລອງມາຫຼິ້ນນຳກັນເບິ່ງເນາະ (2 ນາທີ)
2. ຄູອ່ານກາບທີໜຶ່ງໃຫ້ນັກຮຽນຟັງ ໂດຍອ່ານແບບທຳມະດາແລ້ວຖາມນັກຮຽນວ່າ ມ່ວນບໍ? ສ່ວນໃຫຍ່ຫຼືເກືອບທັງໝົດຈະຕອບວ່າ "ມ່ວນ" ຕອນນີ້ຄູຕ້ອງບອກນັກຮຽນວ່າ "ເຮົາມີວິທີເຮັດໃຫ້ມ່ວນກວ່ານີ້ອີກ ລອງເບິ່ງນຳກັນບໍ່" (3 ນາທີ)
3. ຄູອ່ານກາບທີໜຶ່ງຊ້າໆ ແລ້ວໃຫ້ນັກຮຽນເວົ້ານຳຫຼັງ ໂດຍມີສຽງກອງປະກອບເປັນຈັງຫວະຊ້າໆ ຮອບໜຶ່ງ (3 ນາທີ)
4. ຄູພານັກຮຽນອ່ານໄວຂຶ້ນ ສຽງກອງໄວຂຶ້ນ ໜຶ່ງຮອບ (2 ນາທີ)
5. ຄູນຳພານັກຮຽນໂຫ່ ເຊິ່ງເປັນລັກສະນະອັນໜຶ່ງຂອງການເຊີ້ງ ແລ້ວຈຶ່ງເລີ່ມນຳພານັກຮຽນເວົ້າກາບ ພ້ອມສຽງກອງ, ສຽງຕົບມື ແລະ ທ່າທາງຕ່າງໆ ຕາມເນື້ອໃນຂອງກາບ ຈະຟ້ອນໄປພ້ອມກໍຍິ່ງດີ ຖືເປັນການເຊີ້ງຢ່າງເຕັມຮູບແບບ (3 ນາທີ)
6. ເມື່ອໝົດກາບທີໜຶ່ງ ກໍຕໍ່ໄປຫາກາບໃໝ່ ຈົນສຸດບົດທີ່ກຽມໄວ້. ຕອນນີ້ນັກຮຽນຈະໄດ້ຮູ້ວ່າ ຕົນພອມເວົ້າກາບ ໂດຍທີ່ຄູບໍ່ທັນໄດ້ເວົ້າໃຫ້ຟັງ ແຕ່ກໍເວົ້ານຳຫຼັງໄດ້ຢ່າງບໍ່ມີບັນຫາໃດໆ ເປັນການສ້າງຄວາມໝັ້ນໃຈໃຫ້ນັກຮຽນໄປໃນໂຕ (15 ນາທີ)
7. ຄູໃຫ້ນັກຮຽນ 1-2 ຄົນ ອາສາສະໝັກຂຶ້ນມາພາໝູ່ເຊີ້ງ ຈັກໜຶ່ງ ຫຼື ສອງກາບ ຫຼື ຕາມທີ່ນັກຮຽນຈື່ໄດ້ ຫຼືຖ້າບໍ່ທັນຈື່ ກໍໃຫ້ຈັບປຶ້ມອ່ານເອົາ (5 ນາທີ)
8. ໃຫ້ນັກຮຽນພ້ອມກັນເຊີ້ງກາບທີ່ຕົນເຄີຍຮຽນຜ່ານມາ ເມື່ອສຸດແລ້ວ ໃຫ້ຕົບມືຊົມເຊີຍນັກຮຽນທຸກຄົນ (10 ນາທີ)
9. ເວລາທີ່ເຫຼືອ ໃຫ້ທຸກຄົນພ້ອມກັນເຊີ້ງໃຫ້ມ່ວນຊື່ນທີ່ສຸດ ເທົ່າທີ່ຈະເຮັດໄດ້ ສາມາດພາກັນເຊີ້ງ ຍ່າງໄປອ້ອມຫ້ອງ ທັ້ງຟ້ອນງາມໆ ດ້ວຍທ່າທາງຂອງໃຜລາວ ມີຄູເປັນຜູ່ຕີກອງຫຼືເຄາະໃຫ້ຈັງຫວະ (7 ນາທີ)

4. ຄຳແນະນຳຕໍ່ຄູ

- ເປັນກິດຈະກຳທີ່ຢາກຮຽກຮ້ອງໃຫ້ຄູທຸກຄົນນຳໄປໃຊ້ ດັ່ງໄດ້ກ່າວໄວ້ແຕ່ເບື້ອງຕົ້ນແລ້ວວ່າ ເປັນກິດຈະກຳທີ່ເຮັດກັບເດັກໄດ້ຕັ້ງແຕ່ອະນຸບານ ຈົນຮອດມັດທະຍົມ ແລະບໍ່ຕ້ອງການເວລາ ຫຼື ອຸປະກອນຫຼາຍພໍເທົ່າໃດ.
- ໃນກໍລະນີຫ້ອງນ້ອຍ ກໍພຽງປະຕິບັດຕາມຂັ້ນຕອນທີ່ສະເໜີໄວ້ ແຕ່ເມື່ອເຮັດກັບຫ້ອງທີ່ໃຫຍ່ຂຶ້ນ ເຮົາສາມາດເພີ່ມກິດຈະກຳການອ່ານເຂົ້າໄປຕື່ມ ເຊັ່ນ ຢາຍປຶ້ມໃຫ້ນັກຮຽນ ຖ້າມີປຶ້ມຫຼາຍ, ຂຽນກາບໃສ່ກະດານ ໃນກໍລະນີທີ່ປຶ້ມໜ້ອຍ, ໃຫ້ເດັກໄດ້ອ່ານໄປນຳ, ເມື່ອເຊີ້ງໄດ້ໜ້ອຍໜຶ່ງ ກໍໃຫ້ເດັກອາສາຂຶ້ນມາອ່ານ ອ່ານກາບຕໍ່ໄປເພື່ອພາໝູ່ເຊີ້ງ ສຸດກາບໜຶ່ງກໍປ່ຽນໃຫ້ອີກຜູ່ໜຶ່ງຂຶ້ນມາ ເຮັດໄປແນວນີ້ເລື້ອຍໆຈົນໝົດຊົ່ວໂມງກໍໄດ້.
- ໃນຂະນະທີ່ໃຫ້ນັກຮຽນນຳພາໝູ່ເຊີ້ງ ເຂົາອາດເວົ້າ ຫຼືອ່ານຜິດແດ່ ຕອນນີ້ຫ້າມຄູທ້ວງ ຫຼືບອກໃຫ້ຢຸດ ຕ້ອງປ່ອຍໄປກ່ອນ ເພາະການເຊີ້ງຈະຢຸດຫຼືເປັນກະຕຸກກະຕັກບໍ່ໄດ້ ໃນກໍລະນີທີ່ນັກຮຽນຄາ ຍ້ອນບໍ່ຈີ່ ຫຼື ອ່ານບໍ່ໄດ້ ຄູຈຶ່ງຊ່ອຍເວົ້າແຖວນັ້ນອອກມາ.
- ທຳນອງການເຊີ້ງມີຄວາມແຕກຕ່າງກັນໃນແຕ່ລະທ້ອງຖິ່ນ ຈ້ຽງຫວະຊ້າຫຼືໄວ ແຕ່ບໍ່ວ່າຈະເປັນທຳນອງໃດ ກໍແມ່ນໃຊ້ກາບແບບດຽວກັນເຊີ້ງ. ນີ້ເປັນຈຸດພິເສດຂອງວັນນະຄະດີລາວເຊີ່ງຄູຄວນເຮັດໃຫ້ນັກຮຽນເຫັນໂດຍການປ່ຽນທຳນອງເຊີ້ງແລະບອກນັກຮຽນນຳວ່າ ເປັນຂອງທ້ອງຖິ່ນໃດ. ຖ້າທ່ານເປັນຄູຮຸ່ນໃໝ່ທີ່ບໍ່ຊຳນານ ຫຼື ຍັງບໍ່ຮູ້ແຈ້ງວ່າການເຊີ້ງເປັນແນວໃດແທ້ ຂໍໃຫ້ສັງເກດເບິ່ງ ເວລາມີງານບຸນບ້ານ ເຊັ່ນ ບຸນຊ່ວງເຮືອ ຫຼື ບຸນບັ້ງໄຟ ທີ່ມັກຈະມີຄົນແຫ່ກັນຫຼາຍໆຄົນ ມີການໂຮຮ້ອງ ແລ້ວ

ຄອບຄົວຂອງຂ້ອຍ

ໃນຄອບຄົວ
ເອື້ອຍອ້າຍຊ່ອຍ
ຂ້ອຍໄດ້ຍິນ
ໄຫ້ແຈ້ວໆ
ຂ້ອຍໄປໂຈມ
ເອື້ອຍແລະແມ່
ຂ້ອຍບໍ່ໄປ
ກິນເຂົ້າແລ້ວ
ບໍ່ເຮັດຄື

ເຮືອນຊານຂອງຂ້ອຍ
ພໍ່ແມ່ຄົວກິນ
ນ້ອງນ້ອຍຂ້ອຍແອ່ວ
ຫາແມ່ກິນນົມ
ອຸ້ມນ້ອງຕາງແມ່
ຂອງຂ້ອຍດີໃຈ
ທ່ຽວແລ່ນເລາະຫຼິ້ນ
ຫາອ່ານໜັງສື
ເໝືອນຕັ້ງແຕ່ກ່ອນ

ຮ້ອງລຳທຳເພງ ໂດຍມີຄົນໜຶ່ງເວົ້າກ່ອນ ແລ້ວຄົນອື່ນໆເວົ້ານຳຫຼັງ ນັ້ນລະແມ່ນການເຊີ້ງ ຫຼື ຈະຂໍຄຳປຶກສານຳຄູບາອາຈານ ແລະ ຜູ່ອາວຸໂສໃນບ້ານ ກໍຈະໄດ້ຮັບວິຊາທີ່ມີຄ່າຍິ່ງ.

- ຖ້າຕ້ອງການທີ່ຈະນຳໃຊ້ກາບເຊີ້ງຈາກປຶ້ມແບບຮຽນຫຼືປຶ້ມຄຳກອນຫໍອື່ນຄູຈຳເປັນຕ້ອງແຍກໃຫ້ອອກ ລະຫວ່າງ ກາບ ກັບ ກອນ ເພາະສ່ວນໃຫຍ່ ໃນປຶ້ມດັ່ງກ່າວຈະບໍ່ໄດ້ບອກວ່າ ອັນໃດເປັນກາບ ອັນໃດເປັນກອນ ໃນປຶ້ມແບບຮຽນເອງ ກໍບອກແຕ່ວ່າ ເປັນບົດທ່ອງຂຶ້ນໃຈ ຄືກັນໝົດ ແຕ່ປະເພດທີ່ໃຊ້ເຊີ້ງໄດ້ແມ່ນກາບເທົ່ານັ້ນ. ການແຍກວ່າ ອັນໃດເປັນກາບ ທີ່ເຊີ້ງໄດ້ ແມ່ນເບິ່ງຈາກວິທີການສຳຜັດສະຫຼະ ໂດຍສຽງສະຫຼະສຸດທ້າຍຂອງແຖວທຳອິດ ຈະຕ້ອງເປັນສະຫຼະດຽວກັນ ກັບຄຳສຸດທ້າຍຂອງເຟື້ອງໜ້າຂອງແຖວຕໍ່ໄປ ແລະ ເປັນດັ່ງນີ້ເລື້ອຍໆໄປ ແລະ ທີ່ສຳຄັນແມ່ນທຸກແຖວຕ້ອງມີຈຳນວນຄຳທໍ່ກັນ ບໍ່ດັ່ງນັ້ນຈະເຊີ້ງບໍ່ໄດ້ ຫຼື ຖ້າພະຍາຍາມເຊີ້ງໄປກໍເກີດອາການສະດຸດ ຄືຂີ່ລົດຕົກຂຸມ. ຕົວຢ່າງ ການສຳຜັດສະຫຼະຂອງກາບມີດັ່ງນີ້:

ໃນໂຮງຮຽນ ໝູ່ດຽວຂອງ<u>ຂ້ອຍ</u>
ໃຫຍ່ແລະ<u>ນ້ອຍ</u> ເປັນໝູ່ດຽວ<u>ກັນ</u>
<u>ຂ້ອຍ</u>ຂະ<u>ຫຍັນ</u> ໄປຮຽນ<u>ບໍ່</u>ຂາ<u>ດ</u>
ໃຜປະ<u>ໝາດ</u> ບໍ່ຮູ້<u>ໜັ</u>ງ<u>ສື</u>



- ການເຊີ້ງ ຍິ່ງເປັນໝູ່ໃຫຍ່ເທົ່າໃດກໍຍິ່ງມ່ວນ ຈຶ່ງສາມາດເຮັດກິດຈະກຳນີ້ແບບໝົດໂຮງຮຽນບາດດຽວ ແລະຄວນໃຫ້ໂອກາດນັກຮຽນຫ້ອງໃຫຍ່ນຳພາໝູ່ເຊີ້ງ ເປັນການເຝິກຝົນຄວາມກ້າຫານແລະການສະແດງອອກຢ່າງສ້າງສັນຂອງເດັກໄປໃນຕົວ. ໃນປາງບຸນຕ່າງໆຂອງໂຮງຮຽນ ກໍສາມາດເປັນກິດຈະກຳທີ່ສ້າງຄວາມມ່ວນຊື່ນໄດ້ດີ ເພາະເປັນກິດຈະກຳສ້າງສັນທັງໄດ້ຮຽນຮູ້ພາສາແລະວັດທະນະທຳໄປພ້ອມຜ່ານບົດກາບທີ່ທຸກຄົນເປັ່ງສຽງອອກມາພ້ອມກັນ.

5. ການປະເມີນຜົນ

ການພານັກຮຽນເລົ່າກາບກອນ ຈະຖືວ່າປະສົບຜົນສຳເລັດເມື່ອ:

- ນັກຮຽນມ່ວນ ຕະຫຼອດໄລຍະການສອນ
- ມີການຍ້ອນ, ຟ້ອນ ຕາມຈັງຫວະ
- ນັກຮຽນເປັ່ງສຽງອອກມາພ້ອມກັນຢ່າງຟົດຟື້ນ
- ອອກສຽງຄຳສັບຕ່າງໆ ຮຽນແບບຄູໄດ້
- ເດັກຜູ່ອ່າວຂີ້ອາຍ (ເດັກຊົນເຜົ່າ) ກ້າເປັ່ງສຽງນຳໝູ່ ມ່ວນຊື່ນຮ່ວມກັບໝູ່ຄູ່

ບົດທີ ເກົ້າ

ອ່ານເພື່ອຈັບໃຈຄວາມ

ບົດເລື່ອງທີ່ໃຊ້ໃນການອ່ານແລະເຮັດກິດຈະກຳ:

ເປັດນ້ອຍຂອງສົມປອງ

ເລື່ອງໂດຍ: ອຸທິນ ບຸນຍາວົງ

ຮູບໂດຍ: ຊິກໂກ້ ມິລະກົງ

ພິມຄັ້ງທີ 1 ປີ 2005 ໂດຍ ບໍລິສັດ ດອກເກດ

1. ຈຸດປະສົງ

ເຝິກແອບໃຫ້ນັກຮຽນກຳເນື້ອເລື່ອງບ່ອນສຳຄັນ ຜ່ານຄຳຖາມຕໍ່ເນື່ອງຂອງຄູ ແລ້ວສາມາດສະຫຼຸບເປັນເລື່ອງໂດຍຫຍໍ້ ໂດຍຮັກສາໂຄງເລື່ອງ ແລະການດຳເນີນເລື່ອງ ແຕ່ລະເວັ້ນລາຍລະອຽດປີກຍ່ອຍ ທີ່ບໍ່ສຳຄັນຫຼາຍ. ເປັນການອ່ານເພື່ອຈື່ຈຳເລື່ອງ ຈົນສາມາດເລົ່າຕໍ່ໄດ້.

ເຝິກແອບໃຫ້ນັກຮຽນ ຮູ້ວ່າອັນໃດແມ່ນ ໃຈຄວາມຫຼັກ ແລະ ໃຈຄວາມຍ່ອຍຂອງເລື່ອງທີ່ດຳເນີນໄປເປັນຫຼາຍຂັ້ນຫຼາຍຕອນ ແລະ ມີຫຼາຍບັນຫາ ເຊັ່ນ ກ່ຳພ້າຜີນ້ອຍ, ກ່ຳພ້ານາງງາ, ເປັດນ້ອຍຂອງສົມປອງ ແລະອື່ນໆ.


ອີກອັນໜຶ່ງແມ່ນ ເມື່ອເດັກຫຼາຍຄົນໄດ້ອ່ານເລື່ອງດຽວກັນ ແລ້ວສົນທະນາກັນ ແລກປ່ຽນຄວາມຄິດ ທັດສະນະ ແລະຄວາມເຂົ້າໃຈຕໍ່ເລື່ອງນັ້ນໆ ນຳກັນ ເຮັດໃຫ້ການອ່ານເປັນກຸ່ມ ຫຼືໝົດຫ້ອງ ເປັນການອ່ານທີ່ມ່ວນ ເປັນການອ່ານຂັ້ນສູງຂຶ້ນ ສ້າງນິໄສການອ່ານທີ່ຍືນຍົງໃຫ້ແກ່ເດັກ.

2. ອຸປະກອນ

- ປຶ້ມເລື່ອງເປັດນ້ອຍຂອງສົມປອງ 31 ຫົວ (ນັກຮຽນ 30 ຄົນ)
- ກຽມຄຳຖາມ ເພື່ອເຈາະຈີ້ມເຖິງຕົວລະຄອນ ແລະເຫດການສຳຄັນຂອງເລື່ອງ (ອ່ານໃນຄຳແນະນຳຕື່ມ)



(ໜ້າປົກທີ່ຈັດພິມໃນເມື່ອກ່ອນ)



(ໜ້າປົກທີ່ຈັດພິມໃໝ່ ແລະປ່ຽນຊື່ໃໝ່)

3. ກິດຈະກຳ


ຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ
2. ແບ່ງກຸ່ມນັກຮຽນດ້ວຍວິທີທີ່ເໝາະສົມ
3. ຄູຢາຍປຶ້ມໃຫ້ນັກຮຽນຄົນລະຫົວ
4. ຄູນຳພາການອ່ານ
5. ສົນທະນາ ຫາໃຈຄວາມສຳຄັນຂອງເລື່ອງ
6. ຈັດຮຽງຄຳຕອບຂອງນັກຮຽນ
7. ສະຫຼຸບບົດຮຽນ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ; ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນຮູບໜ້າປົກ ໃຫ້ນັກຮຽນອ່ານຊື່ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ, ຜູ່ແຕ້ມ ແລະ ເລົ່າເລື່ອງໂດຍຫຍໍ້ ເພື່ອດຶງຄວາມສົນໃຈຂອງນັກຮຽນ ໃຫ້ມາຢູ່ທີ່ປຶ້ມຫົວນີ້ ຂໍ້ສຳຄັນຄືໃຫ້ເລົ່າຮອດຕອນທີ່ມ່ວນ, ໜ້າຕື່ນເຕັ້ນ ແລ້ວເຊົາ ຢ່າເລົ່າຈົນສຸດເລື່ອງ ເຊັ່ນ ຄູອາດເລົ່າວ່າ ທ້າວສົ້ມປ່ອງມັກກິນໄຂ່ເປັດຕົ້ມ ແມ່ລາວເລີຍຊື້ເປັດນ້ອຍມາໃຫ້ລ້ຽງ ທ້າວສົ້ມປ່ອງຮັກເປັດນ້ອຍຫຼາຍໆໆໆໆ ລາວພຽນລ້ຽງເປັດນ້ອຍຢ່າງທະນຸຖະໜອມ ແຕ່ມື້ໜຶ່ງ ລາວຟ້າວໄປຫຼິ້ນນຳໝູ່ ຈົນລືມອັດປະຕູຄອກເປັດ ບາດລາວມາເຮືອນເປັດນ້ອຍຂອງລາວໂຕໜຶ່ງ ຜັດຖືກລົດຢຽບຢູ່ໜ້າເຮືອນ. ເລົ່າມາຊ່ຳນີ້ ແລ້ວຖາມນັກຮຽນວ່າຢາກຮູ້ບໍ່ ເລື່ອງຕໍ່ໄປເປັນແນວໃດ (ໃຫ້ນັກຮຽນຕອບ) ຊັ້ນເຮົາມາອ່ານນຳກັນເນາະ. (2 ນາທີ)

2. ແບ່ງກຸ່ມນັກຮຽນດ້ວຍວິທີທີ່ເໝາະສົມ (ນັບເລກເອົາ ໄວທີ່ສຸດ) ຖ້າຫ້ອງມີໜ້ອຍກວ່າ 20 ຄົນ ຄວນຈັດເປັນກຸ່ມລະ 3 ຄົນ ເພື່ອໃຫ້ນັກຮຽນໄດ້ແລກປ່ຽນກັນຫຼາຍໆ (2 ນາທີ)
3. ຄູຢາຍປຶ້ມໃຫ້ນັກຮຽນຄົນລະຫົວ (2 ນາທີ)
4. ຄູນຳພາການອ່ານ: ເລີ່ມຈາກຄູອ່ານຂຶ້ນຕົ້ນ (ສອງສາມປະໂຫຍກ ຫຼື ໜ້າໜຶ່ງ) ແລ້ວເລີ່ມຊີ້ໃຫ້ນັກຮຽນຜູ່ໜຶ່ງອ່ານໂດຍຜູ່ອື່ນຕັ້ງໃຈຟັງ ອ່ານໄດ້ສາມ-ສີ່ປະໂຫຍກໃຫ້ຢຸດ ແລ້ວຊີ້ໃຫ້ຜູ່ໃໝ່ອ່ານ ແຕ່ບໍ່ໃຫ້ລຽນຕາມບ່ອນນັ່ງເພາະນັກຮຽນຈະຮູ້ວ່າອີກດົນ ຈຶ່ງຮອດຜຽນໂຕ ເຂົາຈະບໍ່ຕັ້ງໃຈ ຕ້ອງຊີ້ໂຕແບບໂດດໄປໂດດມາ ບໍ່ໃຫ້ເຂົາເດົາອອກວ່າຈະຖືກຜຽນໂຕຍາມໃດ. ເມື່ອສັງເກດເຫັນວ່າຜູ່ໃດອ່ານບໍ່ເກັ່ງ ໃຫ້ສະຫຼັບກັບຜູ່ອ່ານເກັ່ງ ບາງຄັ້ງຮອດບ່ອນອ່ານຍາກ ຄູອາດອ່ານອີກແດ່ ເພື່ອສອນສຽງອ່ານຕື່ມ ໃຫ້ນັກຮຽນທີ່ອ່ານຕໍ່ໄປ ມີໂອກາດປັບປຸງການອ່ານຂອງຕົນໃຫ້ດີຂຶ້ນ. ເຮັດແນວນີ້ວຽນໄປຈົນສຸດເລື່ອງ ແລ້ວຄູຕົບມືຊົມເຊີຍ ພ້ອມບອກວ່າ ນັກຮຽນອ່ານໄດ້ມ່ວນຫຼາຍ (20 ນາທີ)
5. ສົນທະນາຫາໃຈຄວາມສຳຄັນຂອງເລື່ອງ (ຈັບປະເດັນ) ໂດຍນຳໃຊ້ຕົວຢ່າງຄຳຖາມທ້າຍບົດ ຂັ້ນຕອນນີ້ຄວນໃຊ້ເວລາຮອດ 20 ນາທີ ຈຶ່ງຈະພຽງພໍ. ຄູຄວນຖາມຄຳຖາມດຽວກັນ ກັບທຸກກຸ່ມ (ກຸ່ມນີ້ວ່າແນວໃດ, ກຸ່ມນີ້ວ່າແນວໃດ) ແລ້ວນຳພາສັງຮວມເອົາຄຳຕອບທີ່ຖືກຕ້ອງ ຈາກຄຳເຫັນຂອງທຸກກຸ່ມ ເຊັ່ນ



- ເມື່ອຖາມວ່າ ມີໃຜແດ່ໃນເລື່ອງນີ້ ? ເມື່ອຄູຊີ້ໄປຫາແຕ່ລະກຸ່ມ ຈະໄດ້ຄຳຕອບແຕກຕ່າງກັນໄປ ທັງ ສົມປອງ, ລຸງແຝງ, ແມ່, ສອນເດດ, ເປັດນ້ອຍ... ກໍລະນີນີ້ຖືວ່າທຸກຄຳຕອບຖືກໝົດ.
- ແຕ່ເມື່ອຮອດຄຳຖາມວ່າເຫດການສຳຄັນທີ່ສຸດໃນເລື່ອງນີ້ແມ່ນຫຍັງ?ນັກຮຽນອາດຈະຕອບວ່າ ສົມປອງລ້ຽງເປັດ, ເປັດຖືກລັດຢຽບ, ລຸງແຝງພາສົມປອງໄປເອົາເປັດ, ລູກລຸງແຝງໄຫ້, ເປັດນ້ອຍຍາດຂີ້ກະເດືອນ, ແມ່ລັກແຍງເບິ່ງສົມປອງເກືອເປັດ... ຕອນນີ້ຄູຕ້ອງພານັກຮຽນສົນທະນາ ດ້ວຍຄຳຖາມຊ້ອນ ເຊັ່ນວ່າ “ລອງຄຶດດີໆ ເບິ່ງ ຕອນໃດທີ່ນັກຮຽນອ່ານແລ້ວ ເຮັດໃຫ້ສະບາຍໃຈທີ່ສຸດ ຊາບຊຶ້ງໃຈນຳທີ່ສຸດ? ແມ່ນຕອນທີ່ສົມປອງໄຫ້ເສງດາຍເປັດບໍ? ຫຼືຕອນທີ່ສອນເດດໄຫ້ຕອນພໍ່ເອົາເປັດໃຫ້ຄົນອື່ນ? ຫຼືຕອນທີ່ສົມປອງເອົາເປັດໄປສົ່ງສອນເດດ?” ນີ້ ເພື່ອດຶງໄປສູ່ໃຈຄວາມສຳຄັນທີ່ສຸດ (ໝາກຫົວໃຈ) ຂອງເລື່ອງ ນັ້ນຄືການທີ່ສົມປອງເອົາເປັດສົ່ງຄືນສອນເດດ. ເຖິງແມ່ນວ່າ ອາດມີກຸ່ມທີ່ເວົ້າຄຳຕອບນີ້ອອກມາກ່ອນແລ້ວ ແຕ່ຫ້າມຄູບອກວ່າຖືກຕ້ອງໃນທັນທີ ຕ້ອງນຳພາການສົນທະນານີ້ ເພື່ອຄວາມເຂົ້າໃຈເຖິງໃຈຄວາມສຳຄັນ ອັນແທ້ຈິງຂອງເລື່ອງ.
6. ຈັດຮຽງຄຳຕອບຂອງນັກຮຽນ ໃສ່ກະດານ ແລ້ວພານັກຮຽນອ່ານ. (2 ນາທີ)
7. ສະຫຼຸບບົດຮຽນ: ຄູບອກນັກຮຽນວ່າ “ນີ້ແມ່ນຜົນງານການຫຍໍ້ເລື່ອງ ເປັດນ້ອຍຂອງສົມປອງ ຂອງນັກຮຽນ ທ້ອງ... ທຸກຄົນເກັ່ງຫຼາຍ” ຕົບມືໃຫ້ນັກຮຽນດັງໆ. (2 ນາທີ)

4. ຄຳແນະນຳຕໍ່ຄູ

- ໃຈຄວາມ ຫຼືຈະເອີ້ນວ່າ ປະເດັນ, ແກນເລື່ອງ, ຫຼື ໝາກຫົວໃຈ ທີ່ສຳຄັນທີ່ສຸດຂອງເລື່ອງເປັດນ້ອຍຂອງສົມປອງ ແມ່ນການ ຮູ້ຈັກໃຫ້, ແບ່ງປັນ, ຮັບຜິດຊອບ, ນຳ້ໃຈເສງສະຫຼະ ກິດຈະກຳນີ້ອອກແບບມາ ເພື່ອໃຫ້ເດັກ ໄດ້ສຳຜັດກັບຄວາມງາມ (ສຸນທອນທັດ) ແຫ່ງຊີວິດ ແຕ່ເດັກຫຼືແມ່ນແຕ່ຜູ້ໃຫຍ່ ບໍ່ຊ່ຳງເວົ້າຄຳສັບຂ້ຳງເທິງອອກມາດອກ ເຂົາຫາກໄດ້ຮັບຮູ້ຜ່ານເຫດການໃນເລື່ອງແລ້ວ. ການທີ່ເດັກຮັບຮູ້ວ່າເຫດການທີ່ສຳຄັນທີ່ສຸດຂອງເລື່ອງ ແມ່ນ ສົມປອງຄຶດເຫັນຄວາມຜິດຂອງຕົນເອງ ແລະ ຄຶດເຫັນອົກເຫັນໃຈສອນເດດ ຈົນຕັດສິນໃຈເອົາເປັດສົ່ງຄືນສອນເດດ ນັ້ນແມ່ນເດັກໄດ້ຮັບຮູ້ເຖິງ ຄວາມງາມຂອງຊີວິດ ຄື ການເປັນຄົນມີນຳ້ໃຈ.
- ກິດຈະກຳນີ້ ເໝາະສົມທີ່ຈະເຮັດກັບເດັກ ປ.4 ຂຶ້ນໄປ ແຕ່ຄູສາມາດປັບປ່ຽນບາງຂັ້ນຕອນ ເພື່ອໃຊ້ກັບເດັກ ປ.3 ລົງມາ ໄດ້ ເຊັ່ນວ່າ ຄູອ່ານມ່ວນໆ ຫຼືເລ່ົາປະກອບປຶ້ມຮູບໃຫ້ນັກຮຽນຟັງ ແລະສົນທະນາກັບນັກຮຽນໄປນຳ ເປັນແຕ່ລະເຫດການ, ໃນຂັ້ນຕອນການສົນທະນາ ກໍບອກກັບນັກຮຽນວ່າ ລອງມາທວນຄືນເລື່ອງນີ້ນຳກັນ.
- ການພິມປຶ້ມ ເປັດນ້ອຍຂອງສົມປອງ ມີຂໍ້ຜິດພາດຂອງການຈັດພິມ ຄືບ່ໄດ້ໃສ່ເຄື່ອງໝາຍ ວົງຢືມ (“...”) ໃນສ່ວນທີ່ເປັນຄຳເວົ້າຂອງຕົວລະຄອນ. ຜູ່ອ່ານອາດສັບສົນ

ວ່າປະໂຫຍກໃດແມ່ນການເລົ່າເລື່ອງ,ປະໂຫຍກໃດແມ່ນຄຳເວົ້າ?ຄຳເວົ້າຂອງໃຜ? ຄູຕ້ອງສຶກສາເລື່ອງດີໆ ອ່ານຫຼາຍໆຮອບ ຈົນຈື່ໄດ້ ແລ້ວໃສ່ວົງຢືມໃຫ້ກັບ ປະໂຫຍກ ຄຳເວົ້າໃນປຶ້ມທຸກຫົວ ຈະເຮັດໃຫ້ນັກຮຽນອ່ານໄດ້ງ່າຍ ແລະ ເຂົ້າໃຈດີຂຶ້ນ.

- ຊຸດຄຳຖາມທີ່ໃຊ້ໃນກິດຈະກຳນີ້ ແມ່ນພື້ນຖານການບັນທຶກ ເພື່ອນຳສະເໜີຂ່າວ ຫຼືເລົ່າເລື່ອງ ໂດຍມີ ຄຳຖາມສຳຄັນດັ່ງນີ້: ແມ່ນໃຜ, ແມ່ນຫຍັງ, ຍາມໃດ, ຢູ່ໃສ, ເປັນແນວໃດ, ຍ້ອນຫຍັງ ເຊິ່ງຄູສາມາດນຳໃຊ້ ເພື່ອດັດແປງຄຳຖາມໃຊ້ກັບເລື່ອງອື່ນໆ ຕາມທີ່ເຫັນສົມຄວນ.
- ຈົ່ງສັງເກດວ່າ ເມື່ອນັກຮຽນຕອບຄຳຖາມທັງໝົດນີ້ແລ້ວ ກໍໝາຍຄວາມວ່າເຂົາເຈົ້າ ສາມາດເລົ່າເລື່ອງນີ້ໂດຍຫຍໍ້ ຄື ຍົກປະເດັນ ຫຼື ໃຈຄວາມສຳຄັນອອກມາຢ່າງຄົບຖ້ວນ
- ກິດຈະກຳນີ້ ເໝາະກັບບົດເລື່ອງທີ່ຍາວແດ່ ມີເຫດການຫຼາຍຢ່າງເກີດຂຶ້ນ ມີຕົວລະຄອນຫຼາຍຕົວ ຕ່າງບົດບາດກັນ.

5. ຕົວຢ່າງຄຳຖາມ

1. ໃນເລື່ອງນີ້ມີໃຜແດ່?
2. ເປັນຫຍັງທ້າວສົມປອງຈຶ່ງມັກລ້ຽງເປັດ?
3. ມື້ທີ່ສົມປອງໄປທ່ຽວຫຼິ້ນ ແມ່ນວັນຫຍັງ?
4. ເປັດຂອງສົມປອງ ຖືກລັດຢຽບຕອນຈັກໂມງ?
5. ເປັນຫຍັງເປັດຂອງສົມປອງຈຶ່ງຖືກລັດຢຽບ?
6. ລຸງແຝງເຮັດແນວໃດ ເມື່ອເຫັນສົມປອງຮ້ອງໄຫ້?
7. ລູກລຸງແຝງເຮັດແນວໃດ ເມື່ອເຫັນພໍ່ເອົາເປັດໃຫ້ຄົນອື່ນ?
8. ເປັດນ້ອຍຂອງສອນເດດ ເປັນແນວໃດ ເມື່ອມາຢູ່ນຳສົມປອງ?
9. ສົມປອງຄິດແນວໃດ ເມື່ອເຫັນເປັດນ້ອຍເຫງົາ?
10. ເຫດການທີ່ສຳຄັນທີ່ສຸດໃນເລື່ອງນີ້ແມ່ນຫຍັງ?

6. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

ນັກຮຽນສ່ວນຫຼາຍ ສາມາດຕອບຄຳຖາມ ເຈາະຈີ້ມຂອງຄູທຸກຂໍ້ ແລ້ວຍົກເຫດການສຳຄັນທີ່ສຸດຂອງເລື່ອງ ອອກມາໄດ້ ຄືການທີ່ ສົມປອງຕັດສິນໃຈ ເອົາເປັດໄປສົ່ງຄືນ ສອນເດດ

ບົດທີ ສິບ

ເກີດຫຍັງຂຶ້ນ

ບົດເລື່ອງທີ່ໃຊ້ ໃນການອ່ານແລະເຮັດກິດຈະກຳ:

ໄກ່ນ້ອຍຕົກຂຸມ

ເລື່ອງໂດຍ ຮຸ່ງອະລຸນ ແດນວິໄລ

ຮູບໂດຍ ວົງສະຫວັນ ດຳລົງສຸກ

ພິມຄັ້ງທີ 1 ປີ 2006

ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ

1. ຈຸດປະສົງ

ການລຳດັບເຫດການ (ເກີດຫຍັງຂຶ້ນ) ເປັນພື້ນຖານທີ່ສຳຄັນທີ່ສຸດຂອງການຂຽນ ບົດເລົ່າເລື່ອງ, ບົດຂ່າວ ແລະ ແຕ່ງເລື່ອງ ຍ້ອນວ່າ ທັງເລື່ອງເລົ່າແລະເລື່ອງແຕ່ງ ລ້ວນຕ້ອງມີການລຳດັບເຫດການ ຢ່າງເປັນຂັ້ນຕອນ ເພື່ອໃຫ້ຜູ່ຟັງ-ຜູ່ອ່ານ ມ່ວນ ຢາກ ຕິດຕາມ ແລະ ເຂົ້າໃຈຈະແຈ້ງ. ຈຶ່ງເປັນສິ່ງຈຳເປັນທີ່ເດັກຕ້ອງໄດ້ຮັບການເຝິກແອບ ໃຫ້ ຮູ້ຈັກຈື່ຈຳແລະຈັດລຳດັບເຫດການ ທີ່ຕົນພົບພໍ້ ຫຼື ອ່ານພໍ້.

ອີກດ້ານໜຶ່ງ ການມີບົດເຝິກຫັດໃນລັກສະນະນີ້ ຈະຊ່ອຍໃຫ້ເດັກຕັ້ງໃຈ ມີສະມາທິ ກັບການອ່ານຕື່ມ ເຝິກແອບການອ່ານແບບຈັບໃຈຄວາມ ໃນລະດັບພື້ນຖານ.

2. ອຸປະກອນ

- ປຶ້ມ "ໄກ່ນ້ອຍຕົກຂຸມ" 31 ຫົວ (ນັກຮຽນ 30 ຄົນ)
- ກະດານດຳ, ສໍຂາວ, ອຸປະກອນການຂຽນໃນຫ້ອງຮຽນທົ່ວໄປ.

3. ກິດຈະກຳ

ຂັ້ນຕອນ:


1. ຄູສະເໜີປຶ້ມຕໍ່ນັກຮຽນ
2. ນຳພານັກຮຽນອ່ານ
3. ພານັກຮຽນ ຈັດລຳດັບເຫດການ
4. ໃຫ້ນັກຮຽນ ອ່ານສິ່ງທີ່ຄູຂຽນເທິງກະດານຄືນ
5. ຄູສະຫຼຸບ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ (2 ນາທີ) : ຍົກປຶ້ມຂຶ້ນ ໃຫ້ນັກຮຽນທຸກຄົນເບິ່ງໜ້າປົກ ໃຫ້ນັກຮຽນອ່ານຊື່ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ ແລະ ຜູ່ແຕ້ມ ຈາກນັ້ນເລົ່າເລື່ອງຫຍໍ້ ປະມານໜຶ່ງສ່ວນສາມ ຂອງເລື່ອງທັງໝົດ, ຕົວຢ່າງວ່າ “ເລື່ອງນີ້ເປັນເລື່ອງຂອງໄກ່ນ້ອຍໂຕໜຶ່ງ ທີ່ມັກເລາະໄປຖາມຕີໝູ່ ຄືຈັ່ງວ່າໂຕເກ່ງຫຼາຍ ແຕ່ແລ້ວມື້ໜຶ່ງ ມັນຜັດຕີ່ນໂຕຈິໂກະ ຈົນຕົກລົງໄປໃນຂຸມ ຂຶ້ນມາບໍ່ໄດ້...ຊິເປັນແນວໃດນໍບາດນີ້ ? ຄັນຢາກຮູ້ວ່າຊິເປັນແນວໃດຕໍ່ໄປ ເຮົາມາອ່ານນຳກັນເນາະ” ດັ່ງນີ້ເປັນຕົ້ນ.
2. ນຳພານັກຮຽນອ່ານ (20 ນາທີ) : ດ້ວຍເວລາອັນຈຳກັດ ຈຶ່ງຢາກຂໍແນະນຳວ່າ ບໍ່ຈຳເປັນທີ່ຄູຕ້ອງອ່ານໃຫ້ຟັງກ່ອນ ໝົດເລື່ອງ ແລະໃຫ້ໃຊ້ວິທີອ່ານຕໍ່ກັນ ແບບສະຫຼັບໄປມາ ໂດຍຄູເປັນຜູ່ເລີ່ມຕົ້ນອ່ານ ແລ້ວຄ່ອຍຊີ້ໃສ່ນັກຮຽນ ໂດຍບໍ່ໃຫ້ເຂົາຮູ້ວ່າຕໍ່ໄປຈະຖືກໃຜ ແຕ່ຄູກໍຕ້ອງແບ່ງໃຫ້ນັກຮຽນທຸກຄົນໄດ້ອ່ານ, ເຮັດແນວນີ້ເພື່ອໃຫ້ເດັກຕັ້ງໃຈຢູ່ກັບໜ້າປຶ້ມ. ອ່ານແລ້ວ ໃຫ້ຕົບມືຊົມເຊີຍໝົດທຸກຄົນ.
3. ພານັກຮຽນຈັດລຳດັບເຫດການ(20ນາທີ): ໂດຍເລີ່ມຖາມນັກຮຽນວ່າ ເລື່ອງໄກ່ນ້ອຍຕົກຂຸມນີ້ ທຳອິດເກີດຫຍັງຂຶ້ນ? ໃຫ້ນັກຮຽນຕອບຮ່ວມກັນ ຖ້າຍັງບໍ່ຖືກ ກໍໃຫ້ບອກວ່າ ລອງຄຶດຄັກໆເບິ່ງ ເລື່ອງເປັນແນວນັ້ນແທ້ບໍ່ ຈົນໄດ້ຄຳຕອບທີ່ຖືກຕ້ອງ (ລາຍອ່ອມອ້ອຍ ໄປຖາມຕີໄກ່ນ້ອຍທີ່ຊື່ຈ້ຳຫຼອດ) ຄ່ອຍຂຽນໃສ່ກະດານ. ຖາມຕີແລ້ວ ໄກ່ນ້ອຍຕີນຳລາຍອ່ອມອ້ອຍບໍ່? ເປັນຫຍັງ? ເຮັດດັ່ງນີ້ໄປເລື້ອຍໆ ຈົນສຸດເລື່ອງ.
4. ໃຫ້ນັກຮຽນ ອ່ານສິ່ງທີ່ຄູຂຽນເທິງກະດານຄືນ (2 ນາທີ)
5. ສຸດທ້າຍກ່ອນເລີກ ໃຫ້ຄູສະຫຼຸບໃຫ້ນັກຮຽນຮູ້ວ່າ “ສິ່ງທີ່ເຮັດມື້ກີ້ນີ້ ແມ່ນການເລົ່າເລື່ອງຄືນ ແຕ່ບໍ່ແມ່ນການເລົ່າແບບນິກແກ້ວ ເປັນການເລົ່າຢ່າງເຂົ້າໃຈແຈ້ງວ່າເກີດຫຍັງຂຶ້ນແດ່ໃນເລື່ອງ ເຊິ່ງກໍຄືກັບການແຕ່ງເລື່ອງ ຫຼື ລາຍງານຂ່າວ ທີ່ເຮົາຈະຕ້ອງໄດ້ເລົ່າສິ່ງທີ່ເຮົາໄດ້ເຫັນ ໄດ້ຟັງ ໄດ້ອ່ານ ຕໍ່ໃຫ້ໝູ່ຟັງ ເປັນຂັ້ນເປັນຕອນ.” (6 ນາທີ)

4. ຄຳແນະນຳຕໍ່ຄູ

- ໃນການນຳພານັກຮຽນຈັດລຳດັບເຫດການຂອງເລື່ອງວ່າເກີດຫຍັງຂຶ້ນແດ່ ໃນເລື່ອງທີ່ອ່ານນັ້ນ ມີຊຸດຄຳຖາມງ່າຍໆ ຄື
  - ເກີດຫຍັງຂຶ້ນ?
  - ຈາກນັ້ນເດ?
  - ແລ້ວຕໍ່ໄປເປັນແນວໃດ? ...
  - ດັ່ງນີ້ໄປຈົນສຸດເລື່ອງ
- ສິ່ງສຳຄັນ ແມ່ນສິລະປະໃນການຖາມຂອງຄູ ເຊິ່ງຈະຕ້ອງເຈາະຈີ້ມໄປຕາມເນື້ອເລື່ອງ ເຊັ່ນເຫດການໃນເລື່ອງ "ໄກ່ນ້ອຍຕົກຂຸມ" ນີ້ ຖ້າຈະຖາມພຽງວ່າທຳອິດເກີດຫຍັງຂຶ້ນ ກໍຈະໄດ້ຄຳຕອບວ່າ "ລາຍອ່ອມອ້ອຍໄປຖາມຕີໄກ່ນ້ອຍ" ຖ້າຄຳຖາມຕໍ່ມາຂອງຄູແມ່ນ "ຈາກນັ້ນເດ ?" ກໍມັກໄດ້ຄຳຕອບວ່າ "ລາຍອ່ອມອ້ອຍໄປຖາມຕີເປັດນ້ອຍ". ດັ່ງນັ້ນ ຄູຈຳເປັນຕ້ອງກຳໃຫ້ໄດ້ວ່າ ໃນເຫດການທີ່ລາຍອ່ອມອ້ອຍຖາມຕີໄກ່ນ້ອຍນັ້ນ ຝູງໄກ່ນ້ອຍບໍ່ຕີນຳລາຍອ່ອມອ້ອຍຍ້ອນເຂົາຕ້ອງໄປໂຮງຮຽນ, ຄູຕ້ອງດຶງຄຳຕອບນີ້ອອກຈາກເດັກ ດ້ວຍຄຳຖາມວ່າ "ໄກ່ນ້ອຍຕີນຳລາຍອ່ອມອ້ອຍບໍ່ ?" "ເປັນຫຍັງເຂົາຄືບໍ່ຕີ ?" ເຊິ່ງຈາກປະສົບການທີ່ເຮັດມາ ເດັກຈະຕອບໄດ້ທຸກເທື່ອ.
- ໜ້າທີ່ຂອງຄູຄື ເອົາຄຳຕອບນັ້ນອອກມາ ແລ້ວເດັກຈະເຂົ້າໃຈວ່າ ການປະຕິເສດຂອງຝູງໄກ່ນ້ອຍ ແລະເຫດຜົນທີ່ປະຕິເສດກໍເປັນສິ່ງສຳຄັນຄືກັນ ເຂົາຈະຄ່ອຍໆ ພັດທະນາຄວາມສາມາດໃນການເກັບກຳຂໍ້ມູນ, ຈັບປະເດັນ ແລະຈັດລຳດັບເຫດການໃຫ້ດີຂຶ້ນ.
- ການຖາມນັກຮຽນ ບໍ່ຢາກໃຫ້ຄູເອົາຄຳຕອບທຳອິດທີ່ເຂົາຕອບມານັ້ນໂລດ ເຖິງຈະເປັນຄຳຕອບທີ່ຖືກຕ້ອງກໍຕາມ ຄວນຖາມຊ້ຳວ່າ ແນ່ໃຈແລ້ວບໍ? ຄັກໃຈແລ້ວບໍ? ແມ່ນຫວາ?... ຫຼືຂໍຄຳຕອບຈາກໃຜຜູ່ໜຶ່ງ ໂດຍຍ່າງໄປໃກ້ໆ ແລ້ວຖາມວ່າ



"ຫຼານວ່າແນວໃດ" ເຊິ່ງໃຜຜູ່ນັ້ນ ຄວນຈະເປັນນັກຮຽນອ່ອນແດ່ ກາງແດ່ ເກັ່ງແດ່ ສະຫຼັບກັນໄປແຕ່ລະເຫດການ ທັງນີ້ ເພື່ອສ້າງການມີສ່ວນຮ່ວມ ແລະ ຄວາມຮູ້ສຶກເທົ່າທຽມກັນຂອງນັກຮຽນ. ເມື່ອນັກຮຽນເຫັນຄູຂຽນຄຳຕອບເຂົາໃສ່ກະດານຫຼັງຈາກຖືກຍົວະໃຫ້ສັບສົນກ່ອນ ເປັນການສ້າງຄວາມໝັ້ນໃຈ ແລະຄວາມກ້າສະແດງອອກໃຫ້ເຂົາ ໄປໃນຕົວ.

- ກິດຈະກຳນີ້ ເຮັດໄດ້ກັບເດັກນ້ອຍຂັ້ນ ປ.3 ຂຶ້ນໄປ ແຕ່ຖ້າຈະໃຫ້ ປ.1 ຫຼື ປ.2 ເຮັດ ກໍໃຫ້ປ່ຽນຈາກການອ່ານ ເປັນການອ່ານ ຫຼືເລົ່າຂອງຄູ ແລະໃຫ້ເດັກນ້ອຍເບິ່ງຮູບໃນປຶ້ມຂອງຕົນໄປນຳ ໝາຍຄວາມວ່າ ປ.1 ຫຼື ປ.2 ກໍຕ້ອງຢາຍປຶ້ມໃຫ້ຕິດຕາມໄປນຳ.
- ສະເພາະ ປ.5 ຄູຄວນຈະໃຫ້ເຂົາຈົດກ່າຍ ເອົາຄຳຕອບຂອງນັກຮຽນທີ່ຄູຂຽນເທິງກະດານ ເອົາໄວ້ເປັນແບບຢ່າງ ເພື່ອໃຫ້ເປັນການສອນທີ່ຄົບທຸກທັກສະ.
- ກ່ອນເລີກທຸກຄັ້ງ ຢ່າລືມບອກນັກຮຽນວ່າ "ມື້ນີ້ ທຸກຄົນເກັ່ງຫຼາຍ" ແລະຕົບມືໃຫ້ເຂົາພ້ອມ.

5. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

ນັກຮຽນເລົ່າເລື່ອງຄືນ ດ້ວຍພາສາ ທ່າທາງ ແລະຄຳເວົ້າຂອງເຂົາເອງ ໂດຍລຳດັບເຫດການ ຕາມໂຄງເລື່ອງເດີມ.



ບົດທີ ສິບເອັດ

ຄວາມປະທັບໃຈ

1. ຈຸດປະສົງ

ທ່ານເປັນຄູຜູ່ໜຶ່ງ ທີ່ມັກຖາມນັກຮຽນວ່າ "ວັນນະຄະດີ (ນິທານ) ເລື່ອງນີ້ ສ່ອງແສງ ເຖິງຫຍັງ ?" ຫຼືບໍ່ ?

ທ່ານເຄີຍຕັ້ງຄຳຖາມບໍ່ວ່າ ເປັນຫຍັງນັກຮຽນຕອບຄຳຖາມຂອງທ່ານບໍ່ໄດ້ດີ ?

ແລ້ວທ່ານເຄີຍຄິດບໍ່ວ່າ ຍັງມີຄຳຖາມ ແລະ ກິດຈະກຳອື່ນອີກທີ່ສາມາດໃຫ້ຄຳຕອບ ທີ່ທ່ານຕ້ອງການ ໂດຍນັກຮຽນຮູ້ສຶກວ່າ ເປັນເລື່ອງມ່ວນ ທີ່ຈະອ່ານ ແທນທີ່ຈະເປັນ ການ ອ່ານທີ່ພາເຈັບຫົວ.

ຜູ່ຂຽນໄດ້ທົດລອງເຮັດກິດຈະກຳ ທີ່ຈະສະເໜີທ່ານຕໍ່ໄປນີ້ ໂດຍມີຈຸດປະສົງເພື່ອ ໃຫ້ຜູ່ຮ່ວມກິດຈະກຳ (ນັກຮຽນປະຖົມ) ໄດ້ເຊື່ອມຊຶມ ສຸນທອນທັດ ແຫ່ງຊີວິດອັນງົດງາມ ທີ່ຜູ່ປະພັນ ຖ່າຍທອດໄວ້ໃນບົດເລື່ອງທີ່ເພີ່ນແຕ່ງຜ່ານໂຕລະຄອນ, ເທດການ, ແລະບັນຍາ ກາດໃນເລື່ອງ. ແຕ່ການເຊື່ອມຊຶມນັ້ນ ບໍ່ແມ່ນການຊີ້ນຳ ຫຼືການຖືກບອກວ່າ "ເລື່ອງນີ້ ສ່ອງແສງໃຫ້ຮູ້ວ່າ ..." ເພາະການຖືກບອກແບບນັ້ນ ຂາດມິຕິຂອງ ການຮັບຮູ້ຜ່ານປະສົບ ການສ່ວນຕົວຂອງເດັກ (ເອົາເດັກເປັນໃຈກາງ) ຫຼື ອາດເວົ້າວ່າ ເປັນພຽງການທ່ອງຈຳ ບໍ່ແມ່ນການຈື່ຈຳ. ສິ່ງທີ່ເດັກຈະໄດ້ຈາກກິດຈະກຳນີ້ ຄື ການຮັບຮູ້ ເຖິງຄວາມງາມອັນເລິກ ເຊິ່ງຂອງບົດວັນນະຄະດີ ຜ່ານສິ່ງທີ່ເອີ້ນວ່າ ຄວາມປະທັບໃຈ.

2. ອຸປະກອນ

- ບົດເລື່ອງສຳລັບອ່ານ: ບໍ່ຈຳເປັນຕ້ອງເປັນເລື່ອງດຽວກັນ ພຽງຢາກຂໍແນະນຳວ່າ ຄວນເປັນເລື່ອງທີ່ສ້າງສັນ, ສ້າງຄວາມປະທັບໃຈ, ໂຕລະຄອນໂດດເດັ່ນ ແລະ ຖ້າຈະຈັບເອົາເລື່ອງໜຶ່ງ ຈາກປຶ້ມໂຮມເລື່ອງສັ້ນ ທີ່ຫົວອ່າວໜາ ຈະດີຫຼາຍ ເພາະຈະ

ໄດ້ເຝິກແອບສະມາທິໃນການອ່ານໄປໃນໂຕ ໂດຍໃນນີ້ ຢາກຂໍແນະນຳບາງເລື່ອງ ດັ່ງນີ້: ສາວຂາຍຢາສູບ (ປຶ້ມ ຮອຍຍິ້ມທີ່ບໍ່ມີກົ່ນເຫຼົ້າ, ໂດຍ ຮຸ່ງອະລຸນ ແດນວິໄລ), ໂອກາດ (ໂດຍ ວິລະຄອນ ວົງວອນ, ປຶ້ມ ອະດີດຝັງໃຈ), ໝູ່ (ໂດຍ ບົວລຸນ ດິດກຸງກົ່ງ, ປຶ້ມ ໝູ່), ອະດີດຝັງໃຈ (ໂດຍ ດາວເພັດ ບຸນມາເລີດ, ປຶ້ມ ອະດີດຝັງໃຈ), ນ້ຳຕາແມ່ (ໂດຍ ທົ່ງຈ່ຽມ ແຊ່ເຕັ່ນ, ປຶ້ມ ອະດີດຝັງໃຈ)

- ເຈ້ຍນ້ອຍ ຂະໜາດເຄິ່ງໜ້າປຶ້ມ ຫຼື A4 ຕັດ 4 ສຳລັບຂຽນຄວາມປະທັບໃຈ.

3. ກິດຈະກຳ

ຂັ້ນຕອນ:

1. ກະຕຸ້ນຄວາມສົນໃຈ
2. ໃຫ້ນັກຮຽນຢືມປຶ້ມ
3. ໃຫ້ນັກຮຽນອ່ານ
4. ພາສົນທະນາ
5. ໃຫ້ນັກຮຽນຂຽນຄວາມປະທັບໃຈ
6. ໃຫ້ນັກຮຽນຢືມປຶ້ມ


ລາຍລະອຽດແຕ່ລະຂັ້ນຕອນ:

1. ກະຕຸ້ນຄວາມສົນໃຈ (2 ນາທີ): ເລີ່ມແຕ່ຕອນບໍ່ທັນເຂົ້າຫ້ອງ ໃຫ້ຄູເອົານັກຮຽນໄປຊ່ອຍຂົນປຶ້ມ. ພໍເຂົ້າມາໃນຫ້ອງ ໃຫ້ຖາມນັກຮຽນວ່າ “ຢາກຢືມປຶ້ມເມືອອ່ານເຮືອນບໍ?” ຈາກທີ່ເຮັດຜ່ານມາ ທຸກຄັ້ງຈະໄດ້ຄຳຕອບວ່າ “ຢາກ”.
2. ໃຫ້ນັກຮຽນຢືມປຶ້ມ (15 ນາທີ): ໃຫ້ຄູຈົດບັດໃຫ້ນັກຮຽນຢືມປຶ້ມທັນທີ ແຕ່ຈະສັງເກດວ່າ ເມື່ອນັກຮຽນເຫັນປຶ້ມຫົວໜາເປັນເທື່ອທຳອິດ ເຂົາຈະມີອາການວ່າ ບໍ່ຢາກໄດ້. ຄູຕ້ອງຄ່ອຍອະທິບາຍແກມບັງຄັບ ດ້ວຍການແນະນຳປຶ້ມ ໃຫ້ນັກຮຽນເປັນແຕ່ລະຫົວ ເຊັ່ນກໍລະນີຂອງປຶ້ມ “ອະດີດຝັງໃຈ” ໃຫ້ຄູແນະນຳວ່າ: “ມີເລື່ອງໜຶ່ງໃນນີ້ຢາກໃຫ້ໄດ້ອ່ານ ແລ້ວເຮົາຈະໄດ້ເຮັດກິດຈະກຳນຳກັນ ເປັນເລື່ອງຂອງລູກທີ່ຜິດກັບແມ່ ບໍ່ຍອມລ້າງຖ້ວຍ ຫຼາຍມື້ຫຼາຍທີ ລາວເຫັນແມ່ລາວມີນ້ຳຕາ ລາວກໍເລີຍ... ແມ່ນຫຍັງບຸ ລືມແລ້ວ ໄປອ່ານເອົາເອງເດີ ແລ້ວມີແນວມ່ວນໆຊິພາຫຼິ້ນ”
3. ມອບວຽກ (5 ນາທີ): ໃຫ້ນັກຮຽນອ່ານເລື່ອງທີ່ຄູກຳນົດໃຫ້ ຈາກປຶ້ມແຕ່ລະຫົວ ຫຼາຍຄົນໄດ້ເລື່ອງຊ້ຳກັນແດ່ ກໍບໍ່ເປັນຫຍັງ ເຊັ່ນ ຖ້າມີນັກຮຽນ 30 ຄົນ ປຶ້ມ 30 ຫົວ ຄູອາດຈະມີ ປຶ້ມ “ອະດີດຝັງໃຈ”, ຮອຍຍິ້ມທີ່ບໍ່ມີກົ່ນເຫຼົ້າ, ໝູ່, ຟ້າປົ້ນ, ເຮົາຮັກກັນບໍ່ໄດ້, ທ້າວກ່ຳເປ່ ເລື່ອງລະປະມານ 5 ຫົວ. ໃນຫ້ອງ ມີປະມານ 5 ຄົນທີ່ໄດ້ອ່ານເລື່ອງດຽວກັນ. ຈາກນັ້ນບອກເລື່ອງທີ່ຈະໃຫ້ນັກຮຽນອ່ານ ຕ້ອງບອກໃຫ້ແຈ້ງ ວ່າເລື່ອງຊື່ຫຍັງ

ຢູ່ໜ້າໃດ. ແລ້ວບອກໃຫ້ນັກຮຽນເອົາໄປອ່ານຢູ່ເຮືອນ ນັດກັບເຂົາວ່າອີກສອງມື້ ມີແນວ່ນ ພາເຮັດ ຜູ່ໃດບ່ອ່ານ ລະບໍ່ໄດ້ຫຼິ້ນ.

4. ພາສົນທະນາ (15 ນາທີ) : ຮອດມື້ນັດ ໃຫ້ຈັດກຸ່ມນັກຮຽນ ຕາມເລື່ອງທີ່ເຂົາເຈົ້າ ໄດ້ອ່ານ ແລະນຳພາການສົນທະນາ ດ້ວຍຕົວຢ່າງຄຳຖາມ ດັ່ງນີ້:


ມັກເລື່ອງທີ່ອ່ານບໍ?
ເປັນຫຍັງຄືມັກ?
ມ່ວນຕອນໃດ?
ເຈົ້າມັກຜູ່ໃດໃນເລື່ອງ?
ເປັນຫຍັງຄືມັກລາວ?
ເຈົ້າຢາກເປັນໃຜໃນເລື່ອງ?
ເປັນຫຍັງຈຶ່ງຢາກເປັນລາວ?
ຖ້າປ່ຽນຕອນສຸດທ້າຍໄດ້ ເຈົ້າຢາກໃຫ້ເລື່ອງສຸດລົງແນວໃດ?



- ໃຫ້ນັກຮຽນຂຽນຄວາມປະທັບໃຈ (15 ນາທີ) : ຄູຢາຍເຈ້ຍນ້ອຍ ຂະໜາດເຄິ່ງໜ້າປຶ້ມ ຫຼື A4 ຕັດ 4 ໃຫ້ນັກຮຽນ ຂຽນຄວາມປະທັບໃຈ ເຊິ່ງຄູຕ້ອງອະທິບາຍຕື່ມວ່າ "ຢາກ ໃຫ້ນັກຮຽນຂຽນສິ່ງທີ່ເຮົາລົມກັນຫວ່າງກີ້ນີ້ ຂຽນບອກວ່າ ເລື່ອງນີ້ມ່ວນຕອນໃດ? ມັກໃຜໃນເລື່ອງ? ເປັນຫຍັງຄືມັກຜູ່ນັ້ນ? ຢາກເປັນໃຜໃນເລື່ອງ? ເປັນຫຍັງຄືຢາກ ເປັນລາວ? ແລ້ວຖ້າຕອນສຸດທ້າຍ ເຈົ້າປ່ຽນເລື່ອງໄດ້ ຢາກໃຫ້ເປັນແນວໃດ?
- ໃຫ້ນັກຮຽນຢືມປຶ້ມ (15 ນາທີ): ຄູຕ້ອງສະເໜີນັກຮຽນກ່ອນວ່າ ປຶ້ມທີ່ເຂົາເຈົ້າອ່ານ ຍັງມີອີກຫຼາຍໆເລື່ອງມ່ວນໆ ລອງເອົາໄປອ່ານເບິ່ງເນາະ ແລ້ວມື້ໜ້າລົມກັນຕື່ມ. ຈາກນັ້ນຈົດບັດເຂົ້າ-ອອກ ໝາຍຄວາມວ່າ ໃຫ້ນັກຮຽນຢືມປຶ້ມຕໍ່ອີກ ຕາມລະບຽບ.

4. ຄຳແນະນຳ

- ຄູຈະສັງເກດເຫັນວ່າ ກິດຈະກຳນີ້ ໃຊ້ເວລາທັງໝົດ ເກືອບ 70 ນາທີ ໂດຍແບ່ງເຮັດ ສອງເທື່ອ ເທື່ອທີໜຶ່ງ ປະມານ 20 ນາທີ ແລະເທື່ອທີ 2 ໝົດຄາບຮຽນໜຶ່ງ. ທັ້ງນີ້ ຍ້ອນວ່າ ເຮົາຕ້ອງການໃຫ້ເດັກໄດ້ຢືມປຶ້ມເມືອອ່ານເຮືອນ ເພື່ອໃຫ້ເຂົາໄດ້ອ່ານ ຢ່າງອິດສະຫຼະ ຊາບຊຶມກັບອາລົມຈິດຂອງເລື່ອງ ໄດ້ດີກວ່າອ່ານຮວມກັນໃນຫ້ອງ.
- ການຢືມປຶ້ມເທື່ອທຳອິດ ອາດເຮັດກ່ອນ ຫຼືຫຼັງຄາບຮຽນວິຊາໃດໜຶ່ງ.



- ການເລືອກປຶ້ມທີ່ຈະມາເຮັດກິດຈະກຳ ແມ່ນສິ່ງສຳຄັນທີ່ສຸດ ດັ່ງຫົວຂໍ້ຂອງບົດວ່າ ຄວາມປະທັບໃຈ ດັ່ງນັ້ນ ຄູຕ້ອງຊອກປຶ້ມ ຊອກເລື່ອງທີ່ສາມາດສ້າງຄວາມປະທັບໃຈໃຫ້ເດັກ ເລື່ອງທີ່ແນະນຳໄວ້ຂ້າງເທິງກໍເປັນສ່ວນໜຶ່ງ ແຕ່ຖ້າຢູ່ໂຮງຮຽນຂອງທ່ານ ບໍ່ມີປຶ້ມດັ່ງກ່າວ ກໍເປັນວິຈາລະນະຍານຂອງທ່ານ ທີ່ຈະຕ້ອງຊອກຫາເລື່ອງມາ ດ້ວຍການອ່ານປຶ້ມ ໃນຫ້ອງອ່ານໃຫ້ຫຼາຍທີ່ສຸດເທົ່າທີ່ຈະຫຼາຍໄດ້ ທ່ານມັກເລື່ອງໃດ ປະທັບໃຈກັບເລື່ອງໃດ ຄ່ອຍເອົາເລື່ອງເລົ່ານັ້ນ ໄປສ້າງຄວາມປະທັບໃຈໃຫ້ນັກຮຽນ ຂອງທ່ານຕໍ່.
- ຫ້າມບໍ່ໃຫ້ເອົາເລື່ອງທີ່ຄູເອງກໍຍັງບໍ່ເຄີຍອ່ານ ໄປໃຫ້ນັກຮຽນອ່ານ ຄູຕ້ອງຮູ້ຈັກເລື່ອງ ນັ້ນໆ ດີແລ້ວ (ມັກ, ອ່ານແລ້ວຫຼາຍຮອບ) ຈຶ່ງເອົາໄປເຮັດກິດຈະກຳນີ້ກັບນັກຮຽນ.
- ເຮົາສາມາດຄາດການຄຳຕອບຂອງນັກຮຽນ ຄື: ມັກເລື່ອງທີ່ອ່ານບໍ? ນັກຮຽນ 99% ຈະຕອບວ່າ "ມັກ" ເປັນຫຍັງຄືມັກ? "ມ່ວນ". ແຕ່ພໍຮອດຕອນວ່າ ມ່ວນຕອນໃດ? ນັກຮຽນຈະເລີ່ມຄິດຫາຄຳຕອບຂອງໃຜມັນ ຍິ່ງຄຳຕອບແຕກຕ່າງກັນຫຼາຍເທົ່າໃດ

ສະແດງວ່ານັກຮຽນໄດ້ອ່ານຫຼາຍແລະມີປະສິດທິພາບ. ແຕ່ຄວາມປະທັບໃຈແທ້ໆ ຈະສະແດງອອກ ບ່ອນຕົວລະຄອນທີ່ເຂົາມັກ, ເຂົາຢາກເປັນ ຄືກັບຕອນທີ່ເຮົາເບິ່ງ ຮູບເງົາ ເບິ່ງລະຄອນ ແລ້ວກໍຢາກເປັນຜູ່ນັ້ນຜູ່ນີ້.

- ເວລາພາສົນທະນາ ໃຫ້ຄູຖາມຄຳຖາມດຽວກັນສອງເທື່ອຂຶ້ນໄປ ເຊັ່ນ ເມື່ອຖາມວ່າ "ມັກຜູ່ໃດໃນເລື່ອງ?" ເມື່ອນັກຮຽນຕອບແລ້ວ ໃຫ້ຖາມຄືນອີກວ່າ "ບໍ? ມັກຜູ່ນີ້ບໍ? ນັກຮຽນຄົນອື່ນມັກໃຜ? ບໍ່ມັກຜູ່ນັ້ນ (ຊື່ຕົວລະຄອນ) ແດ່ບໍ?" ທັງນີ້ເພື່ອກະຕຸ້ນ ແລະສະແດງໃຫ້ນັກຮຽນເຫັນວ່າ ທຸກຄົນ ທຸກຄຳຕອບ ສຳຄັນ ເທົ່າກັນ.
- ກິດຈະກຳນີ້ ເໝາະຈະເຮັດກັບ ປ.4 ແລະ ປ.5 ແຕ່ຖ້າຢາກເຮັດກັບຫ້ອງນ້ອຍລົງ ກໍໃຫ້ຕັດຂັ້ນຕອນທີ 5 ອອກ ໃຫ້ເຂົາເວົ້າອອກມາແມ່ນພໍແລ້ວ.

5. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

- ມີຄຳຕອບຫຼາກຫຼາຍຈາກນັກຮຽນ ທັງດ້ານເນື້ອໃນ ຕອນທີ່ເຂົາບອກວ່າມ່ວນ ແລະ ໂຕລະຄອນທີ່ປະທັບໃຈ.
- ນັກຮຽນທຸກຄົນ ຫ້າວຫັນທີ່ຈະຢືມປຶ້ມ ໃນຊ່ວໂມງນັ້ນ ແລະສົນໃຈປຶ້ມຂອງໝູ່ຜູ່ອື່ນ ໂດຍຖາມຢືມຕໍ່ ຫຼື ຂໍຈອງນຳຄູ ຢາກຢືມປຶ້ມຫົວອື່ນໆ ຕໍ່ໄປ.

ບົດທີ ສິບສອງ

ອ່ານກອນມ່ວນໆ

ບົດເລື່ອງທີ່ໃຊ້ໃນການອ່ານ ແລະ ເຮັດກິດຈະກຳ:

ສັງສິນໄຊ ຄຳກອນຄູ່ຮ້ອຍແກ້ວ

ປະພັນຄຳກອນ ໂດຍ ທ້າວ ປາງຄຳ

ລິດຈະນາ ແລະແປເປັນຮ້ອຍແກ້ວ ໂດຍ ມະຫາສີລາ ວິຣະວົງສ໌

ພິມຄັ້ງທີ 1 ປີ 2009 ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ບໍລິສັດດອກເກດ ແລະຄູ່ຮ່ວມງານ

1. ຈຸດປະສົງ


ການອ່ານກອນແມ່ນກິດຈະກຳທີ່ສຳຄັນ ແລະ ຈຳເປັນສຳລັບການສົ່ງເສີມການອ່ານ, ສາມາດນຳໃຊ້ກັບນັກຮຽນ ຕັ້ງແຕ່ ປ. 3 (ຖ້ານັກຮຽນອ່ານເກັ່ງແດ່) ຫຼື ປ. 4 ຂຶ້ນໄປ. ອ່ານກອນ ຕ້ອງອ່ານຖືກອັກຂະຫລະ, ວັນນະຍຸດ ແລະວັກຕອນຂອງກອນ.

ອ່ານກອນ ເປັນການພັດທະນາການອ່ານ ຂຶ້ນສູ່ລະດັບສູງຂຶ້ນ ພັດທະນາການອ່ານໃຫ້ລຸ່ນໄຫຼ ແລະເຮັດໃຫ້ເດັກຕິດໃຈນຳການອ່ານ. ອ່ານກອນນີ້ ຍາກກວ່າການອ່ານຮ້ອຍແກ້ວທຳມະດາ ເມື່ອອ່ານກອນເກັ່ງແລ້ວ ບົດແນວໃດກໍລຸ່ນໄຫຼ.

ຈຸດປະສົງຂອງການອ່ານກອນ ໂດຍເຮັດເປັນກິດຈະກຳມ່ວນໆນີ້ ແມ່ນເພື່ອສ້າງຄວາມມ່ວນຊື່ນໄປນຳ ໃຫ້ມີການແຂ່ງຂັນກັນໄປໃນຕົວ ພ້ອມທັງທົດລອງແລະທ້າທາຍຄວາມສາມາດຂອງເດັກເອງ. ຊື່ວ່າອ່ານ ແຕ່ກະໂຕກິດຈະກຳນີ້ ຫາກນຳພາໄປສູ່ການເລົ່າຫຼືທ່ອງຂຶ້ນໃຈ (ບົດທ່ອງ) ໂດຍບໍ່ຮູ້ສຶກໂຕເລີຍ. ນີ້ແມ່ນເຕັກນິກການທ່ອງບົດທ່ອງຂຶ້ນໃຈທີ່ເປັນກອນອ່ານ (ກອນເຈັດ ຫຼື ວິດຊຸມາລີ ກໍ່ວ່າ) ແລະການຕ່າງໆ ທີ່ໄດ້ຜົນທີ່ສຸດ.

2. ອຸປະກອນ

- ປຶ້ມສັງສິນໄຊ ຄຳກອນຄູ່ຮ້ອຍແກ້ວ ບົດໜຶ່ງ (ອາດຕັດເອົາ 4 ບາດ) ຕົວຢ່າງບົດທີໜຶ່ງ ສັມມຸດຕິບັ້ນ ຫຼື ບັ້ນສົມມຸດ, ຕອນນະຄອນເຟັ້ງຈານ, ບາດທີ 008 ໜ້າ 2 ເຖິງ ບາດທີ 011 ໜ້າ 3 (ບາດໜຶ່ງມີສີ່ແຖວ) ຖ້າມີເງື່ອນໄຂ ອັດຈາກປຶ້ມ ຢາຍຄົນລະໃບ. ຖ້າບໍ່ມີ ກໍ່ກ່າຍໃສ່ກະດານ ຫຼືຂຽນໃສ່ເຈ້ຍແຜ່ນໃຫຍ່ ຕິດໃສ່ກະດານ.



3. ກິດຈະກຳ

ຂັ້ນຕອນ:

1. ບາດລ້ຽງ ສົນທະນາກ່ຽວກັບກາບຫຼືກອນ
2. ຄູນຳສະເໜີປຶ້ມສັງສິນໄຊ ຄຳກອນຄູ່ຮ້ອຍແກ້ວ
3. ນັກຮຽນກ່າຍເອົາຄຳກອນ
4. ຄູ່ອ່ານໃຫ້ຟັງ
5. ນັກຮຽນອ່ານໝົດຫ້ອງ
6. ຄູແນະນຳບ່ອນຢຸດ
7. ນັກຮຽນແລະຄູອ່ານນຳກັນໃຫ້ເປັນຈ້ງຫວະເອກະພາບ
8. ແບ່ງນັກຮຽນອ່ານເປັນກຸ່ມໃຫຍ່ ແລະນ້ອຍ ເປັນເກມແຂ່ງຂັນກັນ
9. ຄູແນະນຳໃນການອອກສຽງບາງຄຳ ເຊັ່ນ: ສະຫລະສຽງສັ້ນແລະຍາວ

10. ສົນທະນາ: ຄຳສັບຍາກ, ເນື້ອໃນກອນ, ຕິວລະຄອນ ແລະໃຈຄວາມສຳຄັນ
11. ນັກຮຽນອ່ານນຳກັນອີກ ແລ້ວຫຼິ້ນເກມລຶບອອກ
12. ນັກຮຽນອາສາເລົ່າຄົນລະໜຶ່ງບາດ
13. ຄູສະຫຼຸບບົດຮຽນ ແລ້ວທ່ອງກ່ອນນຳກັນໜຶ່ງຮອບ.

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູນຳພານັກຮຽນສົນທະນາກ່ຽວກັບກາບຫຼືກອນທີ່ເຄີຍໄດ້ຍິນ ໄດ້ຟັງຫຼືອ່ານຜ່ານມາ ເຊັ່ນຄຳຜະຫຍາ ເຊິ່ງມີສອງແຖວ, ກາບ (ຈາກບົດພາເລົ່າກາບມ່ວນໆໃນປຶ້ມຄູ່ມືນີ້ ໜ້າ 50-ຄອບຄົວຂອງຂ້ອຍ ຫຼື ກອນ ອື່ນໆ (3 ນາທີ)
2. ຄູນຳສະເໜີ ປຶ້ມ ສັງສິນໄຊ ຫົວໃໝ່ ທີ່ມີທັງຄຳກອນ ແລະ ຮ້ອຍແກ້ວ, ສະເໜີຜູ່ແຕ່ງ ຜູ່ລິດຈະນາ ແລະ ການຈັດພິມຄັ້ງນີ້ ແລ້ວເລົ່າເລື່ອງສັງສິນໄຊ ບົດທີ 1 ໂດຍຫຍໍ້ ໃຫ້ຟັງ (5 ນາທີ).
3. ຖ້າມີເຈ້ຍຢາຍກໍດີ ຢາຍເລີຍ ຖ້າບໍ່ມີ ຄູຂຽນໃສ່ກະດານ (ອາດຂຽນໄວ້ກ່ອນແລ້ວ ບັງໄວ້) ນັກຮຽນຂຽນໄປນຳ (10 ນາທີ)
4. ຄູອ່ານໃຫ້ຟັງຢ່າງລ່ຽນໄຫຼ ແຕ່ຈະແຈ້ງ ຊ້າໆມີຈັງຫວະ (ນາທີເຄິ່ງ).
5. ໃຫ້ນັກຮຽນອ່ານນຳກັນໝົດຫ້ອງ ໂດຍນັບ 1, 2, 3 ຕອນຂຶ້ນຕົ້ນ (2 ນາທີ).
6. ຄູແນະນຳວິທີອ່ານ ຢຸດຢູ່ໃສແດ່ (ເຄິ່ງນາທີ).
7. ນັກຮຽນແລະຄູອ່ານນຳກັນອີກ ໃຫ້ເປັນຈັງຫວະເອກະພາບກັນ. ສຽງແຮງໆ ຫາຍໃຈເຂົ້າເລິກໆ ກັ້ນລົມຫາຍໃຈແລ້ວເວົ້າອອກມາ ອ້າປາກກ້ວາງໆ (2 ນາທີ)
8. ແບ່ງນັກຮຽນເປັນສອງຝ່າຍ (ເຄິ່ງຫ້ອງ) ອ່ານເທື່ອລະຝ່າຍ ຝ່າຍລະ 2 ແຖວ ສັບກັນໄປມາ

- ແບ່ງນັກຮຽນເປັນສອງຝ່າຍ (ເຄິ່ງຫ້ອງ) ອ່ານເທື່ອລະຝ່າຍ ຝ່າຍລະ 1 ແຖວ ສັບກັນໄປມາ
- ໃຫ້ນັກຮຽນອ່ານເປັນໂຕະໂຕະລະເຄິ່ງແຖວໄປຈົນສຸດເລື່ອງ.ຖ້າໜ້ອຍກວ່າ32ໂຕະ ວົນຄືນມາຫາໂຕະເກົ່າ ອ່ານຕໍ່ໄປເລື້ອຍໆ ຈົນສຸດ 16 ໂຕະ ພໍດີງາມ ແລ້ວອ່ານນຳກັນໝົດຫ້ອງອີກ 1 ຮອບ (10 ນາທີ).

9. ຄູແນະນຳຄົນ ການອອກສຽງບາງຄຳ ບາງຄັ້ງສະຫຼະ x ສຽງຕ້ອງສັ້ນເຂົ້າ(ມີຄຳແນະນຳຢູ່ໜ້າ72), ສ່ວນສະຫລະສຽງຍາວ ໃຫ້ເນັ້ນສຽງຂຶ້ນ ເຊັ່ນ: **xา**, **x̄** , **x̄**
ฟ้า ↗ บัดนี้ ↗ ท้าว ↗ (2 ນາທີ).
10. ສົນທະນາ: ຄູອ່ານຄຳສັບຍາກໃນກອນເທື່ອລະຄຳ ຖາມນັກຮຽນວ່າ "ຮູ້ບໍ່ແປວ່າ ຫຍັງ?" ຖ້ານັກຮຽນຮູ້ແລ້ວ ຜ່ານໄປ ຖ້າເຂົາບໍ່ຮູ້ຄວາມໝາຍ ຄູອະທິບາຍໄປເປັນຄຳ. (ເບິ່ງຄຳສັບຍາກຢູ່ໜ້າ72) ຈາກນັ້ນສະຫຼຸບເນື້ອໃນຂອງ 4 ບາດນີ້ ໃຫ້ຮູ້ຕິວລະຄອນ ແລະໃຈຄວາມທີ່ຜູ່ແຕ່ງເພິ່ນຢາກໃຫ້ເຮົາຮູ້ (5 ນາທີ).

11. ນັກຮຽນອ່ານນຳກັນອີກ 2 ຮອບ ຈ້ຽງຫວະໄວ ແລ້ວອ່ານໂດຍບໍ່ມີປຶດ (ລຶບກະດານ ຄັ້ງລະ ເຄິ່ງແຖວ ຄ່ອຍລຶບໄປເລື້ອຍໆ ຈົນໝົດ) ເລ່ຳອີກ 3 ຮອບ ໂດຍມີການແຂ່ງຂັນ ເປັນກຸ່ມ ເປັນໂຕະ ຫຼືຝ່າຍ ໄປ (7 ນາທີ).
12. ຄູຂໍອາສາສະໝັກເລ່ຳຄົນດຽວ 1 ບາດ ໃຫ້ສີ່ຄົນຂຶ້ນເລ່ຳຜູ່ລະບາດ (3 ນາທີ)
13. ຄູສະຫຼຸບບົດຮຽນ ໂດຍໃຫ້ນັກຮຽນສົນທະນານຳ (4 ນາທີ).
14. ສຸດລ້ຽງດ້ວຍການທ່ອງນຳກັນອີກ ໜຶ່ງຮອບ ດ້ວຍສຽງມ່ວນໆ (2 ນາທີ)


4. ຄຳແນະນຳຕໍ່ຄູ

- ສິ່ງສຳຄັນທີ່ຕ້ອງເອົາໃຈໃສ່ກໍຄື ຄູຕ້ອງກຽມຕົວເອງໃຫ້ດີ ເວລາອ່ານໃຫ້ນັກຮຽນຟັງ ຄັ້ງທຳອິດ ຕ້ອງໃຫ້ລ່ຽນໄຫຼ ຈະແຈ້ງ ມີຈ້ຽງຫວະ ແລະຕ້ອງໃຫ້ເດັກຕັ້ງໃຈຟັງແທ້ໆ. ເມື່ອອ່ານສຸດ ຂໍໃຫ້ນັກຮຽນຕົບມືໃຫ້ແຮງໆແດ່ ເພື່ອເປັນກຳລ້ງໃຈ.
- ໃນການນຳສະເໜີ ປຶ້ມສ້ງສິນໄຊ ຄຳກອນຄູ່ຮ້ອຍແກ້ວນີ້ ຄູຄວນໃຫ້ຂໍ້ມູນເພີ່ມເຕີມ ວ່າ: ທ່ານ ມະຫາສິລາວິຣະວ້ຽ ເປັນຜູ່ລິດຈະນາ ຄົ້ປ່ຽນຈາກຕົວໜັ້ງສືລາວບູຮານ ມາເປັນຕົວໜັ້ງສືລາວສະໄໝໃໝ່ ພ້ອມທ້ັງຈັດແຖວກອນໃຫ້ເປັນລະບຽບ ແລະ ແຕ່ງເພີ່ມເຕີມບ່ອນຕົກເຮ່ຍ. ເພື່ອໃຫ້ການອ່ານຄຳກອນເປັນທີ່ເຂົ້າໃຈງ່ຳຍ ທ່ານ ມະຫາສິລາ ໄດ້ແປເປັນຄຳເວົ້າທຳມະດາ-ຮ້ອຍແກ້ວ. ຊຸດນີ້ຈັດພິມໂດຍສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແລະບໍລິສັດດອກເກດ ໃນປີ 2009.
- ຖ້າມີເວລາພຽງພໍຄວນສະເໜີຕື່ມວ່າ ວັນນະຄະດີເລື່ອງນີ້ ໄດ້ຮັບຄັດເລືອກໃຫ້ເປັນ ມໍລະດົກແຫ່ງຊາດ ໃນປີ 2002. ສ້ງສິນໄຊເປັນນິຍາຍຄຳກອນ ທີ່ໜ້າເອກອ້າງ



ທະນົງໃຈ ຂອງປະຊາຊົນລາວ ດ້ວຍວ່າ ເປັນຄຳກອນພາສາລາວທີ່ມ່ວນ ແຕ່ງໄດ້ ເຕັມມາດຕະຖານ ການປະພັນບົດກະວີ ທັງໃຫ້ສາລະຄວາມຮູ້ດ້ານອັກສອນສາດ, ທຳມະຊາດ ສັດສາວາສິ່ງ ແລະພູຜ່າປ່າດົງໃນປະເທດລາວ ປະກອບດ້ວຍຄຳສອນ ດ້ານຮີດຄອງປະເພນີ ສິລະທຳ ຄຸນນະທຳ ຈະລິຍະທຳ ການປົກຄອງ ແລະອື່ນໆ. ສັງສິນໄຊມີ ທັງໝົດ 15 ບັ້ນ ຍາວ 2480 ບາດ(ບາດໜຶ່ງມີ4ແຖວກອນ). ໃນບົດຮຽນນີ້ ຈະນຳສະເໜີ ບັ້ນທີ1ຕອນທີ2 ຄືບາດທີ 008-011.

- ນັກຮຽນອ່ານ ຄັ້ງທີໜຶ່ງ ຕ້ອງນັບ 1, 2, 3 ເພື່ອໃຫ້ຂຶ້ນພ້ອມກັນດີ ແຕ່ເຖິງວ່າຂຶ້ນພ້ອມກັນ ຕໍ່ໄປກໍຈະບໍ່ພ້ອມ ປ່ອຍໃຫ້ເປັນໄປກ່ອນ (ຂັ້ນຕອນທີ 5) ບາດສຸດແລ້ວ ຈຶ່ງບອກວ່າ "ມັນເກີດບໍ່ພ້ອມກັນຍ້ອນຫຍັງ? ຍ້ອນແຕ່ລະຄົນຫັນໃຈບໍ່ພ້ອມກັນ. ຖ້າເຮົາຫັນໃຈບາດສຸດແຕ່ລະແຖວ 1. ຈະພ້ອມກັນຕະຫຼອດໄປ 2. ສຽງຈະແຮງດີ 3. ການອ່ານຈະມ່ວນຂຶ້ນ." ແລ້ວໃຫ້ລອງເຮັດເບິ່ງ (ຂັ້ນຕອນ 7) ໂດຍຄູກໍອ່ານນຳ ແລະພາຢຸດຫັນໃຈແຮງຢູ່ທ້າຍແຖວກອນທຸກຄັ້ງ.ຕະຫຼອດເວລາຄູຕ້ອງເຮັດສັນຍານມືໃຫ້ແຈ້ງ ໂດຍຢຸດບຶດໜຶ່ງ (ກາງແຖວ) ຢຸດຫາຍໃຈຢູ່ທ້າຍແຖວ ແລະຢຸດດົນແດ່ ບາດສຸດໜຶ່ງບາດກອນ.
- ເກມຫຼິ້ນ: ເພື່ອໃຫ້ນັກຮຽນບໍ່ເບື່ອໜ່າຍການອ່ານ ຫຼືທ່ອງກອນ ຕ້ອງເຮັດໃຫ້ຂັ້ນຕອນນີ້ ເປັນເກມແຂ່ງຂັນກຸ່ມໃຫຍ່ກ່ອນ ຄືແບ່ງນັກຮຽນເປັນສອງຝ່າຍ ຝ່າຍລະເຄິ່ງຫ້ອງ ຊ້າຍ-ຂວາ. ການອ່ານກຸ່ມໃຫຍ່ໜຶ່ງ (ຝ່າຍໜຶ່ງອາດມີ 10-20 ຄົນ) ເພື່ອໃຫ້ພ້ອມກັນ ຄູຢ່າລືມນັບຂຶ້ນຕົ້ນໃຫ້ ສ່ວນຝ່າຍຈະຂຶ້ນແຖວທີ 2 ກໍໃຫ້ຫັນໃຈດີໆກ່ອນຈຶ່ງຂຶ້ນ. ໝາຍຄວາມວ່າ ຄູຕ້ອງເປັນຜູ້ກຳໜົດເວລາແລະຈັງຫວະ ໂດຍຕະຫຼອດ ທັງບອກເຕືອນເລື່ອງສຽງ ໃຫ້ອອກສຽງແຮງ ຄຳຈະແຈ້ງ. ເພາະວ່າອອກສຽງແຮງຈະຊ່ວຍດຶງອາລົມ ໃຫ້ເປັນອາລົມຂອງຕົວລະຄອນ ຫຼືຜູ້ບັນຍາຍເລື່ອງ ຕ້ອງສື່ອາລົມອອກມາໃຫ້ຜູ້ອ່ານຮູ້ສຶກ. ສ່ວນການອອກສຽງຄຳຈະແຈ້ງ ແມ່ນການພັດທະນາການ



ອ່ານພາສາລາວ ແລະການອ່ານເປັນຈັງຫວະ ຈະເຮັດໃຫ້ຟັງນ່ວນ ພ້ອມກັນ ແລະ ເປັນການສະແດງໄປໃນຕົວ, ຖ້າເຝິກການອ່ານແລະເລົ່າແບບນີ້ໄດ້ດີຢ່າງໜ້ອຍໜຶ່ງ ບັ້ນ (ປະມານ 15-30 ບາດ) ກໍຂຶ້ນສະແດງເທິງເວທີ 5-10 ນາທີ ໄດ້ ຫຼືອ່ານອອກ ໂທລະໂຄ່ງ ປະຈຳເມືອງ, ວັດ, ຫຼືອ່ານອອກວິທະຍຸໄດ້. ເວລາ ກຸ່ມໜຶ່ງອ່ານແລ້ວ ອີກ ກຸ່ມຈະຕ້ອງຕົບມື ແລ້ວໃຫ້ຂໍ້ສັງເກດວ່າ: ອ່ານຜິດ ບ່ອນໃດ?.

- ໃນເກມນີ້ ນັກຮຽນໄດ້ແຂ່ງກັນຈາກກຸ່ມໃຫຍ່ ເຄິ່ງຫ້ອງ ລົງມາສູ່ ກຸ່ມ 1 ໂຕະ ຈາກການ ອ່ານໝົດ 16 ແຖວແລ້ວມາອ່ານ 2 ແຖວ ແລະ 1ແຖວ, ອ່ານດ້ວຍຈັງຫວະຊ້າກ່ອນ ແລ້ວໄວຂຶ້ນ ອ່ານຮອດ 4-6 ຄັ້ງ ເຂົາກໍຈື່ບົດກອນນັ້ນໄດ້ແລ້ວ. ບາງຄົນພຽງ 3 ຄັ້ງ ກໍຈື່ ແຕ່ເຖິງວ່າບໍ່ຈື່ ກໍພໍອ່ານໄປນຳໝູ່ໄດ້.
- ການອະທິບາຍຄຳສັບ ການພັນລະນາ ບັນຍາຍພາບຫຼືສາກໃນເລື່ອງ ຕະຫຼອດເຖິງ ໃຈຄວາມຂອງບົດກອນທີ່ອ່ານ ຄູຄວນໃຫ້ນັກຮຽນມີສ່ວນຮ່ວມ ແນ່ນອນ ຄູຕ້ອງ ກຽມໂຕມາ(ອ່ານຢູ່ໃນຄຳຮ້ອຍແກ້ວໃນປຶ້ມເລີຍຍັງມີອະທິບາຍຄຳສັບທາງລຸ່ມໜ້າ) ແຕ່ການໃຫ້ເດັກຕອບນຳກັນ ຈະດີຫຼາຍ ຖ້າເດັກຕອບບໍ່ໄດ້ ຫຼື ໄດ້ ແຕ່ບໍ່ຖືກຄັກ ຄູເວົ້າຕື່ມ. ບັນຍາກາດຕອນສົນທະນາແຕ່ລະຄັ້ງ (ຂັ້ນຕອນທີ 1, 11 ແລະ 13) ຕ້ອງໃຫ້ເຮຮາ, ນ່ວນ, ຫຼາຍຄົນເວົ້າພ້ອມກັນ, ຍາດກັນເວົ້າ, ບາງຄັ້ງກໍໃຫ້ມິດ ຟັງຄູ ຫຼື ຄົນທີ່ຕອບ. ການໃຫ້ໂອກາດເດັກໄດ້ແຊວແດ່ (ແຊວໃນເກມ ບໍ່ແມ່ນຟິດນັນຊື່ໆ) ເປັນເຕັກນິກເຮັດໃຫ້ເດັກຮູ້ສຶກວ່າ ນີ້ແມ່ນເກມຫຼິ້ນນ່ວນໆ ບໍ່ແມ່ນການບັງຄັບ ໃຫ້ທ່ອງບົດທ່ອງຂຶ້ນໃຈ ແຕ່ຢ່າງໃດ. ສິ່ງທີ່ເດັກຕອບ ຈະຊື່ມືຫຼືບໍ່ ຈະຖືກຫຼືບໍ່ຖືກ ບໍ່ສຳຄັນ. ແຕ່ເຂົາໄດ້ມີອິດສະຫຼະໃນການສະແດງອອກ, ໃນການອອກຄວາມເຫັນ. ມັນຈະເຮັດໃຫ້ເດັກກ້າປາກກ້າເວົ້າ ກ້າຕອບ ໃນວິຊາອື່ນໆນຳ, ເຮັດໃຫ້ເຂົາມີຄວາມ ເຊື່ອໝັ້ນໃນຕົນເອງຫຼາຍຂຶ້ນ ແລະກໍຈະມັກການຮຽນ ການອ່ານ ຫຼາຍຂຶ້ນກວ່າເກົ່າ. ວິທີນີ້ຈະຫຼຸດຜ່ອນນັກຮຽນອ່ອນ ຜູ່ບໍ່ກ້າເວົ້າ ບໍ່ກ້າຕອບ ຜູ່ອ່ານຄ່ອຍຢູ່ໃນຫ້ອງ. ຖ້າເຮັດໄດ້ດີ ແຕ່ລະອາທິດໃຫ້ມີກິດຈະກຳນີ້ ຖືວ່າເປັນໄຊຊະນະຂອງຄູແລ້ວ ພາຍ ໃນ 2-3 ເດືອນ ຈັດການສະແດງໄດ້.
- ການລຶບອອກເທື່ອລະເຄິ່ງແຖວ ແລ້ວໝົດແຖວ ກໍແມ່ນການເຝິກເລົ່າບົດນັ້ນແລ້ວ ເຕັກນິກນີ້ ເດັກເອົາໄປນຳໃຊ້ກັບບົດທ່ອງອື່ນໆ ໃນຫ້ອງໄດ້ເລີຍ.
- ການໃຫ້ນັກຮຽນອາສາສະໝັກ ຢືນຂຶ້ນ (ບໍ່ຄວນໃຫ້ອອກມານອກ) ເລົ່າຄົນດຽວ ແມ່ນການສ້າງຄວາມທ້າທາຍ ໃຫ້ທຸກຄົນບຸກບືນຕື່ມ. ການເຮັດແບບນີ້ ເປັນຂັ້ນ ຕອນການສ້າງຄວາມກ້າສະແດງອອກ ແລະຂັ້ນໄດຂອງການທ່ອງຂຶ້ນໃຈ ເຊິ່ງຈະ ນຳໄປສູ່ການສະແດງລະຄອນເວທີ.
- ການສະຫຼຸບຂອງຄູ ຄວນເນັ້ນຄືນເຖິງເຕັກນິກການອ່ານ ແຕ່ລະຂັ້ນຕອນ ເຊັ່ນ: ຄູ ອ່ານໃຫ້ຟັງ ອ່ານນຳກັນ, ຂຶ້ນຕົ້ນພ້ອມກັນ, ທັນໃຈເມື່ອສຸດແຖວກອນ, ຈັງຫວະ ຊ້າ-ໄວ, ການອອກສຽງຄຳສັບຕ່າງໆ, ສຽງສັ້ນ, ສຽງຍາວ, ການແຂ່ງຂັນ, ການຈີ່ກອນ

ແທນທີ່ຈະເນັ້ນດ້ານເນື້ອໃນຂອງກອນ ເພາະການອ່ານກອນກໍຄືກັບການຮ້ອງເພງ ຕ້ອງເອົາສຽງ, ຈັງຫວະ ແລະອັກຂະຫລະກ່ອນ ຄວາມເຂົ້າໃຈມານຳຫຼັງ. ເຕັກນິກການເລົ່ານີ້ ຈະໃຊ້ໄດ້ກັບທຸກກອນ ທຸກການ ໃຫ້ພັດທະນາການອ່ານ-ເລົ່າໄດ້ໄວຂຶ້ນ. ສ່ວນສິນໄຊ ມີທັ້ງໝົດ 15 ບັ້ນ ແຕ່ຄູສອນພຽງແຕ່ 2-3 ບັ້ນ ແລ້ວເດັກຈະອ່ານຕໍ່ໄປໄດ້ເອງ.

5. ຄຳສັບຍາກ:

ນັກຄະເລດ, ນິຄົມ, ບຸລີ, ຊຽງ	ແປວ່າ: ເມືອງ
ເປັ້ງຈານ	ຊື່ເມືອງ
ຮຸ່ງຄ່ຳ	ທັ້ງເວັນ ແລະ ຄືນ
ລືກຽນ, ປາກຽນ	ຊ່າລື
ພູເບດ	ພະຍາ
ອໍລະທຶ້ມ	ມືດຄຶ້ມ
ມຸກມາດ	ປະດັບມຸກ
ຝ້າ	ຫຼັງຄາມຸງດ້ວຍໄມ້ໄຜ່
ມະເຫສີ	ເມຍພະຍາ
ລາດ	ລາຊາ
ໂສມຍ່ຳຍ້ອຍ	ຮູບງາມຄືຊິຍ້ອຍ
ຂຽນ	ຄືແຕ້ມເອົາ

6. ແນະນຳການອອກສຽງ:

ກອນສິນໄຊເປັນກອນເຈັດໜ້າ 3 ພະຍາງ ທ້າຍຫຼັງ 4 ພະຍາງ ເມື່ອໃດ ກາຍ 3 ຫຼື ກາຍ 4 ພະຍາງ ດັ່ງກ່າວແລ້ວ ຕ້ອງອ່ານສຽງ ສະຫຼະ xะ ໃຫ້ສັ້ນເຂົ້າເປັນ ພຽງແຕ່ເຄິ່ງສຽງພະຍາງ ເຊັ່ນວ່າ:

ນັກຄະ ເລດ ລ້ຳ	3	ກຸດສະ ຫຼາດ ນາມ ກະສັດ	4
ລະວັງ ຕ້າຍ ຊົ່ວ ຕາ	4	ນະຄອນ ຄົນ ໃດ ປຸງບ	4
ຊາວ ເຫດ ທຸ່ງ ສະເໜົ່າ	4	ອໍລະ ທຶ້ມ ຜ່ານ ຊ່ຽງ	4
ດັ່ງ ດາວະ ດິ່ງ ຟ້າ	4	ມະເຫ ສີ ເຈົ້າ	3

ບົດທີ ສິບສາມ

ເລົ່າເລື່ອງຫຍໍ້

ບົດເລື່ອງທີ່ໃຊ້ໃນການອ່ານແລະເຮັດກິດຈະກຳ:

ເປັດນ້ອຍຂອງສົມປອງ

ເລື່ອງໂດຍ: ອຸທິນ ບຸນຍາວົງ

ຮູບໂດຍ: ຊິກໂກ້ ມິລະກົງ

ພິມຄັ້ງທີ 1 ປີ 2005 ໂດຍ ບໍລິສັດ ດອກເກດ

1. ຈຸດປະສົງ

ເຝິກແອບໃຫ້ນັກຮຽນຈື່ຈຳເລື່ອງທີ່ອ່ານໂດຍການສັງຮວມເອົາເນື້ອໃນບ່ອນສຳຄັນ ແຕ່ຕົ້ນຈົນສຸດ ແລ້ວສາມາດສະຫຼຸບຫຍໍ້ ໂດຍຮັກສາໂຄງເລື່ອງແລະການດຳເນີນເລື່ອງ. ສາມາດເລົ່າເລື່ອງໃຫ້ຜູ້ຟັງໄດ້ຮັບຮູ້ເລື່ອງນັ້ນນຳ ການເລົ່າເລື່ອງຫຍໍ້ ໃຫ້ຖືກແທ້ ຜູ້ເລົ່າຕ້ອງຈ້ອນເລື່ອງເຂົ້າ ຈາກທີ່ເລື່ອງເຕັມ 15 ນາທີ ໃຫ້ຍັງແຕ່ 5-3 ນາທີເທົ່ານັ້ນ.

ການເຝິກເລົ່າຫຍໍ້ ມີຜົນດີ ສຳລັບນັກຮຽນທີ່ມັກອ່ານ ເພາະທັກສະດ້ານນີ້ຈະຊ່ວຍໃນການເລົ່ານິທານ ຂຽນເລື່ອງ ແລະ ຂຽນບົດລາຍງານໄດ້ດີ.

ຕ້ອງໃຫ້ນັກຮຽນຮູ້ຈັກຮັກສາຂັ້ນຕອນສຳຄັນຂອງເລື່ອງ ບົດບາດຂອງຕົວລະຄອນ ປ່ຽນແປງບົດສົນທະນາເປັນການເລົ່າທີ່ສັ້ນເຂົ້າ ທັກສະນີ້ ຖ້າຜ່ານກິດຈະກຳການອ່ານເພື່ອຈັບໃຈຄວາມ ແລະເກີດຫຍັງຂຶ້ນ ມາແລ້ວ ຈະງ່າຍເພາະ ຄ້າຍຄືກັນຫລາຍ.

ນອກຈາກເລົ່າໄດ້ແລ້ວ ຄູອາດຈະໃຫ້ນັກຮຽນຂຽນເລື່ອງໂດຍຫຍໍ້ ຂອງບົດທີ່ໄດ້ອ່ານມາ. ກິດຈະກຳນີ້ຈະຊ່ວຍ ໃຫ້ຄູປະເມີນຜົນການອ່ານຂອງນັກຮຽນ ວ່າເຂົາໄດ້ອ່ານປຶ້ມຢ່າງມີປະສິດທິຜົນແທ້ ເມື່ອເຂົາສາມາດຂຽນເລື່ອງຫຍໍ້ທຸກເລື່ອງທີ່ໄດ້ອ່ານ.

2. ອຸປະກອນ

- ປຶ້ມເລື່ອງເປັດນ້ອຍຂອງສົມປອງ 31 ຫົວ (ນັກຮຽນ30ຄົນ)
-ກຽມຄຳຖາມກ່ຽວກັບເຫດການທີ່ເກີດຂຶ້ນໃນເລື່ອງຕາມລຳດັບການດຳເນີນເລື່ອງ4-6 ຄຳຖາມ.
- ເຈ້ຍເຄິ່ງໜ້າປຶ້ມຂຽນ ຈຳນວນ 30 ແຜ່ນ (ຫຼື A4 ຕັດ 3)

3.ກິດຈະກຳ

ຂັ້ນຕອນ:

1. ຄູສະເໜີປຶ້ມ ເພື່ອດຶງດູດຄວາມສົນໃຈ (2 ນາທີ)
2. ຄູຢາຍປຶ້ມໃຫ້ນັກຮຽນຄົນລະຫົວ (2 ນາທີ)
3. ຄູອ່ານສັບກັບນັກຮຽນຈົນສຸດເລື່ອງ (18 ນາທີ)
4. ຄູນຳພາການສົນທະນາ ກ່ຽວກັບເຫດການໃນເລື່ອງ (8 ນາທີ)
5. ຄູເລົ່າຫຍໍ້ເປັນຕົວຢ່າງ ແລ້ວນຳພາສົນທະນາ ຊອກຮູ້ຫລັກການ (6 ນາທີ)
6. ນັກຮຽນເລົ່າເລື່ອງຫຍໍ້ ຕໍ່ເນື່ອງກັນ (5 ນາທີ)
7. ນັກຮຽນຂຽນບົດຫຍໍ້ຂອງຕົນຍາວ 2-4 ນາທີ ສົ່ງຄູ (7 ນາທີ)
8. ຄູສະຫຼຸບຄືນ. (2 ນາທີ)



ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ; ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນຮູບໜ້າປົກ ໃຫ້ນັກຮຽນອ່ານຊື່ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ, ຜູ່ແຕ້ມ ແລະ ເລົ່າເລື່ອງໂດຍຫຍໍ້ ເພື່ອດຶງຄວາມສົນໃຈຂອງນັກຮຽນ ໃຫ້ມາຢູ່ທີ່ປຶ້ມຫົວນັ້ນ ຂໍ້ສຳຄັນຄືໃຫ້ເລົ່າຮອດຕອນທີ່ມ່ວນ, ໜ້າຕື່ນເຕັ້ນ ແລ້ວເຊົາ ຢ່າເລົ່າຈົນສຸດເລື່ອງ ເຊັ່ນ ຄູອາດເລົ່າວ່າ ທ້າວສົມປອງມັກກິນໄຂ່ເປັດຕົ້ມ ແມ່ລາວເລີຍຊື້ເປັດນ້ອຍມາໃຫ້ລ້ຽງ ທ້າວສົມປອງຮັກເປັດນ້ອຍຫຼາຍໆໆໆ ລາວພຽນລ້ຽງເປັດນ້ອຍຢ່າງຖະນຸຖະໜອມ ແຕ່ມື້ໜຶ່ງ ລາວຟ້າວໄປຫຼິ້ນນຳໝູ່ ຈົນລືມອັດປະຕູຄອກເປັດ ບາດລາວມາເຮືອນ ເປັດນ້ອຍຂອງລາວໂຕໜຶ່ງ ຜັດຖືກລົດຢຽບຢູ່ໜ້າເຮືອນ. ເລົ່າມາຊ່ຳນີ້ ແລ້ວຖາມນັກຮຽນວ່າຢາກຮູ້ບໍ່ ເລື່ອງຕໍ່ໄປເປັນແນວໃດ (ໃຫ້ນັກຮຽນຕອບ) ຊັ້ນເຮົາມາອ່ານນຳກັນເນາະ. (2 ນາທີ)

2. ຄູຢາຍປຶ້ມໃຫ້ນັກຮຽນຄົນລະຫົວ (2 ນາທີ)
3. ຄູອ່ານສັບກັບນັກຮຽນຈົນສຸດເລື່ອງ: ເລີ່ມຈາກຄູອ່ານຂຶ້ນຕົ້ນ (ສອງສາມປະໂຫຍກ ຫຼື ໜ້າໜຶ່ງ) ແລ້ວ ເລີ່ມຊີ້ໃຫ້ນັກຮຽນຜູ່ໜຶ່ງອ່ານໂດຍຜູ່ອື່ນຕັ້ງໃຈຟັງ ອ່ານໄດ້ສາມ-ສີ່ປະໂຫຍກໃຫ້ຢຸດ ແລ້ວຊີ້ໃຫ້ຜູ່ໃໝ່ອ່ານ ແຕ່ບໍ່ໃຫ້ລຽນຕາມບ່ອນນັ່ງເພາະນັກຮຽນຈະຮູ້ວ່າອີກດົນ ຈຶ່ງຮອດຜຽນໂຕ ເຂົາຈະບໍ່ຕັ້ງໃຈ ຕ້ອງຊີ້ໂຕແບບໂດດໄປໂດດມາ ບໍ່ໃຫ້ເຂົາເດົາອອກວ່າຈະຖືກຜຽນໂຕຍາມໃດ. ເມື່ອສັງເກດເຫັນວ່າຜູ່ໃດອ່ານບໍ່ເກັ່ງ ໃຫ້ສະຫຼັບກັບຜູ່ອ່ານເກັ່ງ ບາງຄັ້ງຮອດບ່ອນອ່ານຍາກ ຄູອາດອ່ານອີກແດ່ ເພື່ອສອນສຽງອ່ານຕື່ມ ໃຫ້ນັກຮຽນທີ່ອ່ານຕໍ່ໄປ ມີໂອກາດປັບປຸງການອ່ານຂອງຕົນໃຫ້ດີຂຶ້ນ. ເຮັດແນວນີ້ວຽນໄປຈົນສຸດເລື່ອງ ແລ້ວຄູຕົບມືຊົມເຊີຍ ພ້ອມບອກວ່າ ນັກຮຽນອ່ານໄດ້ມ່ວນຫຼາຍ (18 ນາທີ)
4. ສົນທະນາ ຫາໃຈຄວາມສຳຄັນຂອງເລື່ອງ (ຈັບປະເດັນ) ໂດຍນຳໃຊ້ຕົວຢ່າງຄຳຖາມທ້າຍບົດ. ຄູຄວນຖາມຄຳຖາມດຽວກັນ ກັບທຸກກຸ່ມ (ກຸ່ມນີ້ວ່າແນວໃດ, ກຸ່ມນີ້ວ່າແນວໃດ) ແລ້ວນຳພາສັງຮວມເອົາຄຳຕອບທີ່ຖືກຕ້ອງ ຈາກຄຳເຫັນຂອງທຸກກຸ່ມ (8 ນາທີ)
5. ຄູເລົ່າຫຍໍ້ເປັນຕົວຢ່າງ 2-3 ນາທີ ສຸດເລື່ອງຄູໃຫ້ນັກຮຽນສັງເກດວ່າ ຄູເລົ່າແບບໃດ? ດຶງຫຼັກການອອກມາ ຂຽນຫຼັກການໃສ່ກະດານ. (ໃຊ້ເວລາ 5 ນາທີ)
6. ໃຫ້ນັກຮຽນສະໝັກຂຶ້ນມາເລົ່າຫຍໍ້ 2-3 ຄົນ ຕໍ່ກັນໃຫ້ສຸດເລື່ອງໂດຍໃຫ້ເວລາແຕ່ພຽງ (5 ນາທີ) ຫ້ອງຕີຊົມການເລົ່າຂອງໝູ່ ວ່າໄດ້ເນື້ອໃນທີ່ສຳຄັນບໍ່? ຕັດບົດສົນທະນາອອກແລ້ວບໍ່? ຈຸດສຳຄັນສຸດຍອດຂອງເລື່ອງໄດ້ເວົ້າຮອດບໍ່? ບ່ອນສຸດແທ້ໆເປັນແນວໃດ?
7. ນັກຮຽນຂຽນບົດຫຍໍ້ຂອງຕົນຍາວ 2-3 ນາທີ ສົ່ງຄູ (ໃຊ້ເວລາບໍ່ກາຍ 7 ນາທີ)
8. ຄູສະຫຼຸບຄືນ ຫລັກການເລົ່າຫຍໍ້. (2 ນາທີ)

4. ຄຳແນະນຳຕໍ່ຄູ

- ການເລົ່າເລື່ອງໂດຍຫຍໍ້ ແມ່ນໃຫ້ເລົ່າເຫດການທີ່ເປັນໄປ ແຕ່ຕົ້ນຈົນສຸດໂດຍປະລາຍລະອຽດ ແລະ ບົດສົນທະນາ ແຕ່ບໍ່ຄວນຂ້າມໃຈຄວາມທີ່ສຳຄັນ. ການເຝິກທັກສະນີ້ ແມ່ນຢາກໃຫ້ເດັກຫລີກລ່ຽງການທ່ອງຕາມບົດທີ່ຂຽນໄວ້ໃນປຶ້ມ ຖ້າເດັກສາມາດເລົ່າເລື່ອງຫຍໍ້ໄດ້ດ້ວຍຄຳເວົ້າຂອງເຂົາເອງ ຈະເປັນການປະດິດສ້າງຂອງເດັກ ບໍ່ແມ່ນການລຽນແບບ. ແຮ່ງເດັກເລົ່າຫຍໍ້ເກັ່ງ ເຂົາກໍແຮ່ງຈະແຕ່ງເລື່ອງໄດ້ດີ, ຂຽນບົດລາຍງານໄດ້ດີ ແລະເລົ່ານິທານເກັ່ງອີກດ້ວຍ.
- ຖ້າເປັນຫ້ອງ ປ.3 ໃຫ້ເດັກເລົ່າປາກເປົ່າ ກໍພໍ
- ຖ້າຄູພາເຮັດກິດຈະກຳນີ້ເລື້ອຍໆ ເດັກ ປ.1 ທ້າຍໆສົກຮຽນ ກໍສາມາດເຮັດໄດ້.
- ສຳລັບປ.4-5ຄວນໃຫ້ເຝິກຂຽນນຳ. ເມື່ອເດັກລົ້ງເຄີຍກັບກິດຈະກຳນີ້ແລ້ວຄູໃຫ້ເດັກ

ຂຽນບົດຫຍໍ້ຂອງປຶ້ມທຸກຫົວ ທີ່ເດັກອ່ານ. ຈະເປັນໃບປະກາດຄວາມສາມາດຂອງແຕ່ລະຄົນ.

- ເວລາ ສົນທະນາ ຖ້າເດັກຕອບຄຳຖາມທີ່ຄູກຽມໄວ້ບໍ່ໄດ້ ຄູຕ້ອງຖາມຕື່ມໂດຍຊີ້ນຳແດ່ ແຕ່ບໍ່ຖາມແບບປິດ.
- ການພິມປຶ້ມ ເປັດນ້ອຍຂອງສົມປອງ ມີຂໍ້ຜິດພາດຂອງການຈັດພິມ ຄືບໍ່ໄດ້ໃສ່ເຄື່ອງໝາຍ ວົງຢືມ ("...") ໃນສ່ວນທີ່ເປັນຄຳເວົ້າຂອງຕົວລະຄອນ. ຜູ່ອ່ານອາດສັບສົນວ່າປະໂຫຍກໃດແມ່ນການເລົ່າເລື່ອງ,ປະໂຫຍກໃດແມ່ນຄຳເວົ້າ?ຄຳເວົ້າຂອງໃຜ? ຄູຕ້ອງສຶກສາເລື່ອງດີໆ ອ່ານຫຼາຍໆຮອບ ຈົນຈື່ໄດ້ ແລ້ວໃສ່ວົງຢືມໃຫ້ກັບ ປະໂຫຍກຄຳເວົ້າໃນປຶ້ມທຸກຫົວ ຈະເຮັດໃຫ້ນັກຮຽນອ່ານໄດ້ງ່າຍ ແລະ ເຂົ້າໃຈດີຂຶ້ນ.

5. ຕົວຢ່າງຄຳຖາມເພື່ອດຳເນີນການສົນທະນາ ກ່ອນເລົ່າຫຍໍ້

1. ສົມປອງລ້ຽງເປັດໄວ້ເພື່ອຫຍັງ?
2. ວັນນຶ່ງເມື່ອສົມປອງໄປທ່ຽວຫລິ້ນ ເກີດເລື່ອງຫຍັງຂຶ້ນ?
3. ເປັດຂອງສົມປອງເປັນຫຍັງຈຶ່ງຕາຍ?
4. ລຸງແຝງເຮັດແນວໃດ?
5. ສົມປອງຄິດຫຍັງແດ່ ເມື່ອເອົາເປັດນ້ອຍຂອງສອນເດດມາລ້ຽງ
6. ສຸດທ້າຍສົມປອງຕັດສິນໃຈແນວໃດ?

6. ການປະເມີນຜົນ

ການສົນທະນາຫລັງການອ່ານຟົດຟື້ນ ໃຜກ້ຍາດກັນຕອບ. ການເລົ່າຫຍໍ້ຂອງນັກຮຽນຖືກຫລັກການ ສັ້ນແຕ່ຄົບຖ້ວນ ບົດຂຽນເລົ່າຫຍໍ້ຂອງນັກຮຽນເຮັດໄດ້ດີ ອ່ານໄດ້ບໍ່ກາຍ 2 ນາທີ.



ບົດທີ ສິບສີ່

ຄຳຖາມຕໍ່ເນື່ອງ

ບົດເລື່ອງທີ່ໃຊ້ ໃນການອ່ານແລະເຮັດກິດຈະກຳ:

ໝູນ້ອຍອາດຫານ
ເລື່ອງໂດຍ ບຸນເສີນ ແສງມະນີ
ຮູບໂດຍ ວິງສະຫວັນ ດຳລົງສຸກ,
ພິມຄັ້ງທີ 2 ປີ 2009 ຈັດພິມໂດຍ ອົງການພັດທະນາເດັກ ລາວ-ຍີ່ປຸ່ນ (SVA)

1. ຈຸດປະສົງ

ເຝິກແອບໃຫ້ນັກຮຽນກຳເນື້ອເລື່ອງ ຜ່ານຄຳຖາມຕໍ່ເນື່ອງຂອງຄູ ເປັນການສ້າງນິໄສການອ່ານແບບເກັບກຳຂໍ້ມູນ (Comphrensive Reading) ໃຫ້ນັກຮຽນ. ເດັກຈະຮູ້ສຶກວ່າການອ່ານປຶ້ມປະກອບຮູບ ຫຼືເອີ້ນກັນທົ່ວໄປວ່າ ປຶ້ມນິທານ ກໍໄດ້ຮັບຄວາມຮູ້ຄືກັບບົດອ່ານທີ່ມີຢູ່ໃນແບບຮຽນ ເພາະປຶ້ມທຸກຫົວ ມີມາດຕະຖານຂອງການໃຊ້ສັບພາສາ ທີ່ມີກົດໝາຍພິມຈຳໜ່າຍຄວບຄຸມ ວ່າຕ້ອງເປັນໄປຕາມຫຼັກໄວຍະກອນລາວ ທີ່ກະຊວງສຶກສານຳໃຊ້. ອີກອັນໜຶ່ງແມ່ນ ຜູ່ຂຽນໄດ້ຝາກຂໍ້ຄວາມ ຫຼື ຄະຕິບາງຢ່າງໄວ້ໃນບົດເລື່ອງ ເຊິ່ງເຖິງແມ່ນວ່າເດັກອາດຈະຮັບຮູ້ໄດ້ເອງແຕ່ການທີ່ເດັກຫຼາຍໆຄົນໄດ້ແລກປ່ຽນກັນ ໄດ້ສົນທະນາກັນ ໄດ້ຮູ້ຄວາມຄິດຂອງໝູ່ຜູ່ອື່ນກ່ຽວກັບເລື່ອງທີ່ໄດ້ອ່ານນຳກັນ ເປັນການອ່ານທີ່ມ່ວນ ເປັນການອ່ານຂັ້ນສູງ ແລະເປັນການສ້າງນິໄສການອ່ານທີ່ຍືນຍົງໃຫ້ກັບໂຕເດັກ.

2. ອຸປະກອນ

- ຄຳຖາມທີ່ກຽມໄວ້ ປະມານ 10 ຄຳຖາມ ແຕ່ຄູສາມາດປັບໃຫ້ເໝາະສົມກັບຊັ້ນຮຽນ ແລະ ປຶ້ມທີ່ໃຊ້. ຄຳຖາມນີ້ ຈະພິມໃສ່ເຈ້ຍ ຫຼື ຂຽນໃສ່ກະດານກໍໄດ້
- ປຶ້ມເລື່ອງ 31 ຫົວ (ນັກຮຽນ 30 ຄົນ)

3. ກິດຈະກຳ

ຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ
2. ແບ່ງນັກຮຽນອອກ
3. ຄູຢາຍປຶ້ມໃຫ້ນັກຮຽນ
4. ຄູອ່ານໃຫ້ຟັງ
5. ໃຫ້ນັກຮຽນອ່ານປຶ້ມຂອງຕົນ
6. ຢາຍຄຳຖາມທີ່ພິມໄວ້ ໃຫ້ນັກຮຽນ
7. ອະທິບາຍແລະເຮັດເປັນຕົວຢ່າງ
8. ໃຫ້ນັກຮຽນທີ່ແບ່ງກຸ່ມໄວ້ຕອບຄຳຖາມ ໃສ່ເຈ້ຍ
9 ຄູສະຫຼຸບບົດຮຽນຄືນ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູສະເໜີປຶ້ມຕໍ່ນັກຮຽນ; ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນຮູບໜ້າປົກ ໃຫ້ນັກຮຽນອ່ານຊື່ ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ, ຜູ່ແຕ້ມ ແລະ ເລົ່າເລື່ອງໂດຍຫຍໍ້ປະມານ 1/3 ຂອງເລື່ອງທັງໝົດ ເພື່ອດຶງຄວາມສົນໃຈຂອງນັກຮຽນ ໃຫ້ມາຢູ່ທີ່ປຶ້ມຫົວນັ້ນ. (2 ນາທີ)
2. ແບ່ງນັກຮຽນອອກ ເປັນກຸ່ມລະ 3-5 ຄົນ ໂດຍນຳໃຊ້ວິທີການທີ່ເໝາະສົມ ແລະໃຊ້ເວລາໜ້ອຍທີ່ສຸດ (ບໍ່ໃຫ້ກາຍ 3 ນາທີ)
3. ຄູຢາຍປຶ້ມໃຫ້ນັກຮຽນ ຄົນລະຫົວ (2 ນາທີ)
4. ຄູອ່ານໃຫ້ຟັງ; ເມື່ອນັກຮຽນໄດ້ປຶ້ມຄົບກັນແລ້ວ ຄູອ່ານໃຫ້ຟັງຮອບໜຶ່ງ ໂດຍຕ້ອງອ່ານໃຫ້ດັງແຕ່ອ່ອນໂຍນ ສຽງຈະແຈ້ງ, ມີສຽງຂຶ້ນ-ລົງ ຕາມອາລົມຂອງຕົວລະຄອນ (10 ນາທີ)
5. ໃຫ້ນັກຮຽນອ່ານປຶ້ມຂອງຕົນ (15 ນາທີ)
6. ຫຼັງອ່ານປຶ້ມ ຄູຢາຍຄຳຖາມທີ່ພິມໄວ້ໃຫ້ນັກຮຽນ ຫຼືຂຽນໃສ່ກະດານ ກຸ່ມລະປະມານ 2 ຄຳຖາມ (2 ນາທີ)
7. ອະທິບາຍແລະເຮັດເປັນຕົວຢ່າງ 1-2 ຂໍ້ (3 ນາທີ)
8. ໃຫ້ນັກຮຽນທີ່ແບ່ງກຸ່ມໄວ້ຕອບຄຳຖາມ ໃສ່ເຈ້ຍ (10 ນາທີ)
9 ແຕ່ລະກຸ່ມນຳສະເໜີຄຳຕອບຂອງຕົນໜ້າຫ້ອງ ໂດຍຄູພາສົນທະນາ ເພື່ອໃຫ້ໄດ້ຄຳຕອບທີ່ຖືກຕ້ອງ (3 ນາທີ)

4. ຄຳແນະນຳຕໍ່ຄູ

- ເນື່ອງຈາກເຮົາມີເວລາ 50 ນາທີ ສຳລັບໜຶ່ງຄາບຮຽນ ດັ່ງນັ້ນການດຳເນີນກິດ

ຈະກຳແຕ່ລະຢ່າງ ຈຶ່ງຄວນຖືກກຳນົດເວລາໃຫ້ລະອຽດ. ຕົວຢ່າງບົດສອນນີ້ ສາມາດໃຊ້ກັບປຶ້ມນິທານເລື່ອງອື່ນໆທີ່ຄູໄດ້ຄົ້ນຄວ້າເຫັນວ່າເໝາະສົມກັບຄຳຖາມ. ແຕ່ຖ້າພໍເປັນໄປໄດ້ (ຖ້າມີປຶ້ມເລື່ອງນີ້) ຄວນທົດລອງຕາມນີ້ ຈົນລ່ຽນໄຫຼກ່ອນ ຈຶ່ງໃຊ້ກັບປຶ້ມອື່ນ.

- ການສະເໜີປຶ້ມ ເປັນຂັ້ນຕອນທີ່ສຳຄັນຫຼາຍ ບໍ່ວ່າຈະເປັນຊັ້ນໃດ ຫ້ອງໃດກໍຕ້ອງໄດ້ເຮັດ ເປັນການດຶງດູດເດັກເຂົ້າຫາປຶ້ມຫົວນັ້ນ ເຖິງວ່າຈະເປັນປຶ້ມຫົວນ້ອຍຫຼືໃຫຍ່ ຖ້າຄູນຳສະເໜີປຶ້ມໄດ້ດີ ນັກຮຽນຈະອ່ານ ໂດຍບໍ່ມີຂໍ້ຂັດຂ້ອງໃດໆ. ການນຳສະເໜີປຶ້ມທີ່ດີ ຕ້ອງເລົ່າເລື່ອງທີ່ຕື່ນເຕັ້ນ-ໜ້າສົນໃຈຂອງເລື່ອງ ແຕ່ຫ້າມບໍ່ໃຫ້ເລົ່າເລື່ອງຈົນສຸດ. ຄວນບອກຂໍ້ມູນທີ່ໜ້າສົນໃຈຂອງປຶ້ມ ເຊັ່ນຮາງວັນທີ່ປຶ້ມເຫຼັ້ມນັ້ນໄດ້ຮັບ ຫຼືຂອງນັກແຕ້ມນັກ-ຂຽນ, ໃນປຶ້ມໜູນ້ອຍອາດຫານເຫຼັ້ມນີ້ ຄູສາມາດສະເໜີວ່າ "ປຶ້ມໜູນ້ອຍອາດຫານ ໄດ້ຖືກຄັດເລືອກເປັນໜຶ່ງໃນປຶ້ມດີເດັ່ນ ທີ່ເດັກທຸກຄົນຄວນໄດ້ອ່ານ ປະຈຳປີ 2010 ໂດຍ ພະແນກສຶກສາທິການ ນະຄອນຫຼວງວຽງຈັນ".
- ການອ່ານໃຫ້ນັກຮຽນຟັງ ຄູຕ້ອງເນັ້ນການອ່ານແບບເປັນປະໂຫຍກ, ອ່ານຢ່າງມີຈັງຫວະແລະອາລົມ ເພື່ອເປັນແບບຢ່າງໃຫ້ນັກຮຽນ ເຮັດໃຫ້ການອ່ານ ເປັນສິ່ງທີ່ມ່ວນຊື່ນ ຟັງຄູອ່ານກໍມ່ວນ ອ່ານເອງກໍມ່ວນ.
- ການອ່ານຂອງນັກຮຽນ; ວິທີທີ່ເຫັນວ່າໄດ້ຜົນດີ ໃນເວລາຈຳກັດ ແມ່ນການອ່ານຕໍ່ກັນ ແຕ່ບໍ່ແມ່ນແບບທີ່ລຽງລຳດັບຕາມບ່ອນນັ່ງຂອງນັກຮຽນ ເພາະນັກຮຽນຈະບໍ່ຕິດຕາມ. ຄູຄວນຊີ້ໂຕນັກຮຽນແບບຂ້າມໄປຂ້າມມາ ບໍ່ໃຫ້ນັກຮຽນຮູ້ໂຕວ່າຈະຖືກເຂົ້າຫຼືບໍ່ ເຮັດແນວນີ້ ນັກຮຽນທຸກຄົນຈະມີສະມາທິ ຕິດຕາມການອ່ານຂອງໝູ່ ແລະຈື່ຈຳລາຍລະອຽດຂອງເລື່ອງໂດຍອັດຕະໂນມັດ. ເມື່ອເຮັດກິດຈະກຳໄດ້ 2-3 ຄັ້ງ ຈຶ່ງຄ່ອຍເລີ່ມໃຫ້ນັກຮຽນອ່ານເອງ ແລະກ້າວໄປສູ່ການອ່ານມີອາລົມຈິດ.
- ການໃຫ້ນັກຮຽນຕອບຄຳຖາມ ມີຈຸດປະສົງຫຼັກ ເພື່ອຝຶກແອບການເກັບກຳຂໍ້ມູນຕ່າງໆຈາກປຶ້ມ ເຊິ່ງຈະເປັນປະໂຫຍດຫຼາຍ ເມື່ອເດັກຕ້ອງອ່ານປຶ້ມທີ່ເປັນວິຊາການ ແລະຊັບຊ້ອນໃນອະນາຄົດ. ເຮົາເລີ່ມໂດຍນຳໃຊ້ປຶ້ມປະກອບຮູບ ເພາະປຶ້ມປະເພດນີ້ດຶງດູດຄວາມສົນໃຈຂອງເດັກນ້ອຍໄດ້ດີ. ຂະນະດຽວກັນ ຄຳຖາມທີ່ເອົາມາຖາມກໍຄວນມີທັງຄຳຖາມປິດແລະເປີດ, ເປີດແປນ, ເຊື່ອງຊ້ອນ, ອ້າງອີງ ແລະ ຮຶ່ມຕອງ.
- ໂດຍໂຕຂອງປຶ້ມ ເຮັດໃຫ້ກິດຈະກຳນີ້ ເໝາະສົມກັບຊັ້ນ ປ.3 ແຕ່ເນື້ອໃນຈິດໃຈ ແລະເຕັກນິກທີ່ໃຊ້ ສາມາດໃຊ້ໄດ້ກັບຊັ້ນປະຖົມທຸກຊັ້ນ ໂດຍດັດແປງບາງຢ່າງດັ່ງນີ້:
- ຫ້ອງ ປ.1 ແລະ ປ.2 ຄູອ່ານ ຫຼືເລົ່າ ໃນລັກສະນະການເລົ່າເລື່ອງປະກອບຮູບ ແລ້ວຖາມຄຳຖາມຈັກ 3-5 ຂໍ້ ໂດຍມີຄຳຖາມແບບເຊື່ອງຊ້ອນແລະອ້າງອີງ ເຊັ່ນ ໃຜເອົາກ້ອນຫີນທີ່ກາຍເປັນດາບໃຫ້ໜູນ້ອຍ? ຫຼື ເປັນຫຍັງ ນົກຈຶ່ງບໍ່ບິນຂຶ້ນໄປເທິງພູ? ຈາກນັ້ນໃຫ້ນັກຮຽນລອງເລົ່າເລື່ອງຄືນ ໂດຍຄູອາດຕ້ອງຄ່ອຍຖາມຄວາມເປັນໄປຂອງເລື່ອງໄປພ້ອມ.

- ປ. 3, ປ.4 ແລະ 5 ຄູບໍ່ຈຳເປັນຈະອ່ານໃຫ້ນັກຮຽນຟັງ ອາດໃຫ້ນັກຮຽນອ່ານຕໍ່ກັນ ຫຼືຖ້ານັກຮຽນອ່ານໄດ້ດີ ກໍສາມາດໃຫ້ອ່ານໃນໃຈດ້ວຍຕົນເອງ ເພື່ອໃຫ້ມີເວລາຄົ້ນຄວ້າໃນກຸ່ມຫຼາຍຂຶ້ນ.

5. ຕົວຢ່າງຄຳຖາມ

- ປຶ້ມຫົວນີ້ມີຊື່ວ່າແນວໃດ?
- ຜູ້ຂຽນປຶ້ມຊື່ວ່າແນວໃດ?
- ຜູ້ແຕ້ມຮູບໃສ່ປຶ້ມເລື່ອງນີ້ຊື່ວ່າແນວໃດ?
- ໃນເລື່ອງນີ້ມີໃຜ (ຕົວລະຄອນ) ແດ່?
- ເກີດເລື່ອງບໍ່ດີຫຍັງຂຶ້ນກັບເຂົາ?
- ເປັນຫຍັງ ນົກຈຶ່ງບໍ່ຢາກຂຶ້ນໄປເທິງຈອມພູ?
- ເປັນຫຍັງ ລີງຈຶ່ງບໍ່ຢາກຂຶ້ນໄປເທິງຈອມພູ?
- ໜູນ້ອຍພົບໃຜແດ່ ຕອນເດີນທາງໄປຈອມພູ?
- ໜູນ້ອຍໄດ້ຮັບຫຍັງແດ່ ຕອນເດີນທາງຂຶ້ນໄປຈອມພູ?
- ເຈົ້າຄິດວ່າ ເປັນຫຍັງໜູນ້ອຍຈຶ່ງອາສາສະໝັກຂຶ້ນໄປຈອມພູ ໃນເມື່ອຜູ້ອື່ນບໍ່ຢາກໄປ?

6. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

ເດັກມີການປຶກສາຫາລື ສົນທະນາກັນໃນກຸ່ມ. ຄຳຕອບຂອງເດັກຖືກຕ້ອງ ຫຼືໃກ້ຄຽງ, ເວລາສົນທະນາ ເດັກສົນໃຈ ມີການຊ່ອຍກັນລະຫວ່າງກຸ່ມ ເພື່ອໃຫ້ໄດ້ຄຳຕອບທີ່ຖືກຕ້ອງ.

ບົດທີ ສິບຫ້າ

ภาบบำพาอ่านปื้มวิทะยาสาด

ບົດເລື່ອງທີ່ໃຊ້ ໃນການອ່ານແລະເຮັດກິດຈະກຳ:

ເລື່ອງມ່ວນໆຂອງສັດ

ເລື່ອງໂດຍ ຟີລິບ ກີບສັນ

ແປໂດຍ: ດາຣາວົງ ກັນລະຍາ

ຮູບໂດຍ ໄຊສະຫຼອງ ເພັດດວງຄຳ

ພິມຄັ້ງທີ 1 ປີ 2007 ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ

1. จุดปะสิๆ

ເມື່ອເວົ້າເຖິງປຶ້ມວິທະຍາສາດ ມັກຈະສ້າງຄວາມລຳບາກໃຈໃຫ້ຄູວ່າ ຈະພານັກຮຽນອ່ານແນວໃດນໍ? ຍິ່ງເປັນຊັ້ນປະຖົມ ຈະໃຫ້ພານັກຮຽນອ່ານປຶ້ມເກືອບສອງຮ້ອຍໜ້າທີ່ມີຄຳສັບ, ປະໂຫຍກ, ຊື່ ແລະ ໂຕເລກ ຈັກວ່າແມ່ນຫຍັງແດ່ ແຮ່ງພາໃຫ້ຄິດງ໋.

ແຕ່ໃນຄວາມເປັນຈິງແລ້ວ ຖ້າສັງເກດເບິ່ງດີໆແທ້ ເດັກມັກຈະລິວໃສ່ປຶ້ມປະເພດນີ້ ເມື່ອເຫັນທຳອິດ ເພາະຫົວຂໍ້ແລະຮູບປະກອບຂອງປຶ້ມ ກະຕຸ້ນສັນຊາດຕະຍານຢາກຮູ້ຢາກເຫັນສິ່ງໃໝ່ຂອງເດັກໄດ້ດີ ແຕ່ບັນຫາເກີດຂຶ້ນຕອນທີ່ເດັກເລີ່ມອ່ານ ເວລາພໍ້ຄຳສັບທີ່ເຂົາບໍ່ຮູ້ຈັກ ແລະໜ້າເຈັ່ງເຕັມແຕ່ໂຕໜັງສື ທີ່ບໍ່ຮູ້ວ່າ ອ່ານໄປເຮັດຫຍັງ ອ່ານແລ້ວໄດ້ຫຍັງ ເດັກເລີຍເບື່ອ ບໍ່ຢາກອ່ານ ແລ້ວເລີຍພາໂລ ບໍ່ຢາກອ່ານປຶ້ມຫົວໃຫຍ່ອື່ນໆ.

ເປັນໜ້າທີ່ຂອງຄູ ທີ່ຕ້ອງສວຍໃຊ້ຄວາມສົນໃຈໃນຕອນຕົ້ນຂອງເດັກ ແລ້ວໃຊ້ກິດຈະກຳເພື່ອເຮັດໃຫ້ເດັກມ່ວນນຳການອ່ານ ມ່ວນນຳການຄົ້ນພົບສິ່ງໃໝ່ໆໃນຊື່ ແລະປະໂຫຍກທີ່ພົບໃນປຶ້ມ ເພື່ອໃຫ້ເຂົາເຫັນວ່າ ອ່ານແລ້ວໄດ້ຫຍັງ ແລະຢາກອ່ານ ຢາກຮູ້ຕໍ່ໄປ. ດັ່ງນີ້ ເດັກນ້ອຍຈຶ່ງຈະມີທັກສະການອ່ານທີ່ແຂງແຮງພຽງພໍ ຄືດັ່ງນັກກິລາທີ່ໄດ້ເຝິກແອບຢ່າງດີ ຈະພໍ້ປຶ້ມຫົວໃຫຍ່ໜາຊ່ຳໃດ ພໍ້ຄຳສັບໃໝ່ປະໂຫຍກສັບສົນນຳ ພ້ອມທີ່ຈະອ່ານຄົ້ນຫາເພື່ອຄົ້ນພົບແທນທີ່ຈະຢ້ານ ບໍ່ກ້າຈັບຂຶ້ນມາອ່ານ ເລີຍບໍ່ໄດ້ຮຽນຮູ້ສິ່ງໃໝ່ໆເລີຍຊ້ຳ.

2. ອຸປະກອນ

- ປຶ້ມ "ເລື່ອງມ່ວນໆຂອງສັດ" ຕາມຈຳນວນນັກຮຽນ
- ຮູບຖ່າຍຫຼືຮູບແຕ້ມງາມໆຂອງສັດ ເພື່ອເພີ່ມເຕີມກັບຮູບປະກອບທີ່ມີໃນປຶ້ມຕາມທີ່ສາມາດຫາໄດ້.



3. ກິດຈະກຳ

ຂັ້ນຕອນ:

1. ຄູສະເໜີປຶ້ມ
2. ສ້າງຄວາມປະທັບໃຈ
3. ຢາຍປຶ້ມໃຫ້ນັກຮຽນ
4. ນຳພານັກຮຽນອ່ານ
5. ຄູພາທວນຄືນສິ່ງທີ່ໄດ້ອ່ານ
6. ແບ່ງກຸ່ມ
7. ຫຼິ້ນເກມ
8. ຄູສະຫຼຸບຄືນ

ລາຍລະອຽດແຕ່ລະຂັ້ນຕອນ:

- ແນ່ນອນວ່າເຮົາບໍ່ສາມາດໃຫ້ນັກຮຽນອ່ານປຶ້ມໝົດຫົວໃນຄາບຮຽນດຽວ ເຮົາພຽງແຕ່ໃຫ້ເຂົາອ່ານ ແລະເຮັດກິດຈະກຳ ກັບບົດໃດບົດໜຶ່ງໃນປຶ້ມ ໂດຍໃນທີ່ນີ້ຈະໃຊ້ບົດທີ່ວ່າດ້ວຍເລື່ອງຂອງໝາ ໃນໜ້າທີ 9 ຫາ 12 ເຊິ່ງສາມາດໃຊ້ເຮັດກິດຈະກຳຄັ້ງທຳອິດໄດ້ດີ ເພາະເປັນສັດທີ່ເດັກຮູ້ຈັກດີ ແຕ່ກໍມີຂໍ້ມູນໃໝ່ໆ ທີ່ຈະເຮັດໃຫ້ເດັກປະທັບໃຈໄດ້ຫຼາຍ ໃນບົດນີ້.

1. ຄູສະເໜີປຶ້ມຕໍ່ນັກຮຽນ; ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນຮູບໜ້າປົກ ໃຫ້ນັກຮຽນອ່ານຊື່ເລື່ອງພ້ອມກັນດັງໆ ຄູສະເໜີຊື່ ຜູ່ແຕ່ງ, ຜູ່ແປ ແລະ ຜູ່ແຕ້ມ ແລະ ບອກນັກຮຽນວ່າ "ປຶ້ມຫົວນີ້ມີເລື່ອງຂອງສັດຫຼາຍໆໂຕ ຕັ້ງແຕ່ມົດ ຮອດນົກ ຮອດຊ້າງ ທັ້ງສັດໃນບ້ານເຮົາ ແລະສັດຢູ່ຕ່າງປະເທດ ມື້ນີ້ເຮົາລອງມາເບິ່ງເລື່ອງຂອງໝາ ລອງອ່ານນຳກັນເບິ່ງເນາະ ວ່າເລື່ອງຂອງໝານີ ມັນມ່ວນຊ່ຳໃດ". (2 ນາທີ)
2. ສ້າງຄວາມປະທັບໃຈດ້ວຍຮູບພາບທີ່ຄູຊອກມາໄດ້ (1 ນາທີ)
3. ຄູຢາຍປຶ້ມໃຫ້ນັກຮຽນ ຄົນລະຫົວ ບອກນັກຮຽນໃຫ້ເປີດໄປໜ້າທີ 9 (2 ນາທີ)
4. ນຳພານັກຮຽນອ່ານ ໂດຍໃຊ້ວິທີອ່ານຕໍ່ກັນ ແບບສະຫຼັບໄປມາ ໂດຍຄູເປັນຜູ່ເລີ່ມຕົ້ນອ່ານແລ້ວຄ່ອຍຊີ້ໃສ່ນັກຮຽນ ໂດຍບໍ່ໃຫ້ເຂົາຮູ້ວ່າຕໍ່ໄປຈະຖືກໃຜ ແຕ່ຄູກໍຕ້ອງແບ່ງໃຫ້ນັກຮຽນທຸກຄົນໄດ້ອ່ານ, ເຮັດແນວນີ້ເພື່ອໃຫ້ເດັກຕັ້ງໃຈຢູ່ກັບໜ້າປຶ້ມ. ຂະນະທີ່ອ່ານນັ້ນ ຈະສັງເກດເຫັນວ່າມີບາງຄັ້ງທີ່ນັກຮຽນຄາ ເພາະເປັນຊື່ ຫຼື ຄຳສັບໃໝ່

ຫຼື ປะโทยกสับสิบ เช่น ทะวิบ, อายุไข... ตอบนี้ ให้ยุดอ่านซื่อถาวเพื่อ อะทิบาย ถูถอบอ่านสับบั้นถืบบาดหนึ่ง พ้อมทั้งฆุบใส่กะดาบ และ อะทิบายสับบั้นไปพ้อม โดยแต่ละถำบ่ถอบกาย 1 บาทิ. (20 บาทิ)

5. ถูพาทอบถืบสิ่งที่ได้อ่านมาเล้กพ้อย เช่นถามบักฮุบอ่า พามีอู่ใสแด่? ຫຼື บ่อบใดที่บ่มิพา? (2 บาทิ)
6. แบ่งบักฮุบออก เป้นกุ่มละปะมาบ 5 ถืบ โดยอาดให้บับเลก ຫຼືบอกว่า ผู้ใดมักพาแบวใด ให้มาอู่จุดใด เช่น มักพาโตใหย่ ให้มาอู่โตะหาๆพ้า มักพาหยุยให้อู่หาๆซ้าย... (3 บาทิ)
7. บอกบักฮุบอ่าเฮาจะหຼิ้นเกม ล้กสะบะอิทะยาสาดขอๆพามำกัน โดยมิผู้เข้าแฮ่งขับ เป้นบับดากุ่มที่แบ่งไอ้ และถู.กะติกาทานแฮ่งขับแม่บ: ถูฆุบซื่กุ่มข็บกะดาบ เช่น กุ่มพาหยุย, กุ่มพาใหย่... แล้วติกลิงลำดับอ่าใผจะเล่มก่อบ ผู้ใดถัดไป. เมื่อเกมเล่มข็บ ให้แต่ละกุ่มที่ลำดับไอ้ สิ่งโตแทบข็บมาฆุบ ล้กสะบะต่างๆขอๆพาใส่กะดาบ โดยแต่ละกุ่มบ่ให้ถำตอบซ้ำขอๆพู่. ในเอลาดุงอักบำให้กุ่มอื่บนับหึ่งฮอดสิบ ถือว่าพิดเอลา จึ่งกวดกาถอามถืกต้อๆขอๆถำตอบ เร้ดดั่งบี้จิบถิบ (ฮอมทั้งถูพ้อม) แล้วเล่มฮอบใพ่ โดยโตแทบแต่ละฮอบ แม่บ่ให้ซ้ำถืบเก่า จิบกว่าสะมาชิกทุกถืบในกุ่มได้ข็บมาฆุบจิบพิด. ถ้ากุ่มใดถืกบับฮอดสิบแล้วยังบ่มิถำตอบฆุบใส่กะดาบ ถือว่าติกฮอบ (ข้ามไปกุ่มอื่บ) เร้ดดั่งบี้ไปเล้อยๆ จิบกว่าจะได้ผู่ชะบะ เซิ่งเอลา 15-20 บาทิกำพ่างพໍ.
8. ถูสะห฼ุบถืบ, ชิมเชียผู่ชะบะ, บัดกามแฮ่งขับถั้งหน้า และอาดให้โจดสำลับกามแฮ่งขับถั้งต่ไปเช่น บอกให้อ่านบิดอื่บ... (1 บาทิ)



4. ຄຳແນະນຳຕໍ່ຄູ

- ເນື່ອງຈາກເຮົາມີເວລາ 50 ນາທີ ສຳລັບໜຶ່ງຄາບຮຽນ ດັ່ງນັ້ນການດຳເນີນກິດຈະກຳແຕ່ລະຢ່າງ ຈຶ່ງຄວນຖືກກຳນົດເວລາໃຫ້ລະອຽດ. ຕົວຢ່າງທາງເທິງ ເປັນສິ່ງທີ່ໄດ້ຈາກປະສົບການຂອງໂຕຜູ່ຂຽນ ຖ້າຫາກວ່າຜູ່ອ່ານເອົາໄປທົດລອງໃຊ້ແລ້ວບໍ່ແທດເໝາະ ກໍສາມາດແກ້ໄຂໂຕກິດຈະກຳແລະເວລາໄດ້. ຜູ່ຂຽນຈະຍິນດີເປັນຢ່າງຍິ່ງ ຖ້າທ່ານຜູ່ອ່ານຊ່ອຍຂຽນເລົ່າປະສົບການຂອງຕົນ ຫຼືມາແລກປ່ຽນກັນດ້ວຍຕົນເອງ ເພື່ອພັດທະນາວຽກງານນີ້ ຊ່ອຍກັນຕໍ່ໄປ.
- ຈະສັງເກດວ່າ ທຸກຂັ້ນຕອນຂອງກິດຈະກຳທີ່ສະເໜີມາ ມີຄູເປັນສ່ວນໜຶ່ງສະເໝີ ທັ້ງອ່ານ ແລະ ຫຼິ້ນເກມນຳເດັກ ນີ້ແມ່ນເຕັກນິກເພື່ອເຮັດໃຫ້ເດັກນ້ອຍມີຄວາມໝັ້ນໃຈ ຕັ້ງແຕ່ການອ່ານປຶ້ມຫົວໃຫຍ່ ການຫຼິ້ນເກມ ທັ້ງສ້າງສາຍສຳພັນອັນດີ ເພາະຄູກໍຕ້ອງເປັນຄືກັບໝູ່ທີ່ດີຄົນໜຶ່ງຂອງເດັກ.
- ໃນຮອບທຳອິດຂອງການແຂ່ງຂັນ ມັກຈະໄດ້ລັກສະນະຂອງໝາແບບພື້ນຖານເຊັ່ນ: 2 ຫູ, 2 ຕາ, 4 ຂາ... ຍັງບໍ່ທັນໄດ້ດຶງສິ່ງທີ່ໄດ້ຈາກການອ່ານມາໃຊ້ ນີ້ເປັນເຫດຜົນວ່າເປັນຫຍັງຄູຕ້ອງຫຼິ້ນເກມນີ້ນຳເດັກນ້ອຍ, ຄູຕ້ອງດຶງເດັກເຂົ້າຫາເນື້ອໃນຂອງປຶ້ມ ໂດຍຄຳຕອບຂອງຄູ ອາດເປັນ ໝາມີຢູ່ທຸກແຫ່ງໃນໂລກ ຫຼື ໝານ້ອຍອາຍຸຍືນກວ່າໝາໃຫຍ່... (ເອົາຈາກເນື້ອໃນປົດ) ຫຼັງຈາກນັ້ນຄຳຕອບຂອງນັກຮຽນຈະເຂົ້າມາຫາເນື້ອໃນຂອງຂອງປຶ້ມໂດຍອັດຕະໂນມັດ ຄູບໍ່ຕ້ອງບອກເລີຍ ພຽງແຕ່ຊີ້ນຳຄຳຕອບຂອງເຂົາ ດ້ວຍຄຳຕອບຂອງຄູ.
- ໃນການແຂ່ງຂັນຄັ້ງທຳອິດ ຄູຄວນຈະເສຽໃຫ້ນັກຮຽນກ່ອນ ຄັ້ງຕໍ່ໆໄປກໍຊະນະໄດ້ບາງຄັ້ງ ທັ້ງນີ້ເພື່ອໃຫ້ການແຂ່ງຂັນມີລົດຊາດ ທັ້ງບໍ່ໃຫ້ເກີດການແຂ່ງຂັນກັນເອງຂອງນັກຮຽນເກີນຄວາມຈຳເປັນ ໃຫ້ເປົ້າໝາຍຂອງນັກຮຽນແມ່ນ ເອົາຊະນະຄູໄດ້ດັ່ງນີ້ ຫຼາຍເທື່ອໄປ ຄູພຽງແຕ່ໃຫ້ຫົວຂໍ້ວ່າ ເທື່ອໜ້າຈະແຂ່ງກ່ຽວກັບສັດຊະນິດໃດ ນັກຮຽນກໍຈະໄປຫາອ່ານມາເອງ ບໍ່ຈຳເປັນຕ້ອງມາອ່ານໃນຫ້ອງອີກ.



- ຂະນະທີ່ກຸ່ມໜຶ່ງຂຶ້ນມາຂຽນຄຳຕອບ ຄູກໍຕ້ອງກະຕຸ້ນໃຫ້ກຸ່ມອື່ນໆຊ່ວຍກັນຫາຄຳຕອບຂອງກຸ່ມໂຕ.
- ການອ່ານປຶ້ມວິທະຍາສາດແບບນີ້ ຖືກລະບຸວ່າເປັນກິດຈະກຳສຳລັບຊັ້ນ ປ.5 ແຕ່ໂດຍປະສົບການສ່ວນໂຕແລ້ວ ເຫັນວ່າ ທັນທີທີ່ນັກຮຽນເລີ່ມອ່ານໄດ້ລະດັບໃດໜຶ່ງ ກໍສາມາດໃຊ້ໄດ້ໂລດ ຕັ້ງແຕ່ ປ.3 ຫຼື ແມ່ນແຕ່ພາກຮຽນທີ 2 ຂອງ ປ.2 ໂດຍການປັບປ່ຽນວິທີບາງຢ່າງເຊັ່ນ ເວລາ ຈາກ ນັບໜຶ່ງຮອດສິບ ເປັນສິບຫ້າຫຼືຊາວ, ຖ້ານັກຮຽນ ຂຽນບໍ່ໄດ້ດີ ກໍໃຫ້ເວົ້າອອກມາຊື່ໆ ແລ້ວຄູເປັນຄົນຂຽນ ດັ່ງນີ້ເປັນຕົ້ນ ແຕ່ບໍ່ວ່າກັບຊັ້ນໃດ ຄູກໍຕ້ອງເປັນສ່ວນໜຶ່ງ ຮ່ວມອ່ານ ຮ່ວມຫຼິ້ນເກມ ກັບນັກຮຽນໄປພ້ອມ.
- ຍິ່ງເລີ່ມເຮັດກັບເດັກໄດ້ໄວຍິ່ງດີ ເດັກຈະພັດທະນາການອ່ານໄດ້ໄວ ການຟັງ, ການເວົ້າ ແລະ ການຂຽນ ກໍຖືກພັດທະນາໄປພ້ອມໆກັນ ແລ້ວຄູເຮົາຍັງຈະຢ້ານຫຍັງອີກຫຼືຢ້ານບໍ່ແພ້ເດັກນ້ອຍ?
- ຕົວຢ່າງໜ້າກະດານ ທີ່ຫຼິ້ນເກມໄປແລ້ວໄລຍະໜຶ່ງ ໂດຍສົມມຸດໃຫ້ເປັນຫ້ອງທີ່ມີນັກຮຽນ 20 ຄົນ ເຮົາຈະໄດ້ 5 ທີມ ຄື ນັກຮຽນ 4 ກຸ່ມ, ກຸ່ມລະ 5 ຄົນ ແລະ ຄູ

ໝານ້ອຍ	ໝາໃຫຍ່	ໝາຫຍຸ້ຍ	ໝາພານ	ໝາໜ້າຮັກ (ຄູ)
4 ຂາ ດັ່ງດີ ມັກກິນຊີ້ນ	2ຕາ ມີຢູ່ທຸກທະວີບ ອາຍຸໄຂ15ປີ	2ຫູ ມີຫລາຍຂະໜາດ ໝານ້ອຍອາຍຸຍືນກວ່າໝາໃຫຍ່	ມີຫາງ ເຝົ້າເຮືອນໄດ້ ບໍ່ມັກກິນຜັກ	ຫູດີກວ່າຄົນ ເປັນໝູ່ທີ່ດີຂອງຄົນ ໄດ້ຍິນສຽງທີ່ຄົນບໍ່ໄດ້ຍິນ

5. ການປະເມີນຜົນ

ກິດຈະກຳນີ້ ຈະຖືວ່າປະສົບຜົນສຳເລັດເມື່ອ:

- ຂະນະທີ່ຫຼິ້ນເກມ ນັກຮຽນເປີດປຶ້ມອ່ານຄົ້ນ ເພື່ອຫາຄຳຕອບ
- ການຫຼິ້ນເກມ ເປັນໄປຢ່າງຍືດເຍື້ອ ຈົນໝົດເວລາ ກໍຍັງຫາຜູ້ຊະນະບໍ່ໄດ້
- ຖ້າມີທີມໃດຕົກຮອບກ່ອນ ເຂົາຄວນຈະສົນໃຈ ຊ່ວຍໝູ່ ເພື່ອເອົາຊະນະຄູ

ບົດທີ ສິບຫົກ

ການສອນອ່ານແບບບູລະນາການ 1

ຄົ້ນຫາຄຳ/ສຳນວນຍາກ

ບົດເລື່ອງທີ່ໃຊ້ອ່ານ ແລະ ເຮັດກິດຈະກຳ

ຂ້ອຍຈະໄປໃສນໍ

ຂຽນໂດຍ ໂມຣີ ໂທຣ

ຮູບໂດຍ ຢາເບະ ມິດຊຸໂນຣິ

ແປໂດຍ ຈັນທະສອນ ອິນທະວົງ

ພິມຄັ້ງທີ 1 ປີ 2004 ໂດຍ ASPB

ຄຳນຳຂັ້ນຕົ້ນ: ຄວາມໝາຍຂອງການສອນອ່ານແບບບູລະນາການ

ໃນຊັ້ນປະຖົມ 4-5 ນີ້ ຄູສອນມີຄວາມສາມາດຮອບດ້ານ ເພື່ອສອນທຸກວິຊາຢູ່ແລ້ວ ດັ່ງນັ້ນ ການສອນການຮຽນແບບບູລະນາການ ຈຶ່ງສອດຄ່ອງເໝາະສົມທີ່ສຸດ.

ວິຊາໂລກອ້ອມໂຕເຊິ່ງແບ່ງບົດຮຽນອອກເປັນຫົວເລື່ອງຕ່າງໆນັ້ນມີເນື້ອເລື່ອງກວ້ມກວ້າງ ກ່ຽວກັບການດຳລົງຊີວິດປະຈຳວັນ ເຊັ່ນການຮູ້ເຮັດອະນາໄມຮ່າງກາຍ ການກິນ ສະອາດ ການດູແລ ແລະຮັກສາສິ່ງແວດລ້ອມເປັນຕົ້ນ.

ການສອນການຮຽນແບບບູລະນາການ ແມ່ນການປະສົມປະສານຄວາມຮູ້ຕ່າງໆທີ່ເປັນປະໂຫຍດຕໍ່ການດຳເນີນຊີວິດຢ່າງປອດໄພ ມາສອນໃຫ້ແກ່ເດັກ. ເດັກນ້ອຍໃນຕົວເມືອງພວມສົນໃຈຢາກຮູ້ສິ່ງແວດລ້ອມຫລາຍ ແລະ ພວກເຂົາຄວນຮູ້ສິ່ງທີ່ຈະເປັນປະໂຫຍດຕໍ່ພວກເຂົາທີ່ສຸດ ເຊັ່ນຮູ້ວ່າ ຕ້ອງນັບຖືລະບຽບຈະລາຈອນ (ຢຸດເວລາໄຟແດງ ໄປເວລາໄຟຂຽວ ລໍຖ້າເວລາໄຟເຫຼືອງ ແລະ ອື່ນໆ...) ຕ້ອງຂ້າມທາງບ່ອນມີເຄື່ອງໝາຍໃຫ້ຂ້າມ (ທາງມ້າລາຍ...). ນັກຮຽນຄວນເຂົ້າໃຈ ແລະ ຮັບຮູ້ວ່າ ການນັບຖືກົດລະບຽບຈະຊ່ວຍບໍ່ໃຫ້ຖືກລົດຕຳ ແລະ ບໍ່ສ່ຽງອັນຕະລາຍ...ທຸກຢ່າງລ້ວນແຕ່ເພື່ອຄວາມປອດໄພ ເປັນປະໂຫຍດຕໍ່ເຂົາ ແລະຕໍ່ສ່ວນຮວມ...

ແມ່ນແຕ່ໃນຫົວຂໍ້ກ່ຽວກັບສຸຂະພາບອະນາໄມ ເຊັ່ນເລື່ອງການຮັກສາປາກ ແຂ້ວ ໃຫ້ສະອາດ, ຄູສາມາດສອດແຊກຄວາມຮູ້ດ້ານໂພຊະນາການໄປພ້ອມເຊັ່ນວ່າ ເພື່ອຫຼີກເວັ້ນການເປັນແຂ້ວແມງ ເດັກນ້ອຍບໍ່ຄວນກິນຂອງຫວານຫລາຍ, ເພື່ອໃຫ້ມີສຸຂະອະນາໄມດີ ຜິວງາມ ຕາຮຸ່ງ ຕ້ອງກິນຜັກສົດ ໝາກໄມ້ໃຫ້ພຽງພໍ ເປັນຕົ້ນ. ຈາກນັ້ນ ກໍຍັງສາມາດຕໍ່ໃສ່ເລື່ອງສິ່ງແວດລ້ອມ: ການກິນຂອງສົດ ເຊັ່ນຜັກ ແລະໝາກໄມ້ ບໍ່ສ້າງຫຼືຜະລິດຂີ້ເຫຍື້ອທີ່ເຜົາໄໝ້ຍາກ ດັ່ງນີ້ເປັນຕົ້ນ.

ການສອນອ່ານແບບບູລະນາຮຽກຮ້ອງໃຫ້ຄູ ຕ້ອງກະກຽມຫລາຍສິ່ງຫຼາຍແນວພໍສົມຄວນເຊັ່ນ ເມື່ອເລືອກເລື່ອງອ່ານໃດນຶ່ງໄດ້ ຕ້ອງພິຈາລະນາກວດກາເບິ່ງວ່າ ໃຈຄວາມຂອງເລື່ອງສາມາດເຊື່ອມຕໍ່ ກວມແຜ່ໄປຫາເລື່ອງໃດແດ່. ຈະສອນແບບໃດ ແລະເຮັດກິດຈະກຳຫຍັງໄດ້ແດ່ ຈຶ່ງຈະຈູງໃຈເດັກນ້ອຍໃຫ້ສົນໃຈຄົດ ແລະ ເຂົ້າຕັດສິນໃຈໄດ້ໃນຕອນສຸດທ້າຍ ວ່າຢາກປ່ຽນແປງຄວາມປະພຶດລາງອັນເຊິ່ງແມ່ນເປົ້າໝາຍສູງສຸດຂອງການຮຽນການສອນ ບໍ່ແມ່ນສອນເພື່ອສົ່ງຄວາມຮູ້ຊື່ໆ ແຕ່ສອນ ແລະຮຽນເພື່ອໃຫ້ເກີດການປະຕິບັດຢ່າງແທ້ຈິງ. ຄູເຮົາຄວນຕັ້ງເປົ້າໝາຍຢ່າງນີ້. ຜ່ານການກະກຽມໃນເບື້ອງຕົ້ນນີ້ແລ້ວ ຄູຈະພົບວ່າ ທຸກຢ່າງສາມາດສອນແບບບູລະນາການໄດ້ ແລະກໍສອນໄດ້ຢ່າງມ່ວນໆອີກ.

ຕົວຢ່າງ: ການນຳໃຊ້ເລື່ອງ "ຂ້ອຍຈະໄປໃສນໍ" ມາສອນອ່ານແບບບູລະນາການ ເພື່ອຮຽນຄຳ/ສຳນວນໃໝ່ ແຕ່ງປະໂຫຍກໃໝ່, ສາມາດຮັກສາອະນາໄມສິ່ງແວດລ້ອມ ແລະ ເຫັນແຈ້ງຄຸນຄ່າ ຂອງຕົ້ນກ້ວຍໃນດ້ານເສດຖະກິດ ແລະບົດບາດຂອງຕົ້ນກ້ວຍໃນຊີວິດປະຈຳວັນ ຜ່ານການເຮັດກິດຈະກຳຕ່າງໆ ທີ່ຈະຄ່ອຍໆສ້າງແນວຄິດ ທັດສະນະ ແລະທັນປ່ຽນພຶດຕິກຳບາງແນວຂອງເດັກ.

ອ່ານແບບບູລະນາການ 1 : ຄົ້ນຫາຄຳ/ສຳນວນຍາກ

1.ຈຸດປະສົງ


ທຸກຄັ້ງທີ່ນັກຮຽນໄດ້ອ່ານບົດເລື່ອງໃໝ່ ສິ່ງທີ່ເຂົາຈະພົບແມ່ນ ຄຳ/ສຳນວນແປກໆ ເນື້ອເລື່ອງໃໝ່ໆ ທີ່ເຂົາອາດບໍ່ເຄີຍໄດ້ຍິນໄດ້ຟັງມາກ່ອນ. ດັ່ງນັ້ນໃນການສອນອ່ານທຸກຄັ້ງ ຖ້າຢາກໃຫ້ເດັກມ່ວນ ຕິດໃຈກັບການອ່ານ ແລະ ຢາກອ່ານໄປເລື້ອຍໆ ຈຳເປັນທີ່ຄູຕ້ອງຮູ້ຈັກ ວິທີອະທິບາຍຄຳ/ສຳນວນ.

ການໃຫ້ເດັກນ້ອຍຊອກຄຳສັບຍາກ ແມ່ນການກະຕຸ້ນ ຄວາມກ້າທີ່ຈະຖາມຄູ.

ຈຸດປະສົງຂອງກິດຈະກຳນີ້ ແມ່ນເຮັດໃຫ້ນັກຮຽນຮູ້ຈຳແນກຄຳ/ສຳນວນຍາກ ທີ່ເຮັດໃຫ້ເຂົາ ບໍ່ເຂົ້າໃຈບົດອ່ານ ແລະ ກ້າທີ່ຈະນຳສະເໜີ ຄວາມສົງໄສຂອງຕົນ.

2. ອຸປະກອນການສອນ

- ປຶ້ມເລື່ອງ "ຂ້ອຍຈະໄປໃສນໍ" ຕາມຈຳນວນນັກຮຽນ
- ຮູບຕົ້ນກ້ວຍໃຫຍ່
- ປຶ້ມວັດຈະນານຸກົມ ປະກອບຮູບ
- ສໍສີ



3. ກິດຈະກຳ

ໃນເວລາ 50 ນາທີ ນີ້ ຕ້ອງແບ່ງເວລາໃຫ້ແຕ່ລະຂັ້ນຕອນຢ່າງຄັກແນ່ ແຕ່ຖ້າຜິດພາດ ຄັ້ງທຳອິດ ກໍສາມາດແກ່ຍາວໄດ້ ເພາະເປັນບົດຮຽນແບບບູລະນາການ ແຕ່ຕ້ອງໃຫ້ເດັກ ຕິດຕາມ ເຂົ້າໃຈ ວ່າແຕ່ລະຂັ້ນຕອນ ເຂົາຕ້ອງເຮັດຫຍັງ ເພື່ອຫຍັງ

ຂັ້ນຕອນ:

1. ຄູແນະນຳປຶ້ມ
2. ຄູຢາຍປຶ້ມໃຫ້ນັກຮຽນ
3. ຄູອ່ານໃຫ້ນັກຮຽນຟັງ
4. ນັກຮຽນອ່ານ
5. ຄູກວດກາຄວາມເຂົ້າໃຈ
6. ແບ່ງກຸ່ມນັກຮຽນ
7. ຄູແບ່ງບົດເລື່ອງໃຫ້ກຸ່ມລະ 4-5 ໜ້າເພື່ອເລືອກ ເອົາຄຳ/ສຳນວນ ທີ່ກຸ່ມເຫັນວ່າຍາກ
8. ນັກຮຽນຂຽນໃສ່ແຜ່ນເຈ້ຍໄວ້ ຫລັງຈາກນັ້ນ ໃຫ້ນຳສະເໜີ
9. ຄູສະຫລຸບບົດຮຽນຄືນ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູແນະນຳປຶ້ມໃຫ້ນັກຮຽນຮູ້ຈັກ : ຍົກປຶ້ມຂຶ້ນ ໃຫ້ທຸກຄົນເຫັນໜ້າປົກ ບອກນັກຮຽນ ອ່ານຊື່ເລື່ອງພ້ອມໆກັນສຽງດັງໆ ຖ້າອ່ານບໍ່ຖືກ ບໍ່ແຮງ ໃຫ້ອ່ານອີກ. ຄູສະເໜີຊື່ຜູ້ ແຕ່ງ/ຂຽນ, ຜູ້ແຕ້ມ, ຜູ້ແປ, (2 ນາທີ)
2. ຄູຢາຍປຶ້ມໃຫ້ນັກຮຽນ (2 ນາທີ)
3. ຄູອ່ານໃຫ້ນັກຮຽນຟັງໜ້ອຍນຶ່ງ (2 ນາທີ) ຄູອ່ານ ແລະ ຢຸດບ່ອນຄວນຢຸດ ເນັ້ນບ່ອນ ຄວນເນັ້ນ...
4. ຄູໃຫ້ນັກຮຽນອ່ານ ໂດຍໃຫ້ນັກຮຽນອື່ນໆຕິດຕາມການອ່ານຂອງໝູ່ ຄູເປັນຜູ້ຊີ້ເອົາ ວ່າໃຜຈະອ່ານຕໍ່.

- ນັກຮຽນອ່ານອອກສຽງແຮງໆຜູ້ລະ 2-3 ປະໂຫຍກ ບໍ່ໃຫ້ນັກຮຽນຜູ່ອື່ນ ຄອງຖ້າດົນ ເກີນໄປ ຄູອ່ານສັບດ້ວຍຈ້ຳຫວະໄວຂຶ້ນ ແລະຫຼິ້ນສຽງໃນບົດສົນທະນາ ອ່ານໄປຈົນ ສຸດເລື່ອງ (15 ນາທີ)

5. ຄູກວດກາຄວາມເຂົ້າໃຈແບບລວມໆຂອງນັກຮຽນ (3 ນາທີ) ໂດຍຕັ້ງຄຳຖາມກັບ ຫ້ອງ ສາມ-ສີ່ ຄຳຖາມ ເຊັ່ນ:

- ເລື່ອງນີ້ ເວົ້າເຖິງຫຍັງ? ໃຜເລົ່າເລື່ອງ(ຂ້ອຍ ແມ່ນໃຜ ? ລົມກັບໃຜແດ່?)
- ໃນເລື່ອງນີ້ ມີໃຜແດ່ ? (ສາວນ້ອຍ, ລູກສາວນ້ອຍ, ຫລານສາວນ້ອຍ)
- ແມ່ນໃຜຊິໄປໃສ?
- ໃບຕອງກັບຖົງຢາງ ແຕກຕ່າງກັນຢ່າງໃດ(ມີຫຼາຍຄຳຕອບ) ຈູດແລ້ວ ເປັນແນວໃດ, ໃຊ້ແລ້ວເປັນແນວໃດ, ແຕ່ລະຢ່າງມີຕົ້ນກຳເນີດມາແຕ່ໃສ?...

6. ແບ່ງກຸ່ມນັກຮຽນກຸ່ມລະ 3-4 ຄົນ ແບບນັບ 1 2 3 4 (3 ນາທີ)
7. ຄູແບ່ງບົດເລື່ອງໃຫ້ກຸ້ມລະ 4-5 ໜ້າ(ໃຫ້ສຸດເລື່ອງພໍດີ), ແຕ່ລະກຸ່ມອ່ານຄືນມິດໆ ແລ້ວເລືອກ ເອົາຄຳ/ສຳນວນ ທີ່ກຸ່ມເຫັນວ່າຍາກ (5 ນາທີ)
8. ນັກຮຽນຂຽນຄຳ/ສຳນວນ ທີ່ເຫັນວ່າຍາກ ໃສ່ແຜ່ນເຈ້ັ ສົ່ງຄູ (10 ນາທີ).
9. ຄູສະຫລຸບບົດຮຽນຄືນ ໂດຍຄູພານັກຮຽນອ່ານຄືນ ຄຳສັບຍາກ ທັ້ງໝົດ (5 ນາທີ) ແລະບອກວ່າ ຊົ່ວໂມງຕໍ່ໄປຈະອະທິບາຍສູ່ຟັງ.

4. ຄຳແນະນຳຕໍ່ຄູ

- ການນຳພາຫ້ອງໃນຕອນເລີ່ມຕົ້ນ ມີຄວາມສຳຄັນ ເພື່ອດຶງດູດຄວາມສົນໃຈນັກຮຽນ. ໂດຍ ສະເພາະປຶ້ມເລື່ອງ ຂ້ອຍຈະໄປໃສນໍ ທີ່ຈະຕ້ອງນຳໃຊ້ຕິດຕໍ່ກັນຕັ້ງ 5 ຊົ່ວໂມງ ຄູຕ້ອງເຮັດໃຫ້ເດັກເຫັນຄວາມໜ້າສົນໃຈຂອງປຶ້ມ ໂດຍເວົ້າເຖິງວ່າ ຜູ້ຂຽນແລະ ຜູ້ແຕ້ມເປັນຄົນຍີ່ປຸ່ນ, ຜູ້ແປເປັນຄົນລາວ ທັ້ງສາມມີຄວາມຮັກແລະຜູກພັນກັບ ເມືອງລາວ ທ່ອງໃຍເມືອງລາວ ທັ້ງມັກກິນໝາກກ້ວຍ.

- ຄູເຕືອນໃຫ້ນັກຮຽນຮູ້ວ່າ ປຶ້ມເລື່ອງນີ້ເປັນປຶ້ມແປ ຈຶ່ງອາດມີປະໂຫຍກ ຫຼື ຄຳເວົ້າບໍ່ຄ່ອງດີປານໃດ ຂໍໃຫ້ນັກຮຽນສົນໃຈເນື້ອເລື່ອງ ແລະ ເບິ່ງຮູບປະກອບດີໆ.
- ຄູເອງຕ້ອງໄດ້ອ່ານປຶດເລື່ອງນີ້ສອງສາມຮອບກ່ອນ ເວລາອ່ານໃຫ້ນັກຮຽນຟັງຈຶ່ງຈະຮູ້ບ່ອນເນັ້ນ ຫລື ເບົາສຽງ ອ່ານໃຫ້ຖືກຈັງຫວະ ແລະ ອາລົມ ...
- ຫລັກການຂອງການອ່ານຕໍ່ກັນ: ຄວນຊີ້ເອົາຜູ້ອ່ານເກັ່ງຂຶ້ນກ່ອນ ຫຼື ຖາມຄວາມສະໝັກໃຈວ່າ ໃຜຈະອ່ານກ່ອນ. ເມື່ອເຫັນວ່າ ນັກຮຽນອ່ານບໍ່ຄ່ອງ ໃຫ້ຄູຮ່ວມອ່ານນຳ ເປັນບາງຄັ້ງ ຕາມຄວາມເໝາະສົມ ເພື່ອເປັນແບບຢ່າງ ໂດຍສະເພາະເວລາມີປຶດສົນທະນາ ແລະການໃຊ້ອາລົມເຊັ່ນ ເວລາດີໃຈ ໂມໂຫ.
- ໃນການຊີ້ຕົວນັກຮຽນອ່ານນັ້ນ ຄູຕ້ອງຕິດຕາມ ແລະໃຫ້ນັກຮຽນຕິດຕາມເວລາໝູ່ອ່ານນຳ ແລະ ພະຍາຍາມໃຫ້ໄດ້ອ່ານທຸກຄົນ.
- ຖ້າສັງເກດເຫັນວ່າມີຜູ້ອ່ານບໍ່ໄດ້ດີ ຄູອາດວົນກັບຄືນມາຫາອີກ ເພື່ອໃຫ້ໂອກາດນັກຮຽນຄົນນັ້ນແກ້ໂຕໃໝ່, ອາດຈະໄດ້ອ່ານຮອບສອງ ຫລືຮອບສາມ ກໍໄດ້.



- ຄວນກວດກາຄວາມເຂົ້າໃຈໂດຍລວມ ດ້ວຍການຕັ້ງຄຳຖາມແບບກວ້າງໆ ກ່ອນຈະກ້າວໄປສູ່ຂັ້ນຕອນຊອກຫາຄຳ/ສຳນວນຍາກ ເພາະນັກຮຽນ ອາດບໍ່ທັນສາມາດກຳ ຫຼື ເຂົ້າໃຈເນື້ອເລື່ອງທັງໝົດ
- ຄຳຖາມກວດກາຄວາມເຂົ້າໃຈ ຕ້ອງເປັນຄຳຖາມກວ້າງໆ ເປີດແດ່ ເຊື່ອງຊ້ອນ ອ້າງອີງ ແລະ ຮຶ່ມຕອງ ສັບປົນກັນ. ຕົວຢ່າງ: ໃນເລື່ອງນີ້ ມີໃຜແດ່ ? ແມ່ນໃຜຊິໄປໃສ? ໃບຕອງ ກັບ ຖົງຢາງ ແຕກຕ່າງກັນຢ່າງໃດ ?

5. ປະເມີນຜົນ:

- ສັງເກດການອ່ານຂອງແຕ່ລະຄົນ ອ່ານເທື່ອທຳອິດ ກັບເທື່ອທີສອງ ມີຜູ້ອ່ານດີຂຶ້ນໄວຂຶ້ນ ຫລືບໍ່ ? ນັກຮຽນມີໂອກາດໄດ້ເຮັດຊ້ຳ ກໍຄືແກ້ໄຂຂໍ້ຜິດພາດ ມີກຳລັງໃຈ, ສົມກັບຫຼັກການທີ່ວ່າ: “ **ສອນອ່ານ ດ້ວຍການໃຫ້ໄດ້ອ່ານຫຼາຍໆ** ” ຫຼືບໍ່ ?

ບົດທີ ສິບເຈັດ

ภาษาสอนอ่านแบบบูรณาการ 2

อะทิบาย คำ/สำนอน และส้างปะโทยกาใหม่

1. จุดปะสงค์:

ເມື່ອໄດ້ຟັງຄູ ໝູ່ຄູ່ອ່ານແລະໄດ້ຮ່ວມອ່ານບົດເລື່ອງໃດນຶ່ງສຸດລົງ ແລະຕອບຄຳຖາມ ໂດຍລວມ ຮ່ວມກັນກັບໝູ່ແລ້ວ ເດັກກໍມີຄວາມເຂົ້າໃຈໃນເນື້ອເລື່ອງຂັ້ນໃດຂັ້ນນຶ່ງ, ແຕ່ເພື່ອ ໃຫ້ການອ່ານ ບັນລຸຜົນ ຄື ເກີດຄວາມຮູ້ສຶກຢາກອ່ານປຶ້ມຫົວອື່ນ ແລະຢາກນຳໃຊ້ຄຳ/ສຳ ນວນທີ່ຕົນເອງຄຶດ ວ່າຍາກນັ້ນ ມາແຕ່ງປະໂຫຍກໃຊ້ເອງ. ກິດຈະກຳນີ້ ແນໃສ່ໃຫ້ນັກຮຽນ ຮູ້ວິທີອະທິບາຍຄຳ/ສຳນວນ ດ້ວຍວິທີການຕ່າງໆເພື່ອສື່ຄວາມໝາຍອັນຖືກຕ້ອງ, ສາມາດ ແຕ່ງປະໂຫຍກດ້ວຍຄຳ/ສຳນວນເຫຼົ່ານັ້ນ. ການທີ່ເດັກໄດ້ຍິນໄດ້ຟັງປະໂຫຍກທີ່ຄົນອື່ນ ແຕ່ງຂຶ້ນໃໝ່ ນອກຈາກປະໂຫຍກທີ່ ເຂົາອ່ານໃນປຶ້ມ ຈະມີສ່ວນເສີມສ້າງຄວາມເຂົ້າໃຈ ຂອງເຂົາຕໍ່ ຄຳ/ສຳນວນນັ້ນໆ ເພາະໄດ້ເຫັນ ຄວາມແຕກຕ່າງ ຄວາມຫຼາກຫຼາຍໃນການນຳ ໃຊ້ຄຳ/ສຳນວນ ເດັກນ້ອຍກໍຈະກ້າວພົ້ນສະພາບ ບໍ່ກ້າ ບໍ່ຊ່າງແຕ່ງປະໂຫຍກ (ເພາະຢ້ານ ຜິດ)ໄປໄດ້.

2. ອຸປະກອນ:

- ปึ้ม ข้อยจะไปใสมໍ(ตามจำนอนนักฮยน)
- เจ้งแผ่นใหย่
- สໍสิ
- ปึ้มอัดจะนานุกมปะกอบพาบ จัดพิมโดย สะมาคมฮ่วมมำใจกับเด้น้อย ลาอ ปี 2005 ทุ่มละหิอ

3. ກິດຈະກຳ (ສືບຕໍ່ຈາກກິດຈະກຳ ໃນບົດ 16)

ຂັ້ນຕອນ:

1. ຈັດນັກຮຽນເຂົ້າກຸ່ມ
2. ຄູເອົາຄຳສັບຍາກຂອງນັກຮຽນ ຂຶ້ນກະດານ
3. ຄູພານັກຮຽນເບິ່ງວັດຈະນານຸກົມ
4. ແຕ່ລະກຸ່ມແຕ່ງປະໂຫຍກດ້ວຍຄຳ/ສຳນວນທີ່ຄົ້ນໄດ້
5. ສະມາຊິກຂອງກຸ່ມປ່ຽນຜຽນກັນອ່ານ 1 ປະໂຫຍກ
6. ເມື່ອແຕ່ລະກຸ່ມໄດ້ປະໂຫຍກແລ້ວ ໃຫ້ກຸ່ມອື່ນແຕ່ງຕໍ່

ລາຍລະອຽດແຕ່ລະຂັ້ນຕອນ:

1. ຈັດນັກຮຽນເຂົ້າກຸ່ມເດີມ ກຸ່ມລະ 4 ຄົນ (5 ນາທີ)
2. ຄູເອົາຄຳສັບຍາກຂອງນັກຮຽນ ຂຶ້ນກະດານ ຂຽນ ຫຼືຕິດເຈ້ຍທີ່ກຽມໄວ້ (5 ນາທີ)
3. ຄູພານັກຮຽນເບິ່ງວັດຈະນານຸກົມ ຫາຄວາມໝາຍຂອງຄຳເທິງກະດານ ຄູອະທິບາຍ ຄຳ ແລະຊຸກຍູ້ໃຫ້ແຕ່ລະກຸ່ມ ອະທິບາຍຄຳ/ສຳນວນຂອງຕົນ ຕາມວິທີທີ່ຕົນຖະໜັດ (15 ນາທີ)

ຕົວຢ່າງ ການໃຊ້ວັດຈະນານຸກົມ:

(໑) ສຸກ/ງອມ (ໜ້າ 95: ງອມ : ສຸກຫຼາຍ, ແກ່ໂພດ, ສຸກຈົນໃກ້ສິເນົ່າ). ນັກຮຽນຮູ້ວ່າ ສຸກ ແມ່ນບໍ່ດິບ, ຄູອາດຖາມຕື່ມວ່າ ໃນນີ້ແມ່ນຫຍັງສຸກ? (ແມ່ນໝາກກ້ວຍສຸກ) ຄູຖາມຕໍ່: ກ້ວຍສຸກ ເປັນແບບໃດ - (ເນື້ອອ່ອນ ຫວານ ຫອມ...)

(໒) ແປງໂຕ: ປ່ຽນຮູບຊົງທາງກາຍດ້ານນອກ (ເບິ່ງວັດຈະນານຸກົມ ຫຼືແຕ່ງ ປະໂຫຍກພາເວົ້າເອງ)

- ອະທິບາຍດ້ວຍການຍົກຄຳ/ສຳນວນ ກົງກັນຂ້າມ ຕົວຢ່າງ: ສຸກ/ດິບ, ໄວ/ຊ້າ, ຫຼັບສະບາຍ/ນອນຍາກ, ນອນບໍ່ຫຼັບງ່າຍ,ນອນບໍ່ດີ.
- ອອກທ່າທາງປະກອບ ສາມາດປັບໃຫ້ເປັນການຫຼິ້ນທວາຍຄຳຕາມທ່າທີ ໄດ້.
- ແຕ້ມຮູບປະກອບ ຫຼືເບິ່ງຮູບຖ່າຍເຊັ່ນ ໂຮງງານ, ທະເລຊາຍ ເຊິ່ງເດັກບໍ່ ສາມາດສຳນຶກອອກໄດ້ ວ່າເປັນແນວໃດ ດ້ວຍການອະທິບາຍຜ່ານຄຳເວົ້າ ພຽງຢ່າງດຽວ.

4. ແຕ່ລະກຸ່ມແຕ່ງປະໂຫຍກດ້ວຍຄຳ/ສຳນວນທີ່ຄົ້ນໄດ້ ແລະອະທິບາຍຊ່ວຍກັນ (15 ນາທີ)


5. ສະມາຊິກຂອງກຸ່ມປ່ຽນຜຽນກັນອ່ານ 1 ປະໂຫຍກ ໃຫ້ໝົດຫ້ອງຟັງ, ວົນວຽນໄປມາ ຈົນຄົບທຸກປະໂຫຍກ, ຟັງຄຳຕິຊົມຈາກໝູ່ແລ້ວປັບປຸງປະໂຫຍກຊ່ວຍກັນ. ແຕ່ລະກຸ່ມຈົດປະໂຫຍກຂອງຕົນໄວ້. ຖ້າມີເວລາ ຫຼືທົດລອງແຕ່ງເລື່ອງສັ້ນໆດ້ວຍຄຳສັບ/ສຳນວນເຫຼົ່ານັ້ນນຳກັນ ໃສ່ກະດານໃຫຍ່ (5 ນາທີ)
6. ເມື່ອແຕ່ລະກຸ່ມໄດ້ປະໂຫຍກແລ້ວ ໃຫ້ກຸ່ມອື່ນແຕ່ງຕໍ່ ສ້າງປະໂຫຍກຍາວຂຶ້ນ (10 ນາທີ)

ຕົວຢ່າງ

ກຸ່ມ 1 ບາສີ - ພໍ່ແລະແມ່ຂອງຂ້ອຍ ໄປຮ່ວມບາສີ
ກຸ່ມ 2 ຕື່ມວ່າ: ຢູ່ຫ້ອງການເມືອງ
ກຸ່ມ 3 ເນື່ອງໃນໂອກາດສະຫຼອງປີໃໝ່ລາວ
ກຸ່ມ 4 ເພາະມີແຂກຕ່າງປະເທດມາຢ້ຽມຢາມ...

4. ຄຳແນະນຳຕໍ່ຄູ

- ຄູເອງໄດ້ຮຽນຮູ້ວິທີໃຊ້ວັດຈະນານຸກົມ ປະກອບພາບ ແລະ ການຊອກຄຳສັບ, ທົດ



ລອງດ້ວຍ ຄຳ/ສຳນວນ ທີ່ພົບໃນບົດ ແລະຄາດວ່າຈະເປັນຄຳ/ສຳນວນຍາກສຳລັບເດັກ.

- ທຸກຄັ້ງທີ່ຄູປະກອບສ່ວນນຳ (ອອກທ່າທາງ, ອ່ານຫຼິ້ນສຽງ ແລະຊ່ວຍປັບປຸງປະໂຫຍກ) ແມ່ນການສ້າງບັນຍາກາດທີ່ເປັນກັນເອງ ຊ່ວຍໃຫ້ນັກຮຽນກ້າຫານຂຶ້ນ ໂດຍສະເພາະຖ້າຄູເອງ ອອກທ່າທາງປະກອບ ໃສ່ການອະທິບາຍຄຳຍາກ ນັກຮຽນກໍຈະກ້າເຮັດນຳ ເຊິ່ງໃນອະນາຄົດອາດເປັນຄວາມສາມາດນຶ່ງທີ່ເປັນປະໂຫຍດຕໍ່ເຂົາ ຄື ເປັນນັກສະແດງໄດ້, ສຳລັບນັກຮຽນຜູ້ບໍ່ຊ່າງປາກເວົ້າອະທິບາຍກໍອາດມັກວິທີສື່ສານແບບນີ້.
- ທຸກຄັ້ງທີ່ມີການປັບປຸງປະໂຫຍກໂດຍຕົນເອງ ແລະໂດຍກຸ່ມ, ເດັກນ້ອຍໄດ້ຮຽນຮູ້

ແລະ ເຂົ້າໃຈຄຳສັບນັ້ນເລິກເຊິ່ງຂຶ້ນອີກ, ພວກເຂົາເຫັນຄວາມກ້າວໜ້າຂອງກຸ່ມ ແລະ ຂອງຕົນເອງ ທັງເບິ່ງຄວາມແຕກຕ່າງ ຫລາກຫລາຍຂອງການໃຊ້ຄຳ/ສຳນວນ.

- ຄູຕ້ອງອະທິບາຍຕື່ມ ກໍລະນີຄຳນຶ່ງມີຫຼາຍຄວາມໝາຍ ໃຫ້ນັກຮຽນເຫັນລັກສະນະສະພາະ ໃນພາສາລາວ ເຊິ່ງກໍຄືກັບທຸກໆພາສາໃນໂລກເຊັ່ນ **ສຸກ**: ອາການແກ່ ທີ່ກິນໄດ້ຂອງໝາກໄມ້, ຫລື ຂອງອາຫານຊິ້ນ ປາ ທີ່ຖືກຄວາມຮ້ອນຈົນເອີ້ນວ່າມີຄວາມປອດໄພທີ່ຈະກິນ ແລະ **ສຸກ**: ຄວາມຮູ້ສຶກສະບາຍ, ບໍ່ເປັນທຸກອຸກອັ່ງ, ຫລື **ໝາກສຸກ** ພະຍາດຕຸ່ມໃສໂພງຢູ່ຕາມຜິວໜັງ ທີ່ມັກເກີດກັບເດັກ(ກວດເບິ່ງວັດຈະນານຳກົມອີກ ແລະ ອ່ານສູ່ນັກຮຽນຟັງ)
- ເຮັດແນວນີ້ ຈະຊ່ວຍໃຫ້ນັກຮຽນໃຊ້ຄຳ/ສຳນວນໄດ້ຢ່າງໝັ້ນໃຈ ແລະ ຖືກຕ້ອງ.
- ອອກທ່າທາງປະກອບສະເພາະ ໃຫ້ອີກຜູ້ນຶ່ງເບິ່ງທ່າທີນັ້ນ ແລ້ວເວົ້າອອກມາວ່າ ແມ່ນ ຄຳ/ສຳນວນໃດ ຈະເຮັດໃຫ້ການຮຽນຄຳສັບກາຍເປັນເກມຫຼິ້ນມ່ວນໆໄດ້.

ຕົວຢ່າງ: ຫຼັບສະບາຍ: (ສະແດງທ່ານອນ); ອຸກໃຈ: (ເຮັດໜ້າຫຍຸ້ງ), ກິ່ນຫອມ: ເຮັດທ່າດົມແລ້ວຍິ້ມຊື່ນ ... ເປັນຕົ້ນ ການເຮັດແບບນີ້ ກໍເປັນວິທີຊຸກຍູ້ເດັກນ້ອຍ ຜູ່ບໍ່ຊ່າງປາກເວົ້າໄດ້ສະແດງອອກ ເຊິ່ງຕໍ່ໄປ ທັກສະນີ້ (ຄວາມລ້ຳເຄີຍແບບນີ້) ອາດຈະເປັນປະໂຫຍດແກ່ເຂົາ.

5. ປະເມີນຜົນ

- ເດັກໃນແຕ່ລະກຸ່ມ ໃຊ້ຄຳ/ສຳນວນດຽວ ແຕ່ງປະໂຫຍກແຕກຕ່າງກັນໄດ້, ແຕ່ງປະໂຫຍກໃຫ້ຕໍ່ກັນເປັນເລື່ອງໄດ້ ເປັນການຈູງນັກຮຽນເຂົ້າສູ່ການທັດແຕ່ງ. ທັກສະຈາກການອ່ານດ້ວຍຄວາມ ເຂົ້າໃຈ ມີສ່ວນປັບປຸງຄວາມສາມາດໃນການຂຽນໃນທັນທີ.
- ນັກຮຽນໄດ້ຮຽນຮູ້ວິທີໃຊ້ວັດຈະນານຸກົມ ເບິ່ງຄຳອະທິບາຍ ສິ່ງນີ້ຈະຊ່ວຍເຂົາໄດ້ດີ ເມື່ອເຂົາອ່ານປຶ້ມເລື່ອງອື່ນໆບໍ່ເຂົ້າໃຈ ອັນເປັນການຍົກລະດັບຄວາມຮູ້ດ້ານພາສາຂອງເດັກ.
- ການອອກທ່າທາງຂອງຄູ ກໍຊ່ວຍສ້າງບັນຍາກາດການຮຽນ ເຮັດໃຫ້ນັກຮຽນມ່ວນ ແລະ ເປັນກັນເອງກັບຄູ, ນັກຮຽນກໍຈະມີຄວາມກ້າຫານສະແດງອອກຄືກັນ.



ภาพถ่ายโดย ปิ่นวิมล สุขบัว
เรื่อง ที่นอนของฉัน

บทที่ สิบแปด

ภาษาสอนอ่านแบบบูรณาการ 3
รักษาสิ่งแวดล้อม

แนวคิดหลัก: การจัด หรือ หลุดผ่อนข้อเหยื้อ ด้วยการใช้วัตถุทำมะชาด

1. จุดประสงค์

ย้อนมีการบริโภคและใช้สิ่งของทันสะไหม ผะลิดจากอุดสาหะกำเช่น ฝุ่น/ปุ๋ย เคมี, น้ำยาล้าง, อาหารกะป๋อง, เครื่องใช้ที่เร็ดด้วยยาง, โลหะ, แก้ว... ยู่ในหลายๆบ่อน ทั่งสะถานที่สาธาละนะ (โรงเรียน โรงหมໍ ตะหลาด แคมทาง...) และแม่นแต่ในบริเวน บ้านเรือนของตินเอง คินเราได้สร้างความเปิเปื้อน ให้แก่สะพาบแวดล้อมของตินเองบ่หน้อย เช่น เกิดมีกิ่นเหม็นอ้อมรอบผิดคุ้ม, น้ำในร่องบ่ละบาย เน่าเหม็น และมียุง, แมงวัน, เสดขี้เหยื้อค้างในร่องน้ำ ตามบริเวน ตะหลาด และเป็นกองตามแคมทาง, แคมป่า. ขี้เหยื้อเหล่านั้นสามาดเป็นอันตะลายได้. ในปื้มเล่ือง "ข้อยจะไปใสบ่" นักเรียนได้รู้จักกับที่มา/ต้นกำเนิดของถ่ิงยาง และคุนปะโยดของต้นก้อยแล้อ. ดั่งนั้น กิดจะกำในบิดนี้ จ่ึงแม่นการนำพาเด็ก สืบต่ค้นหาปะโยดอันหน้าอัดสะจันของต้นก้อย เพื่อชอกหาอิทิธิพลในการรักสาสะพาบแวดล้อมให้ดีข้ึนยู่ในสะถานที่สาธาละนะ(โรงเรียน)และในบ้านเรือนของตินเอง หาอิทิพลผ่อนการใช้ถ่ิงยางปะลาสะติก ด้วยการใช้ใบตอง และสิ่งที่บ่เป็นขี้เหยื้อแทน.

แต่การที่จะหันป่วนความชินเคย ความสะดวกสะบาย ในการใช้ถ่ิงปะลาสะติก แก้ว ยาง และเครื่องยางอื่นๆ แม่นเล่ืองยากสิมควน, โดยสะเพาะกับผู่ใหย่ แต่กับเด็กน้อยนักเรียนปะถิม ถือว่ายังมีโอกาดยู่ และพวกเราก็ควนลิเล่ิม

ກັນແຕ່ດຽວນີ້. ສ່ວນຫຼາຍພວກເຮົາລ້ຽງເຄີຍກັບການໃຊ້ຖ້ຽຢາງປະລາສະຕິກ ຈົນຫຼາຍຄົນເຫັນແຕ່ "ຄວາມດີ" ຂອງມັນ. ໃນຖານະເປັນຄູ ທີ່ຢາກປູກຝັງອົບຮົມເດັກນ້ອຍໃຫ້ຫັນປ່ຽນທັດສະນະອັນຜິດພາດ(ຍອມຮັບກັນກ່ອນ) ແລະມີຜົນກະທົບໃນທາງລົບຕໍ່ສິ່ງແວດລ້ອມ ກໍຄືຄົນເຮົາເອງ ຄູຈຶ່ງຕ້ອງມີຫຼັກໝັ້ນ ຢືນຢູ່ໃນທັດສະນະຂອງແນວຄິດຫຼັກ ບໍ່ດັ່ງນັ້ນການສອນກໍບໍ່ຈູງໃຈເດັກນ້ອຍໄດ້ ແລະອັນສຳຄັນທີ່ສຸດ ເພື່ອໃຫ້ການສອນບັນລຸເປົ້າໝາຍຈຳເປັນແທ້ໆທີ່ຄູເອງຈະຕ້ອງປ່ຽນແປງພຶດຕິກຳ ຂອງຕົນເປັນແບບຢ່າງໃຫ້ເດັກນ້ອຍ.

2. ອຸປະກອນ

- ປຶ້ມຂ້ອຍຈະໄປໃສນໍ ຕາມຈຳນວນຂອງນັກຮຽນ
- ຮູບຕົ້ນກ້ວຍ
- ສໍສີ
- ເຈ້ຍແຜ່ນໃຫຍ່
- ຖົງພາຍຜ້າ



- ຮູບສະພາບແວດລ້ອມເປື້ອນ ມີຂີ້ເຫຍື້ອຕາມເດີ່ນແຄມທາງ ກອງຂີ້ເຫຍື້ອ ທີ່ມີແກ້ວ ກັບໂຟມ ກັບຢາງ ອື່ນໆ ຫຼື ໃຫ້ເດັກເອົາສິ່ງເຫຼົ່ານີ້ມາກອງໄວ້.

3. ກິດຈະກຳ

ຂັ້ນຕອນ:

1. ຄູສົນທະນາລັກສະນະຂອງວັດຖຸຢາງ ແລະໃບຕອງ
2. ຄູນຳສະເໜີຮູບຕົ້ນກ້ວຍ
3. ໃຫ້ນັກຮຽນຂຽນຊື່ ແລະແຕ້ມຮູບໃຊ້ຕື່ມ
4. ຄູນຳພາສົນທະນາຄຸນປະໂຫຍດຂອງຕົ້ນກ້ວຍ
5. ແບ່ງເປັນ 2 ກຸ່ມໃຫຍ່(ຄົ້ນຄ້ວາ 10 ນາທີ)
6. ຄູນຳພາແຕ່ງເພັງ
7. ໃຫ້ນັກຮຽນແຕ່ງຄຳຂວັນ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຈຳແນກລັກສະນະອັນແຕກຕ່າງກັນ ລະຫວ່າງວັດຖຸປະລາສະຕິກ/ຢາງ, ກະປ໋ອງ... ກັບ ໃບຕອງ ແລະສ່ວນອື່ນໆຂອງຕົ້ນກ້ວຍ. ຄູໃຫ້ນັກຮຽນເປີດເບິ່ງປຶ້ມ “ຂ້ອຍຈະໄປໃສນໍ” ໜ້າ 18-28 ອ່ານທົບທວນໃນກຸ່ມ, ເບິ່ງຮູບສະພາບແວດລ້ອມທີ່ກຽມມາ (10 ນາທີ)
2. ຄູຕິດຮູບຕົ້ນກ້ວຍ ທີ່ບໍ່ທັນສົມບູນຄັກ ໃສ່ກະດານ ແລະຖາມນັກຮຽນວ່າ ຕົ້ນກ້ວຍນີ້ຍັງ ຂາດສ່ວນໃດເຊັ່ນ: ຍັງບໍ່ມີປີ, ບໍ່ເປັນຮາກເທົ້າ...(3 ນາທີ)
3. ໃຫ້ນັກຮຽນອອກມາຂຽນຊື່ ແລະ ແຕ້ມຮູບແຕ່ລະສ່ວນໃສ່ຕື່ມ ເປັນການຮຽນຮູ້ຊື່ຂອງສ່ວນ ຕ່າງໆຂອງຕົ້ນກ້ວຍ: ຮາກເທົ້າ, ກາບ,ໃບຕອງ, ກ້ານ, ເຄືອ, ປີ, ໝາກກ້ວຍ (3 ນາທີ)
4. ຄູນຳພານັກຮຽນສົນທະນາກ່ຽວກັບຄຸນປະໂຫຍດສ່ວນຕ່າງໆຂອງຕົ້ນກ້ວຍ (4 ນາທີ)
5. ແບ່ງເປັນ 2 ກຸ່ມໃຫຍ່

(໑) ກຸ່ມ “ຂ້ອຍເປັນຕົ້ນກ້ວຍ”

(໔) ກຸ່ມ “ຂ້ອຍເປັນຖົງຢາງປະລາສະຕິກ”

ແຕ່ລະກຸ່ມ ຄົ້ນຫາລັກສະນະຕ່າງໆຂອງຕົນ ແລ້ວຂຽນໃສ່ຕາລາງ ສົມທຽບວ່າໃຜມີຈຸດ ດີຫຼາຍກວ່າກັນ (10 ນາທີ)

ລັກສະນະ	ຂ້ອຍເປັນຕົ້ນກ້ວຍ/ ສ່ວນຕ່າງໆ	ຂ້ອຍເປັນຖົງຢາງ/ປ໋ອງ/ແກ້ວ/ ໂຟມ
ບໍລິໂພກ/ກິນ	ກ້ວຍ, ຢວກ, ປີ, ກ້ວຍດິບ	
ການຊົມໃຊ້		
ຄວາມໝັ້ນໜຽວ		
ທຳລາຍ/ຈູດເຜົາ		
ບ່ອນເກີດ/ທີ່ມາ		
ອັນຕະລາຍຕໍ່ຄົນ, ສັດ		

6. ຄູນຳພາແຕ່ງເນື້ອຮ້ອງ ເພງ ຕາມທຳນອງເພງເກົ່າໃດນຶ່ງ (10 ນາທີ)

ຕົວຢ່າງ ເພງ : ຂ້ອຍບໍ່ມັກ ແລ້ວພາມັກຮຽນຮ້ອງ.

ຂ້ອຍບໍ່ມັກ ຂ້ອຍບໍ່ມັກ... ຖົງຢາງສີໃສ
ຂ້ອຍບໍ່ມັກ ຂ້ອຍບໍ່ມັກ ກິ່ນຂີ້ຢາງໄໝ້
ຂ້ອຍບໍ່ມັກ ຂ້ອຍບໍ່ມັກ ຖົງປ໊ອຂຶ້ນຟ້າ
ຂ້ອຍບໍ່ມັກ ຂ້ອຍບໍ່ມັກ ຖົ້ມຖົງໃສ່ປ່າ

7. ໃຫ້ແຕ່ລະກຸ່ມ ແຕ່ງຄຳຂວັນ ສິ່ງເສີມການໃຊ້ວັດຖຸທຳມະຊາດແທນເຄື່ອງຢາງ/ປະລາສະຕິກ ແລ້ວຊ່ວຍກັນຂຽນອອກປະດັບປະດາແບບທຳມະຊາດ ເຊັ່ນ ເອົາກີບດອກໄມ້ ມາຕິດເອ້ແລ້ວ ຕິດໃສ່ຝາຫ້ອງຮຽນ (10 ນາທີ)

ຕົວຢ່າງ: "ໃຊ້ໃບຕອງຫໍ່ຂອງ ບໍ່ຕ້ອງຈູດຂີ້ເຫຍື້ອ" "ໃຊ້ວັດຖຸທຳມະຊາດ ຮັກສາຄວາມສະອາດ ສິ່ງແວດລ້ອມໄດ້"

4. ຄຳແນະນຳຕໍ່ຄູ

- ໃນການສ້າງຄວາມເຊື່ອໝັ້ນ ຕໍ່ເດັກນ້ອຍ ແລະທັດສະນະຫຼັກໝັ້ນຂອງຕົນ ເລີ່ມແຕ່ບົດຮຽນ ກ່ຽວກັບສິ່ງແວດລ້ອມໄປ ຄູຄວນຊັກຊວນເດັກ ສັງເກດການໃຊ້ຖົງຜ້າ ຂອງເດັກບາງຄົນໃນຫ້ອງ ຊວນສົນທະນາວ່າ ການໃຊ້ຖົງພາຍຜ້າ ດີແນວໃດ
- ຄູເອງ ຄວນປັບປຸງພຶດຕິກຳລາງແນວໄປພ້ອມ ເຊັ່ນຄວາມຊິນເຄີຍ ໃຊ້ຖົງຢາງໃສ່ອາຫານການກິນ ປ່ຽນມາໃຊ້ກະຕ່າ ຖົງຜ້າ ປິ່ນໂຕ/ແທນ
- ນຳພາເດັກສັງເກດສະພາບແວດລ້ອມໂຮງຮຽນ ຫ້ອງຮຽນ ວ່າມີຫຍັງ ສາມາດປັບປຸງໄດ້

- ໃນການຂຽນຄຳຂວັນນັ້ນ ອາດເຮັດເປັນການແຂ່ງຂັນຂອງກຸ່ມ ແລະໃຫ້ກຸ່ມເລືອກເອງວ່າ ເອົາຂອງໃຜ ຫຼືຕິດໄວ້ນຳກັນໝົດ ເພື່ອອ່ານນຳກັນ
- ເລືອກເອົາຄຳຂວັນທີ່ດີເດັ່ນໄປອ່ານອອກຕໍ່ໜ້າຫຼັກທຸງ ໃຫ້ໝົດໂຮງຮຽນໄດ້ຍິນ ແລ້ວຕິດໃສ່ກະດານຂ່າວຂອງໂຮງຮຽນ, ຕິດຕາມຕົ້ນໄມ້ ປະຕູຮົ້ວ
- ຕົວຢ່າງບາງມາດຕະການ ເພື່ອຫຼຸດຜ່ອນ ປະລິມານຂີ້ເຫຍື້ອ
    - ບໍ່ຄວນຖິ້ມຂີ້ເຫຍື້ອຊະຊາຍ ຄວນຫາກະຕ່າມາໄວ້ໃນຫ້ອງຮຽນ...
    - ບໍ່ຈູດຖົງຢາງ
    - ບໍ່ຖິ້ມຂີ້ເຫຍື້ອລົງນ້ຳ /ຫ້ວຍຮ່ອງ
    - ປູກຕົ້ນໄມ້ອ້ອມໂຮງຮຽນ ແຄມທາງ ເພື່ອສ້າງບັນຍາກາດສົດຊື່ນ...
    - ໃຊ້ກະຕ່າສານ ໄປຕະຫລາດ ແທນຖົງຢາງໃຫຍ່
    - ໃຊ້ຖົງພາຍຜ້າມາໂຮງຮຽນ
- ໃນການແຕ່ງເພງ ຄູພານັກຮຽນເລືອກທຳນອງເພງເກົ່າທີ່ທຸກຄົນໄດ້ດີເຊັ່ນ ເພງ “ຈຳປາເມືອງລາວ” ເຮົາພຽງແຕ່ແຕ່ງຄຳເວົ້າທີ່ຄ່ອງກັນມີຈຳນວນສຽງທ່ຳກັນກັບເພງເກົ່າ ລອງພາກັນຫາຄຳເວົ້າ ປະໂຫຍກສັ້ນໆ ກ່ຽວກັບສິ່ງແວດລ້ອມ ກ້ວຍແລະຖົງຢາງມາໃສ່ແທນບ່ອນ ເຊັ່ນ ວັກ 1 ວ່າ:

ໄອ່ ດອງຈຳປາ ເວລາຊົມນ້ອງ
ນຶກເຫັນພັນຊ່ອງ ມອງເຫັນຫົວໃຈ
ເຮົານຶກຂຶ້ນໄດ້ ໃນກົ່ນເຈົ້າຫອມ

ປ່ຽນເປັນ
ຢູ່ໃນສວນເຮົາ ມີຕົ້ນກ້ວຍໃຫຍ່
ພໍ່ແມ່ປູກໄວ້ ໃຫ້ເຮົາໄດ້ກິນ
ຍາມກ້ວຍສຸກຫອມ ແຊບຫວານດີຫລາຍ...



ห้ามจำหน่าย

ບົດທີ ສິບເກົ້າ

ການສອນອ່ານແບບບູລະນາການ 4

ເສດຖະກິດແບບກ້ອຍໆ

1. ຈຸດປະສົງ

ຕົ້ນກ້ອຍເປັນພືດຊະນິດນຶ່ງ ທີ່ໃກ້ຊິດຕິດພັນກັບຄົນລາວໃນຫຼາຍດ້ານ ຍ້ອນລັກສະນະພິເສດຂອງມັນ. ຈາກເລື່ອງ "ຂ້ອຍຈະໄປໃສນໍ" ແລະ ບົດຮຽນກ່ອນໆ ນັກຮຽນໄດ້ຮູ້ເຖິງລັກສະນະຕ່າງໆ ແລະຄຸນປະໂຫຍດຂອງສ່ວນຕ່າງໆຂອງຕົ້ນກ້ອຍແລ້ວ. ສ່ວນຈຸດປະສົງຂອງບົດຮຽນນີ້ແມ່ນໃຫ້ນັກຮຽນ ເຫັນໄດ້ຄຸນຄ່າທາງເສດຖະກິດຂອງຕົ້ນກ້ອຍ ແລະ ສາມາດຄິດໄລ່ຜົນປະໂຫຍດ ລາຍຮັບຈາກການປູກກ້ອຍຂາຍ ຫລື ຂາຍຜະລິດຕະພັນອື່ນໆ ຈາກຕົ້ນກ້ອຍ ຊຶ່ງເປັນຊ່ອງທາງການທຳມາຫາກິນ ສ້າງເສດຖະກິດຄອບຄົວໄດ້ ເຊັ່ນ ປູກຕົ້ນກ້ອຍ ຂາຍຕອງ ຂາຍໝາກປີ ຂາຍກ້ອຍຈືນ ປູກເຫັດຕອງແຫ້ງ ເອົາຢອກກ້ອຍລ້ຽງສັດ ແລະອື່ນໆ. ນອກຈາກນີ້ ນັກຮຽນຍັງຈະໄດ້ເຝິກຝົນທົບທວນ ແລະນຳໃຊ້ ທັກສະດ້ານເລກເຊັ່ນ ການບວກ ລົບ ຄູນ ຫານ ນຳອີກ ທັງຮູ້ຈັກຄິດໄລ່ ຄາດຄະເນຄວາມສ່ຽງຈາກການເຮັດທຸລະກິດແບບກ້ອຍໆນີ້ໄດ້. ນັກຮຽນ ປໍ 5, ທີ່ໄດ້ຮຽນແລະເຂົ້າໃຈບົດຮຽນຊຸດນີ້ ຈະນຳເອົາຄວາມຮູ້ເຫຼົ່ານີ້ ໄປປະຕິບັດຕົວຈິງຮ່ວມກັບພໍ່ແມ່ ເປັນຜູ້ຊ່ອຍຄິດໄລ່ໄດ້. ກໍລະນີພໍ່ແມ່ຍັງກ້ຳໜ້າສືຢູ່ ກໍຈະເປັນປະໂຫຍດສົມຄວນ.

2. ອຸປະກອນ

- ປຶ້ມ ຂ້ອຍຈະໄປໃສນໍ
- ຮູບຕົ້ນກ້ອຍ
- ຮູບສວນກ້ອຍ
- ຮູບຮ້ານຂາຍກ້ອຍ
- ຮູບກ້ອຍຈືນ ແລະກ້ອຍຈືນແທ້ (ຖ້າຫາຊື້ໄດ້)...





3. ກິດຈະກຳ

ຂັ້ນຕອນ:

1. ຄູໃຫ້ນັກຮຽນສັງເກດ ເບິ່ງຮູບຕົ້ນກ້ວຍ ແລະສົນທະນາ
2. ໃຫ້ນັກຮຽນສອງສາມຄົນເວົ້າເຖິງປະໂຫຍດຂອງຕົ້ນກ້ວຍ
3. ຄູເພີ່ນຕື່ມເຖິງປະໂຫຍດຂອງກ້ວຍ
4. ຄູພາສົນທະນາກ່ຽວກັບລາຄາ ຜະລິດຕະພັນຈາກຕົ້ນກ້ວຍ
5. ແນະນຳຕາຕະລາງ
6. ຄູຈົດລາຄາຜະລິດຕະພັນ ໃສ່ຕາຕະລາງ
7. ແບ່ງນັກຮຽນເປັນ 4 ກຸ່ມໃຫ້ຄົ້ນຄວ້າ
8. ແຕ່ລະກຸ່ມນຳສະເໜີ
9. ສົນທະນາແກ້ໄຂຕົວເລກ ແລະສະຫຼຸບຜົນ

ລາຍລະອຽດແຕ່ລະຂັ້ນຕອນ:

1. ຄູພານັກຮຽນສັງເກດ ເບິ່ງຮູບຕົ້ນກ້ວຍ ທີ່ແຕ້ມມາ ນຳພາການສົນທະນາ ທົບທວນເຖິງປະໂຫຍດ ຂອງແຕ່ລະສ່ວນແບບໄວໆ ໂດຍ ຕັ້ງຄຳຖາມວ່າ ສ່ວນໃດຂອງກ້ວຍທີ່ມີຄ່າກວ່າໝູ່? (ອາດມີຫຼາຍຄຳຕອບ)ເຮັດຫຍັງໄດ້ແດ່ (5 ນາທີ)
2. ຄູ ໃຫ້ນັກຮຽນ ສອງສາມຄົນ ເວົ້າວ່າ (ສະຫຼຸບ) ເຂົາມັກສ່ວນໃດຂອງກ້ວຍ ແລະເຫັນວ່າສ່ວນໃດມີປະໂຫຍດຫຼາຍ ອາດຈະແມ່ນ ໝາກກ້ວຍ, ໃບຕອງ ແລະ ໃຫ້ເຫດຜົນພ້ອມ (5 ນາທີ)

3. ຄູເນັ້ນເຖິງປະໂຫຍດຂອງກ້ວຍຕື່ມ ໂດຍບອກວ່າ: (5 ນາທີ)
   - ກ້ວຍໃຊ້ເປັນອາຫານ ແລະເປັນຢາປິ່ນປົວ ແມ່ນ 2 ປັດໄຈ ສຳລັບການດຳລົງຊີວິດ ຂອງຄົນ, ກິນສົດໄດ້ ອີ່ມດີເພາະມີທາດແປ້ງ ແລະນ້ຳຕານ, ມີວິຕາມິນ B C ເຮັດເຂົ້າໜົມຂາຍໄດ້
   - ປ່ຽນຮູບໄດ້ ຮັກສາໄວ້ໄດ້ດົນ, ເປັນແປ້ງທີ່ສາມາດນຳມາປຸງແຕ່ງໄດ້. ໃນບາງປະເທດເຊັ່ນຢູ່: ອາຟຣິກາ ທີ່ບໍ່ປູກເຂົ້າ ເຂົາເຈົ້າກິນແປ້ງກ້ວຍດິບຕາງເຂົ້າ.
4. ຄູບອກນັກຮຽນເປີດປຶ້ມໜ້າ 10,11, 22 ເບິ່ງຜະລິດພັນຕ່າງໆ ທີ່ເຮັດຈາກຕົ້ນກ້ວຍ ແລະ ສົນທະນາກ່ຽວກັບລາຄາສິນຄ້າຜະລິດພັນຕ່າງໆເຊັ່ນ ຈີ່ນກ້ວຍ, ເຂົ້າໜົມຈີ່ນ, ໝາກເບັ່ງ, ພາບາສີ, ໃບຕອງສົດ, ປີ້ງກ້ວຍ...(10 ນາທີ)
5. ຄູຂຽນຕາຕະລາງໃຫຍ່ໃສ່ກະດານ ແລະ ນຳພານັກຮຽນສົນທະນາກ່ຽວກັບຂໍ້ມູນ (10 ນາທີ)

ສ່ວນຕ່າງໆຂອງຕົ້ນກ້ວຍ	ປຸງແຕ່ງເປັນຫຍັງ?	ຂາຍໄດ້ລາຄາທ່ຳໃດ?
ກ້ວຍດິບ	ກ້ວຍຈີ່ນ	45,000 ກີບ/ກິໂລ
	ຕຳກ້ວຍ	8,000 ກີບ/ຕ່ຳຈານ
ໜໍ່ກ້ວຍ		
ກ້ວຍສຸກ		
ໃບຕອງສົດ		
ໃບຕອງແຫ້ງ		
ຢອກກ້ວຍ		
ກາບກ້ວຍ		

6. ຄູຈົດລາຄາຜະລິດຕະພັນ ແຕ່ລະຊະນິດ ໃສ່ກະດານ/ຕາຕະລາງ.
7. ແບ່ງນັກຮຽນເປັນ 4 ກຸ່ມ, ແລ້ວແຕ່ຈຳນວນນັກຮຽນ ແຕ່ບໍ່ຄວນກາຍ 5 ຄົນຕໍ່ກຸ່ມ ຈົກສະຫຼາກ ເອົາຫົວຂໍ້ ເພື່ອສຶກສາຄຸນຄ່າທາງເສດຖະກິດຂອງກ້ວຍ ໃຫ້ຄຶດໄລ່ຕົ້ນທຶນ ລາຍຈ່າຍ/ລາຍຮັບຕ່າງໆ (15 ນາທີ)

   (1) ຈາກການເຮັດສ່ວນກ້ວຍ
   (2) ການຂາຍກ້ວຍຈີ່ນ

(3) จากใบตอง
(4) จี่ก้อย/ เธ็ดเข้าหมกก้อย

ตัวอย่าง ตั้งโจด:


1. พ่อเถ้าสาปูกก้อย 20 ขุม ปีหึ่งผ่านไป มีพ่อค่ามาซื้ก้อยของลาวในลาคา เดือละ 15,000 กีบ พ่อเถ้าสาได้เงิน 350,000 กีบ ถามว่าพ่อเถ้าสาได้ขาย ก้อยจักเดือ? เป็นหยังลาวจึ่งได้ก้อยหลายกว่า 20 เดือ?

2. ห้าวสีจี่ก้อยขาย. ซื้ก้อยมาหวิละ 2,500 กีบ แต่ละหวิมีก้อย 12 ห่อย มื้หึ่งห้าวสีขายก้อยจี่หมด120ห่อยได้เงิน60,000กีบ.ลาวใช้ถ่านหมด1ถิ่ง ลาคา 5,000 กีบ ถามว่าห้าวสี ขายจี่ก้อยห่อยละเท่าใด? และมื้นั้นลาว ได้กำไลจักกีบ?

8. แต่ละกุ่มนำสะเหนอกุ่มละ 3 นาที (15 นาที)
9. สินทะนาแก้ไขติอเลกนำกัน และสะห฼บผืนปะโหยดหางเสดถะกิดของ ก้อย ด้อยการแต่งคำขวันสิ่งเสิม การกินก้อย ใช้ใบตอง และอื่นๆ ด้อยคำ สับที่ยงมา ในบิดก่อนๆ หิ ตามที่นักยงคืดออก (5 นาที)

4. คำแนะนำต่ถู

- ในการสอนบิดนี้ ถูต้องกงมข้มูน กงวกับก้อยไว้ตอบนักยง ก้อยออก หมากปิละหึ่งเที่อ(นึ่งเดือ), ถ้าก้อยงาม เดือหึ่งมีจักหวิ, หวิละจักห่อย, ติ้น หึ่ง ตัดตองได้ปิละจักก้าน?.
- พานักยงตั้งโจด/บันหา เอง แบบสิมมุดถามสะพาบการต่างๆ เช่นว่า: ถ้าเธ็ดสอน ปูกก้อย 100 ติ้น, ต้องลิงทึนหยังแด่ ?
  - ลายธับจากการขายก้อยสิด(จำนอนเดือ, หวิ...),
  - ขายหมากปิ และ ใบตอง (คืดไล่ว่า ตัดแต่ละเที่อเท่าใด, เดือนหึ่งจัก เที่อ...)
  - คาดคะเนลายธับจากการขายส่วนต่างๆ.
  - ในการคืดไล่ ถวนให้เด็กฮู้คาดคะเนลายธับต่ำและสูงสุด, ถวาม ส่งที่อาดเกิดขึ้น ข้ถวนละวังในการเธ็ดการค้ากงวกับก้อย (ลา คาก้อย, นำ้มัน, ฟืน, นำ้ถ้วม หิ แล้ง...)



- ໃນການຂຽນແຕ່ງຄຳຂວັນ ຄູອະທິບາຍຫຼັກການສັ້ນໆ ສິ່ງສຳຄັນໃນການແຕ່ງຄຳຂວັນ ແລະ ຈຸດປະສົງຂອງມັນ.
- ປະໂຫຍກຄຳເວົ້າສັ້ນ (10-12 ພະຍາງ) ມີບ່ອນຄ່ອງສຳຜັດກັນທັງສະຫລະ ແລະພະຍັນຊະນະ ເຊັ່ນ : ກິນກ້ວຍສຸກ ບ່ອ້ັ່ງທ້ອງ ບ່ຕ້ອງເປືອງເງິນ (ກ້ວຍນ້ຳສຸກເປັນຢາລະບາຍທ້ອງດີ) ໃຊ້ໃບຕອງຫ່ໍຂອງ ປ້ອງກັນແມງວັນ ບ່ປັນພະຍາດ (ແມງວັນເປັນພາຫະນຳເຊື້ອພະຍາດດ້ວຍການຕອມຈັບອາຫານ ທີ່ບ່ປົກປິດ)

5. ປະເມີນຜົນ

ຄວາມສົນໃຈ ຄວາມຟົດຟື້ນໃນການຄົດໄລ່ ແລະ ຄວາມໃກ້ຄຽງກັບຕົວຈິງໃນການຄົດໄລ່ ມູນຄ່າຂອງສ່ວນຕ່າງໆ ພ້ອມດ້ວຍການຮູ້ນຳໃຊ້ຂໍ້ມູນຕົວຈິງ ເຮັດໃຫ້ນັກຮຽນຈື່ຈຳຂໍ້ມູນແລະ ສາມາດນຳໃຊ້ຄວາມຮູ້ ຄວາມເຂົ້າໃຈນັ້ນ ຢູ່ໃນການດຳລົງຊີວິດປະຈຳວັນ.


- ນັກຮຽນສະແດງຄວາມຄົດເຫັນແບບຄາດຫວັງວ່າ ຕົນເອງ ຫຼື ຄອບຄົວຈະເຮັດຫຍັງໄດ້ເພື່ອແກ້ບັນຫາເສດຖະກິດ ຫຼື ປະຢັດ.
- ນັກຮຽນສາມາດແຕ່ງແລະຂຽນຄຳຂວັນ ຈາກສິ່ງທີ່ເຂົາໄດ້ອ່ານ ແລະ ຮຽນຮູ້ມາແຕ່ບົດກ່ອນໆ ຢັ້ງຢືນວ່າ ນັກຮຽນຮັບຮູ້ແລະເຂົ້າໃຈ ຈຶ່ງສາມາດສື່ຄວາມຄົດເຫັນໄດ້ດີ.

ภาษาสอนอ่านแบบบูรณาการ 5

ก้อยในชีวิตคนลาว

1. จุดประสงค์

ผ่านมานักเรียนได้อ่านเรื่อง “ข้อยจะไปใสนำ” ค้นคว้าคุณค่าส่วนต่างๆของต้นก้อย แต่ในบทนี้ จุดประสงค์ต้นตอแม่น เพื่อให้เด็กเห็นได้คุณค่า/บทบาดของต้นก้อย ในชีวิดประจำวันของคนลาว โดยสะเพาะในภาบปะติบัดธีดคองปะเพนิทางสาสะหนา เซิ่งเป็นเอกะลักนึ่งของคนลาวในท่อปะเทด หลื แม่นแต่อยู่ต่าง



ປະເທດ. ສ່ວນຕ່າງໆຂອງຕົ້ນກ້ວຍ ຖືກນຳໃຊ້ໃນຊີວິດຂອງຄົນລາວ ຕັ້ງແຕ່ເກີດຈົນຕາຍ ກ່ວາໄດ້ ໃນນັ້ນມີໃນໂອກາດທີ່ເກີດເຫດການສຳຄັນໆໃນຊີວິດເຊັ່ນ ຕອນເກີດ(ແອນ້ອຍ) ແລະ ອອກກຳ (ແມ່), ການບວດ (ຜູ້ຊາຍ), ການແຕ່ງດອງ (ຍິງຊາຍ), ການສົ່ງສະການ ແລະອື່ນໆ... ປາກົດວ່າຕ້ອງໃຊ້ຕົ້ນກ້ວຍທັງນັ້ນ ເຊັ່ນໃຊ້ໃບຕອງ ເຮັດຂັນໝາກເບັ່ງບູຊາ ຮ້ານພະ, ເຮັດພາບາສີ/ພາຂວັນໃນໂອກາດຕ່າງໆ, ຫໍ່ເຂົ້າຕົ້ມ ເຂົ້າໜົມ ຫຼື ອາຫານສຳລັບ ປີ້ງ ຫຼື ໜຶ້ງ... ການກ້ວຍ ເຮັດກະໂທງລ່ອງນ້ຳ ມື້ອອກພັນສາ ຫລື ກະໂທງໃສ່ອາຫານ ໃນໂອກາດລ້ຽງອາຮັກ ຫຼັກເມືອງ...

ເມື່ອຮູ້ແລະເຫັນແຈ້ງໃນຄວາມໃກ້ຊິດຕິດພັນຂອງຊີວິດຄົນລາວ ກັບຕົ້ນກ້ວຍ ຢ່າງນີ້ແລ້ວ ມັນຈະຊ່ວຍໃຫ້ນັກຮຽນມີທັດສະນະອັນຖືກຕ້ອງ ຕໍ່ພືດພັນທຳມະຊາດ ມີຄວາມຮັກໃນຕົ້ນໄມ້ ພືດພັນ ອັນເປັນການປູກຝັງຄ່ານິຍົມທີ່ດີງາມໃຫ້ເດັກນ້ອຍຕັ້ງແຕ່ ເຍົາໄວ, ທັງອີກດ້ານນຶ່ງກໍຈະເປັນການຕີຕ້ານຄວາມນິຍົມຊົມຊອບ ໃຊ້ຂອງປອມແປງ ຮຽນແບບ ເຊັ່ນ ພາບາສີ ໝາກເບັ່ງທີ່ເຮັດດ້ວຍເຈ້ຍຢາງຂຽວທີ່ນຳເຂົ້າຈາກຕ່າງປະເທດເປັນ ຕົ້ນ. ນອກນີ້ ກິດຈະກຳນີ້ ຍັງຈະເຮັດໃຫ້ເດັກເຫັນພູມປັນຍາ ຮູ້ນຳໃຊ້ຕົ້ນກ້ວຍຂອງຄົນ ສະໄໝກ່ອນ ຜູ້ເຖົ້າຜູ້ແກ່ ແລະສືມືໃນການປະດິດສ້າງ ຂອງຄົນຮຸ່ນພໍ່ແມ່ນຳອີກ. ພວກເຂົາ ກໍຈະຄຶດຢາກປະດິດສ້າງແນວໃດແນວນຶ່ງອອກມາເຊັ່ນກັນ.



2. ອຸປະກອນ

- ປຶ້ມຂ້ອຍຈະໄປໃສນໍ
- ຮູບພິທີແຕ່ດອງ/ສູ່ຂວັນ
- ວາລະສານລານຄຳ ສະບັບທີ 2 ແລະ 10
- ຮູບພາບາສີໃຫຍ່ຢູ່ຕະຫຼາດ/ຮູບກະໂຫງທີ່ເຮັດດ້ວຍຕົ້ນກ້ວຍ
- ຕົ້ນກ້ວຍປາດເປັນປ່ຽງ
- ໃບຕອງ
- ດອກໄມ້ສົດ
- ໄມ້ຂັດ
- ໝາກເບັ່ງ ຂະໜາດນ້ອຍ (ເອົາຂອງແທ້)
- ບ້ຽງ/ຊວຍໃສ່ດອກໄມ້ທູບທຽນ

3. ກິດຈະກຳ

ຂັ້ນຕອນ:

1. ຄູນຳສະເໜີເຄື່ອງໃຊ້ເຮັດຈາກຕົ້ນກ້ວຍ ແລະໃບຕອງ
2. ຄູນຳພາສົນທະນາ
3. ແບ່ງນັກຮຽນເປັນ 4 ກຸ່ມ
4. ຂຽນຕາຕະລາງຂຶ້ນກະດານ ແລະ ໃຫ້ນັກຮຽນຄົ້ນຄວ້າ
5. ຄູນຳພາສະຫຼຸບຄືນ

ລາຍລະອຽດແຕ່ລະຂັ້ນຕອນ:

1. ນຳໃຊ້ຕົ້ນກ້ວຍ ແລະໃບຕອງ ເຮັດເຄື່ອງໃຊ້ງ່າຍໆທີ່ໃຊ້ເກືອບທຸກມື້ (10 ນາທີ) ເຊັ່ນ ຄູນຳສະເໜີ ເຄື່ອງໃຊ້ປະຈຳວັນທີ່ເຮັດຈາກຕົ້ນກ້ວຍ ແລະ ໃບຕອງເຊັ່ນ:
   - ບ້ຽງ/ຊວຍ ໃສ່ດອກໄມ້ທູບທຽນ
   - ໝາກເບັ່ງນ້ອຍໃສ່ຮ້ານພະບູຊາ
   - ເຕົ້າດອກໄມ້ ເຮັດດ້ວຍຕົ້ນກ້ວຍ/ຫລືສຽບດອກໄມ້(ປະດັບປະດາໂລງສົບ)
   - ກະໂຫງນ້ອຍໃສ່ອາຫານ ຫຼື ຫໍ່ ໝົກປີ້ງ ໜຶ້ງ...

2. ຄູນຳພາສົນທະນາດ້ວຍຄຳຖາມວ່າ: ເຄີຍເຫັນພໍ່ແມ່/ຜູ່ເຖົ້າຢູ່ວັດ ນຳໃຊ້ຕົ້ນກ້ວຍໃນ ໂອກາດໃດ(ບຸນຫຍັງ)? ເອົາອັນໃດແດ່ຈາກຕົ້ນກ້ວຍມາເຮັດ? ໄດ້ຄຳຕອບແລ້ວ ສັງລວມ ໃສ່ກະດານ (10 ນາທີ)

3. ແບ່ງນັກຮຽນເປັນ4ກຸ່ມຄື: ກຸ່ມຕົ້ນກ້ວຍ, ກຸ່ມໃບຕອງ, ກຸ່ມໝາກກ້ວຍ ແລະ ກຸ່ມໝາກປີ (5 ນາທີ).
4. ຊຽນຕາຕະລາງດ້ານລຸ່ມຂຶ້ນກະດານ. ບອກນັກຮຽນໃຫ້ຄົ້ນຄວ້າວ່າສ່ວນຕ່າງໆຂອງຕົ້ນກ້ວຍທີ່ເປັນຊື່ກຸ່ມໂຕເອງນັ້ນ ກ່ຽວຂ້ອງຮັບໃຊ້ ເຫດການສຳຄັນໃນຊີວິດຄົນລາວ ເຮົາແນວໃດ ຄົ້ນຄ້ວາແລ້ວ ຕາງໜ້າກຸ່ມນຳສະເໜີຄຳຕອບ ຄູຊຽນຄຳຕອບໃສ່ຕາຕະລາງ (20 ນາທີ)

ຕົວຢ່າງຕາຕະລາງ ແລະຄຳຕອບທີ່ຄາດວ່າຈະໄດ້ຮັບ

ເຫດການສຳຄັນ ໃນຊີວິດຄົນລາວ	ການເກີດ/ ສູ່ຂວັນ ອອກການຳ	ການບວດ/ ສູ່ຂວັນນາກ	ແຕ່ງດອງ	ບຸນອື່ນໆ
ຕົ້ນກ້ວຍ/ ກາບກ້ວຍ	ເຮັດຄີໄຟຢູ່ການຳ ແກນພາຂ້ວນ	ແຫ່ນາກ ແກນພາຂວັນ	ແຮ່ເຂີຍ ພາຂວັນ	ເຮືອໄຟ ກະທົ່ງ
ໃບຕອງ				
ໝາກກ້ວຍ				
ປີກ້ວຍ				

5. ຄູນຳພາສະຫຼຸບຄືນວ່າ: ຕົ້ນກ້ວຍຕິດພັນກັບຊີວິດຄົນລາວແນວໃດ? (5 ນາທີ)

4. ຄຳແນະນຳຄູ


- ຄູຄວນບອກນັກຮຽນ (ກ່ອນມື້ຮຽນ) ໃຫ້ເອົາສ່ວນຕ່າງໆຂອງຕົ້ນກ້ວຍ ມາແຕ່ເຮືອນ ເຊັ່ນໃບຕອງ ກາບກ້ວຍ ຕົ້ນກ້ວຍ ໄມ້ຂັດ ດອກໄມ້...ເພື່ອທຸກຄົນຈະໄດ້ມີສ່ວນຮ່ວມ ແລະສົນໃຈວ່າ ຄູຈະພາເຮັດຫຍັງ
- ຄູຖາມນັກຮຽນວ່າ ເຮືອນໃດມີແມ່/ ແມ່ຕູ້ ທີ່ຊ່ຳໆຫຍິບໝາກເບັ່ງ ຮູ້ແລ້ວ ຂໍໃຫ້ນັກຮຽນຜູ້ນັ້ນ ເອົາໝາກເບັ່ງມາ .
- ສະເໜີໃຫ້ນັກຮຽນ ເອົາອາຫານທີ່ຫໍ່ໃບຕອງມາ
- ຄູເລົ່າເຖິງຮີດຄອງບາງຢ່າງ ແລະ ພິທີທາງສາສະໜາໃຫ້ນັກຮຽນເຂົ້າໃຈວ່າ ມີຄວາມ

ເປັນມາ ແລະ ສຳຄັນຢ່າງໃດຕໍ່ຊີວິດຄົນແລະຊາດ. ອະທິບາຍເຖິງຄຸນປະໂຫຍດຂອງ ຮີດຄອງປະເພນີ ໃນດ້ານຊີວິດທາງສັງຄົມເປັນຕົ້ນ.

- ໃນການນຳສະເໜີ ເຄື່ອງໃຊ້ທີ່ເຮັດມາຈາກຕົ້ນກ້ວຍ ຄູຕ້ອງໄດ້ສຳຜັດ ແລະຊື່ນຊົມ ເຄື່ອງເຫຼົ່ານັ້ນ ໃຫ້ເດັກໄດ້ແລກປ່ຽນວິທີເຮັດ ແລະການໃຊ້ປະໂຫຍດຂອງເຄື່ອງແຕ່ ລະຢ່າງ ດ້ວຍບັນຍາກາດຄຶກຄື້ນເຮືອນນ້ອຍນຳກັນ.
- ຖ້າມີກໍລະນີ ນັກຮຽນມາຈາກທ້ອງຖິ່ນອື່ນ ຄູ ຄວນໃຫ້ເຂົາເລົ່າ ເຖິງການເຮັດຮີດຄອງ ທີ່ມີຕົ້ນກ້ວຍເຂົ້າມາກ່ຽວຂ້ອງສູ່ຟັງ.

5. ປະເມີນຜົນ

- ເດັກນ້ອຍໄດ້ ແລກປ່ຽນຄວາມຮູ້ ປະສົບການໃນການເຮັດຮີດຄອງ ເທົ່າທີ່ພວກເຂົາ ຈື່ຈຳ ມາຈາກພໍ່ແມ່ ຫລື ຈາກຄຸ້ມບ້ານ.
- ເດັກຢາກຮຽນເຮັດບ້າງ, ໝາກເບັ່ງ, ພາຂວັນ ແລະເຄື່ອງອື່ນໆ ທີ່ເຂົາໄດ້ເຫັນ ໄດ້ຮູ້ ການນຳໃຊ້ໃນຄາບຮຽນນີ້.



ກ່ອນຈາກກັນ

ທ່ານທີ່ອ່ານມາຮອດໜ້ານີ້ ຈະເຫັນແລ້ວວ່າ ເຕັກນິກນຳພາການອ່ານນັ້ນ ຫຼາກຫຼາຍ ທັງມ່ວນຊ່ຳໃດ. ແນວໃດກໍຕາມ ເມື່ອ "ສິບປາກວ່າ ຍັງບໍ່ທໍ່ຕາເຫັນ ຊາວຕາເຫັນ ບໍ່ທໍ່ໄດ້ຈັບໄດ້ບາຍ", ອ່ານສິບຄູ່ມືຊາວຄູ່ມື ກໍບໍ່ມີຄວາມໝາຍ ຄັນທ່ານຍັງບໍ່ໄດ້ເອົາກິດຈະກຳທີ່ກ່າວໄວ້ໃນນີ້ ໄປໃຊ້ກັບນັກຮຽນ.

ຫຼັງຈາກທີ່ອາຈານສອນພາສາລາວ ຈາກ 8 ສະຖາບັນສ້າງຄູໄດ້ເກັບກຳສະພາບບັນຫາ ຂອງການສອນ-ການຮຽນ ພາສາລາວ ໃນຊັ້ນປະຖົມ, ບັນຫາເຫຼົ່ານັ້ນໄດ້ຖືກຮວບຮວມ, ວິເຄາະວິໄຈ ເພື່ອຫາວິທີແກ້ໄຂ.

ຕັ້ງແຕ່ປີ 2008 ໂດຍການອຸປະຖຳຂອງ Japan International Cooperation Foundation, ການສຳມະນາ ວ່າດ້ວຍເຕັກນິກການສອນພາສາລາວແບບໃໝ່ (ໂດຍເນັ້ນໃສ່ການອ່ານ) ຈຶ່ງໄດ້ເລີ່ມຕົ້ນຂຶ້ນ ແລະດຳເນີນການມາຕະຫຼອດໄລຍະເວລາ ສາມປີ.

ຫຼັງຈາກການສຳມະນາ ແລະ ນຳເອົາເຕັກນິກຕ່າງໆໄປ ທົດລອງປະຕິບັດຢູ່ທ້ອງຖິ່ນໃຜລາວ ຄະນະອາຈານຂອງສະຖາບັນສ້າງຄູ ແລະວິທະຍາກອນ ຈຶ່ງໄດ້ຮຽບຮຽງບົດຮຽນການສອນເຫຼົ່ານັ້ນ ອອກມາເປັນ ຮ່າງຄູ່ມືການສອນພາສາລາວແບບມ່ວນໆ.

ແຕ່ກ່ວາຈະມາເປັນຄູ່ມືທີ່ທ່ານພວມຖືຢູ່ນີ້ "ຮ່າງ" ນັ້ນ ຕ້ອງຜ່ານການທົດສອບຫຼາຍຂັ້ນຫຼາຍຕອນ ທັງການທົດລອງກັບນັກສຶກສາຄູ ສີ່ສະຖາບັນ ຄື: ດົງຄຳຊ້າງ, ບ້ານເກິນ,

ສະຫວັນນະເຂດ ແລະ ຫຼວງນ້ຳທາ, ທົດລອງກັບໂຮງຮຽນປະຖົມກວ່າ 100 ໂຮງຮຽນໃນ 9 ແຂວງ ແລະທົດລອງນຳໃຊ້ ກັບສະມາຊິກຫ້ອງສະໝຸດສາທາລະນະ ໃນເຄືອຂ່າຍ. ບົດສອນຖືກປັບປຸງ, ວິທີການ, ຄຳຖາມ, ຮອດລາຍລະອຽດທາງດ້ານເວລາ ຖືກແກ້ໄຂຫຼາຍຫຼືບຫຼາຍຕ່າວ.

ແລ້ວປຶ້ມຫົວນີ້ກໍອອກມາ...

ດ້ວຍຄວາມຫ່ວງໄຍເດັກນ້ອຍລາວ ຈາກ Japan International Cooperation Foundation, ດ້ວຍຄວາມອຸດສາຫະໃນການຄົ້ນຄວ້າ ຂອງ ອາຈານ ດວງເດືອນ ບຸນຍາວົງ ແລະ ອາຈານ ດາຣາວັນ ພອນແກ້ວ ວິທະຍາກອນ ແລະຫົວຈັກຫຼັກແຫຼ່ງຂອງໂຄງການ, ອາຈານສອນວິທະຍາໄລຄູ ທຸກທ່ານ ທັງທີ່ມີແລະບໍ່ມີຊື່ໃນປຶ້ມຫົວນີ້, ດ້ວຍຄວາມຮ່ວມມື ຂອງນ້ອງນັກສຶກສາ ກວ່າ 1,000 ຄົນ ທີ່ເຂົ້າຮ່ວມການສອນສາທິດ ແລະ ຄູປະຖົມຈາກ ກວ່າ 100 ໂຮງຮຽນ ຜູ່ນຳເອົາເຕັກນິກຕ່າງໆ ລົງສູ່ສະໜາມການສອນຕົວຈິງ. ຄະນະຈັດທຳ ຂໍຈົດຈຳ ແລະຂອບໃຈເປັນພິເສດ ບົດຮຽນ ເຕັກນິກ ການສອນອ່ານກອນສິນໄຊ ຂອງ ທ່ານ ດາລາວົງ ກັນລະຍາ ວິທະຍາກອນຮັບເຊີນ ທີ່ໄດ້ສາທິດການສອນແບບໃໝ່ ທີ່ມີປະສິດທິຜົນສູງ ດັ່ງທີ່ໄດ້ນຳມາຮຽບຮຽງ ເປັນບົດກິດຈະກຳ "ອ່ານກອນນ່ອນໆ" ຢູ່ໃນຄູ່ມືເຫຼັ້ມນີ້ເຊັ່ນກັນ. ແລະ ໃນທີ່ສຸດ ດ້ວຍຄວາມອົດທົນພາກພຽນ ຂອງ ທ່ານນາງ ດາຣາ ກັນລະຍາ ແລະ ທ່ານ ສຸກພັນສາ ພູຜາສຸກ ບັນນາທິການຜູ່ຮຽບຮຽງ ຈຶ່ງໄດ້ປຶ້ມ ຄູ່ມືການສອນພາສາລາວ ແບບນ່ອນໆ ສະບັບສົມບູນ.

ສາມປີອັນຍາວນານ ແລະເຫື່ອແຮງທັງໝົດທີ່ເສຍໄປ ຈະມີຄວາມໝາຍ ຕໍ່ເມື່ອ ທ່ານຜູ່ອ່ານ ນຳເອົາເຕັກນິກຕ່າງໆ ໃນປຶ້ມນີ້ ໄປໃຊ້ກັບນັກຮຽນ ດ້ວຍເປົ້າໝາຍ ເພື່ອໃຫ້ ເດັກ "ນ່ອນ" ນຳການອ່ານ.

ຂໍທ່ານຈົ່ງກ້າຫານ ສົມກັບຄວາມຫວັງຕັ້ງໃຈຂອງພວກຂ້າພະເຈົ້າ.

ຄະນະຈັດທຳ



ນັກສຶກສາວິທະຍາໄລຄູບ້ານເກິນ ມ່ວນຊື່ນໃນການແອບເຊີ້ງ ການກອນສອນຄຳ



ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)
ໜ່ວຍ 4 ບ້ານ ສະພັງໝໍ້ ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ
ໂທລະສັບ: 021 416064, ຕູ້ ປ.ນ 1518
e-mail: alclao@laotel.com

ການທີ່ມີວິທີການສິດສອນຫຼາກຫຼາຍ ແລະ ເປັນປະໂຫຍດນັ້ນ ເປັນຄວາມຕ້ອງການອັນຈຳເປັນ ແກ່ການສ້າງຄູຮຸ່ນໃໝ່ ເພື່ອໃຫ້ເຂົາເຈົ້າມີຄວາມຮູ້ ແລະ ມີທັກສະໃນການສິດສອນທີ່ດີ, ຖ້າມີຄູສອນທີ່ດີ ພວກເຮົາກໍຈະມີ ນັກຮຽນທີ່ດີ ມີຄົນຮຸ່ນໃໝ່ທີ່ດີ ຕາມວິໄສທັດທີ່ວ່າ: "ສ້າງຄູ ເພື່ອສ້າງຄົນ ສ້າງຄົນເພື່ອສ້າງຊາດ" ນັ້ນເອງ.

ດຣ. ມີທອງ ສຸວັນວິໄຊ

ຈັດພິມໂດຍ:



ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ອຸປະຖຳໂດຍ:

Japan International Cooperation Foundation